# ຜູ້ນຳອີງຕາມຄຳພີ

ໜັງສືເສີມສ້າງ
ຜູ້ນຳ
ຕາມແນວທາງ
ຂອງພຣະຄັມພີ

# ສາຣະບານ

ຄໍານໍາ

1. ຜູ້ນໍາຄືໃຜ?
2. ຜູ້ນໍາໃນຍຸກໃຫມ່
3. ຜູ້ນໍາຝ່າຍຈິດວິນຍານ
4. ຜູ້ນໍາແບບສອດສ່ອງດູແລ
5. ຜູ້ນໍາຕ້ອງຮູ້ຈັກຄົນ
6. ຜູ້ນໍາຕາມແບບພຣະຄັມພີ
7. ຜູ້ນໍາກັບເພື່ອນຮ່ວມງານ
8. ຜູ້ນໍາກັບສຕຣີ
9. ຜູ້ນໍາກັບຄອບຄົວ
10. ຜູ້ນໍາກັບການອ່ານ
11. ຜູ້ນໍາກັບການກິນ
12. ຜູ້ນໍາກັບຣາຍໄດ້
13. ຜູ້ນໍາກັບການແຕ່ງກາຍ
14. ຜູ້ນໍາກັບຜູ້ສນັບສນຸນ
15. ບົດສລຸບ

## ຄໍານໍາ

ໃນລະຍະຄຣິສມາສຊຶ່ງຕໍ່ກັບປີໃຫມ່ ມີຫມູ່ຂອງຂ້າພະເຈົ້າຄົນນຶ່ງ ແທນທີ່ຈະສົ່ງບັດອວຍພອນກັບສົ່ງເຈັ້ຽແຜ່ນນຶ່ງມາໃຫ້ ເມື່ອໄຂອອກອ່ານເບິ່ງກໍເຫັນ ຂໍ້ຄວາມເປັນພາສາອັງກິດພໍທີ່ຈະແປໄດ້ດັ່ງນີ້ວ່າ "ບັນຍັດສິບປະການສູ່ຄວາມສຳເຣັດ"

ຂ້າພະເຈົ້າຄິດວ່ານີ້ເປັນພຣະພອນຊຶ່ງຫນ້າຈະນຳໄປ ແບ່ງປັນກັບຫມູ່ຄູ່ຜູ້ນຳຄົນອື່ນໆເຫມືອນກັນ ເນື້ອຄວາມ ສາຣະກໍສັ້ນບໍ່ຍາວສາມາດເຂົ້າໃຈງ່າຍ ແລະສາມາດນຳມາປະຕິບັດໄດ້ກໍຄື:

1. **ເວົ້າກັບຄົນ** - ບໍ່ມີສິ່ງໃດດີໄປກວ່າການທັກທາຍອັນຫນ້າຍິນດີ (ອຟຊ 5:19)
2. **ຍິ້ມ** - ການຍິ້ມເປັນສິ່ງທີ່ຄົນເຮັດໄດ້ງ່າຍໃຊ້ ກ້າມເນື້ອບົນໃບຫນ້າພຽງສິບສີ່ມັດເທົ່ານັ້ນ ແຕ່ການເຮັດໜ້າບຶ້ງຕຶງຕ້ອງໃຊ້ກ້າມເນື້ອເຖິງເຈັດສິບສອງມັດ (ສພສ 17:22)
3. **ເອີ້ນຊື່** - ທຸກຄົນຈະເພິ່ງພໍໃຈຫລາຍ ເມື່ອທ່ານສາມາດຈື່ຊື່ຂອງເຂົາໄດ້ຢ່າງແນ່ນອນ (ຢຮ 1:47-48)
4. **ເປັນມິດແລະພ້ອມທີ່ຈະໃຫ້ຄວາມຊ່ອຍເຫລືອ** - ແລ້ວຄົນອື່ນຈະຕອບສນອງທ່ານເຊັ່ນດຽວກັນ (ລກ 6:38)
5. **ເວົ້າແລະລົງມືເຮັດ** - ຈົ່ງເຮັດທຸກສິ່ງໃນພຣະນາມຂອງພຣະເຢຊູຄຣິດເຈົ້າ ແລະຂອບພຣະຄຸນພຣະອົງ (ກລຊ 3:17)
6. **ມີຄວາມຈິງຈັງແລະຈິງໃຈ** - ຈົ່ງເອົາໃຈໃສ່ຜູ້ອື່ນດ້ວຍນ້ຳໃສໃຈຈິງ (ຣມ 12:9)
7. **ຍ້ອງຍໍຄົນອື່ນ** - ຈົ່ງອຸດົມດ້ວຍການຍົກຍ້ອງສັຣະເສີນ ແລະຈົ່ງລະມັດລະວັງໃນການຕຳຫນິຕິຕຽນ (ຣມ 12:10)
8. **ຄິດເຖິງໃຈເຂົາໃຈເຮົາ** - ຄືເອົາໃຈໃສ່ຄວາມຮູ້ສຶກ ຂອງຄົນອື່ນຢູ່ສເມີ ຄືເອົາໃຈເພິ່ນມາໃສ່ໃຈໂຕ (ຣມ 12:15)
9. **ໃຊ້ສະຕິປັນຍາ** - ໃນການຟັງຄວາມຄິດເຫັນຂອງຄົນອື່ນນັ້ນ ຈະມີສາມຢ່າງເຮັດໃຫ້ເກີດການໂຕ້ຖຽງກັນ ຄື ທ່ານເອງ ຄູ່ສົນທະນາ ແລະຄົນທີ່ຄິດວ່າຕົນເອງຖືກຕ້ອງທີ່ສຸດ (ຢກບ 1:19)
10. **ເຕັມອົກເຕັມໃຈໃນການຮັບໃຊ້** - ສິ່ງທີ່ມີຄຸນຄ່າຫລາຍທີ່ສຸດໃນຊີວິດຂອງເຮົາ (ຜູ້ນຳ) ຄືການປະຕິບັດຕໍ່ຜູ້ອື່ນ ເຫມືອນດັ່ງທີ່ພຣະເຢຊູຄຣິດໄດ້ຊົງກະທຳເປັນແບບຢ່າງໄວ້ແລ້ວ (ມຣກ 10:43-45)

ອາດຈະກ່າວໄດ້ວ່າ ສິ່ງທີ່ຈຳເປັນແລະສຳຄັນທີ່ສຸດສອງຢ່າງສຳລັບພຣະຣາຊະກິດຂອງພຣະເຈົ້າຄື ການປະກາດຂ່າວປະເສີດ ແລະການສ້າງຜູ້ນຳ ຫນັງສືເຣື່ອງ "ຜູ້ນຳອີງຕາມພຣະຄຳພີ" ຂຽນຂຶ້ນດ້ວຍເຫດຜົນປະການສຸດທ້າຍນັ້ນ.

"ເພື່ອຕຽມບັນດາໄພ່ພົນໃຫ້ເປັນຄົນທີ່ຈະຮັບໃຊ້ ເພື່ອເສີມສ້າງພຣະກາຍຂອງພຣະຄຣິດໃຫ້ຈະເຣີນຂຶ້ນ ຈົນກວ່າເຮົາທຸກຄົນຈະບັນລຸເຖິງຄວາມເປັນນ້ຳນຶ່ງໃຈດຽວກັນໃນຄວາມເຊື່ອ ແລະໃນຄວາມຮູ້ເຖິງພຣະບຸດຂອງພຣະເຈົ້າ ຈົນກວ່າເຮົາຈະເຕີບໃຫຍ່ເປັນຜູ້ໃຫຍ່ຂຶ້ນ ຄືເຕັມຂະຫນາດຄວາມສົມບູນຂອງພຣະຄຣິດ" (ອຟຊ 4:12-13)

ຜູ້ນຳຝ່າຍຈິດວິນຍານຄົນນຶ່ງໄດ້ເວົ້າເຖິງ "ສູດແຫ່ງຄວາມສຳເຣັດ" (Formula for Success) ໂດຍ ການໃຊ້ຕົວອັກສອນດັ່ງນີ້:

S = ການຕັ້ງເປົ້າຫມາຍ (Select the goal)

U = ໃຊ້ຄວາມສາມາດຢ່າງເຕັມທີ (Unlock your potential)

C = ມີຄວາມກ້າຫານ (Courage)

C = ມອບແຜນການໄວ້ກັບພຣະເຈົ້າ (Commit yourself to God's plan)

E = ຄາດວ່າຈະມີບັນຫາ (Expect problems)

S = ຢືນຢັດຢ່າງຫມັ້ນຄົງ (Stand firm in your commitment)

S = ການອະທິຖານທູນຂໍ (Supplication)

ຂ້າພະເຈົ້າບໍ່ໄດ້ຄິດຫວັງວ່າ ເມື່ອຜູ້ໃດອ່ານຫນັງສື ເຫລັ້ມນີ້ຈົບແລ້ວ ເຂົາຈະກາຍເປັນຜູ້ນຳທີ່ຍິ່ງໃຫຍ່ໃນວົງການ ພາຍໃນໃນຊົ່ວເວລາພຽງຂ້າມຄືນເທົ່ານັ້ນ ແຕ່ວ່າມັນຈະຕ້ອງເປັນແບບຄ່ອຍໆເປັນຄ່ອຍໆໄປໃຊ້ເວລາໃນການຝຶກຝົນອົບຮົມ ແລະຕ້ອງເພິ່ງພາອາສັຍ ຣິດອຳນາດຂອງພຣະເຈົ້າຊ່ອຍເຫລືອໃນແຕ່ລະຂັ້ນຕອນ ເຫມືອນດັ່ງນົກອິນຊີທີ່ຫັດບິນ ຊຶ່ງຈະຜິດພາດແດ່ສຳເຣັດແດ່ເປັນທຳມະດາ ແຕ່ມັນໄດ້ພຍາຍາມບິນຂຶ້ນໄປໃນອາກາດຫລາຍໆຄັ້ງກ່ອນຈະສາມາດກາງປີກບິນເວີ່ນເຈັ້ຍເຈີດໃນທ້ອງຟ້າໄດ້ຢ່າງສງ່າງາມ

ເຫມືອນດັ່ງຜູ້ນຳຝ່າຍຈິດວິນຍານໃນອະດີດ ຈະເປັນອັບຣາຮາມ ໂມເຊ ເອລີຢາ ເປໂຕ ແລະຜູ້ອື່ນໆອີກ ບໍ່ມີຈັກຄົນທີ່ເປັນຜູ້ນຳຢ່າງທີ່ສົມບູນແບບ ແຕ່ເມື່ອພຣະເຈົ້າຊົງສາມາດໃຊ້ຄົນເຫລົ່ານັ້ນໄດ້ ເຊື່ອແນ່ວ່າພຣະອົງກໍຊົງສາມາດໃຊ້ພວກເຮົາທັງຫລາຍໃນປັດຈຸບັນໄດ້ເຊັ່ນກັນ

# 1. ຜູ້ນຳຄືໃຜ?

ຜູ້ນຳມີຄວາມສຳຄັນສຳລັບຄຣິສຕະຈັກ ແລະວົງການຄຣິສຕຽນ ຖ້າເປັນຜູ້ນຳທີ່ດີແລະມີຄຸນນະພາບແລ້ວ ຍ່ອມມີຄວາມຈຳເປັນຢ່າງຫລວງຫລາຍທີ່ສຸດຕໍ່ຊຸມນຸມຊົນທີ່ເປັນເຫລົ່າໄພ່ພົນຂອງພຣະເຈົ້າ ຊຶ່ງວົງການຂອງເຮົາມັກຂາດເຂີນຢູ່ຫລາຍ

ປັດຈຸບັນການຂາດເຂີນບຸກຄະລະກອນຜູ້ນຳເອີ້ນວ່າ "ສມອງໄຫລ" (ເພາະໃນວົງການທຸຣະກິດເຂົາມີການຊື້ຕົວກັນ" ຂາດເຂີນບຸກຄະລະກອນລະດັບຊ່າງແລະຄົນງານເອີ້ນວ່າ ຂາດເຂີນແຮງງານ (ແກ້ໄຂໄດ້ໂດຍການນຳເຂົ້າມາຈາກປະເທດເພື່ອນບ້ານ) ຂາດເຂີນສິດຍາພິບານເອີ້ນວ່າ ຂາດຜູ້ລ້ຽງ ມີວິທີທີ່ດີຄືຕ້ອງ "ສ້າງຜູ້ນຳ" ຂຶ້ນມາໃຫ້ພຽງພໍຕໍ່ຄວາມຕ້ອງການຂອງຄຣິສຕະຈັກ ໃນບົດທຳອິດນີ້ເຮົາຈະມາເບິ່ງກັນໃນຫົວຂໍ້ "ຜູ້ນຳຄືໃຜ"

**ຜູ້ນຳຄືຄົນທີ່ພຣະເຈົ້າຊົງແຕ່ງຕັ້ງຂຶ້ນ** - ໃນພຣະຄັມພີເຮົາ ພົບວ່າພຣະເຈົ້າຊົງເອີ້ນແລະແຕ່ງຕັ້ງຫລາຍຄົນໃຫ້ເປັນຜູ້ນຳລະດັບແນວໜ້າເຊັ່ນ ອັບຣາຮາມ ໂມເຊ ເອຊາຢາ ເຢເຣມີຢາ ກີເດໂອນ ເອລີຢາ ເອສຣາ ເປັນຕົ້ນ

ສຳລັບບາງຄົນນັ້ນ ຕອນແຮກໆເບິ່ງເໝືອນວ່າເຂົາຈະບໍ່ພ້ອມ ແລະບໍ່ຄ່ອຍເຕັມໃຈທີ່ຈະກ້າວອອກໄປເປັນຜູ້ນຳຄົນອື່ນໆ ແຕ່ເມື່ອໄດ້ຮັບການຫນຸນໃຈ ຍຶດໝັ້ນໃນພຣະສັນຍາ ແລະໄດ້ຮັບການຊ່ອຍເຫລືອດ້ວຍຣິດອຳນາດຂອງພຣະເຈົ້າ ເຂົາກໍສາມາດເປັນຜູ້ຮັບໃຊ້ທີ່ຍິ່ງໃຫຍ່ແລະປະສົບຄວາມສຳເຣັດຢ່າງຫລວງຫລາຍໄດ້

**ຜູ້ນຳຄືຄົນທີ່ໄດ້ຮັບການຍົກຍ້ອງຂຶ້ນໃຫ້ເປັນຫົວໜ້າ** - ຄົນເຫລົ່ານີ້ມີຄວາມຕັ້ງໃຈຢ່າງແຮງກ້າໃນການຮັບໃຊ້ພຣະຣາຊະກິດຂອງພຣະເຈົ້າ ພຣະຄັມພີໃຊ້ຄຳວ່າ "ປາຖນາກິຈການງານອັນປະເສີດ" (1 ຕມທ 3:1)

ເຂົາມີຄວາມຮູ້ໃນພຣະຄຳຂອງພຣະເຈົ້າ ມີຮາກຖານຄວາມເຊື່ອທີ່ໝັ້ນຄົງ ເປັນທີ່ຍອມຮັບນັບຖືຂອງກຸ່ມຊົນ ຮຽນຮູ້ຫລັກການເປັນຜູ້ນຳແລະການປົກຄອງ

ຜູ້ອື່ນໄດ້ຮັບສິດທິອຳນາດຈາກພຣະເຈົ້າ ບໍ່ແມ່ນເປັນ ການສືບທອດອຳນາດພາຍໃນຄອບຄົວ ແລະເປັນຜູ້ນຳທີ່ນຳດ້ວຍຄວາມຮັກ ບໍ່ແມ່ນຢ່າງຜູ້ຜະເດັດການ

**ຜູ້ນຳຄືຄົນທີ່ມີຄວາມຮັບຜິດຊອບ** - ໂດຍປົກກະຕິແລ້ວຄົນເຮົາມັກ "ຮັບຊອບ" ຫລາຍກວ່າ "ຮັບຜິດ" ແຕ່ການເປັນຜູ້ນຳຝ່າຍຈິດວິນຍານນັ້ນ ເຂົາຈະຕ້ອງຄິດວ່າເປັນຕຳແໜ່ງທີ່ຂຶ້ນໂດຍກົງຕໍ່ພຣະເຈົ້າ ແລະຕ້ອງໄດ້ຮັບການພິພາກສາທີ່ເຂັ້ມງວດກວ່າຄົນ (ຄຣິສຕຽນ) ທຳມະດາ (ຢກບ 3:1) ບໍ່ວ່າຈະເປັນບັນຫານ້ອຍຫລືບັນຫາໃຫຍ່ ເຣື່ອງເລັກໆນ້ອຍໆຂີ້ໝູຣາຂີ້ໝາແຫ້ງຂຶ້ນໄປຈົນເຖິງງານໃຫຍ່ລະດັບຫລາຍລ້ານທີ່ຄົນເຮົາ ມັກເວົ້າວ່າ ຮັບຜິດຊອບໝົດຕັ້ງແຕ່ເຣື່ອງໄມ້ຈິ້ມແຂ້ວຈົນເຖິງເຮືອຮົບ

ຫາກຜູ້ນຳຜິດພາດແລະລົ້ມເຫລວ ນັ້ນຍ່ອມສົ່ງຜົນກະທົບເປັນວົງກວ້າງໃນເຫລົ່າຜູ້ຕາມນຳດ້ວຍ ມີເພງບົດນຶ່ງຂອງຊາວຢູໂຣບໂບຮານທີ່ເນື້ອຮ້ອງວ່າ

ເພາະຕະປູຫລຸດ ບັງຫຽນມ້າຈຶ່ງເສັຽ
ເພາະບັງຫຽນມ້າເສັຽ ມ້າຈຶ່ງເສັຽຫລັກ
ເພາະມ້າເສັຽຫລັກ ຂຸນພົນຈຶ່ງຕົກຈາກຫລັງມ້າ
ເພາະຂຸນພົນຕົກຈາກຫລັງມ້າ ການສູ້ຮົບຈຶ່ງພ່າຍແພ້
ເພາະການສູ້ຮົບພ່າຍແພ້ ຈຶ່ງສູນເສັຽຊາດ

**ຜູ້ນຳຄືຄົນທີ່ສາມາດຈູງໃຈຄົນອື່ນໄດ້** - ຜູ້ນຳທີ່ດີຍ່ອມເປັນແບບຢ່າງແກ່ຜູ້ຕາມບຸກຄລິກລັກສນະ ການເຮັດວຽກ ແລະການດຳເນີນຊີວິດສ່ວນຕົວ ມີອິດທິພົນໂນ້ມນ້າວຈິດໃຈຂອງຄົນເປັນຈຳນວນຫລາຍໃຫ້ເຮັດຕາມໄດ້ ໂດຍທຳມະຊາດແລ້ວຄົນເຮົາຈະເຮັດວຽກໄດ້ໜ້ອຍເມື່ອຝືນໃຈເຮັດ (ຫລືຖືກບັງຄັບໃຫ້ເຮັດ) ແຕ່ຈະເຮັດໄດ້ຫລາຍເມື່ອມີຄວາມມຸ້ງມາດປາຖນາຢາກຈະເຮັດ

ຜູ້ນຳຝ່າຍຈິດວິນຍານທີ່ດີຈະຕ້ອງຮູ້ຈັກຊັກຈູງຄົນອື່ນໃຫ້ຮັກແລະທຸ່ມເທຊີວິດຈິດໃຈເພື່ອພຣະເຢຊູຄຣິດ ແລະກະທຳພຣະຣາຊະກິດຂອງພຣະອົງໄດ້

**ຜູ້ນຳຄືຄົນທີ່ມີສິລປະໃນການເວົ້າແລະດຳເນີນງານ** - ເຮົາເຫັນໄດ້ຢ່າງຊັດເຈນວ່າ ຄົນລະດັບຊັ້ນຕ່ຳຈະໃຊ້ເທັກນິກຫນ້ອຍແຕ່ເຮັດວຽກຫລາຍ ຄົນລະດັບກາງຈະໃຊ້ເທັກນິກແລະການເຮັດວຽກເທົ່າໆກັນ ສ່ວນຄົນລະດັບສູງ (ຜູ້ນຳຫລືຜູ້ບໍລິຫານ) ຈະໃຊ້ເທັກນິກຫລາຍແຕ່ເຮັດວຽກຫນ້ອຍ ຜູ້ນຳທີ່ດີຄືຄົນທີ່ວາງແຜນໃຫ້ຄົນອື່ນເຮັດວຽກໄດ້ດີແລະສຳເລັດຜົນ

ຄັ້ງນຶ່ງ ມີການສອບແຂ່ງຂັນເພື່ອເຂົ້າເປັນທະຫານຂໍ້ສອບຂໍ້ນຶ່ງມີຂໍ້ຄວາມຢູ່ວ່າ "ເສົາຕົ້ນນຶ່ງຍາວຊາວແມດ ເສັ້ນຜ່າສູນກາງສີ່ສິບຊັງຕີແມດ ແລ້ວຂຸດຂຸມເລິກຫ້າແມດ ເສັ້ນຜ່າສູນກາງສາມສິບຊັງຕີແມດ ຄຳຖາມຄື ເຮັດຢ່າງໃດຈຶ່ງຈະເອົາເສົາລົງຂຸມໄດ້?"

ໄດ້ມີການຕອບໄປຕ່າງໆນາໆ ແລະສເນີຫລາຍວິທີດ້ວຍກັນທີ່ຈະເອົາເສົາລົງຫລຸມໃຫ້ໄດ້ ແຕ່ຄຳຕອບທີ່ຖືກຕ້ອງຄື "ມີຄຳສັ່ງໃຫ້ ທະຫານຕ້ອງເອົາເສົາລົງຂຸມ!" ບໍ່ວ່າວິທີໃດກໍວິທີນຶ່ງ.

**ຜູ້ນຳຄືຄົນທີ່ມີຊີວິດເປັນແບບຢ່າງອັນດີ** - ໃນ 1 ຕີໂມ ທຽວບົດທີ 3 ອາຈານໂປໂລໄດ້ກ່າວເຖິງຄຸນສົມບັດຝ່າຍຈິດວິນຍານໄວ້ຢ່າງມາກມາຍຫລາຍປະການ ຜູ້ນຳຄຣິສຕະຈັກຖືວ່າ ຊີວິດສຳຄັນຫລາຍກວ່າງານ ຊຶ່ງແຕກຕ່າງຈາກຜູ້ນຳທີ່ເປັນນັກການເມືອງ ຫລືນັກທຸຣະກິດຊຶ່ງຈະຖືວ່າຜົນງານມີຄວາມສຳຄັນຫລາຍກວ່າຊີວິດສ່ວນຕົວ

ຜູ້ນຳແບບທົ່ວໄປຈະສຳມະເລເທເມົາ ມົ້ວໃນເຣື່ອງເພດ ແລະໃຊ້ຊີວິດທີ່ເຫລວແຫລກຢ່າງໃດກໍໄດ້ ຂໍໃຫ້ຜົນງານອອກມາດີຖືວ່າໃຊ້ໄດ້ ແຕ່ພຣະຄັມພີໄດ້ກຳນົດຄຸນສົມບັດຂອງຜູ້ນຳໄພ່ພົນຂອງພຣະເຈົ້າໄວ້ຢ່າງຈະແຈ້ງວ່າຕ້ອງມີຊີວິດທີ່ເປັນແບບຢ່າງອັນດີ

"ແຕ່ຈົ່ງເປັນແບບຢ່າງແກ່ຄົນທີ່ເຊື່ອທັງປວງ ທັງໃນທາງວາຈາ ແລະການປະພຶດ ໃນຄວາມຮັກ ໃນຄວາມເຊື່ອ ແລະໃນຄວາມບໍຣິສຸດ (1 ຕມທ 4:12)

ກ່ອນບົດນີ້ນຶ່ງບົດ ໂປໂລບອກວ່າຜູ້ນຳ ຕ້ອງເປັນຄົນທີ່ ບໍ່ມີໃຜຕິໄດ້, ເປັນຜົວຂອງຍິງຄົນດຽວ, ເປັນຄົນຮູ້ຈັກບັງຄັບຕົນເອງ, ມີສະຕິອັນດີຮອບຄອບ, ມີກິຣິຍາຮຽບຮ້ອຍ, ມີໃຈສັດທາເຫລື້ອມໃສໃນການຮັບແຂກ, ເຫມາະສົມທີ່ຈະເປັນຄຣູ, ບໍ່ເປັນຄົນເມົາເຫລົ້າ, ບໍ່ເປັນຄົນຫຽາບຊ້າສາໂຫດ ແຕ່ເປັນຄົນມີໃຈສຸພາບ, ບໍ່ເປັນຄົນມັກຜິດຖຽງກັນ, ບໍ່ເປັນຄົນເຫັນເງິນ, ຕ້ອງເປັນຄົນຄອບຄອງບ້ານເຮືອນຂອງຕົນໄດ້ດີ

ໂດຍສະເພາະຜູ້ນຳຕ້ອງເປັນຄົນທີ່ມີນ້ຳໃຈ "ເບິ່ງແຍງເອົາໃຈໃສ່ຄົນອື່ນ" ເຫມືອນກັບພຣະເຢຊູທີ່ຊົງ "ຫ່ວງໃຍລູກແກະ" ຂອງພຣະອົງ (1 ປຕ 5:7) ພຣະຄັມສອນຄຣິສຕຽນວ່າ "ທ່ານຈົ່ງມີນ້ຳໃຈຕໍ່ກັນເຫມືອນຢ່າງທີ່ມີໃນພຣະເຢຊູຄຣິດ" (ຟລປ 2:5)

ມີຜູ້ນຶ່ງພຍາຍາມອະທິບາຍກ່ຽວກັບຄຳວ່າ "ຫ່ວງໃຍແລະເອົາໃຈໃສ່" (CARE) ໄວ້ດັ່ງນີ້:

C = Challenge "ການທ້າທາຍໃຫ້ຜູ້ເຊື່ອຈະເຣີນໃຫຍ່ຂຶ້ນໃນຝ່າຍຈິດວິນຍານ"

A = Affirm "ຢືນຢັນແລະຮັບຮອງໃນຄຸນຄ່າໃນຕົວຂອງຄົນອື່ນ"

R = Respect "ການຍອມຮັບແລະໃຫ້ຄວາມເຄົາຣົບນັບຖືຄົນອື່ນ"

E = Encourage "ໃຫ້ກຳລັງໃຈແລະຫນຸນຈິດຊູໃຈຄົນອື່ນ"

ຄັ້ງນຶ່ງ ຂ້າພະເຈົ້າເດີນທາງໄປສອນເຣື່ອງຜູ້ນຳຝ່າຍຈິດວິນຍານໃນຄ່າຍຂອງຄຣິສຕະຈັກຮວມກັນເຈັດແຫ່ງແລະໄດ້ເຮັດການສຳຣວດຄວາມຄິດເຫັນຂອງສະມາຊິກວ່າພວກເຂົາຕ້ອງການຜູ້ນຳຄຣິສຕະຈັກແບບໃດແດ່ ຜົນປາກົດວ່າມີການຈົດເອົາຂໍ້ຄວາມກຳນົດ "ຄຸນສົມບັດຂອງຜູ້ນຳ" ໄວ້ຢ່າງຫລວງຫລາຍ

ຕົວຢ່າງເຊັ່ນ ຜູ້ນຳຈະຕ້ອງເປັນຄົນທີ່ເອົາໃຈໃສ່ສະມາຊິກໃນຄຣິສຕະຈັກ ຜູ້ນຳຈະຕ້ອງເຂົ້າໃຈຄວາມຮູ້ສຶກ ແລະອາຣົມຂອງຄົນອື່ນ ຈະຕ້ອງມີຕາຣາງເວລາທີ່ແນ່ນອນ ຈະຕ້ອງຕິດສນິດຢູ່ກັບພຣະເຈົ້າ ຜູ້ນຳຈະຕ້ອງມີວິສັຍທັດທີ່ກວ້າງໄກ ຈະຕ້ອງມີຄວາມເປັນຜູ້ນຳ ຈະຕ້ອງມີຄວາມຮູ້ໃນພຣະຄັມພີ ຜູ້ນຳຈະຕ້ອງມີຊີວິດເປັນແບບຢ່າງທີ່ດີ ຮູ້ຈັກຫນ້າທີ່ຂອງຕົນເອງ ແລະມີຄວາມຄິດສຸຂຸມຮອບຄອບ

ຍັງບໍ່ທັນຈົບເທື່ອ! ເຂົາບອກຕໍ່ໄປວ່າຜູ້ນຳຈະຕ້ອງ ຍອມຮັບຟັງຄວາມຄິດຄວາມເຫັນຂອງຄົນ ມີຄວາມຖ່ອມໃຈ ຮູ້ຈັກການວາງແຜນ ຜູ້ນຳຈະຕ້ອງເປັນນັກອະທິຖານ ມີຄວາມກ້າຫານ ເປັນນັກປະກາດທີ່ດີ ມີຄວາມເປັນນ້ຳນຶ່ງໃຈດຽວກັນກັບສະມາຊິກ ແລະກັບຜູ້ນຳຄົນອື່ນໆ ເປັນນັກປານີປະນອມ ມີຄວາມຮັກ ແລະມີປະສົບການຊີວິດ

ຜູ້ນຳຈະຕ້ອງມີຊີວິດທີ່ປະກອບດ້ວຍພຣະວິນຍານ ຍອມທົນທຸກຍາກລຳບາກດ້ວຍຄວາມເຕັມໃຈ ມີຄວາມຮັບຜິດຊອບ ຜູ້ນຳຈະຕ້ອງມີຄວາມເຊື່ອທີ່ຖືກຕ້ອງຕາມຫລັກຂອງພຣະຄັມພີ ເປັນຜູ້ຮັບໃຊ້ທີ່ຖ່ອມຕົນ ສາມາດແກ້ໄຂບັນຫາສະເພາະຫນ້າໄດ້ ມີມະນຸດສັມພັນດີ ສັດຊື່ສຸຈະຣິດ ຜູ້ນຳຈະຕ້ອງເປັນຜູ້ຕາມທີ່ດີ ແລະສາມາດນຳຄອບຄົວຂອງຕົນເອງໄດ້ດ້ວຍ

**ເມື່ອເບິ່ງຜູ້ນຳຈາກມາຕຖານນີ້ແລ້ວ ຄົນນຶ່ງກໍເວົ້າລອຍໆວ່າ "ຄຸນສົມບັດບໍ່ດ້ອຍໄປກວ່າທູດສວັນເລີຍເນາະ!"**

ເຖິງຢ່າງໃດກໍດີ ຜູ້ໃດທີ່ຄິດຢາກຈະເປັນຜູ້ນຳ ຍ່ອມເປັນ ຄວາມປາຖນາທີ່ດີທີ່ສຸດ ແຕ່ວ່າເຂົາຈະຕ້ອງຄິດໃຄ່ຄວນແລະອະທິຖານຫລາຍຂະຫນາດແຫລະ!

# 2. ຜູ້ນຳຍຸກໃຫມ່

ເຮົາຢູ່ຊ່ວງສັດຕະວັດໃຫມ່ ເອີ້ນວ່າເປັນໂລກທີ່ບໍ່ມີເຂດແດນແລະປາສຈາກຂີດຈຳກັດ ທຸກຢ່າງມີການພັທນາປ່ຽນແປງໄປຢ່າງໄວງ ໂດຍສະເພາະທາງດ້ານເທັກໂນໂລຍີ ແລະເມື່ອຄຶດເຖິງຜູ້ນຳຝ່າຍຈິດວິນຍານແລ້ວ ກໍມີຄວາມຈຳເປັນຕ້ອງປັບປຸງແກ້ໄຂແລະກ້າວໃຫ້ທັນຕໍ່ຄວາມຈະເຣີນກ້າວຫນ້າຂອງໂລກນຳ

ແຕ່ເຖິງປານນັ້ນມາຕຖານທາງດ້ານຈະຣິຍະທັມຂອງຜູ້ນຳຕາມຫລັກພຣະຄັມພີຍັງຕ້ອງບໍ່ມີການປ່ຽນແປງ!

ຜູ້ນຳຄົນນຶ່ງ ໄດ້ບອກເຖິງລັກສນະຂອງຜູ້ນຳຝ່າຍຈິດວິນຍານໄວ້ດັ່ງນີ້ **"ຜູ້ຮັບໃຊ້ຂອງພຣະເຈົ້າຄວນຈະມີຄວາມກ້າຫານເຫມືອນສິງໂຕ ໜັງໜາເໝືອນຊ້າງນ້ຳ ໄວເໝືອນລີງ ອົດທົນເໝືອນລໍ ແຂງແຮງເໝືອນຊ້າງ ດຸໝັ່ນເໝືອນມົດ ຕາຍຍາກເໝືອນແມວ ຊື່ສັດເໝືອນໝາ ນິສັຍເຫມືອນທູດສວັນ ສຸພາບເຫມືອນແກະ ສຽງເຫມືອນນົກ ປັບຕົວໄດ້ເຫມືອນຈິງໂຈ໋ະ ຫມັ້ນຄົງເຫມືອນສີລາ ພັກດີເຫມືອນອັຄທູດ ແລະເສັຽສລະເຫມືອນແມ່"**

ຫນັງສືກ່ຽວກັບການສ້າງຜູ້ນຳເຫລັ້ມນຶ່ງໄດ້ກ່າວເຖິງ "ນັກບໍຣິຫານທີ່ດີ" ໄວ້ສິບຢ່າງຄື: ມີວິນຍານຈິດແຈ່ມໃສ ຕັ້ງໃຈສົນທະນາ ສື່ວາຈາໄພເຣາະ ສິງເຄາະເອື້ອເຟື້ອ ຂາດເຫລືອເຜື່ອແຜ່ ຂະຫນານນາມເອົາໃຫ້ຖືກ ປູກຄວາມຈິງໃຈ ກຽດຊັງຄົນອື່ນບໍ່ເປັນ ເລັງເຫັນຄ່າ ຄົນອື່ນແລະຍິນດີກັບຜົນສຳເຣັດ

ຂ້າພະເຈົ້າເຫັນວ່າ ຫລັກການນີ້ເຂົ້າກັບບັນຍາກາດເຮົາໄດ້ດີ ຈຶ່ງຂໍອະນຸຍາດນຳມາຂະຫຍາຍຕໍ່ດັ່ງນີ້:

**ວິນຍານຈິດແຈ່ມໃສ** - ພຣະຄັມພີກ່າວວ່າ "ໃຈຮ່າເຣີງເປັນຢາຢ່າງດີ ແຕ່ຈິດໃຈທີ່ຫມົດມານະເຮັດໃຫ້ກະດູກແຫ້ງ" (ສພສ 17:22)

ຜູ້ນຳທີ່ດີຈະຕ້ອງຂະຫຍັນຂັນແຂງແລະເອົາຈິງເອົາຈັງ ແຕ່ບໍ່ເຄັ່ງຄຽດ ເປັນຄົນທີ່ຄົບງ່າຍແລະເວົ້າມ່ວນ ບໍ່ເອົາແຕ່ຈົ່ມຫລືຄອຍຕຳຫນິຕິຕຽນຜູ້ອື່ນ ຫລືມັກເລົ່າແຕ່ປະສົບການແລະຄວາມທຸກຍາກຂອງຕົນເອງ ແຕ່ມີຊີວິດທີ່ເປັນພຣະພອນ ຊຶ່ງຄົນອື່ນຢາກຈະຢູ່ໃກ້ຊິດສເມີ

ພວກຄົນທີ່ມີຈິດໃຈເບີກບານແລະຍິ້ມແຍ້ມແຈ່ມໃສ ໂດຍສະເລັ່ຽແລ້ວຈະເຖົ້າຊ້າແລະອາຍຸຍືນກວ່າຄົນທີ່ມີຫນ້າບຶ້ງ ຫນ້າງໍ ດັ່ງທີ່ກ່າວໄວ້ແລ້ວໃນຄຳນຳວ່າ ເວລາຍິ້ມເຮົາໃຊ້ກ້າມເນື້ອທຳງານພຽງສິບສີ່ມັດ ແຕ່ຖ້າເຮັດຫນ້າບຶ້ງຕຶງຈະຕ້ອງໃຊ້ກ້າມເນື້ອເຖິງເຈັດສິບສອງມັດ

ຜູ້ນຳຝ່າຍຈິດວິຍານຄວນຈະເປັນຄົນປະເພດ "ຍິ້ມງ່າຍ ສະບາຍທັກ ຮັກຜູ້ອື່ນ ແລະຕື່ນສເມີ"

ໂປໂລບອກແກ່ຄຣິສຕຽນວ່າ "ຈົ່ງຊື່ນຊົມຍິນດີໃນອົງພຣະຜູ້ເປັນເຈົ້າທຸກເວລາ" (ຟລປ 4:4, 5) ພຣະເຢຊູຊົງກ່າວສອນເຖິງພຣະບັນຍັດໃຫຍ່ຂໍ້ທີສອງສຳລັບຄຣິສຕຽນວ່າ "ຈົ່ງຮັກເພື່ອນບ້ານເຫມືອນຮັກຕົນເອງ" (ມທ 22:39) ນາຍແພດລູກາໄດ້ອ້າງເຖິງຄຳຕັກເຕືອນກ່ອນອຳລາຂອງອັຄທູດວ່າ "ຈົ່ງຕື່ນຕົວຢູ່" (ກຈກ 20:31)

**ຕັ້ງໃຈສົນທະນາ** - "ພີ່ນ້ອງທີ່ຮັກແພງຂອງເຮົາເອີຍ, ພວກເຈົ້າກໍຮູ້ຂໍ້ນີ້ແລ້ວ ແຕ່ຈົ່ງວ່ອງໄວໃນການຟັງ ຈົ່ງຊ້າໃນການເວົ້າ ຈົ່ງຊ້າໃນການຮ້າຍ" (ຢກບ 1:19)

ຜູ້ນຳທີ່ດີຈະຕ້ອງໄວໃນການຟັງໂດຍຕັ້ງໃຈ ແລະເບິ່ງຫນ້າຄູ່ສົນທະນາ ພ້ອມກັບພະຍັກຫນ້າຮັບເປັນລະຍະ ຫລືເວົ້າວ່າ "ເອີ! ອໍ ຫລືແມ່ນແລ້ວ ດີຫລາຍ ຖືກຕ້ອງ ໂອເປັນເຣື່ອງໃຫມ່ສຳລັບຂ້ອຍ ເອີ ບໍ່ເຄີຍຮູ້ມາກ່ອນ ແລະອື່ນໆ"   ຢ່າຂັດຈັງຫວະຫລືທະລຸກາງປ້ອງ ໂດຍທີ່ຄູ່ສົນທະນາຍັງເລົ່າບໍ່ຈົບ ແລະຜູ້ນຳທີ່ສລາດຈະບໍ່ເລົ່າສິ່ງໃດທີ່ຄົນອື່ນບໍ່ໄດ້ຖາມ

ຄົນໂງ່ເວົ້າທຸກສິ່ງທີ່ຮູ້ ແຕ່ຄົນສລາດເວົ້າບາງຢ່າງທີ່ຮູ້ ນັກປາດໂຣມັນໂບຮານຄົນນຶ່ງກ່າວວ່າ "ເມື່ອຂ້ອຍຟັງ ຂ້ອຍໄດ້ກຳໄຣ ແຕ່ເມື່ອຂ້ອຍເວົ້າ ຄົນອື່ນກໍເອົາກຳໄຣໄປເສັຽ" ບາງຄົນໄດ້ຍິນເຣື່ອງຈາກຫູກໍຈະລົງໄປທີ່ໃຈ ແຕ່ສຳລັບບາງຄົນໄດ້ຍິນທີ່ຫູກໍຈະທະລຸອອກທາງປາກ!

ເກືອບສາມສິບປີທີ່ຢູ່ໃນວົງການຄຣິສຕຽນມັກມີຄົນຖາມຂ້າພະເຈົ້າເລື້ອຍໆວ່າ "ເປັນຫຍັງມີເຣື່ອງຂຽນຫລາຍແທ້!" ຂ້າພະເຈົ້າຕອບສັ້ນໆວ່າ "ຕັ້ງໃຈຟັງຄົນອື່ນເວົ້າ"

**ການເວົ້າຈາອ່ອນຫວານ** - "ຈົ່ງປະຕິບັດກັບຄົນພາຍນອກດ້ວຍໃຊ້ສະຕິປັນຍາ ໂດຍສວຍໂອກາດ ຈົ່ງໃຫ້ວາຈາຂອງເຈົ້າປະກອບດ້ວຍເມດຕາຄຸນຢູ່ສເມີ ປະສົມດ້ວຍເກືອໃຫ້ມີຣົດ ເພື່ອເຈົ້າທັງຫລາຍຈະໄດ້ຮູ້ວິທີຕອບທີ່ຖືກໃຈແກ່ທຸກຄົນ" (ກລຊ 4:5, 6)  ໃນພຣະຄັມພີສະບັບແປໃຫມ່ໃຊ້ຄຳວ່າ "ຈົ່ງໃຫ້ວາຈາປະກອບດ້ວຍເມດຕາຄຸນ"  ມິເກືອບໍ່ໄດ້ຫມາຍຄວາມວ່າເປັນຄົນເຄັມ (ຂີ້ຖີ່ ຂີ້ຫນຽວ ເຫັນແກ່ຕົວ) ຫລືເຂົ້າໄປບ່ອນໃດແສບບ່ອນນັ້ນ ແທນທີ່ຈະເປັນພຣະພອນກັບກາຍເປັນພຣະເພີງໄປເສັຽເລີຍ

ຜູ້ນຳຝ່າຍຈິດວິນຍານທີ່ດີຈະຕ້ອງຮູ້ຈັກໃຊ້ປາກໃຫ້ເປັນພຣະພອນແກ່ຄົນອື່ນ ໂດຍເວົ້າອອກມາຈາກໃຈຈິງ ກັ່ນກອງແລ້ວເປັນຄົນທີ່ຄິດກ່ອນເວົ້າ ເພາະຖ້າຫາກເວົ້າໂດຍບໍ່ໄດ້ຄິດກໍອາດຈະ "ພພປ" (ພັງເພາະປາກ) ດັ່ງທີ່ພາສິດຄຳພັງເພີຍຂອງເຮົາເວົ້າວ່າ (ກົບຕາຍຍ້ອນປາກ ຄັນຄາກຕາຍຍ້ອນສຽງ)

ອີກອັນນຶ່ງ ຂໍໃຫ້ເຂົ້າໃຈວ່າ ມີວາຈາປະກອບດ້ວຍຄວາມເມດຕາ ຫລືສື່ວາຈາໄພເຣາະນີ້ ບໍ່ແມ່ນເປັນການເວົ້າຫລິ້ນ ພຍາຍາມປຸງແຕ່ງໃຫ້ຜິດພ້ຽນໄປຈາກຄວາມເປັນຈິງ ຊຶ່ງມີດປາກຢ່າງໃຈຢ່າງ ຫລືແບບປາກຫວານກົ້ນປ້ຽວ ແຕ່ຫມາຍເຖິງການເວົ້າຄວາມຈິງດ້ວຍໃຈຮັກ

**ສົງເຄາະເອື້ອເຟື້ອ** - "ລະນຶກເຖິງພຣະທັມຂອງພຣະເຢຊູເຈົ້າ ຊຶ່ງພຣະອົງກ່າວວ່າ "ການໃຫ້ເປັນເຫດໃຫ້ມີຄວາມສຸກຫລາຍກວ່າການຮັບ" (ກຈກ 20:35)

ປະການທີນຶ່ງ- ຜູ້ນຳທີ່ດີຈະຕ້ອງມີນ້ຳໃຈໃນການສົງເຄາະສະມາຊິກໃນຄຣິສຕະຈັກ ຕາມທີ່ພຣະຄັມພີກ່າວວ່າ "ຈົ່ງຊ່ອຍໄພ່ພົນຂອງພຣະເຈົ້າເມື່ອເຂົາຂັດສົນ ຈົ່ງຕ້ອນຮັບແຂກດ້ວຍໃຈເຫລື້ອມໃສ" (ຣມ 12:13) ແຕ່ຈະຕ້ອງອະທິຖານຂໍສະຕິປັນຍາຈາກພຣະເຈົ້າເພື່ອຈະເປັນການໃຫ້ຢ່າງສລຽວສລາດ ເພາະບໍ່ດັ່ງນັ້ນການສົງເຄາະຈະນຳມາຊຶ່ງຄວາມຂັດແຍ້ງແລະຄວາມແຕກແຍກ ເຊັ່ນ ການແຈກຢາຍເຄື່ອງ, ຢາ, ແລະອາຫານແຫ້ງ ຊຶ່ງສະມາຊິກໄດ້ຮັບບໍ່ເທົ່າທຽມກັນ ອັນນີ້ແຫລະ, ຕ້ອງລະວັງໃຫ້ດີ ເພາະມານຊາຕານ ຈ້ອງທຳລາຍເຈຕນາດີຂອງຜູ້ນຳຢູ່ຕລອດເວລາ

ໂບດບາງແຫ່ງມີຄວາມຫວັງດີໂດຍເອົາຣົດໄປຮັບ ສະມາຊິກມາໂບດທຸກໆຕອນເຊົ້າວັນອາທິດ ແຕ່ມື້ນຶ່ງບໍ່ມີຣົດໄປຮັບ ຈຶ່ງບໍ່ມີຄົນມາໂບດເພາະວ່າພວກເຂົາບໍ່ມີຂາແລະກາຍເປັນຄົນງ່ອຍໄປເສັຽແລ້ວ ບາງຄົນໃຫ້ຂໍ້ຄິດວ່າ "ໃຫ້ເບັດຕຶກປາດີກວ່າໃຫ້ປາ" ເພາະຖ້າໃຫ້ເບັດຕຶກປາ ເຂົາຍ່ອມໄປຊອກຫາປາກິນກັນເອງໄດ້

ປະການທີສອງ - ຜູ້ນຳທີ່ດີຈະຕ້ອງບໍ່ລືມສົງເຄາະຄົນໃນຄອບຄົວຂອງຕົນເອງດ້ວຍ ຜູ້ນຳຝ່າຍຈິດວິນຍານຕາມມາຕຖານຂອງພຣະຄັມພີຈະຕ້ອງເປັນຄົນທີ່ເອົາໃຈໃສ່ບ້ານເຮືອນຂອງຕົນຢ່າງດີ ທັງອົບຣົມລູກຊາຍຍິງໃຫ້ຢູ່ໃນໂອວາດໂດຍໃຫ້ເຫດຜົນວ່າ ຖ້າບໍ່ສາມາດປົກຄອງຄອບຄົວຂອງຕົນເອງໄດ້ແລ້ວ ຈະໄປປົກຄອງຄຣິສຕະຈັກຂອງພຣະເຈົ້າໄດ້ຢ່າງໃດ (1 ຕມທ 3:4-5)

ໃນເພງໂຊໂລໂມນ 1:6 ມີເຣື່ອງທີ່ຫນ້າເວທນາຂອງຍິງສາວຄົນນຶ່ງ ຊຶ່ງມົວແຕ່ໄປເບິ່ງແຕ່ສວນຂອງຄົນອື່ນ ແຕ່ສວນຂອງນາງກັບປ່ອຍໃຫ້ຮົກເຮື້ອວ່າງເປົ່າເຕັມໄປດ້ວຍຕົ້ນຫນາມແລະຫຍ້າ ຜູ້ນຳຈະຕ້ອງລະມັດລະວັງເຣື່ອງນີ້ໃຫ້ດີ.

ຂ້າພະເຈົ້າເຄີຍອ່ານເຣື່ອງຣາວຂອງຍິງຄົນນຶ່ງທີ່ຍື່ນໃບລາອອກຈາກການເປັນພັຣຍາຂອງສິດຍາພິບານ ນາງໃຫ້ເຫດຜົນວ່າ "ຢາກເປັນພຽງສະມາຊິກທຳມະດາໃນໂບດ ເພາະໄດ້ຮັບການເອົາໃຈໃສ່ຈາກສິດຍາພິບານດີກວ່າ"

**ຂາດເຫລືອເຜື່ອແຜ່** - "ແຕ່ທີ່ຈະທຳຄຸນຄວາມດີ ແລະມີໃຈເຜື່ອແຜ່ຊຶ່ງກັນແລະກັນນັ້ນ   ຢ່າໄດ້ລືມເສັຽ ເພາະເຄື່ອງບູຊາຢ່າງນີ້ແຫລະ, ເປັນທີ່ພໍພຣະທັຍພຣະເຈົ້າ" (ຮຣ 13:16)

ຜູ້ນຳທີ່ດີນອກຈາກສົງເຄາະແກ່ສະມາຊິກແລະຄອບຄົວຂອງຕົນເອງແລ້ວ ເຂົາຈະຕ້ອງຮູ້ຈັກການເຜື່ອແຜ່ເຈືອຈານແກ່ເພື່ອນຜູ້ຮັບໃຊ້ພຣະເຈົ້ານຳດ້ວຍ ໂດຍການເຮັດຄວາມດີ ແລະແບ່ງປັນເຂົ້າຂອງແກ່ກັນ.  ເທົ່າທີ່ມີປະສົບການເຮົາພົບວ່າຜູ້ນຳສ່ວນໃຫຍ່ບໍ່ຄ່ອຍຕ້ອງການວັດຖຸສິ່ງຂອງເທົ່າໃດ ແຕ່ຕ້ອງການເພື່ອນແລະທີ່ປຶກສາຫລາຍກວ່າ ເຫມືອນດັ່ງຄຳເວົ້າທີ່ໄດ້ຍິນເລື້ອຍໆວ່າ "ໄມ້ສູງຍ່ອມຕ້ອງລົມແຮງ" ຫລື "ສູງຫລາຍແຮ່ງຫນາວ" ນັ້ນເປັນຄວາມຈິງ ເມື່ອອາຍຸຫລາຍຂຶ້ນກັບມີຫມູ່ເພື່ອນຫນ້ອຍລົງ

ເອລີຢາເປັນຜູ້ຮັບໃຊ້ພຣະເຈົ້າທີ່ປະສົບຄວາມສຳເຣັດຢ່າງມາກ ແຕ່ມື້ນຶ່ງທ່ານກໍຖອນໃຈອອກງ່າຍໆເຫມືອນກັນ (1 ພກສ 19) ເພາະພົບບັນຫາຫລາຍ ທໍ້ຖອຍໃຈ ຂາດຫມູ່ເພື່ອນແລະຂາດທີ່ປຶກສາ ໃນຊ່ວງເວລາທີ່ຜ່ານມາມີຜູ້ນຳຝ່າຍຈິດວິນຍານຫລາຍຄົນທີ່ພາດລົ້ມລົງໃນຄວາມຜິດບາບ ພົບວ່າມາຈາກສາເຫດໃຫຍ່ສອງປະການຄື: ນຶ່ງ ຂາດຫມູ່ເພື່ອນ ແລະສອງ ພັຣຍາຫລືຄູ່ຊີວິດບໍ່ເຂົ້າໃຈ

ມີການໃຫ້ຫນັງສືດີໆແກ່ຫມູ່ເພື່ອນຈັກຫົວນຶ່ງ ຫລືໂທຣະສັບໄປຫາບາງຄັ້ງບາງຄາວ ຂຽນຈົດຫມາຍຫນຸນໃຈ ຫລືຫາໂອກາດພາຄອບຄົວໄປພັກຜ່ອນກັບຄອບຄົວຂອງເພື່ອນຜູ້ນຳດ້ວຍກັນ ຫລືນັດສັງສັນກິນເຂົ້າທ່ຽງດ້ວຍກັນ ເປັນຕົ້ນ

**ຂະຫນານນາມຂອງເຂົາໃຫ້ຖືກ** - ເຄີຍມີຄົນມາເອີ້ນຊື່ຂອງທ່ານຜິດໆຖືກໆແດ່ ແລະທ່ານມີຄວາມຮູ້ສຶກຢ່າງໃດ

ຜູ້ນຳທີ່ດີຈະຕ້ອງຄິດສເມີວ່າ ຊື່ມີຄວາມສຳຄັນສຳລັບທຸກຄົນ ແລະມີຄວາມສຳຄັນຕໍ່ພຣະເຈົ້າດ້ວຍ ພຣະອົງຊົງກ່າວວ່າ "ເຮົາຈຶ່ງເອີ້ນເຈົ້າຕາມຊື່ຂອງເຈົ້າ ເຮົາໃຫ້ນາມ ສະກຸນເຈົ້າ ທັງໆທີ່ເຈົ້າບໍ່ຮູ້ຈັກເຮົາ" (ອຊຢ 45:4)

ຜູ້ນຳຝ່າຍຈິດວິນຍານຄວນຈະເປັນຄົນທີ່ຈຳຊື່ຂອງຄົນອື່ນໄດ້ຢ່າງແມ້ນຍຳ ເພາະຄົນທີ່ຖືກເອີ້ນຊື່ຈະມີຄວາມພາກ ພູມໃຈ ມີວິທີນຶ່ງທີ່ເຮົາຈະສາມາດຈົດຈຳຊື່ຂອງຄົນອື່ນໄດ້ ກໍຄືເອົາຊື່ຂອງຄົນນັ້ນເຂົ້າກັບເຫດການຕ່າງໆ ເອົາຊື່ເຂົ້າກັບສະຖານທີ່ບຸກຄົນສຳຄັນ ນັກການເມືອງ ນັກທຸຣະກິດຊື່ດັງ ນັກຮ້ອງ ດາຣາ ຫລືນັກກິລາດາວເດັ່ນ ຫລືຄິດເຖິງເຣື່ອງຣາວໃນພຣະຄັມພີ.

**ປູກຄວາມຈິງໃຈ** - "ທີ່ທ່ານທັງຫລາຍໄດ້ຊຳຣະຈິດໃຈຂອງທ່ານໃຫ້ບໍຣິສຸດແລ້ວ ດ້ວຍການເຊື່ອຟັງຄວາມຈິງ ຈົນມີໃຈຮັກພວກພີ່ນ້ອງຢ່າງຈິງໃຈ" (1 ປຕ 1:22)

ຜູ້ນຳທີ່ດີຈະຕ້ອງປະພຶດຕໍ່ຄົນອື່ນດ້ວຍຄວາມຈິງໃຈ ໂປໂລໄດ້ກ່າວໄວ້ໃນ 2 ໂກຣິນໂທ 1:12 ໃນທຳນອງດຽວກັນວ່າ "ຮັກພີ່ນ້ອງຢ່າງຈິງໃຈ" ເພິ່ນໄດ້ຂຽນຈົດຫມາຍໄປເຖິງຊາຍຫນຸ່ມຄົນນຶ່ງບອກໃຫ້ລາວຮູ້ເຖິງຄວາມເຊື່ອຢ່າງຈິງໃຈຂອງເພິ່ນທີ່ໄດ້ຮັບການສືບທອດມາຈາກບັນພະບຸຣຸດ (2 ຕມທ 1:5)

ຄຳວ່າ "ຈິງໃຈ" ໃນພາສາເດີມ (ກຣີກ) ຫມາຍເຖິງປະຕິມາກັມທີ່ "ບໍ່ມີຂີ້ເຜີ້ງຜະສົມຢູ່" ທັງນີ້ເພາະໃນສມັຍນັ້ນຮູບປັ້ນທີ່ງົດງາມແລະມີຊື່ສຽງບາງອັນ ຊຶ່ງຊ່າງແກະສລັກເຮັດຊຳຣຸດເປັນຮອຍແລ້ວ ຈະເອົາຂີ້ເຜີ້ງອູດເສີມໄວ້ ແລະເບິ່ງດ້ວຍຕາເປົ່າບໍ່ອອກເລີຍ ແຕ່ເມື່ອນຳມາປະຕິມາກັມ ໂດຍການເອົາສິ່ງນັ້ນໄປລົ່ນໄຟ ຫລືຜ່ານຄວາມຮ້ອນ ຂີ້ເຜີ້ງທີ່ປະຕິດໄວ້ກໍຈະລະລາຍໄຫລອອກມາ. ດັ່ງນັ້ນ ຜູ້ນຳທີ່ດີບໍ່ຄວນມີຂີ້ເຜີ້ງແຫ່ງການຫລອກລວງເຄືອບແຝງຢູ່ໃນຊີວິດຂອງເຂົາ

**ກຽດຊັງຄົນອື່ນບໍ່ເປັນ** - ຈົ່ງເປັນນ້ຳນຶ່ງໃຈດຽວກັນ ຢ່າໃຝ່ສູງ ແຕ່ຈົ່ງຖ່ອມໃຈລົງຍອມເຮັດການຕ່ຳ ຢ່າຖືວ່າຕົນສລາດ" (ຣມ 12:16)

ພຣະເຢຊູຄຣິດຊົງເປັນຕົວຢ່າງທີ່ດີໃນການຄົບຫາ ສະມາຄົມກັບຄົນທຸກປະເພດ ຕັ້ງແຕ່ລະດັບກະສັດ ນັກການ ເມືອງ ນັກສາສນາ ຄົນເກັບພາສີ ຊາວປະມົງ ຄົນໂຣກຂີ້ທູດ ຄົນບ້າ(ຜີເຂົ້າ) ຈົນເຖິງ ໂສເພນີ ດັ່ງນັ້ນຜູ້ນຳທີ່ດີຈະຕ້ອງ ຄົບຄ້າສະມາຄົມກັບຄົນທຸກປະເພດ ຕັ້ງແຕ່ສູງລົງມາຈົນເຖິງຕ່ຳສຸດ

ເປັນຫຍັງຄົນອິນເດັຽຈຶ່ງສັດທາມະຫາຕະມະຄານທີ ເພາະທ່ານເປັນຢູ່ກັບພວກຊາວບ້ານໃນສລັມ ມື້ຕໍ່ມາພົບກັບນັກການເມືອງ ແຕ່ຣຸ່ງມື້ເຊົ້າມາ ທ່ານນັ່ງຮັບປະທານຢູ່ກັບພວກຈັນທານ ຊຶ່ງຖືວ່າເປັນວັນນະຕ່ຳສຸດ ແລ້ວທຸກໆຕອນຄ່ຳ ມະຫາຕະມະຄານທີຈະກັບມາເຮືອນຂອງທ່ານແລະນັ່ງປັ່ນຝ້າຍເຫມືອນຊາວບ້ານທົ່ວໄປ

ຄົນຈີນມັກຄ້າຂາຍ ຈຶ່ງຕ້ອງມີການຕິດຕໍ່ເວົ້າຈາກັບຜູ້ຄົນໂດຍບໍ່ເລືອກຫນ້າເຂົາມີຄຳເວົ້າວ່າ **"ຖ້າຍິ້ມບໍ່ເປັນບໍ່ຄວນເປີດຮ້ານ"** ໂດຍຍຶດຫລັກຄວາມຈະເຣີນຮຸ່ງເຮືອງໃນທຸຣກິດດັ່ງນີ້ "ຍິ້ມ ໄຫວ້ ໄຕ່ຖາມ ນ້ຳ ບໍຣິການ ງານຮຽບຮ້ອຍ ແລະຄອຍສົ່ງລູກຄ້າ"

ທ່ານຜູ້ນຳເອີຍ! ຂ້າພະເຈົ້າເຊື່ອວ່າ ຖ້າຄຣິສຕະຈັກຍຶດຫລັກການດັ່ງກ່າວ ປານນີ້ໂບດເຕັມຈົນລົ້ນບໍ່ມີບ່ອນນັ່ງແລ້ວ!

**ຫລິງເຫັນຄ່າຄົນອື່ນ** - "ຈົ່ງຮັກດ້ວຍໃຈຈິງ ຈົ່ງກຽດ ຊັງສິ່ງທີ່ຊົ່ວ ຈົ່ງຍຶດຫມັ້ນໃນສິ່ງທີ່ດີ ຈົ່ງຮັກກັນເຫມືອນສັນ ພີ່ນ້ອງ ສ່ວນການທີ່ໃຫ້ກຽດແກ່ກັນແລະກັນນັ້ນ ຈົ່ງຖືວ່າຜູ້ອື່ນດີກວ່າຕົນ" (ຣມ 12:9-10)

ຜູ້ນຳຝ່າຍຈິດວິນຍານຄວນຈະຍຶດຫລັກໃນພຣະຄຳ "ຈົ່ງຖືວ່າຜູ້ອື່ນດີກວ່າຕົນ" ຂໍໃຫ້ສັງເກດຄຳ "ຈົ່ງຖືວ່າ" ບາງຄັ້ງບໍ່ໄດ້ຫມາຍຄວາມວ່າເປັນຕາມນັ້ນແທ້ໆ ແຕ່ເປັນການສະແດງອອກເຖິງຄວາມຖ່ອມໃຈ ຜູ້ນຳຈະຕ້ອງຄິດສເມີວ່າ "ແທກສູງກໍຍັງຂາດ ແທກຕ່ຳກໍຍັງເຫລືອ"

ຜູ້ນຳຊຶ່ງເປັນທີ່ຊື່ນຊົມຂອງຜູ້ຄົນ ແລະປະສົບຄວາມສຳເຣັດ ມັກຈະແກ້ງເຮັດຕົນເປັນຄົນໂງ່ ແລະເຮັດເປັນບໍ່ຮູ້ເຣື່ອງຮູ້ຣາວ ເມື່ອຄົນອື່ນສະແດງຄວາມໂງ່ ຫລືສິ່ງທີ່ເປິ່ນໆອອກມາ ແຕ່ເຂົາຈະໃຊ້ຄົນອື່ນໃຫ້ເຮັດວຽກໂດຍການຍົກຍ້ອງຊົມເຊີຍ ບໍ່ມີຜູ້ໃດດອກທີ່ຮັບຄຳຊົມເຊີຍແລ້ວຈະນັ່ງເສີຍຢູ່ໄດ້ ອາດກ່າວໄດ້ວ່າ "ຜູ້ນຳທີ່ໂງ່ບໍ່ເປັນ ຈະເປັນໃຫຍ່ເປັນໂຕບໍ່ໄດ້"

**ຊື່ນຊົມກັບຜົນສຳເຣັດ** - ຜູ້ນຳທີ່ດີນັ້ນນອກຈາກຈະຊົມຊື່ນຍິນດີໃນຄວາມສຳເຣັດຂອງຜູ້ອື່ນແລ້ວ ເຂົາຈະຕ້ອງຮູ້ສຶກຊົມຊື່ນຍິນດີໃນຄວາມສຳເຣັດຂອງຕົນເອງນຳ (ແຕ່ບໍ່ແມ່ນເປັນການຄຸຍໂມ້ ໂອ້ອວດ ແລະທັບຖົມຄົນອື່ນ) ພຣະເຈົ້າຊົງເປັນຕົວຢ່າງໃນເຣື່ອງນີ້ ເມື່ອພຣະອົງຊົງສ້າງໂລກ ແລະຈັກກະວານພຣະຄັມພີບັນທຶກວ່າ "ພຣະເຈົ້າຊົງເຫັນວ່າດີ" (ປຖກ 1:12)

ປະການທີນຶ່ງ - ຜູ້ນຳຄວນຈະມີຄວາມຮູ້ສຶກຍິນດີແລະຂອບພຣະຄຸນພຣະເຈົ້າເມື່ອໄດ້ຮັບຄຳຊົມເຊີຍ ແຕ່ຈະບໍ່ອວດຕົວແລະຫລົງຕິດຢູ່ກັບມັນ ຄຳຊົມນັ້ນປຽບໄດ້ກັບນ້ຳຫອມ ໃຊ້ພຽງແຕ່ຊີດໃສ່ຫນ້ອຍນຶ່ງເທົ່ານັ້ນ ຖ້າຂືນກິນທັງແກ້ວມີຫວັງຕາຍແນ່ນອນ

ເຮົາຄົງຈຳເຣື່ອງຂອງນາຮ໌ຊິສຊັສໃນເທພນິຍາຍຂອງກຣີກໄດ້ ເຂົາເປັນຊາຍຫນຸ່ມຮູບງາມ ມື້ນຶ່ງຍ່າງໄປທີ່ແຄມສະນ້ຳໃນປ່າ ແລະມອງເຫັນເງົາຂອງຕົນເອງໃນນ້ຳ ກໍເກີດຫລົງຮັກຢ່າງຈັບໃຈ ເຝົ້າວິນວຽນຊື່ນຊົມກັບໃບຫນ້າແລະຮູບຮ່າງຂອງຕົນເອງ ບໍ່ເປັນອັນກິນອັນນອນຈົນເຖິງຜ່າຍຜອມແລະເສັຽຊີວິດໄປໃນທີ່ສຸດ ໃນບ່ອນນັ້ນຈຶ່ງເກີດດອກໄມ້ຊນິດນຶ່ງຂຶ້ນມາເອີ້ນ ວ່າ ດອກນາຮ໌ຊິສຊັສ

ປະການທີສອງ - ຜູ້ນຳຄວນຈະຍິນດີແລະຊົມເຊີຍຕົນເອງ ພ້ອມກັບຂອບພຣະຄຸນພຣະເຈົ້າ ແລ້ວຕັ້ງໃຈວ່າເມື່ອ ເຮັດວຽກສຳເລັດແລ້ວຈະໃຫ້ຣາງວັນແກ່ຕົນເອງຈັກອັນນຶ່ງ ເຊັ່ນ ຂ້າພະເຈົ້າຕັ້ງໃຈວ່າເມື່ອຂຽນຫນັງສືເສັດແລ້ວທົ່ວນຶ່ງ ກໍຈະພາຄອບຄົວໄປກິນອາຫານດີໆ ແລະແຂບງຈັກມື້ນຶ່ງ ເປັນຕົ້ນ

ຜູ້ນຳທີ່ຮັກ ຫລັກການເປັນຜູ້ນຳທັງສິບປະການທີ່ກ່າວມາແລ້ວນີ້ ເຊື່ອແນ່ວ່າທ່ານໄດ້ເຮັດການສຳລວດເບິ່ງແລ້ວ ມີບາງຢ່າງທີ່ເຫັນວ່າດີຢູ່ແລ້ວ ກໍຂໍພຣະເຈົ້າອວຍພຣະພອນທ່ານ ໃຫ້ດີຍິ່ງໆຂຶ້ນໄປ ແຕ່ຫາກມີບາງສິ່ງບາງຢ່າງທີ່ຍັງຂາດຕົກບົກພ່ອງຢູ່ ແລະທ່ານຕັ້ງໃຈວ່າຈະພຍາຍາມເຮັດຕາມໂດຍເພິ່ງພາອາສັຍຣິດອຳນາດຂອງພຣະວິນຍານບໍຣິສຸດແນ່ນອນ ໂດຍການຊ່ອຍເຫລືອຈາກພຣະເຈົ້າທ່ານກໍຈະສາມາດກ້າວໄປສູ່ການເປັນຜູ້ນຳຍຸກໃຫມ່ຢ່າງແທ້ຈິງ

## 3. ຜູ້ນຳຝ່າຍຈິດວິນຍານ

ຜູ້ນຳແບບໂລກຄືການໃຊ້ອຳນາດປົກຄອງຄົນອື່ນ ຜູ້ນຳໃນກອງທັບຄືຜູ້ທີ່ອອກຄຳສັ່ງແລະຄອຍຊີ້ນິ້ວ ແຕ່ຜູ້ນຳຝ່າຍຈິດວິນຍາຄືຜູ້ທີ່ຄອຍຮັບໃຊ້ຜູ້ອື່ນ ຫນ້າສັງເກດໄດ້ງ່າຍວ່າໃນການສູ້ຮົບແມ່ທັບຂອງຊາວໂລກຈະຕາຍທີ່ຫລັງ (ຄົນສຸດທ້າຍ) ແຕ່ແມ່ທັບຂອງຄຣິສຕຽນຈະຕ້ອງຕາຍກ່ອນ(ເປັນຄົນທຳອິດ)

ໃນມາຣະໂກ 10:35-45 ໄດ້ບັນທຶກໄວ້ວ່າມີສາວົກສອງຄົນຂອງພຣະເຢຊູແຍ້ງກັນເປັນໃຫຍ່ ແລະຕ້ອງການຄອງຕັ່ງຜູ້ນຳ ພຣະອົງຈຶ່ງຊົງອະທິບາຍຄວາມຈິງຝ່າຍວິນຍານໃຫ້ພວກເຂົາໄດ້ເຂົ້າໃຈຢ່າງແຈ່ມແຈ້ງວ່າ:

ປະການທີນຶ່ງ - ຜູ້ນຳຄືຜູ້ປະຕິບັດ ຊຶ່ງໃນພາສາເດີມຫມາຍເຖິງຄົນທີ່ຄອຍຮັບໃຊ້ເຈົ້ານາຍຢູ່ທີ່ໂຕະອາຫານ

ປະການທີສອງ - ຜູ້ນຳຝ່າຍຈິດວິນຍານຄືຂ້າທາດທີ່ມີໃຈຍິນດີເຮັດທຸກຢ່າງໂດຍບໍ່ມີຂໍ້ແມ່ໃດໆ ແລະບໍ່ຫວັງຜົນຕອບແທນສິ່ງໃດຈາກຜູ້ເປັນນາຍ ແຕ່ເຂົາຮູ້ແນ່ວ່າໃນອະນາຄົດນັ້ນຈະມີບຳເຫນັດອັນໃຫຍ່ຫລວງລໍຄອຍຢູ່ທີ່ເມືອງສວັນ

ນັກຂຽນຄຣິສຕຽນທີ່ມີຊື່ສຽງຄົນນຶ່ງ ໄດ້ໃຫ້ຂໍ້ສັງເກດລະຫວ່າງຜູ້ນຳແບບ (ໂລກ) ທົ່ວໄປກັບຜູ້ນຳຝ່າຍຈິດວິນຍານ ຊຶ່ງມີຄວາມແຕກຕ່າງກັນໃນແທບຈະທຸກດ້ານ ບໍ່ວ່າຈະເປັນແຮງພັກດັນ ຄວາມບັນດົນໃຈ ຈຸດປະສົງ ແລະຄວາມຮູ້ຄວາມສາມາດ ດັ່ງນີ້:

**ຜູ້ນຳຝ່າຍຈິດວິນຍານມີຄວາມຫມັ້ນໃຈໃນພຣະເຈົ້າ** ແຕ່ຜູ້ນຳທົ່ວໄປມີຄວາມຫມັ້ນໃຈໃນຕົນເອງ

**ຜູ້ນຳຝ່າຍຈິດວິນຍານຮຽນຮູ້ຈັກພຣະເຈົ້າແລະໂລກນີ້** ແຕ່ຜູ້ນຳທົ່ວໄປຮູ້ຈັກພຽງໂລກນີ້ເທົ່ານັ້ນ

**ຜູ້ນຳຝ່າຍຈິດວິນຍານມີຄວາມອ່ອນນ້ອມຖ່ອມໃຈແລະພໍໃຈທີ່ຈະຢູ່ຫລັງສາກ** ແຕ່ຜູ້ນຳທົ່ວໄປຢາກມີຫນ້າມີຕາ ຕ້ອງການກຽດແລະຮັບການຍົກຍ້ອງສັຣະເສີນຈາກຜູ້ອື່ນ

**ຜູ້ນຳຝ່າຍຈິດວິນຍານຈະປົກຄອງດ້ວຍຄວາມຮັກແລະໃຊ້ວິທີການນຸ່ມນວນ** ສ່ວນຜູ້ນຳທົ່ວໄປຈະໃຊ້ອຳນາດແລະອອກຄຳສັ່ງເປັນສຳຄັນ

**ຜູ້ນຳຝ່າຍຈິດວິນຍານສແວງຫາປໂຍດຂອງພຣະເຈົ້າເປັນຫລັກ** ແຕ່ຜູ້ນຳທົ່ວໄປກັບຊອກຫາປໂຍດຂອງຕົນເອງເປັນທີ່ຕັ້ງ

**ຜູ້ນຳຝ່າຍຈິດວິນຍານມັກທີ່ຈະເຮັດວຽກງານກັບຄົນອື່ນ ແລະປາຖນາຄວາມເປັນນ້ຳນຶ່ງໃຈດຽວກັນ**

ແຕ່ຜູ້ນຳທົ່ວໄປຈະແຍກຕົວອອກໄປຢູ່ຕ່າງຫາກ ມັກສາຍດ່ຽວ ຊຶ່ງເຮົາເອີ້ນຄົນປະເພດນີ້ແບບທັບສັພວ່າ "ວັນແມນໂຊວ໌"

**ຕົວຢ່າງຜູ້ນຳຈາກພຣະຄັມພີ--ໃນຟີລິບປອຍ 2:19-30**

ຂນະນັ້ນໂປໂລຕິດຄຸກຢູ່ທີ່ກຸງໂຣມໃນຂໍ້ຫາ ປະກາດເຣື່ອງພຣະຄຣິດ ໄດ້ຂຽນຈົດຫມາຍໄປເຖິງຜູ້ເຊື່ອທີ່ຄຣິສຕະຈັກຟີລິບປອຍ ເພື່ອຫນູນໃຈໃຫ້ພວກເຂົາມີຄວາມຊື່ນຊົມຍິນດີໃນອົງພຣະຜູ້ເປັນເຈົ້າ ພ້ອມກັບຍົກຕົວຢ່າງຜູ້ຮັບໃຊ້ຂອງພຣະເຈົ້າສອງຄົນຄື ຕີໂມທຽວ ແລະ ເອປາໂຟດີໂຕ

ໂດຍສະເພາະແລ້ວແມ່ນໂປໂລກ່າວເຖິງສັດຍາພິບານຫນຸ່ມຕີໂມທຽວໄວ້ເຖິງ ສີ່ ຢ່າງຄື:

<u>ປະການທີນຶ່ງ</u> - ຄວາມມີນ້ຳໃຈ "ຂ້າພະເຈົ້າບໍ່ມີຜູ້ໃດ ທີ່ມີນ້ຳໃຈເຫມືອນຕີໂມທຽວ" (ຂໍ້ 20)

ຜູ້ນຳຄຣິສຕະຈັກແລະຜູ້ຮັບໃຊ້ພຣະເຈົ້າທຸກຄົນ ຄວນຈະເປັນຄົນທີ່ມີໃຈກວ້າງຂວາງ ຄຳວ່າ "ມີນ້ຳໃຈ" ທີ່ໃຊ້ໃນພາສາກຣີກຫນ້າສົນໃຈ (phonero) ຫມາຍເຖິງ ມີຈິດໃຈທີ່ເຫມືອນກັນ (like-minded) ສອດຄ່ອງຕ້ອງກັນ ເຫັນໃຈຊຶ່ງກັນແລະກັນ ມີຈິດໃຈຈົດຈໍ່ໃນສິ່ງດຽວກັນ ໂປໂລໃຊ້ຄຳນີ້ອີກຄັ້ງໃນບົດທີ 2 ຂໍ້ 5 "ທ່ານຈຶ່ງມີນ້ຳໃຈຕໍ່ກັນເຫມືອນດັ່ງທີ່ມີໃນພຣະເຢຊູຄຣິດ" ລັກສນະຂອງຄົນທີ່ມີນ້ຳໃຈຄື "ຊ່ອຍເຫລືອຄົນອື່ນໂດຍບໍ່ຕ້ອງຂໍຮ້ອງຫລືໄຫວ້ວານ"

ການທີ່ຈະສະແດງອອກພຽງແຕ່ເວົ້າໃນການສະແດງອອກເຖິງຄວາມສົງສານເທົ່ານັ້ນບໍ່ພໍ ມີສັດຍາພິບານຄົນນຶ່ງກ່າວວ່າ ຖ້າຄຣິສຕຽນເຮົາ ມີນ້ຳໃຈຢ່າງພຣະເຢຊູແທ້ຈິງ ອາດຈະເກີດໂກລາຫົນຢ່າງໃຫຍ່ຫລວງ ເພາະຜູ້ຄົນຈະພາກັນແຫ່ມາເບິ່ງນ້ຳໃຈຖ້ວມໂບດ!

<u>ປະການທີສອງ</u> - ເອົາໃຈໃສ່ ຕີໂມທຽວເປັນຄົນທີ່ "ເອົາໃຈໃສ່ໃນທຸກສຸກຂອງທ່ານຢ່າງແທ້ຈິງ" (ຂໍ້20)

ຄົນເຮົາມີຄຳເວົ້າວ່າ ໃຈເອົາໃຈເຮົາ ຫລື "ເອົາໃຈເຂົາມາໃສ່ໃຈເຮົາ" ສ່ວນຄົນຈີນບອກເຖິງຄວາມສຳພັນອັນໃກ້ຊິດກັນວ່າ "ຍາມສຸກຮ່ວມເສພ ຍາມທຸກຮ່ວມຕ້ານ" ແມ່ນຫຍັງຄືຄວາມທຸກຂອງຄົນອື່ນ (ເຮົາຈະບໍ່ຖາມວ່າແມ່ນຫຍັງຄືຄວາມສຸກ)

ຕີໂມທຽວຜູ້ນຳທີ່ດີ ເອົາເປັນຄົນທີ່ໄວຕໍ່ຄວາມຮູ້ສຶກຂອງຄົນອື່ນ ຮູ້ວ່າສິ່ງໃດຄືຄວາມທຸກຂອງໂປໂລ ແລະສິ່ງ ໃດຄືຄວາມທຸກຍາກລຳບາກຂອງພີ່ນ້ອງຄຣິສຕຽນໃນ ຄຣິສຕະຈັກຟີລິບປອຍ

ພຣະຄັມພີອີກສະບັບນຶ່ງແປດັ່ງນີ້ "ຕີໂມທຽວມີທຳມະຊາດໃນການດູແລເອົາໃຈໃສ່ຜູ້ອື່ນ"

ມີເຣື່ອງເລົ່າກັນວ່າ ມີພໍ່ເຖົ້າຄົນນຶ່ງໄດ້ສູນເສັຽເມັຽສຸດທີ່ຮັກໄປ ເມື່ອເດັກຊາຍນ້ອຍໆທີ່ຢູ່ຂ້າງບ້ານສັງເກດເຫັນ ຈຶ່ງໄປຫາແລະນັ່ງລົງເທິງຕັກຂອງພໍ່ເຖົ້ານັ້ນ ດົນເຕີບເດັກນ້ອຍຄົນນັ້ນກໍກັບຄືນເມືອເຮືອນ ແມ່ຂອງເດັກນ້ອຍຖາມວ່າ "ເຈົ້າເວົ້າຫຍັງແດ່ປອບໃຈໃຫ້ພໍ່ເຖົ້າຫັ້ນ?"

"ບໍ່ໄດ້ເຮັດຫຍັງ!" ເດັກຊາຍນ້ອຍຕອບ "ຂ້ານ້ອຍພຽງແຕ່ໄປຊ່ອຍພໍ່ເຖົ້າຮ້ອງໄຫ້ເທົ່ານັ້ນ!"

ຊາວໂລກເວົ້າວ່າ ຖ້າທ່ານຫົວເຣາະ ໂລກກໍຈະຫົວເຣາະກັບທ່ານ ແຕ່ຖ້າທ່ານຮ້ອງໄຫ້ ທ່ານກໍຮ້ອງໄຫ້ໄປຄົນດຽວ ແຕ່ວ່າພຣະຄັມພີບອກເຮົາບໍ່ແມ່ນຫລືວ່າ "ຈົ່ງຊົມຊື່ນຍິນດີກັບຜູ້ທີ່ມີຄວາມ ຊົມຊື່ນຍິນດີ ຈົ່ງຮ້ອງໄຫ້ກັບຜູ້ທີ່ຮ້ອງໄຫ້" (ຣມ 12:15)

<u>ປະການທີສາມ</u> - ບໍ່ສແວງຫາຜົນປໂຍດຂອງຕົນເອງ "ເພາະວ່າຄົນອື່ນໆຍ່ອມສແວງຫາປໂຍດຂອງຕົນເອງ ບໍ່ໄດ້ສແວງຫາປໂຍດຂອງພຣະເຢຊູຄຣິດ" (ຂໍ້ 21) ພຣະຄັມພີສະບັບຂະຫຍາຍຄວາມແປດັ່ງນີ້ "ແຕ່ຕີໂມທຽວສແວງຫາປໂຍດຂອງພຣະຄຣິດ"

ຕີໂມທຽວເປັນຕົວຢ່າງທີ່ດີສຳລັບຜູ້ນຳຝ່າຍຈິດວິນຍານໃນປັດຈຸບັນຊຶ່ງມີເປົ້າໝາຍສູງສຸດຢູ່ທີ່ປໂຍດຂອງພຣະຄຣິດ ເຊັ່ນດຽວກັບຈຸດປະສົງຂອງໂປໂລຊຶ່ງໄດ້ຢືນຢັນວ່າ "ເພາະວ່າສຳລັບຂ້າພະເຈົ້ານັ້ນ ການມີຊີວິດຢູ່ກໍເພື່ອພຣະຄຣິດ" (1:21)

ມີຄົນເວົ້າກັນເຖິງ **7C** ຊຶ່ງເປັນຜົນປໂຍດຂອງຄົນໃນສມັຍໃໝ່ໄດ້ແກ່

cash (ເງິນສົດ)

car (ຣົດ)

credit card (ເງິນພາສຕິກ)

computer (ຄອມພິວເຕີ)

condominium (ຫ້ອງຊຸດຄອນໂດມີນຽມ) communication (ການສື່ສານ) ແລະ

condom (ຖົງຢາງອະນາມັຍ)

(ບາງຄົນແຖມ comfort ຮ້ອຍໃສ່ນຳ)

ຂໍໃຫ້ແນ່ໃຈວ່າ ຜູ້ໃດກໍຕາມທີ່ເຈາະຈົງສະເພາະປໂຍດສ່ວນຕົວຈະມີເພື່ອນນ້ອຍ ແຕ່ຄົນທີ່ມຸ່ງປໂຍດຂອງຄົນອື່ນຈະມີເພື່ອນເຫລືອຄະນານັບ ຜູ້ຮັບໃຊ້ຄົນນຶ່ງເຄີຍເວົ້າວ່າ ການຫິວເງິນກັບການຫິວສຽງຕົບມືກໍອາດຈະມີຄວາມຮ້າຍແຮງພໍໆກັນເໝືອນກັບໂຈນ ແມງດາ ຫລືໂສເພນີກັບນັກການເມືອງທີ່ຄົດໂກງ ຄໍຣັບຊັ່ນກໍຢູ່ໃນແບບດຽວກັນ ຜູ້ນຳທີ່ດີບໍ່ຄວນເຮັດສິ່ງໃດທີ່ເໝັ້ນໜັກສະເພາະປໂຍດສ່ວນຕົວຫລືຂອງພັກພວກກຸ່ມຕົນ ໃນວົງສາຄະນາຍາດ ແຕ່ມຸ່ງໄປທີ່ປໂຍດສ່ວນຣວມແລະເປັນການຖວາຍກຽດແດ່ພຣະເຈົ້າ

ມີພໍ່ເຖົ້າຄົນນຶ່ງໄດ້ເລົ່າໃຫ້ຂ້າພະເຈົ້າຟັງເຖິງເຣື່ອງຊາຍຄົນນຶ່ງຝັນໄປ ເພິ່ນເລົ່າວ່າ ລາວເສັຽຊີວິດແລະຖືກຊຸກໃຫ້ຕົກລົງໄປສູ່ບຶງໄຟນາຣົກ ລາວຄວ້າຈັບໄດ້ໃຍແມງມຸມເສັ້ນນຶ່ງທີ່ຫ້ອຍລົງມາຊຶ່ງມັນໜຽວຫລາຍ ລາວຈຶ່ງພຍາຍາມໂຫນຂຶ້ນ ແຕ່ຂນະນັ້ນມີອີກຫລາຍຄົນກະໂດດເກາະຂາຂອງລາວ ລາວຈຶ່ງພຍາຍາມເຂັ່ຽໃຫ້ຫລຸດ ເມື່ອທຸກຄົນຫລົ່ນລົງໄປໝົດແລ້ວ ປາກົດວ່າເສັ້ນໃຍແມງມຸມນັ້ນກໍຂາດພິງພໍດີ ລາວຈຶ່ງຫລົ່ນລົງສູ່ບຶງໄຟນາຣົກອັນໜ້າຢ້ານນັ້ນ ສລຸບໄດ້ວ່າ ໃຍແມງມຸມນັ້ນຄືເສັ້ນແຫ່ງຊີວິດຄຣິສຕຽນ ມັນຈະທົນທານຢູ່ໄດ້ບໍ່ວ່າຈະຮັບນ້ຳໜັກເທົ່າໃດກໍຕາມ ແຕ່ມັນຈະບາງໆ ແລະຂາດທັນທີເມື່ອພົບບາບແຫ່ງຄວາມເຫັນແກ່ຕົວ!

<u>ປະການທີສີ່</u> - ຮ່ວມຮັບໃຊ້ໃນຂ່າວປະເສີດ "ແຕ່ທ່ານກໍຮູ້ເຖິງຄຸນຄ່າຂອງຕີໂມທຽວດີແລ້ວວ່າ ເຂົາໄດ້ຮັບໃຊ້ຮ່ວມກັບຂ້າພະເຈົ້າໃນການປະກາດຂ່າວປະເສີດ" (ຂໍ້ 22)

ຜູ້ນຳບາງຄົນຖ້າເຮັດວຽກຄົນດຽວຈະເກີດຜົນກ້າວໜ້າຫລາຍ ແຕ່ພໍເຮັດວຽກເປັນທີມກັບມີບັນຫາເພາະຄວາມຂັດແຍ້ງກັນ ຜູ້ນຳຝ່າຍຈິດວິນຍານທີ່ແທ້ຈິງຈະສາມາດເຮັດວຽກຮ່ວມກັບຄົນອື່ນໄດ້ສເມີ ເຖິງວ່າຈະມີຄວາມຄິດເຫັນບໍ່ເໝືອນກັນ ແຕ່ໃຫ້ຖືວ່າໃນຄວາມຄິດເຫັນທີ່ແຕກຕ່າງກັນ ນັ້ນ ເຮົາສາມາດທີ່ຈະເປັນນ້ຳນຶ່ງໃຈດຽວກັນໄດ້ ໂດຍມີພຣະເຢຊູຄຣິດຊົງເປັນສູນກາງ

ຂ້າພະເຈົ້າຮູ້ສຶກບໍ່ສະບາຍໃຈທຸກເທື່ອທີ່ໄດ້ຍິນຄົນເວົ້າວ່າ ຄົນເຮົາເກັ່ງຖ້າເຮັດວຽກຄົນດຽວ ແຕ່ຈະລົ້ມເຫລວຢ່າງບໍ່ເປັນທ່າຖ້າຫາກເຮັດເປັນທີມ ໂດຍຍົກຕົວຢ່າງ ຂອງການຫລິ້ນກິລາ ຊຶ່ງມັກຈະຊນະແລະຄວ້າຫລຽນຄຳໄດ້ໃນກິລາ ປະເພດດ່ຽວ ເຊັ່ນ ຕີມວຍ ລອຍນ້ຳ ແຕ່ກິລາປະເພດທີມ ເຊັ່ນ ເຕະບານ ແລະບາສເກດບອລ ກັບໄປບໍ່ເຖິງດວງດາວ ເພາະມີຜູ້ຮ່ວມຫລິ້ນຫລາຍ ເຮົາບໍ່ຢາກຟັງຄຳນິນທາທີ່ວ່ານີ້ໃນຄຣິສຕະຈັກຂອງພຣະເຈົ້າ ເພາະໃນຝ່າຍຈິດວິນຍານເຮົາສາມາດຈະຮ່ວມກັນຮັບໃຊ້ໃນຂ່າວປະເສີດຂອງພຣະ ຄຣິດໄດ້

ຕອນສຸດທ້າຍຂອງບົດນີ້ ຂ້າພະເຈົ້າຢາກຈະກ່າວເຖິງໃນຊີວິດຜູ້ນຳທີ່ດີ ຊຶ່ງຈະຕ້ອງມີສິ່ງທີ່ໃຫມ່ເກີດຂື້ນສເມີ ນັບແຕ່ເລີ້ມແຣກທີ່ເຂົາຕັດສິນໃຈເປັນຄຣິສ ຕຽມແລະຖວາຍຕົວແດ່ພຣະເຈົ້າ "ເຫດສັນນັ້ນ ຖ້າຜູ້ໃດຢູ່ໃນພຣະຄຣິດ ຜູ້ນັ້ນກໍເປັນຄົນທີ່ຖືກຊົງສ້າງຂື້ນໃຫມ່ແລ້ວ ຖານະເກົ່າເຫລົ່ານັ້ນກໍລ່ວງໄປແລ້ວ ເບິ່ງແມ໋, ກາຍເປັນສິ່ງໃຫມ່ໆ ທັງນັ້ນ" (2 ກຣທ 5:17) ຕລອດຊີວິດຈົນເຖິງເວລາທີ່ພຣະເຢຊູຄຣິດສະເດັດກັບມາໃນວາຣະສຸດທ້າຍພຣະອົງກໍຍັງຊົງກ່າວວ່າ "ເບິ່ງແມ໋, ເຮົາສ້າງສິ່ງທັງປວງຂື້ນໃຫມ່" (ພນມ 21:5)

ຜູ້ນຳຝ່າຍຈິດວິນຍານໄດ້ບອກເຖິງວ່າ ຄວນຈະມີສິ່ງໃຫມ່ໆເກີດຂື້ນ ໂດຍໃຊ້ຕົວ R ອະທິບາຍຄວາມຫມາຍດັ່ງນີ້

R = Rethink

**"ຄິດໃນສິ່ງໃຫມ່"**

ຜູ້ນຳຣຸ່ນເກົ່າຢ້ານການປ່ຽນແປງແລະມັກຢູ່ກັບທີ່ ແຕ່ຜູ້ນຳທີ່ດີໃນປັດຈຸບັນຈະຕ້ອງມີຄວາມຄິດໃຫມ່ໆຢູ່ສເມີ ເຊັ່ນ ມີໂປຣແກມການນະມັສການໃນຄຣິສຕະຈັກ ວິທີການສອນພຣະຄັມພີແລະການເທສນາ ການຮ້ອງເພງແລະດົນຕຣີໃນໂບດ ວິທີການປະກາດຂ່າວປະເສີດແລະກໍ່ຕັ້ງຄຣິສຕະຈັກ ສິ່ງທີ່ຫນ້າເປັນຫ່ວງຫລາຍທີ່ສຸດຄື ວິທີການທີ່ເມື່ອຊາວປີກ່ອນເປັນຢ່າງໃດ ທຸກມື້ນີ້ກໍຍັງຄົງເປັນຢູ່ຢ່າງນັ້ນ

ຄິດເຖິງຫລາຍປີກ່ອນເມື່ອເວລາຂ້າພະເຈົ້າເຮັດວຽກ ຢູ່ໃນສະຖາບັນສ້າງຜູ້ນຳແຫ່ງນຶ່ງ ໄດ້ເຄີຍສເນີຄວາມຄິດ ໃຫມ່ໆຫລາຍຢ່າງໃນການພັທນາປັບປຸງສະຖາບັນ ທັງໃນທາງຄຳເວົ້າແລະຂຽນເປັນລາຍລັກອັກສອນ ເຊັ່ນ ການໃຊ້ຄອມພິວເຕີເຂົ້າມາຊ່ອຍງານ ການຈັດຈ້າງເລຂານຸການ ແລະການຂະຫຍາຍຫ້ອງສມຸດ ແຕ່ຜູ້ບໍຣິຫານຕອບປະຕິເສດສັ້ນໆວ່າ "ເຮົາໃຊ້ວິທີແບບນີ້ມາດົນແລ້ວ ແລະເຫັນວ່າຍັງໃຊ້ໄດ້ຈຶ່ງບໍ່ຄວນປ່ຽນແປງ"

ແນ່ນອນ ພຣະເຈົ້າຂອງເຮົາຍັງຄົງຄືເກົ່າ ແລະຂ່າວປະເສີດຂອງພຣະເຢຊູຄຣິດກໍບໍ່ປ່ຽນແປງ ແຕ່ວິທີການຍ່ອມປ່ຽນແປງໄປຕາມຍຸກສມັຍ ເຮົາຢ່າບອກວ່າວິທີອື່ນບໍ່ດີຈົນກວ່າເຮົາຈະໄດ້ທົດລອງເຮັດເສັຽກ່ອນ

ມີນັກເທດແລະສິດຍາພິບານຈຳນວນຫລາຍທີ່ບໍ່ພຽງແຕ່ບໍ່ຍອມພັທນາເທົ່ານັ້ນ ແຕ່ກັບຍັງຖອຍຫລັງເຂົ້າຄອງອີກ ເຂົາເທສນາແບບພາຍເຮືອໃນອ່າງວົນວຽນຊ້ຳຊາກ ບໍ່ມີການກະຕຽມຄຳເທສນາຢ່າງດີ ສຸກເອົາເຜົາກິນ ບາງຄົນກໍທ່ຽວໄປຈົດຄຳເທສນາຂອງຄົນນັ້ນຄົນນີ້ມາ ຈຶ່ງບໍ່ຫນ້າແປກປລາດໃຈວ່າ ເປັນຫຍັງດົນເທົ່າໃດ ສະມາຊິກກໍແຮງລົດຫນ້ອຍຖອຍລົງ

ມີເຣື່ອງເລົ່າວ່າ ຫລັງທ່ຽງວັນອາທິດ ມີແມ່ປ້າຄົນນຶ່ງພົບກັບສິດຍາພິບານປະຈຳຄຣິສຕະຈັກ ພ້ອມກັບເວົ້າຂື້ນວ່າ "ຂອບຄຸນພຣະເຈົ້າທີ່ອາຈານເທສນາເທື່ອນີ້ດີກວ່າເທື່ອຫນ້າສເມີ" ຕອນແຣກສິດຍາພິບານຍິ້ມແປ້ນຄິດວ່າເປັນຄຳຊົມ ແຕ່ເມື່ອຄິດຕຶກຕອງເບິ່ງອີກເທື່ອນຶ່ງຈຶ່ງຮູ້ວ່າມັນເປັນຄຳຕຳຫນິ ແລະຮູ້ວ່າມັນເປັນສັນຍານການລາຈາກຂອງສະມາຊິກ

R = Redesign

**"ວາງແຜນໃຫມ່"**

ຜູ້ນຳທີ່ດີຈະຕ້ອງຄິດແລະວາງແຜນທັງລະຍະສັ້ນ ລະຍະກາງ ແລະລະຍະຍາວ ຄິດເຖິງສາມວັນຂ້າງຫນ້າໄປຈົນເຖິງສາມສິບປີຂ້າງຫນ້າ

ພຣະເຢຊູຊົງສອນກ່ຽວກັບເຣື່ອງນີ້ ຄົນທີ່ຈະສ້າງບ້ານຈະບໍ່ນັ່ງລົງຄິດເບິ່ງເສັຽກ່ອນຫລືວ່າມີງົບປະມານພຽງພໍຫລືບໍ ເພາະຖ້າສ້າງບໍ່ແລ້ວແລະຄ້າງປະໄວ້ຜູ້ຄົນຈະຫົວເຣາະເຍາະເອົາວ່າ ມີປັນຍາເລີ້ມສ້າງແຕ່ບໍ່ມີທາງທີ່ຈະເຮັດໃຫ້ສຳເຣັດ ແລະພຣະອົງຊົງສອນອີກວ່າ ມີນາຍທະຫານຄົນໃດທີ່ຈະຍົກທັບໄປສູ້ຮົບກັບສັດຕຣູ ແລ້ວຈະບໍ່ສົ່ງຫນ່ວຍຂ່າວກອງໄປຫາຂໍ້ມູນເບິ່ງກ່ອນຫລືວ່າກຳລັງທະຫານແລະອາວຸດຂອງຝ່າຍຂ້າເສິກມີຈຳນວນເທົ່າໃດ ແລ້ວປະເມີນກຳລັງພົນຂອງຕົນເອງ ຖ້າເຫັນວ່າສູ້ບໍ່ໄດ້ ກໍຈະຕ້ອງຮີບໄປເຈຣະຈາຂໍຢ່າເສິກແລະເປັນມິດໄມຕຣີກັນ ຊຶ່ງເປັນຫົນທາງທີ່ປອດພັຍກວ່າທາງອື່ນໆ

ຜູ້ນຳທີ່ດີຈະຕ້ອງວາງແຜນຕຽມສ້າງຄົນ ໄວ້ໃຫ້ເປັນຜູ້ນຳແທນຕົນເອງ ເຫມືອນດັ່ງທີ່ໂມເຊສ້າງໂຢຊວຍ ເອລີຢາປຸກປັ້ນເອລີຊາ ໂປໂລສ້າງຕີໂມທຽວ ແລະພຣະເຢຊູຄຣິດຊົງສ້າງສາວົກໃນວົງສິບສອງຄົນ ແລະວົງນອກອີກເຈັດສິບຄົນ

ມີເຣື່ອງເລົ່າເຖິງ ນັກບວດນິກາຍເຊນອົງນຶ່ງຊຶ່ງເຖົ້າຫລາຍແລ້ວ ມີສິດຫນຸ່ມກົ້ນກຸຕິຊື່ ເຕຄິຊຸຍ ມື້ນຶ່ງໄຟໄຫມ້ສຳນັກຈົນບໍ່ເຫລືອຫຍັງເລີຍ ອາຈານກັບລູກສິດຈະຕ້ອງຍ້າຍໄປຢູ່ທີ່ອື່ນຊົ່ວຄາວ ລະຫວ່າງນັ້ນກໍໄດ້ສ້າງສຳນັກຂື້ນມາໃຫມ່.

ຄືນນຶ່ງ ອາຈານໄດ້ຖາມລູກສິດວ່າ "ຕອນນີ້ວຽກກໍ່ສ້າງໄປຮອດໃສແລ້ວ"

"ກຳລັງມຸງຫລັງຄາຢູ່" ເຕຄິຊຸຍຕອບຄ່ອຍໆ

ອາຈານເບິ່ງລູກສິດດ້ວຍສາຍຕາຝ້າຟາງແລະຖາມອີກວ່າ "ຈະໃຊ້ເວລາອີກດົນປານໃດ?"

"ຄົງໃຊ້ຫລາຍມື້ຢູ່" ເຕຄິຊຸຍຕອບຄ່ອຍໆ

"ສ້າງເສັດແລ້ວ ແມ່ນໃຜຈະໄປຢູ່ຫັ້ນ"

"ກໍອາຈານກັບຂ້ານ້ອຍຫັ້ນແລ້ວ"

"ຖ້າເຮົາຕາຍເສັຽກ່ອນລະ" ອາຈານອາຍຸ ວັຍໄກ້ຝັ່ງ ສະແດງຄວາມເປັນຫ່ວງ

ເຕຄິຊຸຍເບິ່ງຫນ້າອາຈານດົນເຕີບ ແລ້ວເວົ້າຂຶ້ນຄ່ອຍໆວ່າ "ຂ້ານ້ອຍວ່າຕອນນີ້ ອາຈານນອນຫລັບເສັຽເຖີດ"

"!!!"

R = Retool

**"ຈັດຫາເຄື່ອງມືໃຫມ່"**

ຜູ້ນຳທີ່ດີຈະຕ້ອງຕັ້ງງົບປະມານແລະຈັດຫາອຸປກອນເຄື່ອງໄມ້ເຄື່ອງມືໄວ້ສຳລັບງານຂອງພຣະເຈົ້າ ບໍ່ວ່າຈະເປັນເຄື່ອງພິມດີດ ໂທຣະສານ ໂທຣະສັບ ຄອມພິວເຕີ ເຄື່ອງສຽງ ຍານພາຫະນະ ແລະສະຖານທີ່ເພື່ອອຳນວຍຄວາມສະດວກ ຫາກມີເງິນພຽງພໍກໍຫາຊື້ທັນທີ ບໍ່ຕ້ອງນັ່ງຖ້າຈົນກວ່າຈະມີຄົນຖວາຍໃຫ້ ຈາກປະສົບການຂ້າພະເຈົ້າພົບວ່າ ບາງຄົນຖວາຍເພາະຄວາມເວທນາສົງສານ ຫລືຕ້ອງການໂລ່ຂອງເກົ່າມາໃຫ້ເຮົາເພື່ອເຂົາຈະຊື້ຂອງໃຫມ່ທີ່ດີກວ່າ

ເຄີຍມີສະມາຊິກໃນຄຣິສຕະຈັກບາງບ່ອນຖວາຍປີອານໂນເກົ່າໆແລະຊຳຣຸດແລ້ວໃຫ້ແກ່ໂບດ ເພາະເຂົາຕ້ອງການຈະຊື້ຣຸ່ນໃຫມ່ມາໃຊ້ທີ່ເຮືອນ ແລະເຄີຍເຫັນຄຣິສຕຽນບາງຄົນຖວາຍຣົດເກົ່າໆຈະເພປູ່ແລ້ວໃຫ້ແກ່ສິດຍາພິບານ ແລ້ວຕົວເຂົາເອງກໍໄປເອົາລົດໃໝ່ໆມາຂີ່

ຂ້າພະເຈົ້າຈື່ໄດ້ວ່າ ເມື່ອຂ້າພະເຈົ້າເຮັດວຽກຢູ່ໃນຫນ່ວຍງານຂອງຄຣິສຕຽນທາງພາກເຫນືອກໍມີອົງການສົງເຄາະ (ຂອງຄຣິສຕຽນ) ແຫ່ງນຶ່ງຍິນດີທີ່ຈະຖວາຍເຄື່ອງ ສາຍສໄລ (ພາບທີ່ບໍ່ເຫນັງ) ເກົ່າໆໃຫ້ຫລາຍກວ່າສິບເຄື່ອງເພື່ອໃຊ້ໃນການປະກາດຂ່າວປະເສີດ ພວກເຮົາທຸກຄົນຕື່ນເຕັ້ນດີໃຈແລະຂອບພຣະຄຸນພຣະເຈົ້າກັນຍົກໃຫຍ່ ແຕ່ເມື່ອເຄື່ອງເຫລົ່າ ນັ້ນມາເຖິງກັບກາຍເປັນວ່າ ເຄື່ອງເຫລົ່ານັ້ນຊຳຣຸດເພພັງ ແລະຫມົດຄຸນນະພາບແລ້ວ ນຳມາໃຊ້ງານໄດ້ ພຽງແຕ່ສອງສາມເຄື່ອງເທົ່ານັ້ນ

ແລະກ່າວໄດ້ວ່າ ຫນັງສືເປັນເຄື່ອງມືທີ່ຈຳເປັນຫລາຍສຳລັບຄົນຂອງພຣະເຈົ້າ ຜູ້ນຳຝ່າຍຈິດວິນຍານຈະຕ້ອງມີຫ້ອງສມຸດເປັນຂອງຕົນເອງເພື່ອຈະມີຄວາມຮູ້ຢ່າງກວ້າງ ຂວາງທາງດ້ານພຣະຄັມພີແລະຈະເປັນຄົນທີ່ທັນໂລກແລະທັນເຫດການ

ຜູ້ນຳຄວນຈະອ່ານຫນັງສືຢ່າງຫນ້ອຍອາທິດນຶ່ງລະສາມຫົວ ໂດຍສະເພາະຫນັງສືທີ່ກ່ຽວຂ້ອງກັບທາງດ້ານຝ່າຍຈິດວິນຍານ ແລະສິດຍາພິບານຄວນຈະຈັດຫນັງສືໄວ້ໃຫ້ແກ່ສະມາຊິກຂອງຕົນໄດ້ອ່ານນຳດ້ວຍ

ເຖິງວ່າປັດຈຸບັນນີ້ຜູ້ນຳສາມາດຊອກຫາຄວາມຮູ້ທຸກ ຢ່າງໄດ້ຈາກອິນເຕີແນຕ ແຕ່ເຮົາຍັງເຫັນວ່າຫນັງສືກໍຍັງມີຄວາມຈຳເປັນຢູ່ດີ

R = Retrain

**"ຝຶກອົບຮົມໃຫມ່"**

ຜູ້ນຳທີ່ດີຈະຕ້ອງວາງແຜນໃຫ້ມີການປະຊຸມຈັດອົບຮົມ ສຳມະນາໃນລະດັບສະມາຊິກແລະລະດັບຜູ້ນຳຄຣິສຕະຈັກທີ່ຈະເຣີນກ້າວຫນ້າແລະຫມັ້ນຄົງ ຄືຄຣິສຕະຈັກທີ່ຈັດໃຫ້ມີການອົບຮົມພຣະຄັມພີແກ່ສະມາຊິກເປັນປະຈຳ ມີການຮຽນພຣະຄຳເປັນຂັ້ນຕອນຕາມລຳດັບ

ທຸກມື້ນີ້ມີສຽງເວົ້າກັນຫນາຫູວ່າຄຣິສຕະຈັກແລະອົງການຄຣິສຕຽນຂາດເຂີນຜູ້ນຳທີ່ມີຄຸນນະພາບເພາະເຮົາມົວໄປຖ້າຄົນທີ່ຮຽນຈົບມາຈາກສະຖາບັນພຣະຄຣິສຕະທັມ   ຊຶ່ງແຕ່ລະປີມີຈຳນວນພຽງຫນ້ອຍຄົນເທົ່ານັ້ນ ເຮັດໃຫ້ຕ້ອງແຍ້ງຕົວກັນດ້ວຍການສເນີຄ່າຕອບແທນແລະສວັດດີການທີ່ສູງກວ່າ ບໍ່ພຽງແຕ່ເທົ່ານັ້ນ ເກີດພາວະສມອງໄຫລ ຄືຄົນດີ ທີ່ມີຢູ່ກໍຖືກຫນ່ວຍງານອື່ນຊຶ່ງມີເງິນຫນາດຶງຕົວໄປເສັຽອີກ ແຕ່ຖ້າສິດຍາພິບານຈະຈັດການອົບຮົມສ້າງຜູ້ນຳຂຶ້ນມາດ້ວຍຕົນເອງ ເຫມືອນທີ່ໂປໂລໄດ້ເຮັດກັບຕີໂມທຽວ "ຈົ່ງມອບຄຳສອນທີ່ເຈົ້າໄດ້ຍິນຈາກເຮົາຕໍ່ຫນ້າພຍານຫລາຍຄົນ ໄວ້ກັບຄົນທີ່ຊື່ສັດທີ່ສາມາດສອນຄົນອື່ນໄດ້ດ້ວຍ" (2 ຕມທ 2:2) ເຊື່ອແນ່ວ່າ ໃນບໍ່ດົນນານເຮົາຈະມີຜູ້ນຳທີ່ມີຄຸນນະພາບຄົບທຸກແຫ່ງຢ່າງແນ່ນອນ

## 4. ຜູ້ນຳແບບສອດສ່ອງດູແລ

ມື້ກ່ອນນັ້ນໄດ້ຂຶ້ນໄປອົບຮົມຜູ້ນຳຂອງຄຣິສຕະຈັກໃນແຫ່ງນຶ່ງ ແລະໄດ້ອ່ານເຣື່ອງ "ຄຣູແຊ່ງສອນແທນ"  ໃນຫນັງສືເຫລັ້ມນຶ່ງ (ຊຶ່ງມີຄົນລືມໄວ້) ເຮັດໃຫ້ຄິດເຖິງຜູ້ນຳຝ່າຍຈິດວິນຍານຂຶ້ນມາທັນທີ!

ເຣື່ອງມີຢູ່ວ່າ ມີໂຮງຮຽນຫລັງນ້ອຍໆແຫ່ງນຶ່ງ ໃນຊົນນະບົດ ມີນາຍຄຣູຢູ່ພຽງສອງຄົນຄື ຄຣູຈັນທາ ແລະຄຣູແຊ່ງ ທ້າຍເດືອນນັ້ນຄຣູຈັນທາມີເຫດຕ້ອງເຂົ້າໄປເຮັດວຽກໃນເມືອງສອງສາມມື້ ຈຶ່ງຝາກຫ້ອງຮຽນໄວ້ກັບຄຣູແຊ່ງ ມື້ທຳອິດຄຣູແຊ່ງເຂົ້າໄປໃນຫ້ອງ ປ.4 ແລະເລີ້ມຕົ້ນດ້ວຍການຖາມນັກຮຽນວ່າ "ນັກຮຽນຮູ້ບໍ່ວ່າມື້ນີ້ຄຣູຈະສອນເຣື່ອງຫຍັງ?" ນັກຮຽນຕອບເກືອບຈະພ້ອມກັນວ່າ "ບໍ່ຮູ້" ຄຣູແຊ່ງຈຶ່ງ

ບອກວ່າ "ເຮັດໃດບໍ່ຮູ້.. ນີ້ສະແດງວ່າພວກເຈົ້າບໍ່ໄດ້ຕຽມຕົວມາຮຽນເລີຍ ຖ້າຢ່າງນັ້ນ ມື້ນີ້ຄຣູຈະບໍ່ສອນພວກເຈົ້າ" ວ່າແລ້ວຄຣູແຊ່ງກໍຍ່າງອອກຈາກຫ້ອງໄປ

ພໍມື້ທີສອງຄຣູແຊ່ງກໍຍ່າງອາດໆເຂົ້າມາໃນຫ້ອງຮຽນແລະຖາມວ່າ "ນັກຮຽນ ຮູ້ບໍມື້ນີ້ຄຣູຈະສອນເຣື່ອງຫຍັງ?" ນັກຮຽນໄດ້ຮັບປະສົບການຈາກມື້ວານແລ້ວ ຈຶ່ງຕອບເປັນສຽງດຽວກັນວ່າ "ຮູ້ແລ້ວ ຂ້ານ້ອຍ" ຄຣູແຊ່ງຍ່າງວົນຮອບໂຕະແລ້ວເວົ້າຂຶ້ນວ່າ "ດີແລ້ວ ໃນເມື່ອພວກເຈົ້າຮູ້ແລ້ວມື້ນີ້ກໍບໍ່ຕ້ອງສອນ" ວ່າແລ້ວຄຣູແຊ່ງກໍເດີນອອກຈາກຫ້ອງໄປອີກ

ວັນທີສາມ ຄຣູແຊ່ງຈອມລວດລາຍກໍຍ່າງເຂົ້າມາໃນຫ້ອງຮຽນດ້ວຍຄຳຖາມເດີມ "ນັກຮຽນ ຮູ້ບໍມື້ນີ້ ຄຣູຈະສອນເຣື່ອງຫຍັງ?" ນັກຮຽນໄດ້ນັດຫມາຍກັນໄວ້ແລ້ວວ່າຈະແບ່ງເປັນສອງກຸ່ມ ກຸ່ມແຣກຕອບວ່າ "ຮູ້" ແລະອີກກຸ່ມນຶ່ງ "ບໍ່ຮູ້" ຄຣູແຊ່ງຈຶ່ງເອົາໄມ້ໂຜ່ນ້ອຍໆຊີ້ໄປທີ່ນັກຮຽນກຸ່ມທຳອິດ "ເອີ! ດີແລ້ວ ໃຫ້ພວກທີ່ຮູ້ສອນພວກທີ່ບໍ່ຮູ້" ວ່າແລ້ວຄຣູແຊ່ງກໍຍ່າງອອກຈາກຫ້ອງໄປ

"!!!"

ເຣື່ອງນີ້ເປັນພຽງເຣື່ອງເລົ່າແບບຫົວໆ ແຕ່ມີບົດຮຽນແຫ່ງຄວາມຈິງແຝງຢູ່ ຄື ຄວາມຮັບຜິດຊອບຂອງຄົນລະດັບຜູ້ນຳເຮັດໃຫ້ເຮົາຄິດເຖິງເຣື່ອງຣາວຂອງຊາຍຄົນນຶ່ງໃນພຣະຄັມພີ ລາວຊື່ "ເອປາໂຟດີໂຕ" ຊຶ່ງເປັນຕົວຢ່າງຂອງຜູ້ທີ່ມີຄຸນສົມບັດຜູ້ນຳຢູ່ຫລາຍປະການ ໂປໂລໄດ້ກ່າວເຖິງຊາຍຄົນນີ້ໄວ້ເຖິງສີ່ເທື່ອ ໃນຟີລິບປອຍ 1:22-25; ໂກໂລຊາຍ 1:7-8; ແລະຟີເລໂມນ 23 ບອກຢ່າງຊັດເຈນວ່າຜູ້ນຳຈະຕ້ອງເປັນຄົນຢ່າງໃດແດ່

**ຜູ້ນຳຄືເພື່ອນຮ່ວມງານ** - "ຂ້າພະເຈົ້າຄິດແລ້ວວ່າຈະຕ້ອງໃຫ້ເອປາໂຟດີໂຕນ້ອງຂອງຂ້າພະເຈົ້າ ຊຶ່ງເປັນເພື່ອນຮ່ວມງານ" (ຟລປ 2:25)

ໂປໂລບອກວ່າຊາຍຫນຸ່ມຄົນນີ້ເຮັດວຽກຄຽງບ່າຄຽງໄຫລ່ກັບທ່ານໃນລັກສນະຂອງ "ເພື່ອນຮ່ວມງານ" ບໍ່ມີຜູ້ໃດເປັນເຈົ້ານາຍແລະບໍ່ມີຜູ້ໃດເປັນລູກນ້ອງ ແລະທ່ານຍັງບອກຢ້ຳອີກແກ່ສະມາຊິກໃນຄຣິສຕະຈັກໂກໂລຊາຍກ່ຽວກັບເອປາຟາ ອີກວ່າ "ດັ່ງທີ່ເຈົ້າທັງຫລາຍໄດ້ຮຽນຮູ້ຈາກເອປາຟາ ຜູ້ເປັນເພື່ອນຮ່ວມງານທີ່ຮັກຂອງພວກເຮົາ.." (ກລຊ 1:7)

ຂ້າພະເຈົ້າຈຳໄດ້ວ່າເມື່ອຕອນທີ່ກໍ່ຕັ້ງຄຣິສຕະຈັກແຫ່ງນຶ່ງນັ້ນ ຂ້າພະເຈົ້າກັບມິກຊັນນາຣີຊາວອະເມຣິກັນໄດ້ຕົກລົງກັນວ່າ ເຮົາຈະເປັນເພື່ອນຮ່ວມງານກັນຈະທຳງານເປັນທີມຄື ຜູ້ນຳພື້ນເມືອງ ແລະຕ່າງຊາດທຸກຄົນມີອຳນາດແລະສິດທີເທົ່າທຽມກັນຕາມຄຳສອນຂອງພຣະຄັມພີ "ຄົນທີ່ປູກແລະຄົນທີ່ຫົດນ້ຳກໍເປັນພວກດຽວກັນ..ເພາະເຮົາທັງຫລາຍຮ່ວມກັນທຳງານເພື່ອພຣະເຈົ້າ" (1 ກຣ ທ 3:8-9) ດ້ວຍຂໍ້ຕົກລົງນັ້ນເຮັດໃຫ້ງານຂອງພຣະເຈົ້າຈະເຣີນກ້າວຫນ້າໃນຫລາຍປີຕໍ່ມາ

**ຜູ້ນຳຄືເພື່ອນຮ່ວມຕໍ່ສູ້** - ໂປໂລກ່າວເຖິງເອປາໂຟດີໂຕ ວ່າເປັນ "ເພື່ອນທະຫານຂອງຂ້າພະເຈົ້າ" (ຟລປ 2:25)

ທຸກມື້ນີ້ຄຣິສຕຽນເຮົາມີສົງຄາມຝ່າຍຈິດວິນຍານ ລະຫວ່າງເຈົ້າແຫ່ງສວັນຄືພຣະເຢຊູຄຣິດກັບເຈົ້າແຫ່ງມະຣິກຄືຊາຕານແລະເຫລົ່າວິນຍານຊົ່ວທັງປວງມີການສູ້ຮົບກັນຢ່າງຮຸນແຮງເພື່ອແຍ່ງຊິງຄວາມເປັນໃຫຍ່ ພຣະຄັມພີບັນທຶກວ່າ "ເອປາຟາຊຶ່ງເປັນຄົນນຶ່ງໃນພວກເຈົ້າແລະເປັນຜູ້ຮັບໃຊ້ຂອງພຣະເຢຊູຄຣິດ ກໍຝາກຄວາມຄິດເຖິງມາຍັງເຈົ້າທັງຫລາຍເຫມືອນກັນ ເພິ່ນໄດ້ອົດສາສູ້ໃນການອ້ອນວອນສຳລັບເຈົ້າທັງຫລາຍຢູ່ສເມີ ຫວັງຈະໃຫ້ພວກເຈົ້າຕັ້ງຫມັ້ນຢູ່ເປັນຜູ້ໃຫຍ່ຖ້ວນ ແລະຮັບຄວາມແນ່ໃຈອັນແຫນ້ນຫນາໃນທຸກສິ່ງຕາມນ້ຳພຣະທັຍຂອງພຣະເຈົ້າ" (ກລຊ 4:12)

ດັ່ງນັ້ນ ຜູ້ນຳຝ່າຍຈິດວິນຍານຈຳເປັນຈະຕ້ອງມີເພື່ອນທີ່ຮ່ວມສູ້ຮົບໃນສົງຄາມກັບຊາຕານແລະເນື້ອຫນັງດ້ວຍການອະທິຖານຮ່ວມກັນແລະຫນູນຈິດຊູໃຈກັນ ຂ້າພະເຈົ້າມີເພື່ອນສນິດໃນລະດັບຜູ້ນຳຄົນນຶ່ງ ເຮົາຈະພົບກັນທຸກວັນອັງຄານຕອນເຊົ້າເພື່ອເວົ້າຈາກັນ ປຶກສາຫາລືກ່ຽວກັບຊີວິດສ່ວນຕົວ ກິຈການງານ ເວົ້າເຖິງສິ່ງທີ່ດີແລະແນວຮ້າຍສິ່ງທີ່ປະສົບຄວາມສຳເຣັດແລະສິ່ງທີ່ລົ້ມເຫລວ ຈາກນັ້ນເຮົາຈະອະທິຖານຢ່າງເປີດອົກຕໍ່ພຣະເຈົ້າດ້ວຍກັນ

**ຜູ້ນຳຄືຜູ້ຮັບໃຊ້** - "ແລະເປັນຜູ້ຮັບໃຊ້ທີ່ພວກເຈົ້າໃຫ້ມາປົວຣະບັດເຮົາໃນຍາມຂັດສົນ" (ຟລປ 2:25)

ໂປໂລໄດ້ຮັບຄວາມທຸກຍາກລຳບາກຂນະຢູ່ໃນຄຸກທີ່ກຸງໂຣມ ກໍມີແຕ່ເອປາຟາຄົນນີ້ແຫລະທີ່ຄອຍຢ້ຽມຢາມ ດູແລເອົາໃຈໃສ່ຕລອດເວລາອັນທີ່ຈິງເຂົາຖືກຈຳຈອງດ້ວຍກັນກັບໂປໂລ (ຟລມ 1:23) ເມື່ອອ່ານຕໍ່ໄປເຮົາຈະພົບວ່າ ບໍ່ແມ່ນຮັບໃຊ້ໂປໂລ ແຕ່ເປັນການຮັບໃຊ້ພຣະຄຣິດ "ທ່ານເປັນຜູ້ປະຕິບັດອົງພຣະຄຣິດແທນເຮົາດ້ວຍໃຈສັດຊື່" (ກລຊ 1:7) ຫີນທາງພິສູດນ້ຳ ການເວລາພິສູດຄົນ ຍາມທຸກຍາກຈຶ່ງຈະຮູ້ວ່າຜູ້ໃດເປັນຄົນຢ່າງໃດ ມີໂຄງບົດນຶ່ງທີ່ກ່າວເຖິງເພື່ອນແທ້ວ່າ

"ຍາມດີມີເພື່ອນພ້ອງແລ່ນຕາມ ຢືນນັ່ງໄຕ່ຕອມຖາມຖີ່ຖ້ວນ
ຍາມທຸກສຸກເສີນຄວາມ ເພື່ອນເຈລະຈານິ່ງນ້ອຍກໍຫາມີ"

**ຜູ້ນໍາຄືຜູ້ເສັຽສລະ** - ໂປໂລກ່າວເຖິງການທໍາງານຂອງເອປາໂຟດີໂຕວ່າ "ເພາະທ່ານເກືອບຈະສິ້ນຊີວິດເສັຽເນື່ອງຈາກການປະຕິບັດງານຂອງພຣະຄຣິດ ຄືທ່ານໄດ້ສ່ຽງຊີວິດຂອງຕົນ ເພື່ອການປະຕິບັດທີ່ບົກພ່ອງຂອງພວກເຈົ້າຕໍ່ເຮົານັ້ນຈະໄດ້ເຕັມບໍຣິບູນ" (ຟລປ 2:30)

ບໍ່ມີໃຜທີ່ຈະເປັນຜູ້ນໍາຝ່າຍຈິດວິນຍານທີ່ສົມບູນແບບໄດ້ ຖ້າບໍ່ຍອມສ່ຽງຊີວິດ ໃນທີ່ສຸດບາງຄັ້ງຕ້ອງຍອມເສັຽສລະຊີວິດດ້ວຍ ພຣະເຢຊູຊົງກ່າວວ່າ "ຜູ້ທີ່ຕ້ອງການເອົາຊີວິດລອດຈະເສັຽຊີວິດ ແຕ່ຜູ້ທີ່ຍອມເສັຽຊີວິດເພາະເຫັນແກ່ເຮົາ ຜູ້ນັ້ນກໍຈະລອດຊີວິດ" ພຣະອົງບໍ່ແມ່ນດີແຕ່ເວົ້າເທົ່ານັ້ນ ແຕ່ຊົງເປັນຕົວຢ່າງໃນເຣື່ອງນີ້ດ້ວຍທີ່ເຫັງໄມ້ກາງແຂນ "ເຮົານີ້ແຫລະ, ເປັນຜູ້ລ້ຽງແກະທີ່ດີ ຜູ້ລ້ຽງທີ່ດີນັ້ນຍ່ອມສລະຊີວິດຂອງຕົນເພື່ອຝູງແກະ" (ຢຮ 10:11). **ຜູ້ນໍາທີ່ຮັກ ທ່ານໄດ້ເສັຽສລະຫຍັງແດ່ເພື່ອຄົນອື່ນ?**

ເພື່ອນຂອງຂ້າພະເຈົ້າຄົນນຶ່ງຊຶ່ງເປັນນັກເທດ ນັກຄິດ ແລະນັກຂຽນໄດ້ກ່າວເຖິງຜູ້ນໍາແບບສອດສ່ອງດູແລໄວ້ຢ່າງຫນ້າຄິດ ຄໍານີ້ແປວ່າ "ຜູ້ອໍານວຍການ" ຊຶ່ງມີຫນ້າທີ່ດູແລງານຂອງພຣະເຈົ້າ ເພິ່ນນໍາມາກ່າວໂດຍການຫລິ້ນຄໍາຈາກພາສາອັງກິດ ຄໍາວ່າ SUPERVISION

S = Shoulder's own responsibilities
**"ມີຄວາມຮັບຜິດຊອບ"**

ຜູ້ນໍາທີ່ດີຈະຕ້ອງມີຄວາມຮັບຜິດຊອບຕໍ່ພຣະເຈົ້າ ຕໍ່ຄຣິສຕະຈັກ ແລະຕໍ່ງານ ນອກຈາກນັ້ນຍັງຕ້ອງຮັບຜິດຊອບຕໍ່ຕົນເອງ ຕໍ່ຄອບຄົວ ແລະຕໍ່ສັງຄົມອີກດ້ວຍ.

U = Understands his man
**"ມີຄວາມເຂົ້າໃຈໃນຄວາມເປັນຄົນຂອງຕົນເອງ"**

ຫນ້າສັງເກດຄໍາແຣກຊຶ່ງມີຄວາມຫມາຍໂດຍກົງຄື "ເຂົ້າໄປຢືນຢູ່ໃຕ້" ຄືການຍອມຟັງແລະໃຫ້ກຽດແກ່ຄົນອື່ນ ຜູ້ນໍາທີ່ດີຈະຕ້ອງເປັນຄົນທີ່ມີຄວາມເຂົ້າໃຈໃນຜູ້ບັງຄັບບັນຊາ ເພື່ອນຮ່ວມງານຜູ້ໃຕ້ບັງຄັບບັນຊາ ເພິ່ງພໍໃຈທີ່ຈະເສີມສ້າງຄົນອື່ນຂຶ້ນເພື່ອໃຫ້ແທນທີ່ຕົນເອງ ມີເປົ້າຫມາຍໃນການສ້າງສາວົກ ໂດຍສອນເພື່ອໃຫ້ຄົນນັ້ນສາມາດສອນຄົນອື່ນຕໍ່ໄປ (2 ຕມທ 2:2)

P = Progresses
**"ຮຽນຮູ້ແລະກ້າວຫນ້າ"**

ຜູ້ນໍາທີ່ດີຈະຕ້ອງຫມັ່ນສຶກສາຫາຄວາມຮູ້ຢູ່ສເມີ ດັ່ງທີ່ກ່າວມາແດ່ແລ້ວໃນບົດກ່ອນໆວ່າ ຜູ້ນໍາຄວນຈະມີຫ້ອງສມຸດເປັນຂອງຕົນເອງ ຊຶ່ງເປັນແຫລ່ງຫາຂໍ້ມູນທີ່ຈະສຶກສາຄົ້ນຄວ້າໄດ້ຕລອດເວລາ ເພິ່ນຈະມັກຢູ່ໃນຫ້ອງສມຸດຫລາຍກວ່າຢູ່ໃນຫ້ອງອາຫານ

ຜູ້ນໍາຝ່າຍຈິດວິນຍານທີ່ແທ້ຈິງນັ້ນຈະບໍ່ພໍໃຈຢູ່ກັບສິ່ງທີ່ຜ່ານພົ້ນມາແລ້ວ ບໍ່ວ່າຈະເປັນຜົນງານຫລືຄວາມສໍາເຣັດເກົ່າໆ ບໍ່ຕ້ອງການຢໍ່າຕົນຢູ່ກັບທີ່ ແຕ່ລາວປາຖນາຈະກ້າວຫນ້າຕໍ່ໄປເລື້ອຍໆ ດັ່ງທີ່ໂປໂລກ່າວໄວ້ໃນພຣະຄັມພີ "ແຕ່ເຮົາເຮັດຢ່າງນຶ່ງ ຄືລືມສິ່ງເຫລົ່ານັ້ນທີ່ຜ່ານພົ້ນໄປແລ້ວເສັຽ ແລະໂນ້ມຕົວອອກໄປຫາສິ່ງທັງຫລາຍທີ່ຢູ່ເບື້ອງຫນ້າ ເຮົາກໍາລັງບາກບັ່ນມຸ້ງຫນ້າໄປສູ່ຫລັກຊັຍເພື່ອຈະໄດ້ຮັບຮາງວັນ ຄືຊີວິດຊຶ່ງພຣະເຈົ້າໄດ້ຊົງເອີ້ນເອົາໃນພຣະເຢຊູຄຣິດໃຫ້ໄປຮັບຢູ່ເບື້ອງເທິງ" (ຟລປ 3:13-14)

ທ່ານເຊື່ອບໍວ່າ ສິ່ງ**ທີ່ດີ**ມັກຈະເປັນອຸປສັກຕໍ່ສິ່ງ**ທີ່ດີທີ່ສຸດ** ຄົນເຮົາມັກຕິດຢູ່ກັບຄໍາວ່າ "ໄດ້ທໍ່ນີ້ກໍພໍແລ້ວ" ແລະເມື່ອຜິດພາດແລະໄປບໍ່ເຖິງເປົ້າຫມາຍກໍຈະແກ້ຕົວວ່າ "ຂ້ອຍເຮັດດີທີ່ສຸດແລ້ວ" ຂ້າພະເຈົ້າເຄີຍເບິ່ງການສໍາພາດນັກກິລາກ່ອນທີ່ຈະໄປແຂ່ງຂັນໂອລິມປິກ ເພາະພວກເຂົາຕ່າງຢືນຢັນເປັນຫມັ້ນເປັນເຫມາະວ່າ ຈະນໍາຫລຽນທອງຄໍາກັບມາຢ່າງແນ່ນອນ ແຕ່ພາດຫວັງ ເມື່ອກັບມາກໍໃຫ້ສໍາພາດດ້ວຍສຽງຄ່ອຍໆວ່າ "ພວກເຮົາໄດ້ເຮັດດີທີ່ສຸດແລ້ວ"

ເຄີຍມີຄົນຖາມນັກຂຽນຊື່ດັງຊາວອັງກິດວ່າ "ໃນບັນດາຫນັງສືທີ່ຂຽນມາທັງຫມົດນັ້ນ ທ່ານມັກເຫລັ້ມໃດຫລາຍທີ່ສຸດ" ລາວຕອບໂດຍບໍ່ລໍຊ້າວ່າ "ເຫລັ້ມຕໍ່ໄປ!"

E = Enforces all regulations
**"ວາງຕົວເປັນແບບຢ່າງທີ່ດີ"**

ຜູ້ນໍາຈະຕ້ອງວາງຕົວເປັນແບບຢ່າງທີ່ດີ ຄິດຢູ່ສເມີວ່າ ຊີວິດຂອງຜູ້ນໍາ (ຝ່າຍຈິດວິນຍານ) ສໍາຄັນກວ່າຄໍາເວົ້າແລະຜົນງານຂອງເຂົາ ໂປໂລບອກແກ່ພີ່ນ້ອງຄຣິສຕຽນໃນໂກຣິນໂທວ່າ "ເຈົ້າທັງຫລາຍຈົ່ງປະຕິບັດຕາມແບບຢ່າງຂອງເຮົາ ເຫມືອນເຮົາປະຕິບັດຕາມແບບຢ່າງ

ຂອງພຣະຄຣິດ” (1 ກຣທ 11:1)

ພຣະຄັມພີບອກວ່າ ຜູ້ນຳຝ່າຍຈິດວິນຍານເປັນຫນັງສືຂອງພຣະຄຣິດທີ່ມີໄວ້ເພື່ອ “ໃຫ້ຄົນທັງປວງໄດ້ຮູ້ແລະໄດ້ອ່ານ” (2 ກຣທ 3:2) ເປັນຕົ້ນທາງດ້ານຄວາມບໍຣິສຸດ ເປັນທີ່ນັບຖືຂອງຄົນທັງປວງ ບໍ່ດ່າງພ້ອຍໃນເຣື່ອງເພດ ບໍ່ເມົາມົວຢູ່ກັບເຄື່ອງດອງຂອງເມົາ ບໍ່ເປັນທີ່ຖືກນິນທາໃນເຣື່ອງເງິນໆທອງໆ ເປັນຄົນທີ່ຄວບຄຸມອາຣົມຂອງຕົນເອງໄດ້ດີ ແລະສາມາດນຳຄອບຄົວໄດ້.

ມີເຣື່ອງເລົ່າວ່າ ມີລຸງຄົນນຶ່ງຈູງຣົດຖີບຕົນແປຜ່ານຫນ້າຮ້ານຂາຍເຄື່ອງ ແລະຖາມຄົນຂາຍວ່າ “ແຖວນີ້ມີຮ້ານຈອດຢາງຣົດບໍ?” ຄົນຂາຍຊີ້ມືໄປຂ້າງຫນ້າພ້ອມກັບບອກວ່າ “ຍັງອີກນຶ່ງກິໂລແມດຈະເຖິງປັ້ມນ້ຳມັນ ເຂົາຮັບຈອດຢາງຣົດ”

ເຄິ່ງຊົ່ວໂມງຕໍ່ມາ ລຸງຄົນນັ້ນກໍຈູງຣົດຖີບກັບມາທາງເກົ່າ ຄົນຂາຍກໍຮ້ອງຖາມວ່າ “ອ້າວ! ລຸງພໍ້ປັ້ມນ້ຳມັນຫລືບໍ່  ບໍ່ໄດ້ຈອດຢາງຣົດບໍ?”

ລຸງຄົນນັ້ນຫາຍໃຈຫອບໆ ພ້ອມກັບເຊັດເຫື່ອຕາມຫນ້າຜາກ ແລ້ວຕອບວ່າ “ພົບແລ້ວ ແຕ່ເຂົາຂຽນປ້າຍວ່າ ຈອດຢາງ 24 ຊົ່ວໂມງ ໂອ໋ຍ..  ລຸງຖ້າ ບໍ່ໄດ້ດອກ ຈອດຢາງເສັ້ນນຶ່ງດົນຂະຫນາດນັ້ນ ລຸງໄປຊື້ກາວມາຈອດເອງຊົ່ວໂມງ ດຽວກໍແລ້ວ”

“!!!”

ເຣື່ອງນີ້ເຮັດໃຫ້ຄິດເຖິງຊີວິດຂອງຜູ້ນຳຫລາຍຄົນ ທີ່ຂຽນປ້າຍບອກພຣະເຢຊູບໍ່ຊັດເຈນ ເຂົາຈຶ່ງເປັນຕົວຫນັງສືຫຍໍ້ສັ້ນ ເລືອນລາງ ຄົນອື່ນອ່ານບໍ່ອອກ ຫລືອ່ານແລ້ວເຂົ້າໃຈຜິດ ເຊັ່ນເຣື່ອງທີ່ເລົ່າມານີ້!

R = Respects his men

**“ຍອມຮັບນັບຖືຄົນອື່ນ”**

ຜູ້ນຳທີ່ດີຈະຕ້ອງມີຄວາມອ່ອນນ້ອມຖ່ອມຕົນ ຍອມຮັບຟັງຄວາມຄິດເຫັນຂອງຄົນອື່ນ ແຕ່ຜູ້ນຳປະເພດທີ່ຍຶດຖືຄວາມຄິດຂອງຕົນເອງເປັນໃຫຍ່ ນິສັຍມຸທະລຸດຸດັນ ແພ້ບໍ່ເປັນ (ຖ້າແພ້ຖືວ່າເສັຽສັກສີ) ມັກປົກປ້ອງຕົນເອງ ແລະມັກຖຽງຂ້າງໆຄູງນັ້ນ ຜູ້ນຳປະເພດນີ້ຈະວ້າເວ່ເພາະຈະບໍ່ມີເພື່ອນຮ່ວມງານ ແລະບໍ່ມີຜູ້ໃດຄົບຫາສະມາຄົມດ້ວຍ ພຣະຄັມພີກ່າວວ່າ “ຈົ່ງຮັກກັນເຫມືອນສັນພີ່ນ້ອງ ສ່ວນການໃຫ້ກຽດແກ່ກັນ ແລະກັນນັ້ນຈົ່ງຖືວ່າ ຜູ້ອື່ນດີກວ່າຕົນ” (ຣມ 12:10) ມື້ນຶ່ງໄດ້ອ່ານບົດຄວາມກ່ຽວກັບ “ຜູ້ບໍຣິຫານທີ່ບໍ່ດີ” ຊຶ່ງບົ່ງບອກລັກສນະໄວ້ດັ່ງນີ້:

“ເມື່ອຂ້ອຍໃຊ້ເວລາເຮັດວຽກດົນ ສະແດງວ່າຂ້ອຍເປັນຄົນຮອບຄອບ ແຕ່ເມື່ອຄົນອື່ນໃຊ້ເວລາເຮັດວຽກດົນ ສະແດງວ່າລາວເປັນຄົນເຊື່ອງຊ້າ.  ເມື່ອຂ້ອຍບໍ່ເຮັດວຽກ ສະແດງວ່າຂ້ອຍກຳລັງໃຊ້ຄວາມຄິດ ແຕ່ເມື່ອຄົນອື່ນບໍ່ເຮັດວຽກ ສະແດງວ່າລາວເປັນຄົນຂີ້ຄ້ານ.  ເມື່ອຂ້ອຍເຂົ້າໄປຫຍຸ້ງກ່ຽວໃນງານຂອງຄົນອື່ນ ສະແດງວ່າຂ້ອຍເປັນຄົນທີ່ມີຄວາມຄິດສ້າງສັນ ແຕ່ເມື່ອຄົນອື່ນເຮັດຢ່າງນັ້ນແດ່ ສະແດງວ່າລາວເປັນຄົນທີ່ມັກກ້າວກ່າຍຫນ້າທີ່ຂອງຄົນອື່ນ.  ເມື່ອຂ້ອຍບໍ່ເຮັດຕາມກົດຣະບຽບ ນັ້ນເປັນກໍຣະນີຍົກເວັ້ນ ແຕ່ຖ້າຄົນອື່ນບໍ່ເຮັດຕາມກົດຣະບຽບ ສະແດງວ່າລາວເປັນຄົນທີ່ກະບົດ ຕໍ່ຕ້ານ ແລະມັກຝ່າຝືນ”

V = Visualizes problems

**“ເຫັນບັນຫາບັນຫາ” (ປ້ອງກັນບັນຫາ)**

ຜູ້ນຳທີ່ດີຕ້ອງຄິດຫນ້າຄິດຫລັງຢ່າງຮອບຄອບ ຄິດຫລາຍເທື່ອຕໍ່ຫລາຍທີ ວາງແຜນຢ່າງລະອຽດຮັດກຸມ ຫາທາງຫນີທີໄລ່ໄວ້ໃຫ້ພ້ອມໂດຍຖືຄະຕິວ່າ “ກັນດີກວ່າແກ້  ຖ້າແຢ້ແລ້ວແກ້ບໍ່ທັນ” ຫລື “ກັນດີກວ່າແກ້ ແຫດີກວ່າລົ້ວ  ຫລົ້ວດີກວ່າສຽມ”

ຄວາມຄິດທຳອິດ “ງານນີ້ຖ້າບໍ່ເຮັດຈະມີຜົນຢ່າງໃດ” ຄວາມຄິດທີສອງ “ຖ້າເຮັດໄປແລ້ວຈະເກີດບັນຫາຫຍັງແດ່” ຄວາມຄິດທີສາມ “ຖ້າມີບັນຫາເກີດຂຶ້ນຈະມີວິທີແກ້ໄຂບັນຫານັ້ນຢ່າງໃດ” ແລະຄວາມຄິດທີສີ່ “ຈະມີຈັກວິທີ ແລະວິທີໃດທີ່ຄິດວ່າດີທີ່ສຸດຫລືມີບັນຫາໜ້ອຍທີ່ສຸດ”

ການແກ້ບັນຫານັ້ນ ຜູ້ນຳຝ່າຍຈິດວິນຍານຈະເປັນຜູ້ປະສານຄວາມຄິດແຕກແຍກ ຈະພຍາຍາມເຮັດເຣື່ອງໃຫຍ່ໃຫ້ກາຍເປັນເຣື່ອງນ້ອຍ ຫລືເຮັດເຣື່ອງນ້ອຍໃຫ້ບໍ່ມີເຣື່ອງ!

I = Inspires confidence

**“ໃຫ້ກຳລັງໃຈແກ່ຄົນອື່ນ”**

ຜູ້ນຳທີ່ດີຈະຕ້ອງຮູ້ຈັກໃຫ້ກຳລັງໃຈແລະຊົມເຊີຍຄົນອື່ນ ຍົກຍ້ອງເພື່ອນຮ່ວມງານ ແລະຜູ້ຢູ່ໃຕ້ບັງຄັບບັນຊາ ຈົ່ງລະນຶກສເມີວ່າ ຄຳຊົມເຊີຍ ເປັນເຫມືອນຢາຫອມທີ່ໃຫ້ກຳລັງແກ່ຄົນທີ່ຢູ່ໃກ້.

ເຮົາບໍ່ສົງສັຍເລີຍວ່າ ເປັນຫຍັງໂມເຊຈຶ່ງອໍລາຕາຍ ເພາະທ່ານທຳງານຫນັກຈົນສາຍຕົວແທບຂາດ ແທນທີ່ຈະມີຄຳຊົມເຊີຍໃຫ້ກຳລັງໃຈກັບມີແຕ່ຄຳຈົ່ມຈາກຄົນອິສຣາເອນ ເມື່ອອ່ານພຣະຄັມພີຕໍ່ໄປ ເຮົາຈະພົບວ່າພຣະເຈົ້າບໍ່ລືມສິ່ງທີ່ໂມເຊໄດ້ເຮັດ ພຣະອົງໄດ້ຊົງກ່າວຊົມເຊີຍ

ທ່ານວ່າ ເປັນຄົນທີ່ສັດຊື່ ແລະຖ່ອມໃຈຫລາຍທີ່ສຸດໃນໂລກ "ເພາະວ່າພຣະເຈົ້າບໍ່ໄດ້ຊົງອະຍຸດຕິທັມ ຊຶ່ງຈະຊົງລືມການງານທີ່ພວກທ່ານໄດ້ເຮັດ ແລະຄວາມຮັກທີ່ທ່ານໄດ້ສະແດງຕໍ່ພຣະນາມຂອງພຣະອົງ" (ຮຣ 6:10)

ຜູ້ທີ່ທໍ້ຖອຍໃຈຄົນນຶ່ງໄດ້ຂຽນຫນູນໃຈຕົນເອງວ່າ:

"ເກີດເປັນຄົນຕ້ອງທົນໃຫ້ເຂົາດ່າ

ຈະເຮັດດີເຮັດບ້າເຂົາດ່າໝົດ

ເຮັດຕົງໆເຂົາກໍດ່າວ່າບໍ່ຄົດ

ເຮັດລ້ຽວຄົດເຂົາກໍດ່າວ່າບໍ່ຕົງ"

ເຮົາເຄີຍໄດ້ຍິນຄຳບອກເຖິງຄວາມບິດບ້ຽວຂອງສັງຄົມວ່າ "ທຳດີໄດ້ ແຕ່ຢ່າເດັ່ນ ຈະເປັນພັຍ ເພາະບໍ່ມີຜູ້ໃດ ຢາກເຫັນເຮົາເດັ່ນເກີນ"

ເອລີຢາເປັນຜູ້ຮັບໃຊ້ຂອງພຣະເຈົ້າທີ່ມີຣິດອຳນາດ ກະທຳການອັສຈັນໄດ້ຫລາຍຢ່າງ ແຕ່ໃນທີ່ສຸດກໍຕ້ອງຫນີເຂົ້າປ່າ ເກັບຕົວງຽບ ບໍ່ຍອມກິນອາຫານເຫມືອນເປັນໂຣກປະສາດ ແລະອະທິຖານຂໍໃຫ້ພຣະເຈົ້າຊົງເອົາຊີວິດຂອງຕົນເອງເສັຽ ທີ່ເປັນເຊັ່ນນີ້ເພາະທ່ານຄິດວ່າ ຄົນທີ່ຮັກພຣະເຈົ້າຢ່າງແທ້ຈິງເຫລືອຢູ່ພຽງຄົນດຽວ ຄືຕົວທ່ານເອງ ບໍ່ມີຜູ້ໃດສນັບສນຸນ ແລະຄອຍໃຫ້ກຳລັງໃຈ ເຖິງວ່າແທ້ຈິງແລ້ວມີຄົນຂອງພຣະອົງຢູ່ໃນອິສຣາເອນເຖິງເຈັດພັນຄົນກໍຕາມ

ຜູ້ນຳຝ່າຍຈິດວິນຍານຄວນຈະວ່ອງໄວໃນການຍົກຍ້ອງຊົມເຊີຍ ແລະບໍ່ປະຫຍັດຄຳທີ່ຈະໃຫ້ກຳລັງໃຈຜູ້ອື່ນ.  ຂໍໃຫ້ເຮົາເບິ່ງຕົວຢ່າງຈາກຄຳຊົມເຊີຍໃນຈົດຫມາຍຂອງ ໂປໂລ ທີ່ຂຽນໄປເຖິງເພື່ອນຮ່ວມງານເກົ້າຄົນໃນໂກໂລຊາຍ 4:7-13

S = Sells ideas

**"ແບ່ງປັນຄວາມຄິດ"**

ຜູ້ນຳທີ່ດີຄວນຈະມີຫລັກແຫ່ງການຈູງໃຈເພື່ອນຮ່ວມງານແລະສະມາຊິກໃນຄຣິສຕະຈັກ ລາວຈະເປັນຜູ້ຈຸດປະກາຍຄວາມຄິດໃຫ້ແກ່ຜູ້ອື່ນ ຊຶ່ງພາສາກາງຕລາດເອີ້ນວ່າ "ຂາຍຄວາມຄິດ" ຄືການຊີ້ໃຫ້ຄົນອື່ນເຫັນສິ່ງທີ່ຍັງເບິ່ງບໍ່ເຫັນ ໃຫ້ຄິດໃນສິ່ງທີ່ຄິດບໍ່ເຖິງ ນອກຈາກນັ້ນຜູ້ນຳຈະຕ້ອງເບິ່ງໃນແງ່ບວກຢູ່ສເມີ.

ເຮົາຄົງຈື່ກັນໄດ້ວ່າ ທີ່ຝັ່ງແມ່ນ້ຳຈໍແດນຟາກຕາເວັນອອກ ໂມເຊໄດ້ສົ່ງສາຍລັບສິບສອງຄົນໄປສອດແນມແຜ່ນ ດິນການາອານ ພວກເຂົາເຂົ້າໄປຍັງເມືອງເຢຣິໂກແລ້ວກັບມາຣາຍງານເປັນສຽງດຽວກັນວ່າ ເມືອງນັ້ນອຸດົມສົມບູນດີຫລາຍ ແຕ່ພວກເຂົາສິບຄົນເວົ້າວ່າ "ເຮົາບໍ່ສາມາດສູ້ຄົນເຫລົ່ານັ້ນໄດ້ ເພາະເຂົາມີກຳລັງຫລາຍກວ່າເຮົາ" (ຈບຊ 13:31) ແຕ່ຂນະນັ້ນມີພຽງສອງຄົນຄື ໂຢຊວຍແລະກາເລັບເທົ່ານັ້ນທີ່ມີຄວາມຄິດໃນແງ່ບວກ ທີ່ໃຫ້ເພິ່ງໃນຣິດອຳນາດຂອງພຣະເຈົ້າ ແລະໃນທີ່ສຸດພວກເຂົາກໍເຂົ້າຍຶດຄອງໄດ້

ທ່ານຜູ້ອ່ານ ທ່ານຈະເປັນພຽງຄົນຈຳນວນຫນ້ອຍທີ່ ກະໂດດເຂົ້າສູ້ ຫລືເປັນຄົນຈຳນວນຫລາຍທີ່ຄິດຢາກຈະຖອຍຫນີ!

ໃນການອົບຮົມການຂາຍຂອງຖືກບໍຣິສັດວິທະຍາກອນມັກຈະເລົ່າເຖິງເຣື່ອງນີ້ຄື ມີບໍຣິສັດເກີບແຫ່ງນຶ່ງສົ່ງ ແຊວແມນສອງຄົນໄປທະວີບອັຟຣິກາ ເມື່ອໄປເຖິງກໍທຳການສຳລວດພື້ນທີ່ ແຊວແມນຄົນແຣກທໍ້ຖອຍໃຈຫລາຍ ຈຶ່ງໂທຣະສັບກັບມາຣາຍງານທີ່ບໍຣິສັດວ່າ "ຢ່າສົ່ງເກີບມາເລີຍ ຂາຍບໍ່ໄດ້ດອກ ເພາະຄົນຢູ່ນີ້ບໍ່ມີຜູ້ໃດໃສ່ເກີບເລີຍ" ສ່ວນແຊວແມນຄົນທີສອງກໍໂທຣະສັບກັບມາຍັງບໍຣິສັດເຊັ່ນກັນ ແຕ່ຣາຍງານດ້ວຍຄວາມຕື່ນເຕັ້ນວ່າ "ຮີບສົ່ງເກີບມາດ່ວນ ນີ້ເປັນໂອກາດທອງຂອງເຮົາແລ້ວຮັບຮອງໄດ້ຂາຍແນ່ນອນ ເພາະຄົນຢູ່ນີ້ບໍ່ມີເກີບໃສ່ເລີຍ"

ຜູ້ນຳຝ່າຍຈິດວິນຍານຈະຕ້ອງມີວິສັຍທັສກວ້າງໄກໃນທຸກສະຖານະການມີຄວາມເຊື່ອວ່າ "ພຣະເຈົ້າຊົງຊ່ອຍຄົນທີ່ຮັກພຣະອົງໃຫ້ເກີດຜົນອັນດີໃນທຸກສິ່ງ" (ຣມ 8:28)

I = Instructs clearly

**"ມີຄວາມຊັດເຈນ"**

ຜູ້ນຳທີ່ດີຈະຕ້ອງມີຄວາມຄິດແລະການກະທຳທີ່ຊັດເຈນ ນອກຈາກນັ້ນຈະຕ້ອງມີຄຳສັ່ງທີ່ຊັດເຈນນຳ ບໍ່ໃຫ້ສິ່ງທີ່ສັ່ງອອກໄປນັ້ນມີຄວາມຫມາຍຄຸມເຄືອສອງແງ່ສອງດ້ານ ຂໍໃຫ້ລະນຶກສເມີວ່າ ງານຫຍັງກໍຕາມທີ່ຄົນເຮັດດ້ວຍຄວາມບໍ່ເຂົ້າໃຈ ງານນັ້ນຜົນອອກມາຍ່ອມບໍ່ດີແນ່ນອນ ງານຫຍັງກໍຕາມທີ່ຄົນເຮັດດ້ວຍຄວາມສົງສັຍ ງານນັ້ນຈະສຳເຣັດຍາກ

ຜູ້ນຳຄວນເປີດໂອກາດໃຫ້ມີການຊັກຖາມກ່ອນ ຕາມທີ່ບາງຄົນຖືຄະຕິວ່າ "ທະເລາະກັນກ່ອນທຳງານ ດີກວ່າທຳງານແລ້ວມານັ່ງທະເລາະກັນ"

O = Originates

**"ມີຄວາມຄິດລິເລີ້ມ"**

ຜູ້ນຳທີ່ດີຈະຕ້ອງມີຄວາມຄິດລິເລີ້ມສ້າງສັນ ມັກທົດລອງແລະຍອມສ່ຽງ ໂດຍປົກກະຕິຄົນທົ່ວໄປມັກຈະມີຄວາມຢ້ານຢູ່ສອງຢ່າງ ຄື ນຶ່ງ ຢ້ານຕໍ່ສິ່ງໃຫມ່ໆ ແລະສອງ ຢ້ານຕໍ່ການປ່ຽນແປງ

N = Notices performance

**"ການຍົກຍ້ອງຊົມເຊີຍ"**

ໂຕສຸດທ້າຍນີ້ ມີຄຳແນະນຳງ່າຍໆສຳລັບຜູ້ນຳທີ່ຕ້ອງ ການປະສົບຄວາມສຳເຣັດໃນຝ່າຍຈິດວິນຍານ ຄື ຫາຄຳເວົ້ານຶ່ງຄຳຕໍ່ນຶ່ງວັນ ເພື່ອຈະຊົມເຊີຍຜູ້ອື່ນ ເຮັດໃຫ້ເຂົາພໍໃຈແລະມີກຳລັງຂຶ້ນໃນການປະຕິບັດຮັບໃຊ້ໃນພຣະຣາຊກິດຂອງພຣະເຈົ້າ ແຕ່ຖ້າເຮົາບໍ່ສາມາດຫາເຣື່ອງຍົກຍ້ອງຄົນອື່ນໄດ້ ຄວນຈະຽງບເສັຽດີກວ່າ ພຣະເຢຊູຄຣິດຊົງຍົກຍ້ອງຊົມເຊີຍເປໂຕຊຶ່ງໆຫນ້າ (ມທ 16:17) ໃນຂນະທີ່ໂປໂລກໍຊົມເຊີຍເພື່ອນຮ່ວມງານທຸກຄົນ.

ຜູ້ນຳທີ່ຮັກ ທ່ານຄວນວ່ອງໄວໃນການຍົກຍ້ອງຊົມເຊີຍ ແຕ່ຊ້າໃນການຕຳຫນິຕິຕຽນ ແມ່ນບໍ?

## 5. ຜູ້ນຳຕ້ອງຮູ້ຈັກຄົນ

ຜູ້ທີ່ຈະສາມາດກ້າວຂຶ້ນມາເປັນຜູ້ນຳໄດ້ຈະຕ້ອງ "ຮູ້ຈັກຄົນ" ຮູ້ຈັກຄົນໃນທີ່ນີ້ມີຄວາມຫມາຍສາມຢ່າງຄື: **ນຶ່ງ** ຮູ້ຈັກນິສັຍໃຈຄໍຂອງຄົນ **ສອງ** ຮູ້ຈັກທີ່ຈະໃຊ້ຄົນ (ໃຫ້ເຫມາະສົມກັບງານ) ແລະ**ສາມ** ຮູ້ຈັກຕົນເອງ ຮູ້ຈັກຄົນອື່ນນັ້ນນັບວ່າດີ ແຕ່ຮູ້ຈັກຕົນເອງນັບວ່າດີທີ່ສຸດ.

ທ່ານ ຊຸນຫວູ ນັກປາດທາງຍຸດທະສາດຂອງຈີນກ່າວວ່າ "ຮູ້ເຂົາ ຮູ້ເຮົາ ຣົບຮ້ອຍຄັ້ງ ຊນະຮ້ອຍຄັ້ງ" ແລະທ່ານໄດ້ກ່າວຕໍ່ໄປອີກວ່າ "ການປົກຄອງໃຈຄົນອື່ນໄດ້ ເປັນສິ່ງທີ່ຍິ່ງໃຫຍ່ ແຕ່ການປົກຄອງໃຈຕົນເອງໄດ້ນັບວ່າເປັນສິ່ງທີ່ຍິ່ງໃຫຍ່ທີ່ສຸດ"

ໃນສຸພາສິດ 11:14 ກ່າວເຖິງຄວາມສຳຄັນຂອງການນຳວ່າ "ທີ່ໃດບໍ່ມີການນຳ ປະຊາຊົນກໍລົ້ມລົງ ແຕ່ໃນທີ່ຊຶ່ງມີທີ່ປຶກສາຫລາຍຍ່ອມມີຄວາມປອດພັຍ" ໃນສະບັບ NIV ແປວ່າ "ມີຜູ້ແນະນຳຫລາຍຍ່ອມມີຊັຍຊນະ"

ໃນສຸພາສິດ 20:18, 24:6 ໄດ້ສເນີຫລັກການສອງປະການຄື ປະການແຣກ ແຜນງານຕ້ອງມີທີ່ປຶກສາ ປະການທີສອງ ສົງຄາມຕ້ອງມີຜູ້ນຳ ແລະຕ້ອງເປັນການນຳທີ່ສລຽວ ສລາດນຳ ດັ່ງທີ່ນັກປາດຈີນໂບຮານໄດ້ກ່າວວ່າ "ການຣົບຊນະຮ້ອຍຄັ້ງບໍ່ແມ່ນວິທີອັນປະເສີດແທ້ ແຕ່ຊນະໂດຍທີ່ບໍ່ຕ້ອງຣົບຖືວ່າວິເສດຫລາຍກວ່າ ການທຳລາຍສັດຕຣູທີ່ໄດ້ຜົນຍອດຢ້ຽມທີ່ສຸດກໍຄື ການເຮັດໃຫ້ເຂົາກາຍມາເປັນມິດ"

ນັກຂຽນຜູ້ນຶ່ງໄດ້ຂຽນຫນັງສືກ່ຽວກັບຜູ້ນຳຄຣິສຕຽນ ໄດ້ວາງຫລັກ POLE ໄວ້ຢ່າງຫນ້າຄິດດັ່ງນີ້:

P = Plan

**"ການວາງແຜນ"**

O = Organize

**"ການກຳນົດຫນ້າທີ່ຄວາມຮັບຜິດຊອບ"**

L = Lead

**"ການຊີ້ນຳ"**

E = Evaluate

**"ການປະເມີນຜົນ"**

ພຣະຄັມພີໄດ້ກ່າວເຖິງຄຸນລັກສນະທີ່ສຳຄັນຂອງຜູ້ນຳຝ່າຍຈິດວິນຍານໄວ້ວ່າ ເຂົາຕ້ອງເປັນຄົນ "ທີ່ມີຊື່ສຽງດີ ປະກອບດ້ວຍພຣະວິນຍານບໍຣິສຸດ ແລະສະຕິປັນຍາ" (ກຈກ 6:3)

ທ່ານ ອອສວອລດ໌ ແຊນເດີສ໌ ເປັນຜູ້ນຳຄຣິສຕຽນທີ່ມີຊື່ສຽງ ໄດ້ອ້າງຄຳກ່າວຂອງທ່ານມອນທ໌ໂກເມີຣີ ທີ່ໄດ້ເວົ້າເຖິງ "ອົງປະກອບຂອງຜູ້ນຳ" ໄວ້ຢ່າງຫນ້າສົນໃຈ ຊຶ່ງເຫັນວ່າມີປໂຍດຈຶ່ງຂໍນຳມາອະທິບາຍເພີ້ມເຕີມ ເພື່ອຄວາມເຂົ້າໃຈຈະກະຈ່າງແຈ້ງຂຶ້ນດັ່ງນີ້:

**ຜູ້ນຳຕ້ອງບໍ່ໃສ່ໃຈກັບເຣື່ອງເລັກໆນ້ອຍໆ** - ມີຫລາຍຄົນບໍ່ສາມາດກ້າວຂຶ້ນມາເປັນຜູ້ນຳທີ່ດີໄດ້ ເພາະເຣື່ອງຫລາຍ (ແລະຫລາຍເຣື່ອງ) ມົວໄປໃຫ້ຄວາມສົນໃຈກັບ ເຣື່ອງຂີ້ຫມູ ຣາຂີ້ຫມາແຫ້ງ ໃນຖານະຜູ້ນຳເຮົາຈະຕ້ອງຄິດຢູ່ສເມີວ່າ ບັນຫາເລັກໆນ້ອຍໆບາງຢ່າງ ມັກຈະເຊັ່ງອອກໄປໄດ້ເອງໂດຍອາສັຍລະຍະເວລາ ຫມາຍຄວາມວ່າ ບັນຫາຈະແກ້ໄຂບັນຫາເອງ.

ຄົນເຮົາມີນິໄສທີ່ດີຢູ່ຢ່າງນຶ່ງ ທີ່ຂ້າພະເຈົ້າປະທັບໃຈຄື ເປັນຄົນລືມງ່າຍ ຄຣິສຕຽນຄວນຈະເປັນຄົນລືມງ່າຍເຫມືອນດັ່ງທີ່ໂປໂລກ່າວວ່າ "ແຕ່ເຮົາເຮັດຢ່າງນຶ່ງ ຄືລືມສິ່ງເຫລົ່ານັ້ນທີ່ຜ່ານພົ້ນໄປແລ້ວເສັຽ ແລະໂນ້ມຕົວອອກໄປຫາສິ່ງທັງຫລາຍທີ່ຢູ່ເບື້ອງຫນ້າ" (ຟລປ 3:13)

**ຜູ້ນຳຕ້ອງເປັນຄົນໃຈກວ້າງ** - ຄົນເຮົານັບຖືກັນທີ່ນ້ຳໃຈ ຍິ້ມຕລອດເວລາ ແລະພ້ອມທີ່ຈະໃຫ້ອະພັຍຢູ່ສເມີ ເຮົາມັກຈະໄດ້ຍິນຄຳເວົ້າທີ່ວ່າ "ຂໍກັນກິນຍັງຫລາຍກວ່ານີ້"

ຜູ້ນຳທີ່ດີຕ້ອງເປັນຄົນທີ່ໃຫ້ແລ້ວບໍ່ທວງບຸນຄຸນ ຫລືບໍ່ເວົ້າເອົາຄວາມດີຕໍ່ຫນ້າຄົນອື່ນ ບໍ່ເປັນຄົນທີ່ເອົາຂອງຂວັນໃຫ້ຄົນອື່ນແລະເຮັດລືມເອົາປ້າຍຣາຄາອອກ (ຢາກໂຊວ່າຕົນເອງໃຫ້ຂອງຂວັນລາຄາສູງ)ເປັນຕົ້ນ.

ມີຄົນກ່າວເຖິງການປົກຄອງໄວ້ຢ່າງຫນ້າຄິດວ່າ "ໃນການປົກຄອງຂັ້ນຍອດ ຜູ້ຄົນຈະບໍ່ຮູ້ສຶກວ່າຖືກປົກຄອງ ສ່ວນຜູ້ປົກຄອງຂັ້ນດີ ຜູ້ຄົນຈະນັກ ແຕ່ຜູ້ປົກຄອງຂັ້ນຕ່ຳ ຜູ້ຄົນຈະຢ້ານກົວແລະຜູ້ປົກຄອງຂັ້ນເລວ ຜູ້ຄົນຈະຊິງຊັງ"

**ຜູ້ນຳຕ້ອງບໍ່ເປັນຄົນອວດຕົວ** - ຜູ້ນຳທີ່ດີຕ້ອງບໍ່ເປັນ ຄົນອວດຕົວ ຫລືອວດດີ (ທັງໆທີ່ບໍ່ມີດີຈະໃຫ້ອວດ) ຈົ່ງໃຫ້ຄົນອື່ນຍົກຍ້ອງເຮົາບໍ່ແມ່ນເຮົາຊົມເຊີຍຕົວເອງ ຈົ່ງຈຳໄວ້ວ່າຄົນ ຂີ້ຄຸຍຈະບໍ່ມີເພື່ອນ ຄົນອື່ນບໍ່ຢາກຈະໄດ້ຍິນຄຳຈາກປາກຂອງທ່ານວ່າ ທ່ານເກັ່ງແລະດີຢ່າງໃດ ແຕ່ຢາກຈະໄດ້ຍິນຄົນອື່ນເວົ້າເຖິງວ່າທ່ານເກັ່ງແລະດີຢ່າງໃດຕ່າງຫາກ ມີຄຳແນະນຳວ່າ: ຊົມຜູ້ຍິງໃຫ້ຊົມຕໍ່ຫນ້າ ຊົມນັກປາດໃຫ້ຊົມຫລັບຫລັງ ແຕ່ຜູ້ນຳ ທີ່ດີຄວນຈະຍົກຍ້ອງຊົມເຊີຍຄົນອື່ນຢູ່ສເມີ.

ມີເຣື່ອງເລົ່າວ່າ ມີຊາຍຂີ້ຄຸຍສອງຄົນພົບກັນທີ່ຮ້ານຂາຍກາເຟກາງຫມູ່ບ້ານ ຄົນທຳອິດອວດວ່າ "ຢູ່ເຮືອນຂອງຂ້ອຍມີຄວາຍໂຕໃຫຍ່ຢູ່ໂຕນຶ່ງ ເອົາຂອງມັນຍາວຂະຫນາດ ມັນຢືນຂວາງຢູ່ກາງແມ່ນ້ຳ ເອົາຂອງມັນຍາວຈາກຝັ່ງນີ້ໄປຈົນຮອດຝັ່ງນັ້ນພຸ້ນແຫລະ" ຊາຍຄົນທີສອງໄດ້ຍິນດັ່ງນັ້ນກໍໂອ່ຂຶ້ນອີກ "ຢູ່ເຮືອນຂອງຂ້ອຍຫັ້ນ ມີກອງໃຫຍ່ຢູ່ຫນ່ວຍນຶ່ງ ຕີສຽງດັງໄດ້ຍິນໄປໄກເຖິງເກືອບນຶ່ງຮ້ອຍກິໂລແມດເລີຍ"

"ເປັນໄປໄດ້ຢ່າງໃດ ກອງອີຫຍັງຂອງເຈົ້າເຖິງດັງຂະຫນາດນັ້ນ" ຄົນທຳອິດທຳທ່າບໍ່ເຊື່ອ

"ກໍກອງເຮັດຈາກຫນັງຄວາຍບ້ານເຈົ້າຫັ້ນເດ໋!"

"!!!"

**ຜູ້ນຳຕ້ອງເບິ່ງຄົນເປັນ** - ຜູ້ນຳທີ່ຍິ່ງໃຫຍ່ໃນອະດີດມັກຈະເປັນຜູ້ທີ່ເບິ່ງນິສັຍໃຈຄໍຂອງຄົນເປັນ ເບິ່ງບຸກຄະລິກ ລັກສນະອາຣົມ ເບິ່ງຄວາມສາມາດຫລືຂອງປະທານ ເບິ່ງລະດັບຈິດວິນຍານ (ຄວາມເປັນຜູ້ໃຫຍ່ໃນພຣະຄຣິດ) ເພື່ອຈະໃຫ້ງານທີ່ກົງກັບນິສັຍຂອງຄົນ ຢ່າມອບງານແກ່ຜູ້ໃດເຮັດເພາະຄວາມຈຳເປັນ ແຕ່ໃຫ້ງານແກ່ຜູ້ທີ່ເຮັດເພາະໃຈຮັກ.

ຫລາຍມື້ຜ່ານມານີ້ ມີຂ່າວຫນ້າເສົ້າສລົດທາງທີວີ ມີຊາຍຫນຸ່ມຄົນນຶ່ງຖືກອ້າຍບັງຄັບໃຫ້ສອບເສັງເອັນທຣານຊ໌ເຂົ້າຄນະວິສວະກັມສາດ ແຕ່ເຈົ້າຕົວບໍ່ມັກ ຄວາມຄຽດແລະນ້ອຍໃຈເລີຍກະໂດດຕຶກສິບສີ່ຊັ້ນຕາຍຢ່າງຫນ້າອະນາດ

**ຜູ້ນຳຕ້ອງເຊື່ອໃຈຄົນອື່ນ** - ຜູ້ນຳທີ່ດີເມື່ອມອບຫມາຍຫນ້າທີ່ການງານໃຫ້ແກ່ຜູ້ອື່ນເຮັດແລ້ວ ກໍຈະມອບອຳນາດການຕັດສິນໃຈໃຫ້ນຳປ່ອຍໃຫ້ເພື່ອນຮ່ວມງານຫລືຜູ້ໃຕ້ບັງຄັບບັນຊາທຳງານຢ່າງມີອິສຣະ ຜູ້ນຳບໍ່ຕ້ອງເຂົ້າໄປຫຍຸ້ງແລະກ້າວກ່າຍຫນ້າທີ່ຂອງເຂົາ ແລະໃຫ້ເຂົາແກ້ໄຂບັນຫາເອົາເອງ ເພາະຖ້າບໍ່ມອບອຳນາດການຕັດສິນໃຈໃຫ້ ພໍມີບັນຫາຫລືຕິດຂັດສິ່ງໃດ ເຂົາກໍຈະແລ່ນກັບມາຫາຜູ້ນຳອີກ.

ຜູ້ນຳທີ່ດີຈະປ່ອຍໃຫ້ເພື່ອນຮ່ວມງານຫລືຜູ້ໃຕ້ບັງຄັບບັນຊາເຮັດງານເອງ ໂດຍຜູ້ນຳຈະຄອຍຢືນເບິ່ງຢູ່ຫ່າງໆ ເມື່ອງານສຳເຣັດຮຽບຮ້ອຍແລ້ວ ພວກເຂົາທຸກຄົນຈະເວົ້າວ່າ "ງານນີ້ສຳເຣັດດ້ວຍພວກເຮົາເອງ"

ຜູ້ນຳທີ່ບໍ່ມີປະສິດທິພາບມັກຈະຮວບອຳນາດ ແລະສະແດງໃຫ້ຄົນອື່ນເຫັນຄວາມເກັ່ງກາດຮອບຮູ້ໃນທຸກເຣື່ອງ ຂອງເຂົາ ເມື່ອຂ້າພະເຈົ້າໄປຢ້ຽມອົງການຄຣິສຕຽນແຫ່ງນຶ່ງ ເຫັນພາບທີ່ຫນ້າເວທນາຄື ຜູ້ອຳນວຍການກຳລັງຕັດຫຍ້າທີ່ເດີ່ນ ສ້ອມແຊມບ້ານພັກ ຕິດຕັ້ງລະບົບນ້ຳປະປາແລະໄຟຟ້າ ທັງໆທີ່ມີພະນັກງານຫລາຍຄົນທີ່ສາມາດເຮັດໄດ້ຢ່າງນີ້ເຂົາເອີ້ນວ່າ "ຜູ້ອຳນວຍການທີ່ມີສັນດານສະຫມຽນ"

ກະຣຸນາຈື່ໄວ້ວ່າ ຜູ້ນຳຄືຜູ້ທີ່ເຮັດວຽກຊຶ່ງຄົນອື່ນເຮັດບໍ່ໄດ້!

**ຜູ້ນຳຕ້ອງກ້າຕັດສິນໃຈຢ່າງເດັດຂາດ** - ໃນການທຳງານຮັບໃຊ້ພຣະເຈົ້ານັ້ນ ມີບັນຫາບາງຢ່າງທີ່ຈຳເປັນຕ້ອງແກ້ໄຂ ຈະລໍຊ້າບໍ່ໄດ້ເພາະມີຜົນເສັຽ ໃນກໍຣະນີແບບນີ້ເຮົາຕ້ອງການຜູ້ນຳທີ່ກ້າຕັດສິນໃຈຢ່າງເດັດຂາດ

ຕົວຢ່າງຈາກພຣະຄັມພີ ໂປໂລເປັນຜູ້ນຳທີ່ກ້າຕັດສິນໃຈຢ່າງເດັດຂາດ ມີບັນຫາເກີດຂຶ້ນໃນຄຣິສຕະຈັກໂກຣິນໂທ ຄືມີຄຣິສຕຽນບາງຄົນເຮັດຄວາມຜິດບາບຢ່າງຮ້າຍແຮງ ໂດຍການລ່ວງປະເວນີກັບຄົນພາຍໃນຄອບຄົວ ໂປໂລ ບອກວ່າມີອັນຕະຣາຍແລະຫນ້າອັບອາຍຫລາຍຈົນ

ເຖິງໃນຫມູ່ຄົນທີ່ບໍ່ເຊື່ອພຣະເຈົ້າ ເຂົາກໍຍັງບໍ່ເຮັດກັນເລີຍ ຈຶ່ງສັ່ງຜູ້ນໍາຄຣິສຕະຈັກທີ່ນັ້ນວ່າ "ພວກເຈົ້າຄວນຈະຕັດຜູ້ທີ່ເຮັດ ການຜິດຢ່າງນັ້ນອອກເສັຽຈາກພວກເຈົ້າ" (1 ກຣທ 5:12) ເຊັ່ນທໍານອງທີ່ວ່າຍອມຕັດນິ້ວຮ້າຍຖິ້ມເສັຽນຶ່ງນິ້ວ ເພື່ອຈະຮັກສານິ້ວອື່ນໆໄວ້.

ເມື່ອຕອນທີ່ ທ່ານອະເລັກຊານເດີມະຫາຣາຊຍົກກອງທັບເຂົ້າສູ່ກຸງເອເທນ ຂນະຜ່ານປະຕູເມືອງພວກໂຫນກໍຂໍໃຫ້ອະເລັກຊານເດີລົງຈາກຫລັງມ້າເພື່ອໄປແກ້ "ປົມປິສນາ" (ຄືເຊືອກທີ່ມັດກັນຈົນ ແຫນ້ນເປັນປົມ ຖ້າສາມາດແກ້ໄດ້ຖືວ່າມີອໍານາດວາສນາ) ທ່ານ ອະເລັກຊານເດີກ້າວລົງຈາກຫລັງມ້າ ຍ່າງໄປເບິ່ງທີ່ປົມປິສນາ ໂດຍບໍ່ລໍຊ້າ ທ່ານຊັກດາບອອກມາຟັນເຊືອກປົມນັ້ນຈົນຂາດກະຈຸຍ! ບົດຮຽນຈາກເຣື່ອງນີ້ຄື ບາງບັນຫາຕ້ອງການການແກ້ໄຂຢ່າງເລັ່ງດ່ວນ ລໍຊ້າບໍ່ໄດ້ ຕ້ອງເດັດຂາດທັນທີທັນໃດ ແລະຢ່າງຕົງໄປຕົງມາ.

**ຜູ້ນໍາຕ້ອງມີບຸກຄລິກທີ່ເຮັດໃຫ້ຄົນອື່ນຫມັ້ນໃຈ** - ຜູ້ນໍາບາງຄົນມີຈິດໃຈໂລເລ ລໍາອຽງ ຫູເບົາ ເລືອກທີ່ຮັກມັກທີ່ຊັງ ແລະມັກໃຫ້ຄົນປະຈົບປະແຈງ ແຕ່ຜູ້ນໍາທີ່ດີນັ້ນຈະຕ້ອງຫມັ້ນໃຈໃນການຊົງນໍາຂອງພຣະເຈົ້າ ເປັນຄົນຊື່ຕົງ ວ່າກັນຕາມເນື້ອຜ້າ ແລ້ວບໍ່ຫວັ່ນໄຫວເຖິງແມ່ນວ່າຈະຖືກໂຈມຕີແລະໃສ່ຮ້າຍປ້າຍສີ ເຖິງແມ້ຈະຖືກດ່າໃນເຣື່ອງທີ່ບໍ່ເປັນຈິງ.

ພຣະຄັມພີສອນວ່າ "ຈົ່ງດໍາເນີນຊີວິດອັນດີຖ້າມກາງຄົນຕ່າງຊາດ ເພື່ອໃນກໍຣະນີທີ່ເຂົາຕິຕຽນນິນທາພວກທ່ານວ່າເປັນຄົນເຮັດຊົ່ວນັ້ນເຂົາກໍຈະສັຣເສີນພຣະເຈົ້າໃນວັນທີ່ພຣະອົງສະເດັດມາ ເພາະເຂົາໄດ້ແລເຫັນການດີທີ່ພວກທ່ານປະຕິບັດນັ້ນ" (1 ປຕ 2:12)

ຫນັງສືກ່ຽວກັບການອະທິຖານເຫລັ້ມນຶ່ງເລົ່າວ່າ ມີຜູ້ພິພາກສາທີ່ຊື່ສັດຄົນນຶ່ງ ຖືກພວກຫມູ່ຄູ່ໃສ່ຮ້າຍປ້າຍສີເພື່ອຈະຊຸກເຂົາໃຫ້ຕົກຈາກຕັ່ງ (ໂຄ່ນອໍານາດ) ແຕ່ຜູ້ພິພາກສາຍັງຄົງງຽບເສີຍ ບໍ່ໄດ້ຕອບໂຕ້ເລີຍ ມື້ນຶ່ງນັກຂ່າວກໍມາສໍາພາດຜູ້ພິພາກສາວ່າ "ທ່ານຮູ້ສຶກຢ່າງໃດທີ່ຖືກກ່າວຫາຢ່າງບໍ່ເປັນທັມ"

ຜູ້ພິພາກສາຕອບຊ້າໆວ່າ "ມີແມ່ເຖົ້າຄົນນຶ່ງ ນາງລ້ຽງຫມາໄວ້ໂຕນຶ່ງ ພໍເຖິງຄືນພຣະຈັນເຕັມດວງ ມັນກໍອອກໄປບ່ອນເດີ່ນຫນ້າບ້ານແລະເຫົ່າດວງຈັນ"  ແລ້ວຜູ້ພິພາກສາກໍງຽບມິດໄປ ຈົນນັກຂ່າວອຶດອັດ ຈຶ່ງຖາມຂຶ້ນວ່າ "ແລ້ວເປັນແນວໃດຕໍ່ໄປແຫລະ, ທ່ານ"

ຜູ້ພິພາກສາຕອບ "ກໍບໍ່ມີຫຍັງ..ຫມາມັນຢາກເຫົ່າກໍເຫົ່າໄປເລີຍດວງຈັນກໍຍັງຄົງສ່ອງແສງສວ່າງສໄຫວຢູ່ເທິງທ້ອງຟ້າຕໍ່ໄປ!"

ໃນບົດນີ້ເຮົາໄດ້ເວົ້າເຖິງຜູ້ນໍາທີ່ດີມາຫລາຍແລ້ວ ຕໍ່ໄປນີ້ຢາກຈະກ່າວເຖິງຜູ້ນໍາທີ່ບໍ່ດີແດ່ ມີຄົນເວົ້າເຖິງຜູ້ນໍາທີ່ບໍ່ດີໄວ້ເກົ້າຢ່າງຄື "ສັກດີນາໂງ່ເງົ່າ ໄດໂນເສົາເຕົ່າລ້ານປີ ບໍ່ມີເຫດຜົນ ເປັນຄົນຈູ້ຈີ້ ບໍ່ມີຄວາມແນ່ນອນ ມອງຄົນໃນແງ່ຮ້າຍ ຜູກໃຈພຍາບາດ ມັກຟາດແຕ່ຂອງດີໆ ແລະບໍ່ໃຫ້ມີຜູ້ໃດເກັ່ງເກີນ"

**ສັກດີນາໂງ່ເງົ່າ** - ຫມາຍເຖິງຜູ້ນໍາທີ່ຖືໂຕ ເຈົ້າຍົດເຈົ້າຢ່າງ ວາງໂຕສູງສົ່ງເກີນຄົນທົ່ວໄປ ຄິດວ່າຄົນອື່ນຕ້ອງກົ້ມຫົວໃຫ້ ຍ່າງໂຕລີບແລະຍົກມືໄຫວ້ ຜູ້ນໍາແບບນີ້ຈະຍຶນຕິດຢູ່ກັບຕໍາແຫນ່ງທີ່ນໍາຫນ້າຊື່ຂອງຕົນ ຈະຊົມຊື່ນເມື່ອຄົນອື່ນເອີ້ນເຂົາວ່າ "ສາສນາຈານ" ຫລືອາຈານ" ແຕ່ຖ້າຜູ້ໃດເອີ້ນໂດຍລືມໃຊ້ຊື່ຕໍາແຫນ່ງ ເຂົາຈະອອກອາການຫງຸດຫງິດທັນທີ ຊຶ່ງກົງກັນຂ້າມກັບຜູ້ນໍາຝ່າຍຈິດວິນຍານ ຊຶ່ງເປັນຄົນທີ່ "ມີໃຈຖ່ອມຖືວ່າຄົນອື່ນດີກວ່າຕົນ" (ຟລປ 2:3) ພຣະຄັມພີຍັງເວົ້າອີກວ່າ "ຢ່າຄິດຖືໂຕເກີນກວ່າທີ່ຕົນຄວນຈະຄິດນັ້ນ ແຕ່ຈົ່ງຄິດໃຫ້ພໍສົມກັບຂະຫນາດແຫ່ງຄວາມເຊື່ອທີ່ພຣະເຈົ້າໄດ້ຊົງໂຜດປະທານໃຫ້ແກ່ທຸກຄົນ (ຣມ 12:3)

**ໄດໂນເສົາເຕົ່າລ້ານປີ** - ຜູ້ນໍາແບບນີ້ບໍ່ຍອມພັທນາແລະບໍ່ຢາກກ້າວຫນ້າໄປ ເຂົາຈະຕິດຢູ່ກັບຄວາມຄິດແລະວິທີການເກົ່າໆ ຖືວ່າສິ່ງທີ່ເຮັດມາແລະສິ່ງທີ່ກໍາລັງເຮັດຢູ່ນັ້ນດີແລ້ວ ແລະຈະເຮັດຕໍ່ໄປ ເຂົາມີຄວາມຢ້ານຫລາຍຕໍ່ການປ່ຽນແປງໃຫມ່ໆທີ່ຈະເກີດຂຶ້ນໃນຄຣິສຕະຈັກແລະໃນຫນ່ວຍງານຂອງພຣະເຈົ້າ.

ຜູ້ນໍາທີ່ດີຈະບໍ່ຍືນຢູ່ກັບທີ່ ລາວຈະຄິດຢູ່ຕລອດເວລາວ່າວິທີການນັ້ນປ່ຽນແປງໄປແຕ່ເປົ້າຫມາຍຍັງເຫມືອນເດີມ ເມື່ອໄປຕາມທ້ອງຖິ່ນເຮົາດື່ມນໍ້າຈາກໂອ ແຕ່ພໍເຂົ້າມາໃນເມືອງເຮົາດື່ມນໍ້າຈາກຈອກ, ໂອຫລືຈອກເປັນພຽງສ່ວນປະກອບພາຍນອກເທົ່ານັ້ນ ແຕ່ສາຣະສໍາຄັນນັ້ນຂຶ້ນຢູ່ກັບນໍ້ານັ້ນສະອາດບໍ່ຕ່າງຫາກ.

ຜູ້ນໍາຝ່າຍຈິດວິນຍານຈະຕ້ອງຊອກຫາແນວທາງໃຫມ່ໆໃນງານຮັບໃຊ້ພຣະເຈົ້າ ແລະຄິດສເມີວ່າຂ່າວປະເສີດຂອງພຣະເຢຊູຄຣິດບໍ່ເຄີຍປ່ຽນແປງ ແຕ່ວິທີການຍ່ອມປ່ຽນແປງໄປຕາມຍຸກສມັຍ ຂ້າພະເຈົ້າໄດ້ມີໂອກາດໄປຢ້ຽມ ຢາມສາສນາສະຖານແຫ່ງນຶ່ງ ຊຶ່ງມີຖໍ້າທີ່ງົດງາມຫລາຍ ຮົ່ມຄຶ້ມໄປດ້ວຍປ່າໄມ້ ແລະຕາມຕົ້ນໄມ້ເຫລົ່ານັ້ນຈະມີຄໍາຂວັນຫລາຍອັນຕິດຢູ່ ມີຄໍາຂວັນນຶ່ງທີ່ຂ້າພະເຈົ້າມັກຫລາຍ ແລະຄິດວ່າພໍເຫມາະສໍາລັບຜູ້ນໍາຝ່າຍຈິດວິນຍານ ເຂົາຂຽນວ່າ "ຕື່ນແຕ່ເຊົ້າ ກ້າວໄປຂ້າງຫນ້າ ທໍາງານແຂ່ງເວລາພັທນາຄອບຄົວ"

**ບໍ່ມີເຫດຜົນ** - ຫມາຍເຖິງ ເປັນຜູ້ນໍາທີ່ຍັງບໍ່ເປັນຜູ້ບັນລຸນິຕິພາວະຝ່າຍຈິດວິນຍານ (ບໍ່ເປັນຜູ້ໃຫຍ່ເທື່ອ) ມັກໃຊ້ອາຣົມເປັນໃຫຍ່ ໃຈຮ້ອນ ວູ່ວາມ ອາຣົມແປປ່ວນງ່າຍ ໂລເລ ຫູເບົາ ລໍາອຽງ ແລະມັກການປະຈົບ ສໍພໍ ຄົນທີ່ຈະສາມາດຜູກມັດໃຈຜູ້ນໍາແບບນີ້ຈະຕ້ອງມີ "ລີ້ນເປັນກະດາດຊາຍ ນໍ້າລາຍເປັນເຊລເຫລັກ" ຂໍພຣະເຈົ້າຊົງຊ່ອຍເຫລືອຜູ້ນໍາທີ່ໃຈເບົາຫູເບົາແລະບໍ່ຄ່ອຍມັກມີເຫດຜົນ.

ເຫມືອນຄໍາອະທິຖານຂອງຜູ້ຂຽນເພງສັຣເສີນທີ່ວ່າ: "ຂໍຊົງ..ຟື້ນນໍ້າໃຈທີ່ຫນັກແຫນ້ນຂຶ້ນໃຫມ່" (ພສສ 51:10) ໂປໂລເອງໄດ້ເຄີຍຂຽນຈົດຫມາຍໄປແນະນໍາສິດຍາພິບານຫນຸ່ມແຫ່ງຄຣິສຕະຈັກເອເຟໂຊໃນທໍານອງດຽວກັນວ່າ "ຈົ່ງລະວັງຕົວໃຫ້ດີໃນການທັງປວງ ຈົ່ງອົດທົນ..." (2 ຕມທ 4:5)

**ເປັນຄົນຈູ້ຈີ້** - ຜູ້ນໍາແບບນີ້ເມື່ອມອບຫມາຍງານໃຫ້ກັບຄົນອື່ນແລ້ວກໍຍັງບໍ່ແນ່ນອນໃຈ ຕ້ອງຕິດຕາມໄປເບິ່ງໄປທວງ ຈໍ້າຈີ້ລໍາໄລ ເມື່ອບໍ່ໄດ້ດັ່ງໃຈກໍຈົ່ມ ແລະຖືວິສາສະປ່ຽນແປງແຜນງານຂອງເພື່ອນຮ່ວມງານເສັຽ ເຂົາຄິດຢູ່ສເມີວ່າ ບໍ່ມີຜູ້ໃດເຮັດວຽກໄດ້ດີເທົ່າຕົນ ເປັນທີ່ຮູ້ກັນທົ່ວໃນຫນ່ວຍງານວ່າ ຖ້າຈະໃຫ້ງານອອກມາດີ ຫົວຫນ້າຈະຕ້ອງລົງມື ເຮັດດ້ວຍຕົນເອງ ຜູ້ນໍາແບບນີ້ຈະອິດເມື່ອຍຈົນສາຍຕົວແທບຂາດ ແຕ່ວ່າກໍບໍ່ມີຜູ້ໃດເຫັນໃຈ!

**ບໍ່ມີຄວາມແນ່ນອນ** - ເປັນຜູ້ນໍາແບບ "ທ່າດີທີ່ເຫລວ" ຄືມີການວາງແຜນແລະສັ່ງງານລົງໄປແລ້ວເປັນຫມັ້ນເປັນເຫມາະ ແຕ່ບຶດນຶ່ງກໍຕັດສິນໃຈຍົກເລີກ ຫລືປ່ຽນແຜນງານໂດຍບໍ່ແຈ້ງໃຫ້ຮູ້ລ່ວງຫນ້າ ງານທີ່ເຮັດໄປແລ້ວກໍຄ້າງໄວ້ ຈາກນັ້ນກໍໄປເລີ້ມຕົ້ນງານໃຫມ່ອີກ ເມື່ອເປັນດັ່ງນັ້ນ ຫມູ່ຄູ່ທີ່ຮ່ວມງານກໍເສັຽຂະບວນໄປ ຄວາມຮູ້ສຶກ ແລະບັນດາຜູ້ຢູ່ໃຕ້ບັງຄັບບັນຊາກໍຫວາດຜະວາໄປຕາມໆກັນ ເພາະບໍ່ມີຄວາມແນ່ໃຈວ່າ ງານໃຫມ່ທີ່ເຮັດຈະຖືກຍົກເລີກກາງຄັນອີກມື້ໃດ. ຄົນເຮົາຖ້າບໍ່ຫມັ້ນໃຈໃນງານທີ່ເຮັດ ຜົນງານຈະອອກມາຢ່າງບໍ່ມີຄຸນະພາບ!

**ມອງຄົນໃນແງ່ຮ້າຍ** - ຜູ້ນໍາແບບນີ້ຈະຄິດຢູ່ສເມີວ່າ ບໍ່ມີຜູ້ໃດດີແລະເກັ່ງທໍ່ຕົນ ດູຖູກຄວາມສາມາດຂອງເພື່ອນຮ່ວມງານ ມັນຈະກ່າວຕິຕຽນນິນທາວ່າຮ້າຍ ໃນທໍານອງທີ່ວ່າຄົນອື່ນຊົ່ວໄປເສັຽທັງຫມົດ

ມີເຣື່ອງເລົ່າວ່າ ມີຊາຍຄົນນຶ່ງມີນິສັຍມັກຕໍາຫນິຄົນອື່ນຢູ່ສເມີ ມື້ນຶ່ງລາວກັບຫມູ່ຍ່າງໄປທີ່ຮ້ານສັພສິນຄ້າ ພໍດີໃນລະຍະນັ້ນມີການປະກວດ ນາງແບບເຄື່ອງສໍາອາງຍີ່ຫໍ້ນຶ່ງ ທັນໃດ ທີ່ເຫັນລາວກໍເວົ້າໂພ່ງອອກໄປວ່າ "ເບິ່ງຜູ້ຍິງຄົນນັ້ນແມ໋ ບໍ່ເຫັນງາມບ່ອນໃດເລີຍ ດັງກໍຫັກ ຫົວກໍແບນ ຂາກໍໂກ່ງ ມາເປັນນາງແບບໄດ້ຢ່າງໃດ"

ເມື່ອຍ່າງຂຶ້ນໄປຊັ້ນເທິງແລະຜ່ານກະຈົກເງົາ ລາວກໍເວົ້າຂຶ້ນວ່າ "ເບິ່ງຜູ້ຊາຍຄົນນັ້ນແມ໋ ແມ່ນໃຜຫັ້ນຫນ້າຕາເຫມືອນກັບຫມາ" ຫມູ່ຈຶ່ງສະກິດບອກວ່າ "ກໍຈະແມ່ນໃຜອີກລະ ກໍຕົວເຈົ້ານັ້ນແຫລະ" ລາວຈຶ່ງນຶກຂຶ້ນມາໄດ້ຈຶ່ງດ່າອອກໄປວ່າ "ບ໋ະ! ກະຈົກແວ່ນເຮັງຊວຍ ເຮັດຫນ້າຄົນໃຫ້ເປັນຫນ້າຫມາໄປໄດ້!"

ພຣະຄັມພີສອນວ່າ ຖ້າຈະເປັນຜູ້ນໍາທີ່ມີປະສິດທິພາບ ຕ້ອງຖ່ອມໃຈລົງແລະເຫັນວ່າຄົນອື່ນນັ້ນດີກວ່າຕົນ

**ຜູກໃຈພະຍາບາດ** - ເປັນຜູ້ນໍາປະເພດທີ່ເຈັບແລ້ວຈໍາຝັງໃຈ ບໍ່ຍອມໃຫ້ອະພັຍຄົນອື່ນງ່າຍໆ ປາກກໍບອກວ່າຍົກໂທດໃຫ້ແລ້ວ ແຕ່ໃນໃຈຍັງຂຸ່ນເຄືອງແລະຄຽດຮ້າຍຢູ່ ເຂົາເປັນເຫມືອນຄົນທີ່ເວົ້າວ່າ "ຂ້ອຍຍົກໂທດໃຫ້ກໍໄດ້ ແຕ່ຈະບໍ່ມີວັນລືມຄວາມຜິດຂອງເຈົ້າ!" ຫລື "ໃຫ້ອະພັຍກໍໄດ້ ແຕ່ເປັນຄັ້ງສຸດທ້າຍເດີ"

ພຣະເຢຊູຊົງສອນເຣື່ອງນີ້ໄວ້ໃນມັດທາຍ 18:22 ວ່າ ຄຣິສຕຽນຈະຕ້ອງຍົກໂທດໃຫ້ແກ່ຄົນອື່ນ "ເຈັດຄູນດ້ວຍເຈັດສິບ" (ໃນຂນະທີ່ເປໂຕຄິດວ່າ ຍົກໂທດໃຫ້ແກ່ຜູ້ເຮັດຜິດແຕ່ເຈັດສິບເທື່ອຫນ້າຈະພຽງພໍແລ້ວ) ຄໍາກ່າວຂອງພຣະອົງມີຄວາມຫມາຍວ່າ ເຈັດຄືຕລອດອາທິດນຶ່ງຈະຕ້ອງມີການຍົກໂທດໃຫ້ຜູ້ອື່ນ ເຈັດສິບຄືຍົກໂທດໃຫ້ແກ່ຜູ້ອື່ນຕລອດລະຍະອາຍຸຂັຍຂອງເຮົາ ແລະເຈັດຄູນເຈັດສິບຄື ບໍ່ມີການຈໍາກັດເທື່ອ ແລະໃຫ້ໂອກາດແກ່ຄົນອື່ນຢູ່ສເມີ

**ຟາດແຕ່ຂອງດີໆ** - ເປັນຜູ້ນໍາທີ່ເຫັນແກ່ຕົວ ບໍ່ມີໃຈເອື້ອເຟື້ອເຜື່ອແຜ່ ສິ່ງໃດດີໆເກັບເອົາໄວ້ເອງຫມົດ ສ່ວນທີ່ບໍ່ດີໆໃຫ້ຄົນອື່ນ

ຄຣິສຕຽນຄົນນຶ່ງໄດ້ເລົ່າໃຫ້ຟັງວ່າ ລາວໄປເຊົ່າເຮືອນຢູ່ໃກ້ໆກັບເຮືອນຂອງຜູ້ນໍາສະຖາບັນ ພຣະຄຣິສຕະທັມແຫ່ງນຶ່ງ ມື້ນຶ່ງຜູ້ນໍາກໍຫິ້ວຫມາກຖົ່ວຮຽນມາຝາກ ເມື່ອແກະເບິ່ງປາກົດວ່າເລະເປັນປາແດກໄປແລ້ວ ກິນບໍ່ໄດ້ຈຶ່ງຖິ້ມໄປ ແລະບໍ່ໄດ້ຄິດສິ່ງໃດຫລາຍ ອາດຈະເປັນຄວາມບໍ່ຮູ້ແລະບັງເອີນຫລາຍກວ່າ ຫລາຍມື້ຕໍ່ມາຜູ້ນໍາກໍເອົາຂະຫນົມຫມໍ້ແກງມາຝາກຖາດນຶ່ງ ເມື່ອແກະອອກເບິ່ງກໍມີນໍ້າຢູ່ເຕັມຖາດ ແລະມີກິ່ນເຫມັນເນົ່າແລ້ວ ເຮັດໃຫ້ຄິດເຖິງຄໍາເວົ້າຂອງຫມູ່ຜູ້ນໍາຄົນນຶ່ງທີ່ບອກວ່າ "ຂອງດີໆເອົາໄວ້ໃຫ້ລູກ ຂອງຖືກໆເອົາໄວ້ໃຫ້ຫລານ ຂອງຫວານໆເອົາໄວ້ໃຫ້ເມັຽ ແລະຂອງເສັຽໆເອົາໄວ້ໃຫ້ຕົນເອງ"

**ບໍ່ມີຜູ້ໃດເກັ່ງເກີນ** - ເປັນຜູ້ນຳປະເພດຫົວສູງ ທະນົງຕົວຍົກຕົນຂົ່ມເພິ່ນ ຈະດ້ວຍທ່າທີ່ຫລືຄຳເວົ້າກໍຕາມ ມັກຄຸຍທັບຖົມ ລາວມັກຈະບອກແກ່ຄົນອື່ນຢູ່ສເມີວ່າ "ຂ້ອຍມີງານຫຍຸ້ງ ບໍ່ມີເວລາ" ເພື່ອສະແດງໃຫ້ເຫັນວ່າຕົນເອງເປັນບຸກຄົນຍິ່ງໃຫຍ່ແລະສຳຄັນພຽງໃດ.

ມີຊາວນາສອງຄົນພົບກັນໂດຍບັງເອີນໃນຮ້ານອາຫານ ຄົນທຳອິດຄຸຍວ່າ "ທີ່ດິນຂອງຂ້ອຍກວ້າງໃຫຍ່ໄພສານ ຖ້າເຈົ້າຂັບຣົດປິກອັພຕັ້ງແຕ່ດວງອາທິດຂຶ້ນໄປຈົນເຖິງດວງອາທິດຕົກ ກໍຍັງບໍ່ພົ້ນເຂດນາຂອງຂ້ອຍເລີຍ" ຄົນທີສອງໄດ້ຍິນດັ່ງນັ້ນຈຶ່ງເວົ້າຂຶ້ນວ່າ

"ເອີ...ຂ້ອຍເຄີຍມີຣົດປິກອັພຕາຍໆແບບນັ້ນເຫມືອນກັນ ຕອນນີ້ຂ້ອຍຖິ້ມມັນເປັນເສດເຫລັກໄປແລ້ວ"

ສຸດທ້າຍນີ້ ຂ້າພະເຈົ້າຂໍອ້າງເຖິງຂໍ້ຂຽນຂອງທ່ານວິລລ່ຽມ ເຈມສ໌ ຊຶ່ງໄດ້ກ່າວເຖິງນິສັຍໃຈຄໍທີ່ແທ້ຈິງຂອງ "ຄົນ" ໄວ້ທັງໃນແງ່ດີແລະບໍ່ດີ ເພື່ອເປັນຂໍ້ຄິດສຳລັບຜູ້ນຳຝ່າຍຈິດວິນຍານດັ່ງນີ້:

- ບໍ່ມັກໃຫ້ຜູ້ໃດຕຳໜິ
- ມັກມີຊື່ສຽງ
- ເຮັດຫຍັງສຳເຣັດໄດ້ກໍຕໍ່ເມື່ອຢາກເຮັດສິ່ງນັ້ນ
- ສົນໃຈຕົນເອງຫລາຍກວ່າຄົນອື່ນ
- ມັກໃບໜ້າທີ່ຍິ້ມແຍ້ມແຈ່ມໃສຫລາຍກວ່າໃບໜ້າທີ່ບູດບຶ້ງ
- ເອົາໃຈໃສ່ຊື່ຂອງຕົນເອງ
- ມັກໃຫ້ຄົນອື່ນຟັງເວລາຕົນເອງເວົ້າ
- ມັກໃຫ້ຄົນອື່ນເວົ້າໃນສິ່ງທີ່ຕົນເອງສົນໃຈ
- ບໍ່ມັກໃຫ້ຄົນອື່ນໂຕ້ແຍ້ງ
- ຢາກໃຫ້ຄົນອື່ນເຄົາຣົບແລະເຫັນດ້ວຍກັບຄວາມຄິດເຫັນຂອງຕົນ
- ຢາກຈະໄດ້ຮັບຄຳຍົກຍ້ອງສັຣະເສີນ

## 6. ຜູ້ນຳແບບພຣະຄັມພີ

ຫມູ່ຂອງຂ້າພະເຈົ້າຄົນນຶ່ງ ເຮັດວຽກປະກາດຂ່າວປະເສີດແກ່ນັກສຶກສາໃນມະຫາວິທະຍາລັຍຫລາຍແຫ່ງ ລາວເລົ່າເຣື່ອງແປກປລາດໃຫ້ຟັງ ຄັ້ງນຶ່ງເກີດອຸບັດຕິເຫດຮ້າຍແຮງເທິງພູເຂົາທີ່ສູງ ຣົດຄັນນຶ່ງແລ່ນຕົກລົງໄປໃນເຫວເລິກ ເມື່ອເຈົ້າໜ້າທີ່ຕຳຣວດແລະໜ່ວຍກູ້ພັຍໄປເຖິງກໍພົບວ່າຄົນໃນຣົດເສັຽຊີວິດທັງໝົດ ຄືພໍ່ແມ່ແລະລູກຊາຍນ້ອຍໆເຫລືອແຕ່ລີງຕົວດຽວທີ່ລອດຊີວິດມາໄດ້. ເຈົ້າໜ້າທີ່ຕ້ອງການຫາພະຍານຫລັກຖານຈຶ່ງນຳລີງມາສອບສວນ .

"ເມື່ອຕອນກ່ອນທີ່ຣົດຈະແລ່ນລົງໄປໃນເຫວນັ້ນ ລູກຊາຍກຳລັງເຮັດຫຍັງຢູ່" ລີງກໍທຳທ່ານອນລົງແລະຫລັບຕາ ບອກເປັນນັຍວ່າເດັກກຳລັງຫລັບ "ແລ້ວຕອນນັ້ນແມ່ຂອງເດັກນ້ອຍເຮັດຫຍັງ"

ລີງກໍລຸກຂຶ້ນທຳທ່າເຕັ້ນຊີ້ນິ້ວໄມ້ ເຮັດປາກຂະມຸບຂະມິບແລະສົ່ງສຽງຮ້ອງຈຽກໆບອກເປັນນັຍວ່າ ຜູ້ຍິງກຳລັງດ່າດ້ວຍຄວາມໃຈຮ້າຍ

ເຈົ້າໜ້າທີ່ຈຶ່ງຖາມຕໍ່ໄປອີກວ່າ "ແລ້ວຕອນນັ້ນພໍ່ຂອງເດັກກຳລັງເຮັດຫຍັງ" ລີງທຳທ່າມືຖືຂວດແກ້ວແລະຍົກຂຶ້ນກະດົກໃສ່ປາກແລ້ວສ່າຍຫົວໄປມາ ບອກເປັນນັຍວ່າກຳລັງດື່ມເຫລົ້າແລະເມົາຫລາຍ.

ດັ່ງນັ້ນຈຶ່ງສັນນິດຖານວ່າ ຣົດເກີດອຸບັດຕິເຫດຕົກເຫວເພາະສາມີພັຣຍາຜິດຖຽງກັນ ຝ່າຍຜູ້ຍິງໃຈຮ້າຍແລະດ່າ ສ່ວນຝ່າຍຜູ້ຊາຍດື່ມເຫລົ້າຄັບອາຣົມ. ກ່ອນທີ່ຈະປ່ອຍລີງໄປ ເຈົ້າໜ້າທີ່ໄດ້ຖາມຄຳຖາມສຸດທ້າຍວ່າ "ແລ້ວຕອນນັ້ນ ເຈົ້າກຳລັງເຮັດຫຍັງ"

ລີງທຳທ່ານັ່ງລົງ ຍົກມືສອງຂ້າງຂຶ້ນ ແລ້ວຫມຸນໄປມາ ບອກເປັນນັຍວ່າກຳລັງຂັບຣົດ ເຈົ້າໜ້າທີ່ຈຶ່ງມາເຖິງບ່ອນຮູ້ຄວາມຈິງແລະຕ້ອງປ່ຽນການສອບສວນໃຫມ່ວ່າ ສາເຫດທີ່ເກີດອຸບັດຕິເຫດຮ້າຍແຮງຄັ້ງນີ້ເປັນເພາະໃຫ້ລີງຂັບຣົດນັ້ນເອງ.

"!!!"

ຄຳຖາມທີ່ໜ້າຄິດປະການແຣກສຳລັບຜູ້ນຳຝ່າຍຈິດວິນຍານຄື ຜູ້ໃດເປັນຜູ້ຖືພວງມາລັຍໃນຊີວິດຂອງເຮົາ ພຣະເຈົ້າຫລືມະນຸດ ຫລືວ່າສິ່ງອື່ນ ປະການທີສອງ ຂໍໃຫ້ເຮົາຄິດຢູ່ສເມີວ່າ ຄວາມຈິບແຫາຍຈະເກີດຂຶ້ນຢ່າງບໍ່ຕ້ອງສົງສັຍ ຖ້າເຮົາປ່ອຍໃຫ້ຄົນທີ່ບໍ່ມີຄວາມຮູ້ ບໍ່ມີຄວາມ

ສາມາດ ແລະບໍ່ມີຂອງປະທານຝ່າຍວິນຍານເຂົ້າມາກຸມບັງຫຽນຂອງ ຄຣິສຕະຈັກແລະອົງການ.  ຜູ້ນໍາທີ່ດີຄວນຈະມີລັກສນະ 5 ຄ ດັ່ງນີ້:

**ຄົ້ນ** - ຮຽນຮູ້ຢູ່ສເມີ ເພາະວ່າມີສິ່ງໃຫມ່ເກີດຂຶ້ນທຸກມື້ ຜູ້ນໍາທີ່ບໍ່ຍ່ອມອ່ານຫນັງສື ຫລືບໍ່ເຄີຍຍ່າງກ່າຍເຂົ້າໄປໃນຫ້ອງສມຸດເລີຍ ບໍ່ເທິງຄວາມຮູ້ຂອງເຂົາຈະສູນສລາຍໄປ ພຣະຄັມພີກ່າວເຖິງຊາວເມືອງເບຣອຍອາຊຶ່ງເປັນຕົວຢ່າງທີ່ດີ ມີຈິດໃຈສູງແລະເຫລື້ອມໃສພຣະຄໍາເພາະພວກເຂົາ "ຄົ້ນເບິ່ງພຣະຄັມພີທຸກມື້  ເພື່ອຢາກຮູ້ວ່າຂໍ້ຄວາມນັ້ນເປັນຈິງດັ່ງກ່າວຫລືບໍ່" (ກຈກ 17:11)

**ຄວ້າ** - ເປັນຜົນມາຈາກການຮຽນຮູ້ ຫມາຍເຖິງ ການຈົດຈໍາ ແລະນໍາມາປະຍຸກໃຊ້ໃນການເຮັດວຽກແລະການດໍາເນີນຊີວິດປະຈໍາວັນ ຂໍພຣະເຈົ້າຊົງຊ່ອຍເຮົາຢ່າໃຫ້ເປັນເຫມືອນພາສິດທີ່ກ່າວເຖິງຄົນທີ່ຮຽນຫລາຍແຕ່ບໍ່ມີປໂຍດວ່າ "ຄວາມຮູ້ຖ້ວມຫົວ ເອົາຕົວບໍ່ລອດ"

**ຄິດ** - ຄົນເຮົາມັກຈະໄດ້ຄວາມຄິດມາຈາກສາມດ້ານດ້ວຍກັນຄື ນຶ່ງ ຄິດດ້ວຍຕົວເອງ ສອງໄດ້ມາຈາກ ການຮຽນຮູ້ ແລະສາມໄດ້ມາຈາກປະສົບການ

**ຄາຍ** - ຜູ້ນໍາທີ່ປະສົບຄວາມສໍາເຣັດຄື ຄົນທີ່ຮຽນຮູ້ ຄິດໃຄ່ຄວນ ແລະສາມາດນໍາຄວາມຮູ້ແລະປະສົບການນັ້ນຖ່າຍທອດໃຫ້ຄົນອື່ນໄດ້ ພຣະຄັມພີບອກໃຫ້ຜູ້ນໍາຝ່າຍຈິດວິນຍານມີເປົ້າຫມາຍໃນການສອນຄົນທີ່ຊື່ສັດແລະໄວ້ໃຈໄດ້ ເພື່ອຈະໃຫ້ເຂົາສອນຄົນອື່ນຕໍ່ໄປ (2 ຕມທ 2:2)

**ຄນະ** - ຫມາຍເຖິງການທໍາງານເປັນທີມ ຜູ້ນໍາທີ່ດີຈະສາມາດເຮັດວຽກຮ່ວມກັບຄົນອື່ນໄດ້ ເຖິງວ່າຈະມີຄວາມແຕກຕ່າງກັນໃນລັກສນະນິສັຍແລະວິທີການ ແຕ່ໂດຍທີ່ພຣະເຢຊູຄຣິດຊົງເປັນສູນກາງ ເຮົາມີຄວາມເຊື່ອວ່າຈະຮ່ວມເປັນນໍ້ານຶ່ງໃຈດຽວກັນໄດ້.

ເມື່ອຂ້າພະເຈົ້າຕຽມຂໍ້ມູນໄປສອນຜູ້ນໍາຄຣິສຕະຈັກທີ່ບາງແຫ່ງ ຂ້າພະເຈົ້າໄດ້ອ່ານຫນັງສືຫົວນ້ອຍໆເຣື່ອງ "ຜູ້ນໍາຕາມແບບຢ່າງພຣະຄັມພີ" ຂຽນໂດຍ ເຈີຣ໌ຣີ ເພີຣ໌ລິລສ໌ ຊຶ່ງໄດ້ເວົ້າເຖິງຖານະແລະທີ່ມາທີ່ໄປຂອງຜູ້ນໍາໄວ້ຢ່າງຫນ້າສົນໃຈ ຈຶ່ງຂໍນໍາບາງສ່ວນມາເຜີຍແຜ່ດັ່ງນີ້:

1. ຜູ້ນໍາທີ່ເອີ້ນກັນໃນຊື່ຂອງຜູ້ປົກຄອງ (archo)
   (ມຣກ 10:42; ຣມ 15:12)
2. ຜູ້ນໍາທີ່ຢູ່ໃນຖານະຜູ້ມີອໍານາດຫລືມີຕໍາແຫນ່ງສູງ (arche)
   (ລກ 12:11; ຣມ 8:38; ອຟຊ 1:12; ກລຊ 2:10)
3. ຜູ້ນໍາທີ່ຢູ່ໃນຕໍາແຫນ່ງຂອງຜູ້ປົກຄອງຂອງຄົນໂຣມັນແລະຄົນຢິວ (archon)
   (ມທ 9:18; ມຣກ 2:23; ຢຮ 12:31; ກຈກ 16:19; ຣມ 13:3)
4. ຜູ້ນໍາທີ່ມີອໍານາດໃນການປົກຄອງ(kurieuo)
   (ລກ 22:25; ຣມ 6:9; 14:9; 1 ຕມທ 6:15)
5. ຜູ້ນໍາມີອໍານາດໃນການປົກຄອງ (kutakurieuo)
   (ມຣກ 10:42; ກຈກ 19:16; 1 ປຕ 5:3)
6. ຜູ້ນໍາທີ່ຢູ່ໃນຖານະຂອງປະທານຫລືຜູ້ນໍາ (proistemi)
   (ຣມ 12:8; 1 ທຊນ 5:12; 1 ຕມທ 3:4-5, 12, 5:17)
7. ຜູ້ນໍາທີ່ເອີ້ນກັນວ່າກັປຕັນໃຫຍ່(kuburnetis)
   (ກຈກ 27:11; 1 ກຣທ 12:28; ພນມ 18:17)
8. ຜູ້ນໍາທີ່ຢູ່ໃນຕໍາແຫນ່ງຂອງຜູ້ອະວຸໂສຂອງຊຸມຊົນແລະຄຣິສຕະຈັກ(presbuteros)
   (ລລວ 19:31; ສພສ 20:29; ກຈກ 11:30; 15:2-6; 1 ຕມທ 5:17, 19)
9. ຜູ້ນໍາທີ່ນໍາປະຊຸມ (hogemai)
   (ມທ 2:6; ກຈກ 7:10; ຮຣ 13:7, 17, 24)
10. ຜູ້ນໍາຫລືຜູ້ປົກຄອງ (hegemon)
    (ມທ 2,6; 11:14; ລກ 3:1; ກຈກ 23:24, 26)
11. ຜູ້ນໍາທີ່ຢູ່ໃນຖານະຂອງຜູ້ລ້ຽງແກະ ຫລືຜູ້ປົກປ້ອງດູແລຮັກສາ (poimaino)
    (ຢຮ 11:16; ກຈກ 20:28; 1 ປຕ 5:2; ພນມ 7:17)
12. ຜູ້ນໍາຊຶ່ງມີຫນ້າທີ່ໃນການຢ້ຽມຢາມ (episkopeo)
    (ຢຣມ 23:2; ອຊກ 34:11, 12; ຮຣ 12:15; 1 ປຕ 5:2)
13. ຜູ້ນໍາຊຶ່ງມີຫນ້າທີ່ເບິ່ງແຍງແລະປ້ອງກັນ (episkopos)
    (ກຈກ 20:28; ຟລປ 1:1; 1 ຕມທ 3:1, 2; 2 ປຕ 2:25)
14. ຜູ້ນໍາທີ່ຢູ່ໃນຖານະຂອງຜູ້ຮັບໃຊ້(diakoneo)
    (ມທ 20:25-28; ມຣກ 10:42-45)

15. ຜູ້ນຳທີ່ຢູ່ໃນຖານະຂອງທາດບໍລະບັດ (doulos)
    (ລກ 12:37; ຣມ 1:1; 2 ກຣທ 9:12; ຄລຕ 5:13; ຟລປ 1:1; 1 ຕມທ 3:10)
16. ຜູ້ນຳທີ່ຄອຍຮັບໃຊ້ນາຍ (diakonia)
    (ລກ 10:40; ກຈກ 6:1; 20:24; ຣມ 12:7; ວຟຊ 4:12; 2 ຕມທ 4:11)
17. ຜູ້ນຳຊຶ່ງຮັບໃຊ້ນາຍທີ່ໂຕະອາຫານ (diakonos)
    (ມຣກ 20:26; ຢຮ 2:5,9; ຣມ 13:4; 15:8; ຟລປ 1:1)

**ຫລັກການເລືອກຜູ້ນຳຕາມແບບພຣະຄັມພີ** (ກຈກ 6:1-7)

ຫລັງຈາກທີ່ພຣະເຢຊູຄຣິດຊົງເປັນຂຶ້ນມາຈາກຄວາມຕາຍ ແລະຊົງສະເດັດຂຶ້ນສູ່ສວັນ ຄຣິສຕະຈັກຂອງພຣະ ອົງໄດ້ຮັບການສະຖາປະນາຂຶ້ນທີ່ກຸງເຢຣູຊາເລັມ ຈຳນວນຜູ້ເຊື່ອເພີ່ມຂຶ້ນຢ່າງໄວ ຈາກຕອນແຣກພຽງສິບກວ່າຄົນກາຍເປັນສາມພັນຄົນແລະຫ້າພັນຄົນພາຍໃນເວລາພຽງບໍ່ທໍ່ໃດມື້.

ດັ່ງນັ້ນ ຈຶ່ງຈຳເປັນຢ່າງຍິ່ງທີ່ຄຣິສຕະຈັກຕ້ອງມີຜູ້ນຳທີ່ເຂັ້ມແຂງແລະມີປະສິດທິພາບ ພວກອັຄສາວົກຈຶ່ງສເນີຫລັກການເລືອກຜູ້ນຳໄວ້ສາມປະການ ເພື່ອໃຫ້ຜູ້ນຳເຫລົ່ານັ້ນມາຊ່ອຍແບ່ງເບົາພາຣະການຮັບໃຊ້ພຣະເຈົ້າໃນຄຣິສຕະຈັກ ແລະເພື່ອອັຄສາວົກຈະມີເວລາທຸ່ມເທການເຮັດວຽກປະກາດຂ່າວປະເສີດແລະສັ່ງສອນພຣະຄຳໄດ້ຫລາຍຂຶ້ນ.

**ຜູ້ນຳຄວນຈະມີຄຸນສົມບັດດັ່ງຕໍ່ໄປນີ້:**

<u>ປະການທີນຶ່ງ</u> - ເປັນຄົນທີ່ມີຊື່ສຽງ (ກຈກ 6:3) ໂປໂລໄດ້ລະບຸເຖິງຄຸນສົມບັດທຳນອງດຽວກັນນີ້ໃນ 1 ຕີໂມທຽວ 3:2 ວ່າ ຜູ້ນຳຄຣິສຕະຈັກຈະຕ້ອງເປັນຄົນທີ່ບໍ່ມີຜູ້ໃດຕິໄດ້ ມີຄວາມປະພຶດຮຽບຮ້ອຍ ບໍ່ມົວຫມອງໃນເຣື່ອງເພດ ເງິນ ແລະຄອບຄົວ.

<u>ປະການທີສອງ</u> - ເປັນຄົນທີ່ປະກອບໄປດ້ວຍພຣະວິນຍານບໍຣິສຸດ (ກຈກ 6:3) ຂໍໃຫ້ສັງເກດວ່າຜູ້ນຳຝ່າຍຈິດວິນຍານນັ້ນ ພຣະຄັມພີບໍ່ໄດ້ເນັ້ນໃນເຣື່ອງການສຶກສາ ຫລືຄວາມເກັ່ງກາດ ທາງດ້ານວາທະສິລປະ ແຕ່ເນັ້ນເຖິງ ຄຸນສົມບັດຂອງຊີວິດ ສິ່ງທີ່ຢູ່ພາຍໃນ ຄືການເຕັມລົ້ນໄປດ້ວຍພຣະວິນຍານບໍຣິສຸດ ຜົນທີ່ສະແດງອອກມາໄດ້ແກ່ ຄວາມຮັກ ຄວາມປິຕິຍິນດີ ສັນຕິສຸກ ຄວາມອົດກັ້ນໃຈ ຄວາມປານີ ຄວາມດີ ຄວາມສັດຊື່ ຄວາມສຸພາບອ່ອນນ້ອມ ແລະການຮູ້ຈັກບັງຄັບຕົນ (ຄລຕ 5:22-23)

<u>ປະການທີສາມ</u> - ຜູ້ນຳຄຣິສຕະຈັກຈະຕ້ອງເປັນຄົນທີ່ມີສະຕິປັນຍາ (6:3) ຄົນຈຳນວນຫລາຍມັກຈະມີຄຸນສົມບັດຂາດໆເກີນໆ ເຊັ່ນ ຄົນທີ່ມີສະຕິປັນຍາມັກໃຈຮ້ອນ ຄົນເກັ່ງມັກໂອ້ອວດ ຄົນໂງ່ມັກຂະຫຍັນ ຄົນສມອງດີມັກງຽບຂຶມ ຄົນຫົວລ້ານມັກໃຈນ້ອຍ ຄົນຮູບງາມມັກມີສມອງຂີ້ເລື່ອຍ ຄົນງາມມັກໃຈດຳ ແລະຄົນຮັ່ງມີມັກຫຍິ່ງຈອງຫອງ ເປັນຕົ້ນ.

ທ່ານຮິດເລີ່ ນາຊີຜູ້ນຳຜະເດັດການເຄີຍກ່າວໄວ້ຢ່າງຫນ້າຄິດວ່າ “ຄົນສລາດແລະດຸຫມັ່ນຄວນຈະເປັນນາຍພົນ ຄົນສລາດແຕ່ຂີ້ຄ້ານຄວນຈະເປັນເສນາທິການ ຄົນໂງ່ແຕ່ຂີ້ຄ້ານຄວນຈະເປັນໄດ້ແຕ່ພົນທະຫານ ສ່ວນຄົນໂງ່ແຕ່ດຸຫມັ່ນຄວນຈະເອົາໄປຍິງຖິ້ມ”

ໃນພັນທະສັນຍາເດີມ ເຮົາເຫັນຜູ້ຮັບໃຊ້ຂອງພຣະເຈົ້າ ທີ່ເປັນຕົວຢ່າງຂອງຜູ້ນຳທີ່ມີສະຕິປັນຍາລ້ຳເລີດ ຄື “ດານີເອນ” ທ່ານສຳແດງຊີວິດຂອງພຣະເຢຊູຄຣິດຢ່າງຊັດເຈນ ກະສັດດາຣິອຸສເອີ້ນດານີເອນວ່າ “ດານີເອນຜູ້ຮັບໃຊ້ຂອງພຣະເຈົ້າຜູ້ຊົງພຣະຊົນຢູ່” (ດນອ 6:20) ດານີເອນເປັນນັກອະທິຖານທີ່ບໍ່ຢ້ານກົວຕໍ່ພັຍອັນຕະຣາຍໃດໆ (ດນອ 6:10) ແລະເປັນຄົນທີ່ກ້າເວົ້າເຣື່ອງ ຂອງພຣະເຈົ້າຕໍ່ຫນ້າກະສັດເນບຸກາດເນສຊາ (ດນອ 2:26) ບໍ່ພຽງເທົ່ານັ້ນ ດານີເອນຍັງຕໍ່ວ່າກະສັດແບບຊຶ່ງໆຫນ້າອີກນຳດ້ວຍ ວ່າ ໄດ້ດີແລ້ວລືມພຣະເຈົ້າ (ດນອ 5:18-20)

ດານີເອນເປັນຜູ້ນຳທີ່ມີຄຸນສົມບັດສີ່ ຢ່າງຄື:

ປະການທີນຶ່ງ - ດານີເອນເປັນຄົນທີ່ປະກອບດ້ວຍພຣະວິນຍານບໍຣິສຸດ (ນີ້ເປັນສິ່ງທີ່ສຳຄັນຫລາຍ)

ປະການທີສອງ - ດານີເອນມີຄວາມສວ່າງ ພຣະເຢຊູໄດ້ຊົງກ່າວວ່າ “ເຮົາເປັນຄວາມສວ່າງຂອງໂລກ ຜູ້ທີ່ຕາມເຮົາມາຈະບໍ່ທ່ຽວໄປໃນທີ່ມືດ ແຕ່ຈະມີຄວາມສວ່າງແຫ່ງຊີວິດ” (ຢຮ 8:12) ໃນຂນະດຽວກັນພຣະອົງກໍຊົງບອກແກ່ຄຣິສຕຽນວ່າ “ພວກທ່ານຄືແສງສວ່າງສຳລັບໂລກ” (ມທ 5:14) ແນ່ນອນ ຜູ້ເຊື່ອທຸກຄົນມີຫນ້າທີ່ໃນການສ່ອງແສງສວ່າງອອກໄປ.

ປະການທີສາມ - ດານີເອນເປັນຄົນທີ່ມີຄວາມ ເຂົ້າໃຈ (understanding) ຫມາຍເຖິງເປັນຄົນທີ່ຮູ້ຈັກໃນການໃຈ້ແຍກ ແລະມອງເຫັນການໄກ.

ປະການທີສີ່ - ດານີເອນເປັນຄົນທີ່ມີສະຕິປັນຍາເລີດ (wisdom) ພຣະຄັມພີບອກແກ່ຜູ້ເຊື່ອວ່າ ແຕ່ຖ້າ ຄົນໃດໃນພວກທ່ານຂາດສະຕິປັນຍາ ກໍໃຫ້ຜູ້ນັ້ນທູນຂໍຈາກພຣະເຈົ້າ...ແລະຜູ້ນັ້ນກໍຈະໄດ້ຮັບສິ່ງທີ່ທູນຂໍ (ຢກບ 1:5) ກະສັດໂຊໂລໂມນມີປະສົບການໃນເຣື່ອງນີ້ເປັນຢ່າງດີຈຶ່ງກ້າກ່າວໄວ້ວ່າ “ຄວາມຢຳເກງພຣະເຈົ້າ ເປັນທີ່ເລີ່ມຕົ້ນຂອງປັນຍາ” (ສພສ 9:10).

**ຫລັກການຂອງເຢດໂຣໃນການເລືອກຜູ້ນຳ** (ອພຍ 13:27)

ເມື່ອຊົນຊາດອິສຣາເອນຕົກເປັນທາດຂອງຊາວເອຢິບເປັນເວລາເຖິງສີ່ຮ້ອຍປີ ພວກເຂົາພົບບັນຫາລຳບາກໄດ້ຮັບຄວາມທຸກຍາກລຳບາກ ແລະພາກັນອະທິຖານອ້ອນວອນຂໍຄວາມຊ່ອຍເຫລືອຈາກພຣະເຈົ້າ ແລະພຣະອົງຊົງສົ່ງໂມເຊມາປົດປ່ອຍໃຫ້ເປັນອິສຣະ ນຳພວກເຂົາອອກຈາກເອຢິບຂ້າມຖິ່ນກັນດານໃນທະເລຊາຍ ແລະຕ້ອງໃຊ້ເວລາໃນການຊັດເຊພະເນຈອນຢູ່ເປັນເວລານານເຖິງສີ່ສິບປີ.

ໂມເຊຕ້ອງອິດເມື່ອຍສາຍຕົວແທບຂາດ ເນື່ອງຈາກຕ້ອງແບກພາຣະໜັກ ເຮັດວຽກເປັນຜູ້ນຳຕາມລຳພັງ ບໍ່ມີຜູ້ຊ່ອຍຕ້ອງຄວບຄຸມຂະບວນປະຊາຊົນແລະຕ້ອງເປັນຜູ້ຕັດສິນໃຈໃນທຸກເຣື່ອງ.

ເນື່ອງຈາກການທີ່ຈະຕ້ອງຄອຍຄຳສັ່ງຈາກຜູ້ນຳສູງສຸດພຽງຄົນດຽວເປັນເຣື່ອງທີ່ເສັຽເວລາແລະໜ້າເບື່ອໜ່າຍຫລາຍ ເຖິງວ່າໂມເຊຈະມີເຈຕນາທີ່ດີ ແຕ່ບໍ່ຖືກຕ້ອງໃນຫລັກຂອງການບໍຣິຫານ ເມື່ອເຢດໂຣຊຶ່ງເປັນພໍ່ເຖົ້າເຫັນດັ່ງນັ້ນ ກໍບັງເກີດຄວາມສົງສານ ແລະໃຫ້ຄຳແນະນຳທີ່ດີແກ່ລູກເຂີຍ.

ທ່ານ ໂບລດ໌ ຊຶ່ງເປັນນັກບໍຣິຫານທີ່ມີຊື່ສຽງ ໄດ້ວາງຫລັກການໄວ້ວ່າ "ຖ້າໜ່ວຍງານຫລືອົງການໃດໆ ມີຜູ້ນຶ່ງທີ່ຮູ້ງານທຸກຢ່າງພຽງຄົນດຽວ ຄົນໆນັ້ນສົມຄວນທີ່ຈະຖືກກຳຈັດອອກໄປ" ຂ້າພະເຈົ້າເຫັນວ່າຄຳແນະນຳຂອງເຢດໂຣໃນຄັ້ງໂບຮານເປັນແມ່ນແບບຂອງການບໍຣິຫານໃນປັດຈຸບັນນີ້ໄດ້ເປັນຢ່າງດີ ນັ້ນກໍຄື:

1. ມີການເລືອກຜູ້ນຳ (ອພຍ 18:20) ຄັດເອົາຄົນຊຶ່ງມີໃຈພ້ອມທີ່ຈະເຮັດວຽກ ໂດຍສອນພຣະຄັມພີແລະຫລັກບໍຣິຫານໃຫ້ແກ່ຄົນເຫລົ່ານີ້

2. ເລືອກຄົນທີ່ມີຄວາມສາມາດ (ຂໍ້ 21) ຂໍໃຫ້ເຮົາຊອກຫາຄົນທີ່ມີຂອງປະທານແລະມີຄວາມຖ່ອມໃຈ ຊຶ່ງຍ່ອມເຊື່ອຟັງຜູ້ນຳຢ່າງມອບກາຍຖວາຍຊີວິດ ໃນເຣື່ອງການເປັນຜູ້ນຳນັ້ນ ອາດກ່າວໄດ້ວ່າ ໃຊ້ພອນສວັນພຽງຫ້າເປີເຊັນເທົ່ານັ້ນ ສ່ວນທີ່ເຫລືອອີກເກົ້າສິບຫ້າເປີເຊັນເກີດຈາກການຮຽນຮູ້ແລະການເສີມສ້າງພາຍຫລັງ.

3. ເລືອກຄົນທີ່ຢຳເກງພຣະເຈົ້າ (ຂໍ້ 21) ໃນພາສາເດີມມີຄວາມໝາຍວ່າ ຄົນທີ່ຍົກຍ້ອງພຣະເຈົ້າເໜືອສິ່ງອື່ນໃດ ເຮົາພົບຄວາມຈິງວ່າຜູ້ໃດກໍຕາມທີ່ເກງໃຈພຣະເຈົ້າມັກຈະເກງໃຈມະນຸດດ້ວຍ ຄົນທີ່ນັບຖືແລະຖວາຍກຽດແດ່ພຣະອົງ ເຂົາກໍຈະເຄົາຣົບແລະໃຫ້ກຽດແກ່ໝູ່ຄູ່ຮ່ວມງານນຳ ຈົ່ງຈື່ໄວ້ວ່າ ຄົນທີ່ໂອ້ອວດຖືຕົວ ເຍີ້ຫຍິ່ງຈອງຫອງ ມັກປະຈົບສໍພໍ ຈະຈະເຣີນພຽງຊົ່ວລະຍະເວລານຶ່ງເທົ່ານັ້ນ ແລ້ວເຂົາຈະຫ່ຽວແຫ້ງໄປເໝືອນຕົ້ນໄມ້ໃນທະເລຊາຍ ແຕ່ສ່ວນຄົນທີ່ຢຳເກງພຣະເຈົ້າ ກົງໄປກົງມາ ແລະມີຄວາມອ່ອນນ້ອມຖ່ອມໃຈ ລາວຈະຮຸ່ງເຮືອງຕລອດໄປ.

4. ເລືອກຄົນທີ່ໄວ້ໃຈໄດ້ (ຂໍ້ 21) ພຣະຄັມພີຕອນນີ້ແປຕາມຕົວຄືເປັນ "ຄົນທີ່ສັດຊື່" ຊື່ຕົງໃນການດຳເນີນຊີວິດ ໃນເຣື່ອງເພດກົງກັນຂ້າມ ເຣື່ອງເງິນໆທອງໆ ນອກຈາກນັ້ນຍັງສັດຊື່ໃນການນະມັສການພຣະເຈົ້າ ອະທິຖານ ອ່ານພຣະ ຄັມພີ ແລະປະຕິບັດຮັບໃຊ້ພຣະອົງ

5. ຜູ້ນຳຕ້ອງຮູ້ຈັກມອບໝາຍງານ (ຂໍ້ 21-22) ເຢດໂຣ ແນະນຳໂມເຊວ່າ ຖ້າແບ່ງງານໃຫ້ຄົນອື່ນຮັບ ຜິດຊອບ ຜົນທີ່ຕາມມາກໍຄືງານຂອງໂມເຊຈະເບົາບາງ ຜູ້ນຳຄົນອື່ນໆຈະມາຮ່ວມແບກພາຣະນຳ ແລ້ວປະຊາຊົນກໍຈະຢູ່ດີມີສຸກກັນໂດຍຖ້ວນໜ້າ.

ມື້ນຶ່ງ ຂ້າພະເຈົ້າໄດ້ອ່ານໜັງສືຫົວນຶ່ງທີ່ກ່າວເຖິງ "ຫລັກ ການເປັນຜູ້ນຳ" ໂດຍໃຊ້ 6D ມາເປັນຫລັກໃນການນຳສເນີ ຄື:

**Dream** - ຜູ້ນຳທີ່ດີຈະຕ້ອງມີຈິນຕະນາການ ມີຄວາມໃຝ່ຝັນ ມີຄວາມກະຕືລືລົ້ນ ມີຄວາມຄິດສ້າງສັນ ບໍ່ຢູ່ແບບງຽບໆ ແຕ່ຈະຊອກຫາວຽກທີ່ຈະເຮັດຢູ່ຕລອດເວລາ.

**Dig** - ຜູ້ນຳທີ່ດີຈະຕ້ອງສຶກສາຄົ້ນຄວ້າພຣະຄັມພີຢູ່ສເມີ ໃຊ້ເວລາໃນການອ່ານໜັງສື ຕຽມເທສນາສັ່ງສອນ ບໍ່ເປັນຄົນທີ່ມັກເອົາຂອງເກົ່າມາຫາກິນ ເທສນາແຕ່ເຣື່ອງເກົ່າໆ ຫລືບໍ່ກໍຄວ້າເອົາຂອງຄົນອື່ນມາ.

ຄັ້ງນຶ່ງ ຄນະກັມະການ (ຜູ້ນຳ) ຂອງຄຣິສຕະຈັກໃນບາງແຫ່ງ ໄດ້ມີການປຶກສາຫາລືທີ່ຈະຈັດໃຫ້ມີການປະຊຸມໃຫຍ່ປະຈຳປີ ມີການສເນີຊື່ນັກເທດທີ່ມີຊື່ສຽງຄົນນຶ່ງຂຶ້ນມາ ແຕ່ມີສຽງຄັດຄ້ານວ່າ "ອາຈານທ່ານນັ້ນ ເທສນາແບບຜິວເຜີນ ບໍ່ເຈາະເລິກໃນພຣະຄັມພີ ມັກເລົ່າແຕ່ປະສົບການທີ່ໄປເມືອງນອກເມືອງນາ ແລະມັກເທສນາເຣື່ອງຊ້ຳໆຊາກໆ"

**Discuss** - ຜູ້ນຳທີ່ດີຈະຕ້ອງມີຄວາມຄິດເຫັນເປັນຂອງຕົນເອງ ບໍ່ແມ່ນເປັນຄົນປະເພດເອົາແຕ່ພຍັກໜ້າງຶກຫົວ ພ້ອມກັບເວົ້າວ່າ "ແລ້ວແຕ່ທີ່ປະຊຸມ" ຫລື "ສຳລັບຂ້ອຍ ອັນໃດກໍໄດ້" ຜູ້ນຳຈະຕ້ອງນັ່ງລົງຄິດແລະເຮັດການບ້ານ (ວາງແຜນ) ແລະປຶກສາຫາລືກັບເພື່ອນຮ່ວມງານຫາແນວຮ່ວມ ບໍ່ເປັນຕົ້ນໄມ້ອ່ອນລູ່ລົມ ຄອຍແຕ່ເກງອົກເກງໃຈຕລອດ ແຕ່ໃນຂນະດຽວກັນ ເຂົາຈະບໍ່ໃຊ້ອຳນາດແບບຜະເດັດການ.

**Decide** - ມີການຕັດສິນໃຈຢ່າງເດັດຂາດ ຜູ້ນຳທີ່ມີປະສິດທິພາບຈະບໍ່ເປັນຄົນສອງຈິດສອງໃຈ ໂລເລເຈົ້າອາຣົມ ປ່ຽນແປງຢູ່ເລື້ອຍໆເມື່ອເຂົາຕັດສິນໃຈແລ້ວຈະຕ້ອງຮັບຜິດຊອບໃນຜົນທີ່ເກີດຂຶ້ນບໍ່ວ່າຈະອອກມາດີຫລືບໍ່ດີ.

**Design** - ຜູ້ນຳຕ້ອງມີການວາງແຜນງານຢ່າງຮອບຄອບແລະຮັດກຸມ.

**Do** - ເປັນຂັ້ນຕອນສຸດທ້າຍທີ່ສຳຄັນຫລາຍ ຄື ລົງມືປະຕິບັດ ຜູ້ນຳທີ່ດີບໍ່ພຽງແຕ່ເວົ້າເທົ່ານັ້ນ ແຕ່ຕ້ອງລົງມືເຮັດໃຫ້ສຳເຣັດຜົນເປັນຕົວຢ່າງດ້ວຍ.

ຂ້າພະເຈົ້າມີຫມູ່ຄົນນຶ່ງເປັນອາຈານທີ່ຊຳນານໃນການສອນວິຊາສິດຍາພິບານແລະເພີ້ມພູນຄຣິສຕະຈັກ ແຕ່ທ່ານບໍ່ເຄີຍເປັນສິດຍາພິບານ ຫລາຍປີຕໍ່ມາທ່ານໄດ້ລາອອກຈາກສະຖາບັນແລະທຸ່ມເທຊີວິດໃຫ້ກັບການກໍ່ຕັ້ງຄຣິສຕະຈັກໃນເມືອງໃຫຍ່ ມື້ນຶ່ງເມື່ອພວກເຮົາພົບຫນ້າກັນ ທ່ານກ່າວສຽງຄ່ອຍໆວ່າ "ບໍ່ຄິດວ່າການເປັນສິດຍາພິບານມັນຈະຍາກເຖິງຂະຫນາດນີ້ ບໍ່ເຫມືອນກັບທີ່ຂ້ອຍເຄີຍສອນເລີຍ"

ມີຄົນເວົ້າວ່າ "ຊາວອະເມຣິກັນມັກເວົ້າກ່ອນເຮັດ ສ່ວນຄົນຣັສເຊັຽມັກເຮັດກ່ອນເວົ້າ ແຕ່ຄົນລາວເຮົາມັກເວົ້າແລ້ວບໍ່ເຮັດ!"

ຂ້າພະເຈົ້າບໍ່ເຊື່ອວ່າຄຳເວົ້າປໂຍກສຸດທ້າຍນັ້ນເປັນຄວາມຈິງ ໂດຍສະເພາະແລ້ວ ຂ້າພະເຈົ້າ ມີຄວາມຫມັ້ນໃຈວ່າ ຜູ້ນຳຄຣິສຕຽນຄືຜູ້ທີ່ລົງມືປະຕິບັດໃຫ້ສຳເຣັດຜົນຕາມນ້ຳພຣະທັຍຂອງພຣະເຈົ້າຢ່າງແທ້ຈິງ

## 7. ຜູ້ນຳກັບເພື່ອນຮ່ວມງານ

ພຣະເຈົ້າຊົງຕ້ອງການອວຍພຣະພອນພຣະຣາຊກິດຂອງພຣະອົງຜ່ານທາງຜູ້ຮັບໃຊ້ທຸກຄົນ ດັ່ງນັ້ນງານຂອງພຣະເຈົ້າໃນຄຣິສຕະຈັກແລະອົງການຈະຈະເຣີນກ້າວຫນ້າໄດ້ ຈະຕ້ອງຂຶ້ນຢູ່ກັບບຸກຄົນຫລາຍຝ່າຍ ຊຶ່ງມີຄວາມຮ່ວມໄມ້ຮ່ວມມືແລະເປັນນ້ຳນຶ່ງໃຈດຽວກັນ.

ຄົນເຮົາມີລັກສນະພິເສດຢູ່ ສີ່ ຢ່າງ ຄື **ນຶ່ງ** ເປັນເອກາທິປະໄຕ ມັກລົງມືເຮັດຫຍັງພຽງຄົນດຽວ **ສອງ** ມັກເຮັດຫຍັງຕາມໃຈມັກຄຳນີ້ ຄືຫມາຍເຖິງຄວາມເປັນອິສຣະ ດ້ວຍເຫດນີ້ຈຶ່ງມີ ຄຳເວົ້າວ່າ "ເຮັດຫຍັງຕາມໃຈຄືຄົນທີ່ມີອິສຣະແທ້" **ສາມ** ເປັນຄົນມັກເກງໃຈ ເວລາມີບັນຫາຫຍັງບໍ່ຄ່ອຍກ້າຜະເຊີນຫນ້າ ຕ້ອງມີຄົນກາງຄ່ອຍໄກ່ເກັ່ຽ ແລະ**ສີ່** ຄົນເຮົາເກັບອາຣົມໄດ້ເກັ່ງ ສາມາດຍິ້ມໄດ້ທັງໆທີ່ກຳລັງໃຈຮ້າຍ ຖືຄະຕິວ່າ "ຍິ້ມໄວ້ກ່ອນ".

ໃນແບບທີ່ຄົນເຮົາມັກເຮັດຫຍັງຄົນດຽວນັ້ນ ເຮັດໃຫ້ເຮົາເຮັດສິ່ງໃດທີ່ເປັນທີມບໍ່ໄດ້ ຜູ້ນຳທີ່ເປັນນັກເທດ ແລະສິດຍາພິບານຫລາຍຄົນເຮັດດ່ຽວ ແລະປະສົບຄວາມສຳເຣັດຢ່າງມາກມາຍ ແຕ່ພໍເຮັດວຽກເປັນກຸ່ມກັບລົ້ມເຫລວຢ່າງບໍ່ເປັນທ່າ ຊຶ່ງມີໃຫ້ເຫັນເປັນປະຈັກພະຍານຢູ່ໃນວົງການຄຣິສຕຽນຕັ້ງແຕ່ອະດີດຈົນເຖິງທຸກວັນນີ້.

ສິດຍາພິບານຫລາຍຄົນເຮັດຫນ້າທີ່ເທສນາ ສອນພຣະຄັມພີ ເຮັດບັນຊີ ຢ້ຽມຢາມ ນຳກຸ່ມອະທິຖານ ກວາດໂບດ ຈັດຫນັງສືເພງເຮັດສວນ ຊື້ເຄື່ອງຕ້ອນຮັບແຂກ ແລະເຮັດສາຣະພັດຢ່າງດ້ວຍຕົນເອງ ດ້ວຍເຫດນີ້ເມື່ອໄດ້ຍິນຊື່ຂອງຄຣິສຕະຈັກ ກໍເຮັດໃຫ້ນຶກເຖິງໃບຫນ້າຂອງສິດຍາພິບານໄດ້ໃນທັນທີ ຈຶ່ງບໍ່ແປກທີ່ຜູ້ຄົນພາກັນເອີ້ນວ່າ "ຄຣິສຕະຈັກຂອງອາຈານ..." ແທນທີ່ຈະເອີ້ນວ່າຄຣິສຕະຈັກຂອງພຣະເຈົ້າ

ມີຄຳເຕືອນສຳລັບນັກເທດເຖິງອັນຕະຣາຍຢ່າງນຶ່ງໃນການຮັບໃຊ້ພຣະເຈົ້າ ຄື ການອວດຕົວຝ່າຍຈິດວິນຍານ ເມື່ອທ່ານຮູ້ຕົວວ່າຕົນເອງມີຕະລັນ (ຂອງປະທານ) ຫລາຍຢ່າງແລະເຮັດໄດ້ດີ ອັນນີ້ແຫລະ, ທີ່ຈະເຮັດໃຫ້ທ່ານລືມຕົວ ຫລົງຜິດຄິດໄປວ່າຕົນເອງມີຄວາມສາມາດຫລາຍກວ່າແລະເດັ່ນດັງກວ່າຄົນອື່ນ ພໍດົນນານໄປເຮັດໃຫ້ຄິດໄປວ່າ ຕົນເອງມີອຳນາດເທົ່າທຽມກັບພຣະເຈົ້າ ແລ້ວບໍ່ຍອມຮັບຟັງຄວາມຄິດເຫັນຂອງເພື່ອນຮ່ວມງານ ແລະຜູ້ໃຕ້ບັງຄັບບັນຊາ ຂໍໂຜດເຂົ້າໃຈວ່າທ່ານກໍເປັນພຽງຄົນບາບຄົນນຶ່ງເທົ່ານັ້ນທີ່ໄດ້ຮັບພຣະ ກະຣຸນາຈາກພຣະເຈົ້າແລະຊົງເອີ້ນມາໃຫ້ຮັບໃຊ້ພຣະອົງ.

ຖ້າວ່າຜູ້ນຳເກັ່ງກາດຕ້ອງມີອັນເປັນໄປ ຈະດ້ວຍເຫດການຢ່າງໃດ ຫລືເຖິງແກ່ຄວາມຕາຍ ຫລືພາດລົ້ມລົງໃນບາບກໍຍາກທີ່ຈະຫາຄົນອື່ນມາທົດແທນໄດ້ ເຮົາຕ້ອງຊ່ວຍກັນປ່ຽນຄ່ານິຍົມນີ້ເສັຽໃຫມ່. ຕາມຄຳສອນຂອງພຣະເຈົ້າຈະເຫັນວ່າພຣະເຢຊູຄຣິດບໍ່ໄດ້ທຳງານພຽງລຳພັງຄົນດຽວ ແຕ່ຊົງທຳງານເປັນທີມຮ່ວມກັບສາວົກທີ່ໃກ້ຊິດສິບສອງຄົນ ແລະຍັງມີສາວົກທີ່ຢູ່ນອກອີກເຈັດສິບຄົນ ໂປໂລກໍເຮັດໃນລັກສນະເຊັ່ນດຽວກັນ ເມື່ອອ່ານໃນກິຈການແລະຈົດຫມາຍຝາກ ເຮົາຈະພົບເຫັນຣາຍຊື່ເພື່ອນຮ່ວມງານຂອງໂປໂລຣຽງ ຍາວເປັນແຖວ (ເບິ່ງ ກລຊ 4:7-17 ແລະ ຟລມ 23-25)

ບໍ່ວ່າຈະເປັນອັຄທູດ ຜູ້ປະກາດພຣະທັມ ສິດຍາພິບານ ແລະອາຈານ ຕ່າງກໍມີຫນ້າທີ່ "ເພື່ອຈັດຕຽມໄພ່ພົນທັງຫລາຍຂອງພຣະອົງໃຫ້ເປັນຜູ້ຮັບໃຊ້ທີ່ເຫມາະສົມ ເພື່ອເສີມສ້າງພຣະກາຍຂອງພຣະຄຣິດໃຫ້ຈະເຣີນຂຶ້ນ (ອຟຊ 4:11-12)

ຈຸດປະສົງຂອງພຣະເຈົ້າສຳລັບຜູ້ນຳຄື "ສັ່ງສອນສະມາຊິກໃນຄຣິສຕະຈັກໃຫ້ມີຄວາມຮູ້ໃນພຣະຄັມພີແລະຮູ້ຈັກຄວາມຮັບຜິດຊອບ ຫາກໃນແວດວົງໃດບໍ່ມີຜູ້ນຳກ້າວຂຶ້ນມາສືບທອດເຈຕນາຣົມ ນັ້ນບໍ່ແມ່ນຄວາມຜິດຂອງສະມາຊິກ ແຕ່ເປັນຄວາມຜິດຂອງຜູ້ນຳຕ່າງຫາກທີ່ບໍ່ໄດ້ເຮັດຕາມນ້ຳພຣະທັຍຂອງພຣະເຈົ້າ"

**ການພັທນາເພື່ອນຮ່ວມງານ**

ຕໍ່ໄປນີ້ເປັນຂໍ້ສເນີ 5 ຢ່າງຊຶ່ງເປັນແນວທາງທີ່ຈະສ້າງ ແລະພັທນາການເປັນຜູ້ນຳ

**1. ຕ້ອງມີໃຈທ່ຽງທັມ** ຜູ້ນຳຝ່າຍຈິດວິນຍານຈະຕ້ອງເປັນຄົນທີ່ມີຈິດໃຈທ່ຽງຕົງ ຫນັກແຫນ້ນ ຫມັ້ນຄົງ ມີເຫດມີຜົນ ແລະເປີດໃຈອອກພ້ອມທີ່ຈະຮັບຟັງຄວາມຄິດເຫັນຂອງທຸກໆຝ່າຍ. ຜູ້ນຳທີ່ດີຈະຕ້ອງນັ່ງລົງໃຊ້ເວລາໃນການອະທິຖານທູນຂໍສະຕິປັນຍາທີ່ມາຈາກພຣະເຈົ້າ ເພື່ອຈະມີຄວາມສາມາດວາງແຜນເຮັດວຽກງານແລະແກ້ໄຂບັນຫາທີ່ເກີດຂຶ້ນໃຫ້ລຸລ່ວງໄປດ້ວຍດີ ຈຶ່ງເປັນຄົນທີ່ຄິດກ່ອນເວົ້າ ຢ່າເວົ້າກ່ອນຄິດ ຄິດຢູ່ສເມີວ່າເມື່ອເວົ້າຫຍັງໄປແລ້ວຈະຕ້ອງຮັກສາຄຳ ຫມັ້ນສັນຍານັ້ນໄວ້ໃຫ້ດີ. ຜູ້ນຳຝ່າຍຈິດວິນຍານຕ້ອງບໍ່ຟັງຄວາມຂ້າງດຽວ ຫລືມີໃຈລຳອຽງ ບໍ່ຫວັ່ນໄຫວກັບຂ່າວໂຄມລອຍ ແຕ່ຈົ່ງລະມັດ ລະວັງຄົນທີ່ມັກປະຈົບສໍພໍ (ເພື່ອຜົນປໂຍດ) ຈົ່ງຊອກຫາຫລັກຖານທີ່ເຊື່ອຖືໄດ້ເສັຽກ່ອນ ແລ້ວຄ່ອຍເຊື່ອແລະຕັດສິນ ວ່າກັນຕາມຈິງແລ້ວ ບໍ່ລູບຫນ້າປະຄົງ.

**2. ເປີດໃຈກວ້າງ** ຜູ້ນຳຫລືສິດຍາພິບານ ຈະຕ້ອງເປີດໃຈກວ້າງສຳລັບເພື່ອນຮ່ວມງານ ຈັດເວລາໄວ້ເປັນພິເສດສຳລັບການພົບປະສັງສັນດ້ວຍການຮັບປະທານອາຫານດ້ວຍກັນ ແລກປ່ຽນຄວາມຄິດເຫັນ ແບ່ງປັນປະສົບການ ຈາກນັ້ນກໍສຶກສາພຣະຄັມພີ ແລະອະທິ ຖານນຳກັນ. ງານຂອງພຣະເຈົ້າຈະຈະເຣີນກ້າວຫນ້າ ຖ້າກຸ່ມຜູ້ນຳ ມີນິມິດໃນທິດທາງດຽວກັນ ອາໂມສ ກ່າວວ່າ "ສອງຄົນທີ່ອອກເດີນທາງໄປນຳກັນໂດຍປາສຈາກການຕົກລົງກັນກ່ອນ ຈະໄດ້ຫລືບໍ່?" (ອມສ 3:3) ຜູ້ນຳທີ່ດີຈະຕ້ອງເປີດໃຈກວ້າງຮັບຟັງຄວາມຄິດເຫັນຂອງເພື່ອນຮ່ວມງານ ຢ່າຟ້າວໂຕ້ແຍ້ງຫລືຂັດຄໍ ເຖິງວ່າຂໍ້ ສເນີບາງຢ່າງຂອງເຂົານັ້ນ ທ່ານຈະບໍ່ເຫັນນຳຫລືບາງຢ່າງມັນລ້າສມັຍ ຟັ່ນເຟືອງ ແລະຂໍ້ສເນີບາງຢ່າງບໍ່ມີທາງເປັນໄປໄດ້ ຈົ່ງກັດລີ້ນຕົນເອງແລະນັ່ງງຽບຟັງເພື່ອນຮ່ວມງານເວົ້າໃຫ້ຈົບ ເພາະວ່າໃນຫລາຍໆຄວາມຄິດ ເປັນທີ່ມາຂອງຂໍ້ສລຸບທີ່ດີ. ຫາກມອງເບິ່ງໃນແວ່ນເຫັນໃບຫນ້າຂອງຄົນສັນໃດ ການຟັງຄົນເວົ້າກໍຈະເຫັນຄວາມຄິດຂອງຄົນສັນນັ້ນ!

ຜູ້ນຳຈະຕ້ອງບໍ່ສະແດງອາການດູຫມິ່ນ ຫລືມີທ່າທີບໍ່ແຍແສຕໍ່ຂໍ້ສເນີຂອງເພື່ອນຮ່ວມງານ ໂດຍກ່າວວ່າ "ຂ້ອຍເຄີຍເຮັດແບບນີ້ມາຫລາຍເທື່ອແລ້ວ ມັນບໍ່ໄດ້ຜົນດອກ ຢ່າເລີຍ...ເປືອງເງິນລ້າໆ" ຢ່າລືມວ່າງານດຽວກັນແຕ່ຕ່າງບຸກຄົນເຮັດອາດຈະເກີດຜົນດີກໍໄດ້ ເຫດສັນນັ້ນຢ່າດ່ວນປະຕິເສດຂໍ້ສເນີທັນທີ ແຕ່ຈົ່ງສນັບສນຸນ ຄວາມຄິດຂອງເຂົາວ່າ "ດີ ລອງເຮັດເບິ່ງ ຂ້ອຍຈະເອົາໃຈຊ່ອຍແລະອະທິຖານເພື່ອ" ແລະ "ຫາກມີຫຍັງໃຫ້ຂ້ອຍຊ່ອຍ ຂ້ອຍກໍຍິນດີ" ເພາະຖ້າງານນັ້ນລົ້ມເຫລວກໍບໍ່ເປັນຫຍັງ ແຕ່ຈະເປັນບົດຮຽນສຳລັບເພື່ອນຮ່ວມງານ ເພື່ອວ່າເຂົາຈະໄດ້ຊອກຫາວິທີການໃຫມ່ໆ ຕໍ່ໄປ.

ຜູ້ນຳຜູ້ນຶ່ງໄດ້ກ່າວເຖິງອົງປະກອບຂອງຜູ້ນຳວ່າ "ມີຄວາມເຄົາຣົບນັບຖື ມີປະສົບການ ມີອາຣົມທີ່ບໍ່ຫວັ່ນໄຫວ ຫລືປ່ຽນແປງງ່າຍ ມີທັດສະໃນການສ້າງມະນຸດສັມພັນ ມີຣະບຽບວິນັຍ ມີວິສັຍທັດ ມີຄວາມລື່ນໄຫລ ແລະມີເວລາທີ່ເຫມາະສົມ

ຂ້າພະເຈົ້າເຄີຍອ່ານເຣື່ອງຂອງບໍຣິສັດໃຫຍ່ແຫ່ງນຶ່ງທີ່ ມີເງິນທຶນຫມຸນວຽນແລະຫລັກຊັພນັບຫມື່ນລ້ານ ໄດ້ຈ້າງຜູ້ບໍຣິຫານມືໃຫມ່ເຂົ້າມາທຳງານ ປີທຳອິດບໍຣິສັດຂາດທຶນໄປນຶ່ງຮ້ອຍລ້ານກີບ ມີຄົນຖາມເຈົ້າ ຂອງບໍຣິສັດວ່າ ເປັນຫຍັງບໍ່ຍອມໄລ່ຜູ້ບໍຣິຫານອ່ອນຫັດອອກໄປເສັຽ ເຈົ້າຂອງບໍຣິສັດຕອບວ່າ "ເປັນຫຍັງກັນ ຂາດທຶນແຕ່ນຶ່ງຮ້ອຍລ້ານກີບເທົ່ານັ້ນ ໃຈຄໍຂອງເຈົ້າຈະໃຫ້ຂ້ອຍເຖິງກັບໄລ່ເຂົາອອກຢ່າງນັ້ນຫລື ເພາະກວ່າເງິນຈະຫມົດບໍຣິສັດຕ້ອງໃຊ້ເວລາອີກຕັ້ງເກົ້າພັນເກົ້າຮ້ອຍປີພຸ້ນ!"

ເນື່ອງດ້ວຍຮອບໆໂບດຂອງເຮົາເປັນຫມູ່ບ້ານຈຶ່ງມີເດັກນ້ອຍຫລາຍ ຄັ້ງນຶ່ງເພື່ອນຮ່ວມງານສເນີວ່າ "ເຮົາຫນ້າຈະມີການສອນເດັກນ້ອຍໃນຊ່ວງປິດພາກຣະດູຮ້ອນ" ຂ້າພະເຈົ້າຕອບທັນທີວ່າ "ດີແລ້ວ ທ່ານໄປຮ່າງໂຄງການມາ ແລ້ວສເນີຕໍ່ທີ່ປະຊຸມຜູ້ນຳຄຣິສຕະ ຈັກໃນເດືອນຫນ້າ" ແຕ່ຖ້າເປັນຜູ້ນຳທີ່ໃຈຄໍຄັບແຄບຢາກເອົາຫນ້າມັກຈະເວົ້າວ່າ "ຂ້ອຍຄິດໄວ້ດົນແລ້ວວ່າຈະເຮັດເຫມືອນກັນ ແຕ່ບໍ່ມີເວລາ" ເພື່ອນຮ່ວມງານກໍຈະໃຈຫໍ່ຫ່ຽວທັນທີ ຕໍ່ໄປເມື່ອມີຄວາມຄິດຫຍັງໃຫມ່ໆ ເຂົາກໍຈະບໍ່ກ້າສເນີອີກ ເພາະຢ້ານວ່າຈະຊ້ຳກັບຄວາມຄິດຂອງຜູ້ນຳ.

"ເຮົາຫນ້າຈະເຊີນຊາວບ້ານແຖວງນີ້ມາຮ່ວມປະຊຸມໃນຕອນຄ່ຳວັນອາທິດ" ສະມາຊິກຜູ້ມາໃຫມ່ສເນີຄວາມຄິດ ແຕ່ສິດຍາພິບານຕອບວ່າ "ເຈົ້າຫາກໍມາໃຫມ່ຍັງບໍ່ຮູ້ຫຍັງ ຂ້ອຍເຄີຍເຮັດມາແລ້ວ ຄົນແຖວນີ້ໃຈແຂງສິຕາຍ ຢ່າເຮັດເລີຍ ເສັຽເວລາລ້າໆ" ຕອບຢ່າງນີ້ບໍ່ຊ້າບໍ່ນານເພື່ອນຮ່ວມງານກໍເປີດຫມວກໂບກມືລາ.

**3. ເປີດປະຕູໃຫ້ກວ້າງ** ຜູ້ນຳຝ່າຍຈິດວິນຍານບໍ່ພຽງແຕ່ເປີດໃຈໃຫ້ກວ້າງເທົ່ານັ້ນ ແຕ່ຕ້ອງເປີດປະຕູ (ບ້ານ) ຫ້ອງໃຫ້ກວ້າງນຳ ເວລາທີ່ເພື່ອນຮ່ວມງານມີບັນຫາອັນໃດ ຈະໄດ້ເຂົ້າມາພົບປະຫາລືໄດ້ສະດວກແລະທັນທ່ວງທີ.

ສິດຍາພິບານບາງຄົນເຮັດຄືກັບ ຂ້າຣາຊການຊັ້ນຜູ້ໃຫຍ່ຫລືນັກການເມືອງທີ່ມີງານຣັດຕົວ ແລະຫຍຸ້ງຢູ່ຕລອດເວລາ ຜູ້ໃດຈະເຂົ້າພົບຕ້ອງໂທຣະສັບມານັດລ່ວງຫນ້າ ຫລືແຈ້ງໃຫ້ເລຂາຫນ້າຫ້ອງຮູ້ກ່ອນ ເພື່ອກຳນົດເວລາໃຫ້ເຂົ້າພົບ ພຣະເຢຊູຈະຄິດຢ່າງໃດ ຖ້າສະເດັດມາເຫັນຜູ້ຮັບໃຊ້ຂອງພຣະອົງນັ່ງຢູ່ເທິງໂຊຟານວມສູງໃຫຍ່ ໃນຫ້ອງປັບອາກາດເຢັນສະບາຍ ແລະຂຽນປ້າຍຫນ້າຫ້ອງວ່າ "ເວລາທຳງານ 8:00-5:00ມ" ໄປໃສມາໃສໃຊ້ຣົດຣາຄາແພງໆ ແລະມັກຮັບປະທານອາຫານຕາມໂຮງແຮມແບບຫລູຫລາມີລະດັບ.

ໃນຂນະທີ່ພຣະເຢຊູມີຊີວິດແບບຮຽບງ່າຍ ເດີນທາງ ດ້ວຍຕີນເປັນສ່ວນໃຫຍ່ ມີເສື້ອຜ້າບໍ່ຫລາຍຜືນ ພົບປະກັບຄົນຍາກຈົນ ຄົນຂໍທານ ແລະຄົນງ່ອຍ ທຸກໆ ມື້ໃຊ້ເວລາຢູ່ກັບຄົນທີ່ສັງຄົມລັງກຽດແລະຖືວ່າເປັນຄົນບາບ ແລະສາວົກແຕ່ລະ ຄົນຂອງພຣະອົງເປັນຊາວ ບ້ານທຳມະ

ດາງ ພຣະອົງທຳງານຈົນບໍ່ມີເວລາທີ່ຈະຮັບປະທານອາຫານ ແລະເມື່ອເຖິງເວລາພັກຜ່ອນກໍບໍ່ມີທີ່ຊຸກຫົວນອນ ດັ່ງນັ້ນ ຈົ່ງຮຽນແບບຂອງພຣະເຢຊູຄຣິດ (ເບິ່ງ 1 ກຣທ 11:1; ອຟຊ 5:1)

**4. ໃນຢາກເຫັນເພື່ອນຮ່ວມງານກ້າວຫນ້າ** ພຣະຄຳຂອງພຣະເຈົ້າສອນວ່າ "ຈົ່ງຍຶດຫມັ້ນໃນສິ່ງທີ່ດີ.... ຈົ່ງຖືວ່າຜູ້ອື່ນດີກວ່າຕົນ" (ຣມ 12:9- 10) ຄຣິສຕະຈັກປຽບເຫມືອນຂະບວນຣົດໄຟ ສິດຍາພິບານເປັນເຫມືອນຫົວຣົດຈັກ ສ່ວນສະມາຊິກເປັນເຫມືອນຂະບວນໂບກີ້ ງານຂອງພຣະເຈົ້າຈະກ້າວຫນ້າ ຫລືຢຸດ ຢູ່ບ່ອນເກົ່າ ຫລືຖອຍຫລັງ ກໍຂຶ້ນຢູ່ກັບຫົວຣົດຈັກທີ່ນຳຂະບວນ.

ຜູ້ນຳຝ່າຍຈິດວິນຍານຈະຕ້ອງຫມັ້ນແຈກແຈງໃຫ້ ເພື່ອນຮ່ວມງານຮັບຮູ້ຕລອດເວລາວ່າງານກຳລັງຄືບຫນ້າໄປເຖິງໃສ ເປັນຢ່າງໃດແດ່ ແລະສະແດງໃຫ້ເພື່ອນຮ່ວມງານຮັບຮູ້ນຳ ຜູ້ນຳມີຄວາມປາຖນາດີຫລາຍປານໃດທີ່ຈະເຫັນເຂົາກ້າວຫນ້າໄປສູ່ຄວາມສຳເຣັດຕ້ອງການໃຫ້ເຂົາກ້າວທັນເຫດການຢູ່ສເມີ ມີການປະຊຸມປຶກສາຫາລື ໃຫ້ຂໍ້ຄິດແລະຂໍ້ມູນໃຫມ່ໆແກ່ເພື່ອນຮ່ວມງານນຳ.

ເມື່ອເພື່ອນຮ່ວມງານຄົນໃດຕັ້ງໃຈ ປະຕິບັດງານດີ ມີຄວາມສຳເຣັດ ຜູ້ນຳຈະຕ້ອງສະແດງນ້ຳໃຈຂອງພຣະເຢຊູຄຣິດໂດຍການກ່າວຍົກຍ້ອງ ຊົມເຊີຍ ໃຫ້ກຳລັງໃຈແລະສນັບສນູນເຂົາໃຫ້ເຮັດຫນ້າທີ່ຕໍ່ໄປດ້ວຍຄວາມຊົມຊື່ນຍິນດີແລະຂອບພຣະຄຸນພຣະເຈົ້າ ເຫມືອນດັ່ງທີ່ພຣະເຈົ້າຊົງກ່າວວ່າ "ເພາະເຮົາຈະເວົ້າເຖິງສິ່ງທີ່ມີກຽດ ເພາະສິ່ງທີ່ຊອບຈະມາຈາກຣິມຝີປາກຂອງເຮົາ" (ສພສ 8:6)

ນອກຈາກຄຳຊົມເຊີຍຢ່າງຈິງໃຈແລ້ວ ຜູ້ນຳຄວນຈະມີຣາງວັນເພື່ອເປັນຂວັນແລະກຳລັງໃຈເລັກໆນ້ອຍໆໃຫ້ແກ່ເພື່ອນຮ່ວມງານ ອາດຈະໃຫ້ໃນໂອກາດຄົບຮອບວັນເກີດ ວັນຄຣິສມາສ ຫລືວັນປີໃຫມ່ ເປັນຕົ້ນ

ຢ່າວິຕົກວ່າເພື່ອນຮ່ວມງານຈະໄດ້ດີບໄດ້ດີເກີນຫນ້າເກີນຕາຕົນເອງ!

ຜູ້ຂຽນຫນັງສືເຣື່ອງ Laws of Leadership (ກົດຣະບຽບວ່າດ້ວຍຄວາມເປັນຜູ້ນຳ) ກ່າວວ່າ "ຜູ້ບໍຣິຫານທີ່ດີທີ່ສຸດ ຄືຄົນທີ່ໄປສັນຫາຄົນເກັ່ງໆມາເຮັດງານໃນຫນ້າທີ່ທີ່ຕົນເອງຕ້ອງການ ແລະຜູ້ບໍຣິຫານຕ້ອງມີໃຈແຂງພໍ ທີ່ຈະບໍ່ເຂົ້າໄປກ້າວກ່າຍໃນງານຂອງເຂົາຜູ້ນັ້ນ" ອີກຕອນນຶ່ງກ່າວວ່າ "ມີພຽງຜູ້ນຳທີ່ຫມັ້ນຄົງເທົ່ານັ້ນ ທີ່ ກ້າໃຫ້ອຳນາດຂອງຕົນເອງແກ່ຜູ້ອື່ນ"

ໃຫ້ເຮົາຄິດເຖິງຜູ້ນຳສອງຄົນຂອງຊົນຊາດອິສຣາເອນ ຄົນທຳອິດຄືກະສັດຊາອູນ ຊຶ່ງກ້າວຂຶ້ນມາເປັນຜູ້ນຳຢ່າງໄວ ແລະຈາກໄປຢ່າງໄວເຫມືອນກັນ ຊາອູນເປັນຄົນໃຈແຄບແລະມັກລະແວງ ເຂົາຈຶ່ງບໍ່ມີໂອກາດສ້າງຜູ້ນຳເລີຍຈັກຄົນດຽວ ກົງກັນຂ້າມກັບດາວິດ ທີ່ກ້າວຂຶ້ນເປັນຜູ້ນຳຢ່າງເຊື່ອງຊ້າແຕ່ວ່າຫມັ້ນຄົງ ດາວິດສ້າງຜູ້ນຳຂຶ້ນມາຢ່າງຫລວງຫລາຍ ໃນພຣະຄັມພີເອີ້ນວ່າ "ວີຣະບຸຣຸດຂອງດາວິດ" ຄົນເຫລົ່ານັ້ນກາຍເປັນທະຫານທີ່ກ້າຍອມພີຊີພເພື່ອຜູ້ນຳຂອງຕົນ (2 ຊມອ 23:8-39)

ຜູ້ນຳຝ່າຍຈິດວິນຍານຈະຕ້ອງສ້າງເພື່ອນຮ່ວມງານໃຫ້ເກັ່ງກວ່າຕົນ ຫລືຢ່າງຫນ້ອຍໃຫ້ເກັ່ງເທົ່າຕົນ!

**5. ໃຈຍອມຮັບຜິດ** ມະນຸດເຮົາທຸກຄົນມີໂອກາດຜິດພາດໄດ້ ບໍ່ວ່າຜູ້ນັ້ນຈະເປັນຜູ້ນຳລະດັບສູງ ສາສນາຈານ ສິດຍາພິບານ ຜູ້ປົກຄອງ ຫລືສະມາຊິກໃນຄຣິສຕະຈັກ ບັນຫາບໍ່ໄດ້ຢູ່ທີ່ວ່າຜິດຫລາຍຜິດຫນ້ອຍ ແຕ່ຢູ່ທີ່ວ່າເມື່ອຜິດແລ້ວຍອມຮັບຜິດຫລືບໍ!

ຜູ້ນຳບາງຄົນຍາກທີ່ຈະ**ຍອມເຮັດຜິດ** ແຕ່ບາງຄົນຍາກທີ່ຈະ**ຍອມຮັບຜິດ**!

ຜູ້ນຳປະເພດລອຍຕົວ ບໍ່ຍອມຮັບຜິດ ແຕ່ມັກປັດສວະໃຫ້ພົ້ນຕົວ ຫລືໂຍນກອງໃຫ້ຄົນອື່ນ ບໍ່ຮັບເອົາຄວາມຜິດພາດທີ່ເກີດຂຶ້ນ ມັກຈະໂທດນັ້ນໂທດນີ້ມົ້ວໄປຫມົດ ເພື່ອນຮ່ວມງານກໍເອືອມລະອາ ມີຜູ້ນຳອີກປະເພດນຶ່ງທີ່ຫນ້າສັດທາ ເຂົາເປັນຄົນຕົດດົນ ເມື່ອເຮັດຜິດຈະຮູ້ສຶກຕົວແລະກ່າວຄຳ "ຂໍໂທດ" ຫລື "ຂ້ອຍເສັຽໃຈ" ທັນທີ.

**ສິ່ງທີ່ຜູ້ນຳຄວນຫລີກລ່ຽງ**

ໃນຕອນທ້າຍຂອງບົດນີ້ຢາກຈະແນະນຳບາງສິ່ງທີ່ຜູ້ນຳຄວນຫລີກລ່ຽງເປັນຢ່າງຍິ່ງ ນັ້ນກໍຄື:

- ຢ່າໃຊ້ວິທີສັ່ງເພື່ອນຮ່ວມງານ ແຕ່ໃຊ້ວິທີ ຂໍຮ້ອງແທນ
- ຢ່າປະຕິເສດຄວາມຜິດຂອງຕົນເອງ
- ຢ່າຄອຍຈັບຜິດເພື່ອນຮ່ວມງານ
- ຢ່າໂຍນຄວາມຮັບຜິດຊອບໃຫ້ແກ່ຜູ້ອື່ນ
- ຢ່າເວົ້າໃສ່ຮ້າຍປ້າຍສີ ອັນເນື່ອງມາຈາກຄວາມອິດສາຣິສຍາ
- ຢ່າເບັ່ງທັບເພື່ອນຮ່ວມງານ ທຳນອງທີ່ວ່າ "ຂ້ອຍມີຄວາມຄິດດີກວ່າເຈົ້າດ້ວຍຊ້ຳໄປ"
- ຢ່າເວົ້າຂັດຂຶ້ນກາງຄັນ ແບບ "ທະລຸກາງປ້ອງ"
- ຢ່າຈັດງານຂອງຕົນໃຫ້ເບິ່ງຄືວ່າຫຍຸ້ງຢູ່ສເມີ ເພື່ອສະແດງເຖິງຄວາມສຳຄັນຂອງຕົນເອງ
- ຢ່າລຳອຽງ
- ຈົ່ງໄວ້ວາງໃຈເພື່ອນຮ່ວມງານ

- ຈົ່ງວາງຕົວໃຫ້ເຫມາະສົມ
- ຈົ່ງກ່າວຄໍາຊົມເຊີຍເພື່ອນຮ່ວມງານສເມີ
- ມອບຫນ້າທີ່ໃຫ້ເພື່ອນຮ່ວມງານແລ້ວຈົ່ງມອບອໍານາດການຕັດສິນໃຈໃຫ້ເຂົານໍາ
- ຈົ່ງກ້າຕັດສິນໃຈຢ່າງເດັດຂາດ
- ຈົ່ງຄິດທີ່ຈະສ້າງເພື່ອນຮ່ວມງານໃຫ້ເກັ່ງເທົ່າຕົນຫລືເກັ່ງກວ່າຕົນ

## 8. ຜູ້ນໍາກັບສັດຕຣີ

ໃນ 1 ພົງກະສັດ 10-11 ໄດ້ບອກເຖິງສາມສິ່ງທີ່ເຮັດໃຫ້ຜູ້ນໍາທີ່ຍອດຢ້ຽມເຊັ່ນກະສັດໂຊໂລໂມນຕ້ອງຫລົງເຈີ່ນໄປຈາກນໍ້າພຣະທັຍຂອງພຣະເຈົ້າ ຄື "**ອໍານາດ ເງິນຕຣາ ແລະນາຣີ**" ພຣະອົງຊົງຮັບສະຕິປັນຍາຈາກພຣະເຈົ້າ ແຕ່ກັບນໍາໄປເສີມສ້າງບາຣະມີດ້ວຍຣິດຣົບ ແລະກອງທະຫານທີ່ເຂັ້ມແຂງ ແລະສະສົມເງິນຕາ ຈົນເຖິງເງິນແລະທອງຄໍາກາຍເປັນຂອງສາມັນຂອງຄົນອິສຣາເອນ ມີເຕັມໄປຫມົດເຫມືອນກັບຂວດແກ້ວຕາມຖນົນ ແລ້ວສິ່ງທີ່ຕາມມາກໍຄື "ສັດຕຣີ" ກະສັດໂຊໂລໂມນຊົງມີຜູ້ຍິງເຖິງນຶ່ງພັນຄົນທີ່ເປັນມະເຫສີແລະນາງສນົມ.

ທ່ານຜູ້ນໍາທ່ານນຶ່ງເປັນຜູ້ຊ່ຽວຊານທາງດ້ານຄອບຄົວຄຣິສຕຽນໄດ້ກ່າວເຖິງ "ຄວາມຮັບຜິດຊອບຂອງສິດຍາພິບານຕໍ່ສັດຕຣີໃນຄຣິສຕະຈັກໄວ້ຢ່າງຫນ້າສົນໃຈໃນວາຣະສານ Leadership (ຄວາມເປັນຜູ້ນໍາ) ກ່ຽວກັບ "ກົດສິບສອງຂໍ້" ຊຶ່ງເປັນການເຕືອນໃຈຜູ້ນໍາຝ່າຍຈິດວິນຍານໃຫ້ລະມັດ ລະວັງໄວ້.

ໃນຂໍ້ທີສາມບອກວ່າ "ຂນະທີ່ສິດຍາພິບານໃຫ້ຄໍາປຶກສາແກ່ສັດຕຣີນັ້ນ ຄວນມີບຸກຄົນອື່ນຮ່ວມຢູ່ດ້ວຍ" ຜູ້ນໍາຄຣິສຕະຈັກຈະຕ້ອງຄິດຢູ່ສເມີວ່າ ຈຸດນີ້ລໍ່ແຫລມແລະມີອັນຕະລາຍຫລາຍ ເຮົາຮູ້ດີວ່າໃນອະດີດມີສິດຍາພິບານຫລາຍຄົນໄດ້ພາດພັ້ງລົ້ມລົງໃນບາບ ລ່ວງປະເວນີເພາະເຂົາປມາດຕໍ່ຍຸທອຸບາຍຂອງຊາຕານ

ຂໍ້ທີສີ່ບອກວ່າ "ສິດຍາພິບານຢ່າສອບຖາມຂໍ້ມູນທາງເພດຈາກສຕຣີທີ່ມາຂໍຄໍາປຶກສາ" ແນວໂນ້ມຂອງຜູ້ນໍາທີ່ລົ້ມລົງໃນຄວາມຜິດບາບເຣື່ອງເພດ ມາຈາກການສະແດງຄວາມເຫັນອົກເຫັນໃຈຢ່າງເລີຍເຖີດເຊັ່ນ ຄວາມໃກ້ຊິດ ການແຕະເນື້ອຕ້ອງຕົວ ແລະການຢູ່ໃນທີ່ລັບຕາຄົນສອງຕໍ່ສອງ ເປັນຕົ້ນ

ຂໍ້ທີຫົກບອກວ່າ "ສິດຍາພິບານບໍ່ຄວນໄປຢ້ຽມຢາມສຕຣີທີ່ເຮືອນຂອງນາງ ໂດຍທີ່ພັຣຍາຂອງສິດຍາພິບານບໍ່ໄດ້ໄປນໍາ" ມີອາຈານຫນຸ່ມໄຟແຮງແລະມີອະນາຄົດໄກຄົນນຶ່ງ ເຮັດງານດ້ານສື່ມວນຊົນຄຣິສຕຽນ ມັກໄປຢ້ຽມຢາມຍິງສາວທີ່ມີບັນຫາຊີວິດທີ່ເຮືອນເລື້ອຍໆ ທ່ຽວໄປທ່ຽວມາຢູ່ໄດ້ບໍ່ດົນ ມື້ນຶ່ງທັງສອງຄົນກໍຕົກລົງໃນກັບດັກແຫ່ງການລ່ວງປະເວນີ ເມື່ອເຣື່ອງນີ້ຖືກເປີດເຜີຍແລະຂ່າວແຜ່ອອກໄປ ເຮັດໃຫ້ພັຣຍາຂອງອາຈານຫນຸ່ມຄົນນັ້ນຮັບບໍ່ໄດ້ແລະຂົມຂື່ນໃຈຫນັກ ຈົນເຖິງຂັ້ນຢ່າຮ້າງຂາດຈາກກັນ.

ບົດຮຽນຈາກປະວັດສາດທຸກຍຸກທຸກສມັຍ ສິ່ງທີ່ເຮັດໃຫ້ຜູ້ນໍາຝ່າຍຈິດວິນຍານຕ້ອງເສັຽຜູ້ເສັຽຄົນຫລາຍທີ່ສຸດຄື "ອໍານາດ ເງິນຕຣາ ແລະນາຣີ". ຜູ້ນໍາຄົນໃດກໍຕາມທີ່ລົ້ມລົງໃນເຣື່ອງ ອໍານາດ ແລະເງິນຄໍາ ເມື່ອເວລາຜ່ານໄປບໍ່ນານ ຄົນກໍລືມເລືອນ (ບາງຄົນບອກວ່າ ຄົນເຮົາມີນິສັຍທີ່ດີຢ່າງນຶ່ງຄືລືມງ່າຍ) ແຕ່ຫາກຜູ້ໃດພາດລົ້ມລົງໃນຄວາມບາບແຫ່ງການລ່ວງປະເວນີ ກໍນັບວ່າເປັນການຍາກເຢັນແສນເຂັນເຫລືອກໍາລັງ ທີ່ຈະກັບມາຢືນຕົງຢູ່ຈຸດເດີມໄດ້ຢ່າງສງ່າຜ່າເຜີຍອີກ ເວົ້າຫຍັງໄປກໍບໍ່ມີຄົນເຊື່ອຖື ສອນພຣະຄັມພີກໍຕ້ອງເວັ້ນບາງຂໍ້ ເພາະມີໂສ້ເສັ້ນໃຫຍ່ຕິດຫລັງຢູ່.

ໃນບັນດາຜູ້ນໍາທີ່ລົ້ມໄປນີ້ ບາງຄົນສອນຜິດພ້ຽນໄປເລີຍວ່າບໍ່ໄດ້ເປັນເຣື່ອງເສັຽຫາຍຫຍັງທີ່ນັກເທດຈະມີພັຣຍານ້ອຍ ເພາະໃນ ພຣະຄັມພີ ກໍມີ ຕົວຢ່າງ ອັບຣາຮາມ ດາວິດ ໂຊໂລໂມນ ລ້ວນແຕ່ມີພັຣຍາຫລາຍຄົນດ້ວຍກັນ ແຕ່ກໍເຫັນວ່າພຣະເຈົ້າໄດ້ຊົງອວຍພຣະພອນເຂົາຢ່າງມາກມາຍ - ຜູ້ໃດກໍຕາມທີ່ສອນແບບນີ້ ຈົ່ງຮູ້ວ່າ ນີ້ເປັນການສອນຜິດ ເພາະຕີຄວາມຫມາຍພຣະຄັມ ພີແບບເຂົ້າຂ້າງຕົນເອງ!

ເທົ່າທີ່ສັງເກດພົບວ່າ ຜູ້ຍິງທີ່ມາຂໍຄໍາປຶກສາຈາກສິດຍາພິບານມັກຈະເປັນສາວແກ່ແລະແມ່ຫມ້າຍເປັນສ່ວນໃຫຍ່ ສ່ວນຜູ້ຍິງທີ່ແຕ່ງງານແລ້ວຈະມີບັນຫາຄອບຄົວ ເຊັ່ນ ຜົວບໍ່ເອົາໃຈໃສ່ ກັບບ້ານເດິກ ຫລື ແອບໄປມີບ້ານເລັກບ້ານນ້ອຍ ເຮັດໃຫ້ພວກນາງຮູ້ສຶກເຈັບປວດໃນຫົວໃຈຈຶ່ງຕ້ອງແລ່ນມາຂໍຄໍາປຶກສາຈາກສິດຍາພິບານ.

ນອກຈາກນັ້ນຍັງພົບອີກວ່າ ຜູ້ຍິງທີ່ມາຕິດອົກຕິດໃຈ ຜູ້ຮັບໃຊ້ຂອງພຣະເຈົ້ານັ້ນ ນາງບໍ່ໄດ້ຄໍານຶງເຖິງເຣື່ອງເງິນຄໍາຫລືຄວາມຫລໍ່ເຫລົາເອົາການ ແຕ່ມັກໃນລັກສນະນິສັຍໃຈຄໍ ທີ່ເຫັນວ່ານັກເທດເວົ້າຈາໄພເຣາະ ອ່ອນຫວານ ເອົາໃຈເກັ່ງ (ຮູ້ໃຈຜູ້ຍິງ) ແລະເຂົ້າອົກເຂົ້າໃຈບັນຫາຂອງນາງຢ່າງແທ້ຈິງ.

ສາເຫດສໍາຄັນທີ່ອາດເຮັດໃຫ້ຜູ້ນໍາຝ່າຍຈິດວິນຍານຕ້ອງລົ້ມລົງໃນຄວາມບາບແຫ່ງການລ່ວງປະເວນີ ມີສາມຢ່າງດ້ວຍກັນຄື:

1. ຂາດຄົນຕັກເຕືອນ

ຫນ້າສັງເກດວ່າ ນັກເທດຫລືສິດຍາພິບານທີ່ລົ້ມລົງໃນຄວາມຜິດບາບເຣື່ອງເພດນັ້ນບໍ່ແມ່ນຄົນຫນຸ່ມ ແຕ່ມັກຈະມີອາຍຸເລີຍເລກສາມຫລືສີ່ໄປແລ້ວ ເອີ້ນໄດ້ວ່າເປັນຜູ້ອະວຸໂສ ມີຄວາມຮູ້ທາງໂລກ ແລະທາງທັມ (ພຣະຄັມພີ) ດີ ມີຖານະຄວາມເປັນຢູ່ດີ ມີຄວາມສາມາດ ມີອາທະສິລປະ ແລະມີປະສົບການຜ່ານງານຮັບໃຊ້ພຣະເຈົ້າມາຢ່າງໂຊກໂຊນແລ້ວ.

ດັ່ງນັ້ນ ເມື່ອຄົນຂອງພຣະເຈົ້າເຫລົ່ານີ້ມີພຶດຕິກັມໂນ້ມອ່ຽງທີ່ຈະຕົກເປັນເຫຍື່ອຂອງຊາຕານໃນເຣື່ອງເພດ ຈຶ່ງບໍ່ມີ ຜູ້ໃດຊຶ່ງເປັນສະມາຊິກຫລືຜູ້ນຳລະດັບຮອງລົງມາກ້າເອີ່ຍປາກຕັກເຕືອນ ທັກທ້ວງຫລືໃຫ້ຄຳແນະນຳ ເພາະເຫັນວ່າເປັນຄຣູບາອາຈານທີ່ປະກອບດ້ວຍຄຸນວຸດທິແລະວັຍວຸດທິແລ້ວ ມີຄວາມຮູ້ໃນພຣະຄັມພີເປັນຢ່າງມາກ ຫນ້າຈະຮູ້ຕົວດີວ່າຕົນກຳລັງເຮັດຫຍັງຢູ່ ພວກເຂົາຈຶ່ງປ່ອຍເລີຍຕາມເລີຍ.

ເມື່ອກະສັດດາວິດຊຶ່ງປະທັບຢືນທີ່ດາດຟ້າຫລັງຄາພຣະຣາຊວັງແລະມອງເຫັນເຮືອນຮ່າງອັນງົດງາມຂອງນາງບັທເຊບາຂນະເປືອງຜ້າອາບນ້ຳ ກໍບັງເກີດຄວາມໃຄ່ ຈຶ່ງສັ່ງທະຫານຄົນສນິດໃຫ້ໄປນຳນາງມານອນດ້ວຍກັບຕົນໃນພຣະຣາຊວັງ (2 ຊມອ 11,12) ໃນເຫດການດັ່ງກ່າວນີ້ ບໍ່ມີຈັກຄົນດຽວທີ່ກ້າທັດທານ ຫລືຂັດໃຈກະສັດດາວິດ ຖ້າຫາກວ່າຜູ້ປະກາດພຣະຄຳນາທານ ຢູ່ທີ່ນັ້ນໃນເວລານັ້ນ ຄົງຈະຊ່ອຍດາວິດບໍ່ໃຫ້ຕົກລົງໄປໃນອຳນາດມືດແຫ່ງຕັນຫາຢ່າງແນ່ນອນ.

ໃນວົງການຄຣິສຕຽນປັດຈຸບັນ ບໍ່ງ່າຍອີກທີ່ຈະມີຜູ້ໃດອີກຄົນນຶ່ງທີ່ກ້າຫານເຫມືອນນາທານ ເພາະອາດຈະຖືກເຂົ້າໃຈຜິດວ່າ "ບັງອາດແຕະຕ້ອງຜູ້ຮັບໃຊ້ພຣະເຈົ້າ" ຫລືອິດສາຜູ້ນຳ ຫລືດູຖູກຜູ້ທີ່ໄດ້ຮັບການເຈີມໄວ້ຫລືມອງນັກເທດໃນແງ່ລົບແລະພຍາຍາມເລື່ອຍຂາຕັ່ງເປັນຕົ້ນ. ຖ້າເປັນຄົນທີ່ຢູ່ໃຕ້ບັງຄັບບັນຊານຳແລ້ວ ການຕັກເຕືອນຜູ້ນຳອາດຈະຫມາຍເຖິງຕ້ອງຫາງານໃຫມ່ກໍເປັນໄດ້.

2. ຄວາມເຍີ່ຫຍິ່ງຈອງຫອງ

ສາເຫດທີ່ຜູ້ນຳຝ່າຍຈິດວິນຍານ ທັງນັກເທດ ແລະສິດຍາພິບານຫລາຍຄົນ ດຳດິ່ງສູ່ຫ້ວງເຫວແຫ່ງຄວາມບາບໃນເຣື່ອງເພດ ເພາະຄວາມເຍີ່ຍິ່ງທະນົງຕົວ ຄິດວ່າຕົນເອງມີປະສົບການໃນການໃຫ້ຄຳປຶກສາແກ່ສຕຣີມາຫລາຍແລ້ວ ໂດຍສະເພາະເຂົາຄິດວ່າຕົນມີອາຍຸແລະຄວາມເປັນຜູ້ໃຫຍ່ພໍມີ ຫນ້າທີ່ຕຳແຫນ່ງອັນມີກຽດແລະຜູ້ຄົນນັບຫນ້າຖືຕາບໍ່ມີວັນທີ່ຈະເຮັດຜິດໃນເຣື່ອງຊູ້ສາວຢ່າງເດັດຂາດ ແຕ່ເຂົາຄິດຜິດ

ນີ້ເປັນເຣື່ອງຈິງທີ່ເກີດຂຶ້ນໃນແວດວົງຄຣິສຕຽນ ຄືມີຫມ້າຍສາວງົດງາມແລະຮັ່ງມີນາງນຶ່ງ ມັກໄປປຶກສາຫາລືເປັນປະຈຳກັບຜູ້ນຳສະຖາບັນຄຣິສຕຽນແຫ່ງນຶ່ງ ຊຶ່ງເປັນນັກເທດທີ່ມີຊື່ສຽງ ທັງສອງໃຊ້ເວລາເວົ້າຄຸຍກັນເທື່ອລະນານສອງນານ ບາງຄັ້ງລ່ວງເລີຍໄປຈົນເດິກດື່ນທ່ຽງຄືນ ມື້ນຶ່ງເພື່ອນຜູ້ນຳດ້ວຍກັນຈຶ່ງຕັກເຕືອນດ້ວຍຄວາມຫວັງດີ. ນັກເທດຄົນນັ້ນຕອບວ່າ "ເຈົ້າລອງຄິດເບິ່ງ ດູ! ຂ້ອຍມີຄອບຄົວແລ້ວ ມີເມັຽແລະລູກໆທີ່ຫນ້າຮັກ ແລະໃນຫນ້າທີ່ການງານຂ້ອຍກໍມີຕຳແຫນ່ງຢູ່ໃນລະດັບບໍຣິຫານສູງສຸດ ຂ້ອຍຮັບໃຊ້ພຣະເຈົ້າມາກວ່າຊາວກວ່າປີແລ້ວ ຂ້ອຍສູ້ອົດສາສ້າງຊື່ສຽງມານານຂະຫນາດນີ້ ບໍ່ມີວັນທີ່ຂ້ອຍຈະເອົາໄປແລກກັບຜູ້ຍິງຄົນນຶ່ງດອກ... ຂ້ອຍຍອມຕາຍເສັຽດີກວ່າ"

ແຕ່ພຣະຄັມພີເຕືອນຄົນປະເພດນີ້ວ່າ "ເຫດສະນັ້ນຄົນທີ່ຄິດວ່າຕົວເອງຫມັ້ນຄົງດີແລ້ວ ກໍຈົ່ງລະວັງໃຫ້ດີ ຢ້ານວ່າຈະລົ້ມລົງ"

(1 ກຣທ 10:12)

ພາບແຫ່ງຄວາມມືດຫມອງຈະບໍ່ເກີດຂຶ້ນໃນວົງການ ຄຣິສຕຽນ ຖ້າຜູ້ນຳຝ່າຍຈິດວິນຍານຈະຍອມຖ່ອມໃຈຮັບຟັງຄຳຕັກເຕືອນຂອງເພື່ອນຮ່ວມງານ ແລະຄົນດ້ອຍກວ່າທີ່ຢູ່ຄຽງຂ້າງ ພຣະຄຳຂອງພຣະເຈົ້າກ່າວວ່າ "ແຕ່ຈົ່ງເຕືອນສະຕິກັນແລະກັນທຸກວັນຕລອດເວລາທີ່ຍັງເອີ້ນໄດ້ວ່າ "ວັນນີ້" ເພື່ອວ່າຈະບໍ່ມີຜູ້ໃດໃນພວກທ່ານມີໃຈແຂງກະດ້າງໄປ ເພາະກົນອຸບາຍແຫ່ງຄວາມບາບ" (ຮຣ 3:13)

ມີຄຳແນະນຳທີ່ເປັນປໂຍດສຳລັບຜູ້ນຳຝ່າຍຈິດວິນຍານ ສິດຍາພິບານ ແລະອາຈານ ເພື່ອປ້ອງກັນບໍ່ໃຫ້ພາດລົ້ມລົງໃນຄວາມຜິດບາບຄື ສິ່ງ**ທຳອິດ** ບໍ່ຄວນໃຫ້ມີການໃຫ້ຄຳປຶກສາຫລືສອນພຣະຄັມພີລະຫວ່າງເພດກົງກັນຂ້າມສອງຕໍ່ສອງ ຫາກມີເຫດຈຳເປັນທີ່ລ່ຽງບໍ່ໄດ້ ຈະຕ້ອງມີສອງສາມຄົນຫລືມີພັຣຍາຂອງຜູ້ນຳນັ່ງຟັງຢູ່ນຳ **ສອງ** ຫ້ອງທຳງານຂອງຜູ້ນຳບໍ່ຄວນປິດຫລືໃສ່ກອນປະຕູ ຖ້າເປັນຫ້ອງກະຈົກທີ່ສາມາດເບິ່ງເຫັນໄດ້ຈາກພາຍນອກແຮ່ງດີ ແລະ **ສາມ** ຜູ້ນຳບໍ່ຄວນໄປໃສມາໃສກັບຜູ້ຍິງທີ່ບໍ່ແມ່ນພັຣຍາຂອງຕົນ ບໍ່ວ່າຈະເປັນນັ່ງຊ້ອນທ້າຍຣົດຈັກຫລືນັ່ງຣົດ ເພາະຄວາມເຂົ້າໃຈຜິດແລະການທົດລອງມັກຈະເກີດຂຶ້ນໄດ້ທຸກເວລາ.

3. ບັນຫາຄອບຄົວ

ທ່ານຍັງໄດ້ກ່າວຕໍ່ໄປອີກວ່າ "ບາງມື້ເຮົາຕື່ນນອນແລ້ວອາບນ້ຳແຕ່ງຕົວຈະໄປເຮັດວຽກ ສ່ວນພັຣຍາຢູ່ກັບເຮືອນລ້ຽງລູກ ຂນະທີ່ສາມີແຕ່ງຕົວໄປເຮັດວຽກນັ້ນ ພັຣຍາທີ່ນອນຢູ່ເທິງຕຽງກໍຕື່ນຂຶ້ນມາຫນ້າຕາຍັບຍູ່ຍີ່ ສາມີເຫັນພັຣຍາຕອນຕື່ນນອນໃຫມ່ໆອາດຈະຕົກໃຈແລ້ວຟ້າວແຕ່ງຕົວໄປເຮັດວຽກ ແລະເມື່ອໄປພົບຜູ້ຍິງໃນສຳນັກງານທີ່ແຕ່ງຕົວສວຍງາມ...ແລ້ວເຂົາກໍສລຸບວ່າ ຜູ້ຍິງຄົນນີ້ງາມກວ່າເມັຽຂອງເຮົາຫລາຍ ເບິ່ງເຫມືອນນາງຈະເຂົ້າໃຈຄວາມຕ້ອງການຂອງເຂົາທຸກຢ່າງຊຶ່ງຄວາມສນິດສນົມແບບນີ້ກໍເລີ່ມນຳໄປສູ່ຄວາມຜິດບາບໄດ້"

ມີຜູ້ນຳຢູ່ສອງປະເພດທີ່ອາດລົ້ມລົງໃນຄວາມບາບແຫ່ງການລ່ວງປະເວນີຄື:

**ປະເພດແຮກ** ບໍ່ສົນໃຈຄອບຄົວ ເຫມືອນກັບທີ່ລາຣ໌ຣີເວົ້າວ່າ "ເບິ່ງເຫັນເດີ່ນຫນ້າບ້ານຂອງຄົນອື່ນຂຽວກວ່າເດີ່ນບ້ານຂອງຕົນເອງ" ເຂົາປ່ອຍປະລະເລີຍບໍ່ເອົາໃຈໃສ່ພັຣຍາແລະລູກໆ ມັກຈະມີບັນຫາຂັດແຍ້ງກັນເລື້ອຍໆ ນິນຕຶງ ມິດງຽບ ແລະບໍ່ເວົ້າຈາກັນ ມີຄົນເຄີຍບອກຂ້າພະເຈົ້າວ່າ ສິດຍາພິບານຄຣິສຕະຈັກໃຫຍ່ແຫ່ງນຶ່ງມີບັນຫາກັບພັຣຍາເລື້ອຍໆ ຕ່າງຝ່າຍຕ່າງໃຊ້ຄວາມງຽບເປັນອາວຸດ ແລະໃນຄວາມຂັດແຍ້ງແຕ່ລະເທື່ອນັ້ນ ທັງສອງບໍ່ຍອມເວົ້າຈາກັນເປັນອາທິດ.

ອັນທີ່ຈິງ ຖ້າສືບສາວເລິກລົງໄປເຖິງຮາກເຫງົ້າກໍຈະພົບວ່າເປັນບັນຫາທາງດ້ານຈິດວິນຍານ ການບໍ່ຍອມຕິດສນິດກັບພຣະເຈົ້າໃນການອ່ານພຣະຄັມພີແລະອະທິຖານຮ່ວມກັນຫລືມີເປົ້າຫມາຍຊີວິດບໍ່ສອດຄ້ອງກັນ ຫມາຍຄວາມວ່າທັງຄູ່ບໍ່ໄດ້ຢູ່ໃນນ້ຳພຣະທັຍຂອງພຣະເຈົ້າ ຫລືບາງທີອາດຈະເປັນບັນຫາຄວາມສຳພັນທາງເພດ ເຊັ່ນ ສາມີຫລັ່ງໄວເກີນໄປເຮັດໃຫ້ພັຣຍາເກີດອາຣົມຄ້າງ ເກີດຄວາມເບື່ອຫນ່າຍແລະຣຳຄານ ຫລືເປັນໂຣກລົ້ມລຸກ ຫລືຝ່າຍພັຣຍາ ບໍ່ຕອບສນອງໂດຍການນອນທີ່ເຫມືອນທ່ອນໄມ້ເປັນຕົ້ນ.

ດ້ວຍເຫດນີ້ ສາມີຈຶ່ງຫາເຫດອອກຈາກເຮືອນ ດ້ວຍການຂະຫຍັ່ນຂັນແຂງໄປຢ້ຽມຢາມ ຫລືຮັບງານເທສນາຕາມບ່ອນຕ່າງໆຈົນບໍ່ໃຫ້ຕະລາງເວລາວ່າງ ເຂົາຈະຕະລອນໆໄປໂດຍບໍ່ມີເມັຽໄປນຳ ນີ້ເປັນກົນອຸບາຍຂອງຊາຕານ ທີ່ເຮັດໃຫ້ຜູ້ນຳມີຄວາມສຸກຢ່າງປລາດແລະມີໂອກາດພາດພັ້ງຢ່າງງ່າຍດາຍ.

**ປະເພດທີສອງ** ຜູ້ນຳທີ່ຊອບກ່າວຍົກຍ້ອງພັຣຍາແລະລູກໆຈົນເກີນພໍດີ ຂນະທີ່ຢູ່ເທິງທັມມາສ ຫລືເວົ້າຄຸຍກັບຄົນອື່ນກໍມັກຈະກ່າວຊົມເຊີຍພັຣຍາຢ່າງເລີເລີດວ່ານາງດີຢ່າງນັ້ນວິເສດຢ່າງນີ້ ແລະພຽບພ້ອມໄປດ້ວຍຄຸນສົມບັດຂອງກຸລສັດຕຣີ ທີ່ລາວເຮັດຢ່າງນີ້ກໍເພາະຕ້ອງການອຳພາງຄວາມຈິງ ເພື່ອໃຫ້ພັຣຍາຫລົງເຊື່ອແລະຕາຍໃຈວ່າ ສາມີຂອງນາງນັ້ນແສນຊື່ສັດເຫລືອເກີນ ແລ້ວເຂົາກໍຫາໂອກາດມີຄວາມສຳພັນກັບເລຂາສ່ວນຕົວແລະສັດຕຣີອື່ນໆຕາມໃຈມັກ.

ຫນ້າແປກທີ່ວ່າຜູ້ນຳປະເພດນີ້ບໍ່ຢ້ານການລົ້ມລົງໃນບາບ ເພາະຮູ້ສຶກດີວ່າຄຣິສຕຽນໃຈອ່ອນຢູ່ແລ້ວ ເມື່ອຍອມສາຣະພາບຄວາມຜິດຢ່າງໃດກໍໃຫ້ອະພັຍຢູ່ແລ້ວ ເພາະພຣະເຢຊູບອກວ່າໃຫ້ຍົກໂທດດ້ວຍເຈັດຄູນດ້ວຍເຈັດສິບຄັ້ງ ເຊັ່ນ ເມື່ອນັກເທດຊື່ດັງຊາວອະເມຣິກັນ ຈິມມີ່ສເວທກາຣ໌ທ ເຮັດບາບໃນເຣື່ອງເງິນ ແລະສັດຕຣີ ຄຣິສຕຽນກຸ່ມນຶ່ງຍັງກ່າວວ່າ "ຖ້າຈິມມີ່ເຮັດບາບອີກ ພວກເຮົາກໍຍັງສນັບສນຸນເຂົາຕໍ່ໄປ"

ຜູ້ຮັບໃຊ້ຂອງພຣະເຈົ້າທຸກຄົນຕ້ອງເພິ່ງພາອາສັຍຣິດອຳນາດແຫ່ງພຣະວິນຍານບໍຣິສຸດ ແລະຂໍພຣະອົງໃຫ້ເຮົາມີຈິດໃຈແຂງແຮງເຫມືອນໂຢເຊັບ ທີ່ກ້າປະຕິເສດການຍົ້ວຍວນຂອງນາຍສາວ ໃນຂນະທີ່ຢູ່ໃນຫ້ອງນອນສອງຕໍ່ສອງວ່າ "ຂ້າພະເຈົ້າຈະທຳຄວາມຜິດໃຫຍ່ຫລວງນີ້ອັນເປັນບາບຕໍ່ພຣະເຈົ້າຢ່າງໃດໄດ້" (ປຖກ 39:9)

ຜູ້ນຳຝ່າຍຈິດວິນຍານຕ້ອງອະທິຖານຕໍ່ພຣະເຈົ້າວ່າ ຢ່າໃຫ້ຕົນເອງເປັນເຫມືອນເອຊາວ ທີ່ເຫັນເຂົ້າຫນົມຖົ່ວແດງພຽງຖ້ວຍດຽວມີຄ່າຫລາຍກວ່າສິດບຸດຫົວປີ ພຣະຄັມພີເຕືອນວ່າ "ຢ້ານວ່າມີຄົນຂາດສິນທັມຫລືຄົນປມາດຕໍ່ສິ່ງສັກສິດ ເຫມືອນເອຊາວ ຜູ້ໄດ້ເອົາສິດຂອງບຸດກົກນັ້ນແລກກັບອາຫານຄາບດຽວ" (ຮຮ 12:16)

ແມ້ວ່າຕໍ່ມາພາຍຫລັງ ເອຊາວໄດ້ເສາະສແວງຫາພຣະພອນຂອງພຣະເຈົ້າດ້ວຍນ້ຳຕາໄຫລ ແຕ່ບໍ່ບໍ່ໄດ້ພົບພໍ້ອີກເລີຍ

ຜູ້ນຳຝ່າຍຈິດວິນຍານຈະຕ້ອງລະມັດລະວັງໃນການ ດຳເນີນຊີວິດໃຫ້ດີ ເຫມືອນທີ່ມີຄົນເວົ້າວ່າ "ເຮົາບໍ່ອາດຫ້າມນົກບໍ່ໃຫ້ບິນຂ້າມຫົວເຮົາໄດ້ ແຕ່ເຮົາສາມາດຄອຍຫລີບບໍ່ໃຫ້ນົກຂີ້ໃສ່ຫົວເຮົາໄດ້"

## 9. ຜູ້ນຳກັບຄອບຄົວ

"ຕອນແຮກຜູ້ຊາຍຈະແຕ່ງງານ ພໍອາຍຸເລີຍເລກ ສີ່ໄປແລ້ວຈະແຕ່ງກັບງານ!"

ປີແຮກຈະເອີ້ນວ່າ "ຮັນນີ" ແຕ່ສາມປີຕໍ່ມາກາຍເປັນ "ຫັນຫນີ"

ມີເຣື່ອງກ່າວກັນວ່າ ມີຊາຍຄົນນຶ່ງມັກເອົາຮູບພັຣຍາໄວ້ໃນກະເປົ໋າເງິນ ມື້ນຶ່ງພັຣຍາຂອງເຂົາກໍຖາມວ່າ "ເປັນຫຍັງອ້າຍມັກເອົາຮູບນ້ອງໄວ້ໃນກະເປົ໋າເງິນ"

ສາມີຕອບວ່າ "ເມື່ອເວລາມີບັນຫາຫນັກອົກຫນັກໃຈອ້າຍຈະເອົາຮູບຂອງນ້ອງຂຶ້ນມາເບິ່ງຫັ້ນແລ້ວ"

"ແລ້ວມັນເປັນຫຍັງລະ"

"ເມື່ອເບິ່ງຮູບແລ້ວ ອ້າຍກໍຈະບອກກັບຕົວເອງວ່າ ບັນຫາອື່ນຈະຫນັກຫນາສາຫັດກວ່າບັນຫານີ້ໄດ້ຢ່າງໃດ ແລ້ວມັນກໍເຮັດໃຫ້ອ້າຍມີກຳລັງໃຈສູ້ຕໍ່ໄປ"

"!!!"

ມີການວິເຄາະພົບວ່າຄົນສ່ວນຫລາຍທີ່ "ບ້າງານ" ມັກຈະປະສົບຄວາມລົ້ມເຫລວໃນຊີວິດຄອບຄົວ ຜູ້ນຳຝ່າຍຈິດວິນຍານຈະມາເຖິງຈຸດນຶ່ງຊຶ່ງນັບວ່າສຳຄັນຫລາຍໃນຊີວິດ ທີ່ຈະເລືອກເອົາສິ່ງໃດດີລະຫວ່າງງານກັບຄອບຄົວ ບາງຄົນຄິດວ່າຫລາຍຄັ້ງທີ່ເຂົາຕ້ອງພາດໂອກາດດີໆໃນການຮັບໃຊ້ພຣະເຈົ້າ ເພາະເຫດຄອບຄົວເຂົ້າມາຂັດຂວາງ.

ດັ່ງນັ້ນ ຜູ້ນຳຫລາຍຄົນທີ່ບໍ່ຢາກໃຫ້ເຮືອນຫຍຸ້ງຈຶ່ງເລືອກທີ່ຈະສລະຖິ້ມບາງສິ່ງ ຊຶ່ງເປັນຕົວຜັກດັນໃຫ້ຊີວິດຂອງເຂົາກ້າວໜ້າແລະມີຊື່ສຽງ ແລ້ວຫັນມາຍຶດເອົາຄອບຄົວໄວ້ເປັນອັນດັບແຮກ.

ພອລ ເອ. ລີ ອີແວນສ໌ ຜູ້ຊ່ຽວຊານທາງດ້ານການສຶກສາໄດ້ກ່າວເຖິງຜູ້ນຳລະດັບບໍຣິຫານວ່າ "ນີ້ເປັນເຣື່ອງທີ່ໜັກໃຈສຳລັບນັກບໍຣິຫານສເມີ ບາງຄົນກໍວ່າຄອບຄົວສຳຄັນທີ່ສຸດ ແຕ່ເຂົາກໍຍັງຄິດວ່າເຮັດວຽກເທົ່ານັ້ນທີ່ເຮັດໃຫ້ເຂົາພໍໃຈ ດ້ວຍເຫດນີ້ຈຶ່ງບໍ່ຮູ້ວ່າຈະເລືອກອັນໃດດີລະຫວ່າງງານກັບຄອບຄົວ!"

ບໍ່ພຽງສະແດງຄວາມຄິດເຫັນເທົ່ານັ້ນ ແຕ່ພອລ ຍັງໄດ້ທຳການສຳລວດອີກ ໂດຍຄັດເລືອກ ຜູ້ນຳລະດັບສູງມາສີ່ຮ້ອຍຫ້າສິບຄົນ ແລ້ວສອບຖາມໃຫ້ໄດ້ຂໍ້ຄວາມຈິງວ່າ ຜູ້ນຳທີ່ມີອາຍຸລະຫວ່າງໃດ ແລະເຂົາເລືອກຫຍັງລະຫວ່າງງານກັບຄອບຄົວ ຜົນອອກມາດັ່ງນີ້:

**ກຸ່ມທີນຶ່ງ ຜູ້ນຳທີ່ມີອາຍຸລະຫວ່າງ 27-34 ປີ**

ຜູ້ນຳເຫລົ່ານີ້ສ່ວນຫລາຍຈະໃຫ້ຄວາມສຳຄັນກັບວຽກງານຫລາຍກວ່າຄອບຄົວ ພວກເຂົາຈະຕັ້ງ ເປົ້າມຸ່ງໜ້າໄປສູ່ຄວາມສຳເຣັດແຕ່ພຽງຢ່າງດຽວ ຈົນເຖິງລືມຄິດເຖິງພັຣຍາແລະລູກໆ ທີ່ລໍຄອຍຢູ່ເຮືອນ ເມື່ອເຂົາກັບຄືນມາເຖິງບ້ານກໍອ່ອນເພັຽ ພໍພັຣຍາເວົ້າ ຜິດຫູໜ້ອຍນຶ່ງອາຣົມຈະບູດບຶ້ງຂຶ້ນມາທັນທີ ຈຶ່ງເກີດມີປາກສຽງກັນ ບາງຄູ່ຄວບຄຸມອາຣົມບໍ່ຢູ່ຈົນເຖິງຂັ້ນລົງມືລົງໄມ້ກັນ ດ້ວຍເຫດນີ້ຄອບຄົວຈຶ່ງຫາຄວາມສຸກບໍ່ໄດ້ ທັງທີ່ເຂົາຮູ້ດີວ່າມັນສືບເນື່ອງມາຈາກງານເປັນຕົ້ນເຫດ ແຕ່ແກ້ໄຂຫຍັງບໍ່ໄດ້ ເພາະວ່າເຂົາ "ບ້າງານ" ເສັຽແລ້ວ.

ເມື່ອມີບັນຫາເກີດຂຶ້ນໃນສະຖານະການເຊັ່ນນີ້ ຜູ້ຍິງບາງຄົນກໍມັກຈະໃຊ້ເຣື່ອງເພດເປັນເຄື່ອງຕໍ່ຮອງ ແລະຜູ້ຊາຍກໍຈັດໄມ້ຕາຍມາສູ້ຄືໃຊ້ເງິນເປັນເຄື່ອງຕໍ່ຮອງເຊັ່ນດຽວກັນ!

ໜຸ່ມສາວຄູ່ນຶ່ງຫາກໍ່ມາຈາກຮັນນີມູນ ເວລາແຫ່ງການດື່ມນ້ຳເຜິ້ງພຣະຈັນຜ່ານພົ້ນໄປຢ່າງທຸລັກ ທຸເລ. ຄໍ່າວັນນຶ່ງ ສາມີກໍເວົ້າຂຶ້ນວ່າ "ນ້ອງຄືສິບໍ່ໃຈຮ້າຍເນາະ ຖ້າອ້າຍຈະເວົ້າເຖິງຄວາມບົກພ່ອງຂອງນ້ອງ"

"ບໍ່ເປັນຫຍັງດອກເວົ້າໂລດ" ພັຣຍາຟ້າວຕອບ "ເພາະຄວາມບົກພ່ອງຢ່າງນີ້ແຫລະ ທີ່ເຮັດໃຫ້ນ້ອງຫາຜົວທີ່ດີກວ່ານີ້ບໍ່ໄດ້"

"!!!"

**ກຸ່ມທີສອງ ຜູ້ນຳທີ່ມີອາຍຸລະຫວ່າງ 35-42 ປີ**

ພໍພວກເຂົາມີອາຍຸລ່ວງເລີຍມາເຖິງລະດັບນີ້ແລ້ວ ສ່ວນຫລາຍຜູ້ນຳຈະເລີ້ມມອງເຫັນຄວາມສຳຄັນຂອງຄອບຄົວ ແລະຫາໂອກາດທີ່ຈະມີຄວາມສຸກຢູ່ກັບພັຣຍາແລະລູກຂຶ້ນມາ ເຂົາຈະລົດວຽກງານລົງແລະເພີ້ມຄວາມສົນໃຈໄປຫາຄອບຄົວຫລາຍຂຶ້ນ ເຊັ່ນເມື່ອບ້ານແຕ່ຫົວຄໍ່າວັນພັກກໍພາຄອບຄົວໄປພັກຜ່ອນຢ່ອນໃຈ ຫລືຢູ່ບ້ານເຮັດກິນແຊບໆນຳກັນ ເຂົາເລີ້ມຄິດວ່າ ຄົນເຮົາຈະເອົາຫຍັງກັນຫລາຍ ຊີວິດເທົ່ານີ້ກໍມີຄວາມສຸກຖົມໄປແລ້ວ.

**ກຸ່ມທີສາມ ຜູ້ນຳທີ່ມີອາຍຸ 43 ຂຶ້ນໄປ**

ເມື່ອອາຍຸຂອງຜູ້ນຳເຂົ້າສູ່ວັຍນີ້ ພວກເຂົາເລີ້ມທີ່ຈະໃຫ້ຄວາມສົນໃຈແກ່ຄົນອື່ນຫລາຍຂຶ້ນ "ເລືອກງານທີ່ຈະເຮັດ" (ກົງກັນຂ້າມກັບເມື່ອກ່ອນ ຊຶ່ງທຳງານບໍ່ເລືອກ) ເວລາທີ່ເຂົາຈະເຮັດສິ່ງໃດສິ່ງນຶ່ງ ຕ້ອງຄິດແລ້ວຄິດອີກວ່າ ມັນຈະຄຸ້ມກັບເວລາແລະແຮງງານທີ່ເສັຽໄປບໍ ງານບາງຢ່າງເຂົາອາດຈະບໍ່ເຮັດ ເພາະມີປໂຍດໜ້ອຍເປືອງສມອງແລະເປືອງແຮງງານນຳ.

ຖ້າຜູ້ນຳຝ່າຍຈິດວິນຍານມີອາຍຸຫລາຍຂຶ້ນ ຈະເຮັດວຽກອັນໃດອັນນຶ່ງ ເຂົາຈະເຮັດໄປພຽງເພີ້ມຄວາມພໍໃຈທີ່ຈະຖວາຍກຽດແດ່ພຣະເຈົ້າຫລາຍກວ່າຕ້ອງ ການເງິນຄຳແລະຄວາມສຳເຣັດ.

ເມື່ອໂປໂລຂຽນຈົດໝາຍໄປເຖິງຕີໂມທຽວ ຊຶ່ງຮັບໜ້າທີ່ສິດຍາພິບານຂອງຄຣິສຕະຈັກເມືອງເອເຟໂຊ (1 ຕມທ 3:2-4) ໂປໂລໄດ້ເວົ້າເຖິງລັກສນະຂອງຜູ້ນຳທີ່ດີໄວ້ຫລາຍປະການ ມີຢູ່ສອງປະການທີ່ກ່າວເຖິງຜູ້ນຳຄອບຄົວໂດຍຕົງຄື:

**1) ມີຄວາມສັດຊື່**

ຜູ້ນຳຝ່າຍຈິດວິນຍານຈະຕ້ອງເປັນຄົນທີ່ຊື່ສັດຕໍ່ພຣະເຈົ້າແລະຕໍ່ຊີວິດຂອງຕົນເອງ "ຜູ້ປົກຄອງດູແລນັ້ນ.. ຈະຕ້ອງເປັນສາມີຂອງຍິງຄົນດຽວ" ຜູ້ນຳບາງຄົນນັ້ນບໍ່ໄດ້ນອກໃຈພັຣຍາຂອງເຂົາດອກ ແຕ່ເຂົາບໍ່ຄ່ອຍພໍໃຈແລະຂາດການເອົາໃຈໃສ່ດູແລຄອບຄົວຂອງຕົນເອງ ອັນນັ້ນ

ເທົ່າກັບວ່າເຂົາບໍ່ຊື່ສັດຕໍ່ຄູ່ຊີວິດຂອງຕົນເອງດ້ວຍ ເພາະຕອນທີ່ແຕ່ງງານກັນ ເຂົາໄດ້ໃຫ້ສັນຍາຕໍ່ຫນ້າສາສນາຈານຜູ້ປະກອບພິທີວ່າ "ຈະຮັກຈະຊື່ສັດ ແລະທະນຸຖນອມນາງໄວ້..."

**2) ມີອຳນາດໃນຖານະສາມີແລະພໍ່**

ຜູ້ຍິງຄົນນຶ່ງໄດ້ໃຫ້ຄຳຈຳກັດຄວາມຂອງຜູ້ຊາຍໄວ້ວ່າ "ຄົນຕົວໃຫຍ່ ລ່ຳສັນ ມັກເອົາແຕ່ໃຈຕົນເອງ ນິສັຍກ້າວຮ້າວ ຫລົງຕົວເອງ ບໍ່ຍອມຟັງສຽງຂອງຜູ້ໃດ ຄ່ອງແຄ່ວ ມີເລືອດນັກສູ້ ມັກຫລິ້ນເຕະບານແລະລ່າເນື້ອ ເຮື່ອງເທິງຕຽງກໍບໍ່ຂີ້ລ້າຍປານໃດ"

ຜູ້ນຳຝ່າຍຈິດວິນຍານມີອຳນາດໃນຖານະສາມີແລະພໍ່ "ຕ້ອງເປັນຄົນຄອບຄອງບ້ານເຮືອນຂອງຕົນໄດ້ດີ ອົບຮົມ ລູກຊາຍລູກຍິງຂອງຕົນໃຫ້ຢູ່ໃນໂອວາດແລະມີໃຈນອບນ້ອມ" (ຂໍ້ 4) ໂປໂລໄດ້ໃຫ້ເຫດຜົນຊຶ່ງກ່ຽວຂ້ອງກັບສັງຄົມຄຣິສຕຽນວ່າ "ເພາະວ່າຖ້າຊາຍຜູ້ໃດບໍ່ຮູ້ຈັກຄອບຄອງບ້ານ ເຮືອນຂອງຕົນ ຜູ້ນັ້ນຈະດູແລຄຣິສຕະຈັກຂອງພຣະເຈົ້າໄດ້ຢ່າງໃດ" (ຂໍ້ 5)

ພຣະຄັມພີໄດ້ບອກເຖິງຄອບຄົວທີ່ມີຄວາມສຸກດັ່ງນີ້:

ຜູ້ເປັນສາມີ - "ຝ່າຍສາມີ, ຈົ່ງຮັກພັຣຍາຂອງຕົນ ເຫມືອນດັ່ງພຣະຄຣິດໄດ້ຊົງຮັກຄຣິສຕະຈັກ ແລະຊົງສລະພຣະອົງເອງເພື່ອຄຣິສຕະຈັກ" (ອຟຊ 5:25)

ຜູ້ເປັນພັຣຍາ - "ຝ່າຍພັຣຍາ, ຈົ່ງຍອມຢູ່ໃຕ້ບັງຄັບສາມີຂອງຕົນ ເຫມືອນຍອມຟັງອົງພຣະຜູ້ເປັນເຈົ້າ" (ອຟຊ 5:22)

ທັງສາມີແລະພັຣຍາ - "ຈົ່ງຍອມຟັງຊຶ່ງກັນແລະກັນດ້ວຍຄວາມຢຳເກງໃນພຣະຄຣິດ" (ອຟຊ 5:21)

ຜູ້ເປັນບຸດ - "ຝ່າຍບຸດທັງຫລາຍ, ຈົ່ງນົບນ້ອມເຊື່ອຟັງບິດາມານດາຂອງຕົນ ເພາະເຫັນແກ່ອົງພຣະຜູ້ເປັນເຈົ້າ ເພາະເຮັດແນວນັ້ນເປັນການຖືກຕ້ອງ" (ອຟຊ 6:1)

ຜູ້ນຳຝ່າຍຈິດວິນຍານຄົນໃດທີ່ຮັກລູກຮັກພັຣຍາ ມຸ້ງມາດປາຖນາໃຫ້ຄອບຄົວມີຄວາມສຸກ ແລະໄດ້ຮັບພຣະພອນຈາກພຣະເຈົ້າ ລາວຄວນຈະໃຫ້ຄວາມສຳຄັນແກ່ຄອບຄົວຫລາຍກວ່າງານເພາະພາດງານແລ້ວຍັງພໍຫາໃຫມ່ໄດ້ ແຕ່ຖ້າຄອບຄົວພັງຍອມເກີດຄວາມເສັຽຫາຍຢ່າງຫນັກ ບາງທີຫນັກກວ່າເກີນທີ່ຈະຢຽວຢາຮັກສາໃຫ້ກັບຄືນສູ່ສະພາບເດີມໄດ້

ດັ່ງນັ້ນ ຜູ້ນຳທີ່ສລາດຈະຍິນດີປະຕິເສດງານບາງຢ່າງ ຫລືຕຳແຫນ່ງທີ່ສູງຂຶ້ນໄປ ຫາກວ່າງານນັ້ນຫລືຕຳແຫນ່ງ ດັ່ງກ່າວມາແຍ່ງເອົາເວລາຂອງຄອບຄົວໄປ ເຖິງວ່າຈະມີໂອກາດມີຣາຍໄດ້ເພີ້ມຂຶ້ນອີກເທົ່າຕົວກໍຕາມ.

ຜູ້ນຳຝ່າຍຈິດວິນຍານຈະຮັກສາຄອບຄົວໃຫ້ດຳຣົງຢູ່ແລະເປັນພຣະພອນໄດ້ຢ່າງໃດ ມີຂໍ້ສເນີສີ່ປະການ ຄື:

**1. ຈັດຕາຣາງເວລາສຳລັບຄອບຄົວ**

ຜູ້ນຳທີ່ປະສົບຄວາມສຳເຣັດໃນຫນ້າທີ່ການງານຄວນຮູ້ດີວ່າ ໃນແງ່ທຸຣະກິດນັ້ນການຈັດຕາຣາງເວລາ ມີຄວາມສຳຄັນຂະຫນາດໃດນັ້ນຫມາຍຄວາມວ່າ ເຂົາຈະຕ້ອງຈັດຕາຣາງເວລາໃຫ້ແກ່ຄອບຄົວນຳ ເຊັ່ນ ໃຊ້ເວລາກິນເຂົ້າອາຫານຄ່ຳພ້ອມກັບພັຣຍາແລະລູກໆ ຊຶ່ງເປັນຊ່ວງເວລາທີ່ເຫມາະສຳລັບການເວົ້າຄຸຍກັນໃນຄອບຄົວກ່ຽວກັບເຣື່ອງເຮືອນ ງານ ການຮຽນ ຫມູ່ຄູ່ ແລະເຣື່ອງຣາວກ່ຽວກັບຝ່າຍຈິດວິນຍານ ຈະເປັນການດີທີ່ສຸດຖ້າໃຊ້ເວລາໃນການອ່ານພຣະຄັມພີ ແລະອະທິຖານດ້ວຍກັນ ໂດຍມອດທີວີ (ແຂກທີ່ບໍ່ໄດ້ຮັບເຊີນແລະຕົວທຳລາຍຄວາມສງົບ) ເສັຽຊົ່ວຄາວ.

ຕອນຄ່ຳຜູ້ນຳຄວນຈະຫາເວລາພາພັຣຍາແລະລູກໆໄປຍ່າງຫລິ້ນທີ່ສວນສາທາຣະນະໃກ້ງເຮືອນ ຫລືໄປຊອບປິ້ງ (ໂດຍບໍ່ຈຳເປັນຕ້ອງຊື້) ແລະກິນເຂົ້ານອກບ້ານນຳກັນເປັນບາງຄັ້ງ ເປັນຕົ້ນ

**2. ຟັງຄອບຄົວເວົ້ານຳແດ່**

ມີຄົນໃຫ້ຂໍ້ຄິດວ່າ "ກ່ອນຈະຮັກກັນຜູ້ຊາຍເວົ້າແລະຜູ້ຍິງຟັງ ແຕ່ເມື່ອແຕ່ງງານກັນແລ້ວຜູ້ຍິງເວົ້າ ຜູ້ຊາຍເວົ້າ ແລະຊາວບ້ານຟັງ!"

ເມື່ອຜູ້ນຳກັບມາຈາກການເຮັດວຽກ ຫລືກັບມາຈາກການຮັບໃຊ້ພຣະເຈົ້າໃນແຕ່ລະມື້ ເຂົາຈະຮູ້ສຶກອິດເມື່ອຍ ອ່ອນເພັຽຈົນສມອງບໍ່ສາມາດເປີດຮັບຫຍັງໄດ້ອີກ ບາງມື້ອາດພົບບັນຫາຫນັກອົກຫນັກໃຈ ຕ້ອງຄິດ ແກ້ໄຂຈົນຫມົດແຮງ ຢ່າງໃດກໍດີ ເວລາເຊັ່ນນີ້ແຫລະທີ່ຜູ້ນຳຈະຕ້ອງຮວບຮວມສະມາທິຕັ້ງໃຈຟັງຄົນໃນຄອບຄົວເວົ້ານຳດ້ວຍ.

ພັຣຍາຈະເວົ້າວ່າມີຫຍັງເກີດຂຶ້ນຢູ່ເຮືອນແດ່ ລູກໆຈະເວົ້າວ່າທີ່ໂຮງຮຽນເຂົາໄດ້ຮັບປະສົບການໃຫມ່ໆແລະມີບັນຫາຫຍັງແດ່ ຊຶ່ງອາດຈະມີທັງພຣະພອນແລະຄວາມທໍ້ຖອຍໃຈ ເຣື່ອງນ້ອຍໆຈະກາຍເປັນບັນຫາໃຫຍ່ທັນທີເມື່ອສາມີເວົ້າວ່າ "ອັນນີ້... ຂ້ອຍເຮັດວຽກມາເມື່ອຍຈະຕາຍຢູ່ແລ້ວ ເຣື່ອງນ້ອຍໆຢ່າງນີ້ ເຈົ້າຈັດການເອງບໍ່ໄດ້ບໍ?"

ຜູ້ຊ່ຽວຊານທາງດ້ານຄອບຄົວໄດ້ກ່າວເຕືອນບັນດາຜູ້ນຳທີ່ເປັນສາມີວ່າ "ໃນທີ່ທຳງານ ທ່ານອາດຈະຕ້ອງຄຽດກັບບັນຫາຊຶ່ງກ່ຽວກັບຄວາມເສັຽຫາຍມູນຄ່າເປັນຮ້ອຍລ້ານ ແຕ່ເມື່ອກັບເຖິງເຮືອນ ພັຣຍາຂອງທ່ານມີບັນຫາທີ່ມີມູນຄ່າພຽງຮ້ອຍດຽວ ເຖິງແມ່ນວ່າຄ່າຂອງມັນຈະ

ແຕກຕ່າງກັນຫລາຍຮາວຟ້າກັບດິນ ແຕ່ຢ່າລືມວ່າບັນຫາທີ່ມີຄ່າພຽງນຶ່ງຮ້ອຍຂອງພັຣຍານັ້ນ ສຳລັບນາງແລ້ວມັນມີຄ່າພໍໆກັບນຶ່ງຮ້ອຍລ້ານຂອງທ່ານເຫມືອນກັນ".

3. ໃຫ້ຄອບຄົວໄດ້ຮັບຮູ້ງານ

ບໍ່ຕ້ອງສົງໄສເລີຍວ່າ ພັຣຍາແລະລູກໆມີຄວາມສົນໃຈໃນຫນ້າທີ່ການງານຂອງຜູ້ເປັນຫົວຫນ້າຄອບຄົວຫລາຍຈົນຜູ້ນຳເອງຄາດບໍ່ເຖິງເລີຍ. ດັ່ງນັ້ນ ຜູ້ນຳທີ່ສລາດຈະຕ້ອງແບ່ງປັນໃຫ້ສະມາຊິກໃນຄອບຄົວໄດ້ຮັບຮູ້ເຖິງຫນ້າທີ່ການງານແລະບັນ ຫາທີ່ເກີດຂຶ້ນໃນການປະຕິບັດງານຂອງຕົນນຳ ແຕ່ຕ້ອງລະມັດລະວັງບໍ່ໃຫ້ການແບ່ງປັນກາຍເປັນຄຳຈົ່ມຫລືຄຳຕິຕຽນຜູ້ອື່ນ ຫລືໃຊ້ພັຣຍາແລະລູກໆເປັນທີ່ຮອງຮັບອາຣົມຄ້າງມາຈາກທີ່ທຳງານນຳດ້ວຍ.

ມີລູກຂອງຜູ້ນຳຝ່າຍຈິດວິນຍານຫລາຍຄົນ ທີ່ບໍ່ຍອມມອບກາຍຖວາຍຊີວິດເພື່ອຈະບົວລະບັດຮັບໃຊ້ພຣະເຈົ້າ ເພາະຕັ້ງແຕ່ນ້ອຍຈົນໃຫຍ່ພວກເຂົາມອງເຫັນແຕ່ບັນຫາແລະຄວາມຂັດສົນທີ່ພໍ່ຂອງເຂົາແກ້ບໍ່ຕົກ ແລະຫຍຸ້ງຈົນບໍ່ມີເວລາສຳລັບຕົນເອງແລະຄອບຄົວຢ່າງນີ້ແລ້ວ ເຂົາບໍ່ເດີນຕາມຮອຍຂອງພໍ່ຈະດີກວ່າ!

4. ຕິດຕໍ່ກັບຄອບຄົວເລື້ອຍໆ

ມີເຣື່ອງເລົ່າວ່າ ມີຊາຍຄົນນຶ່ງເກີດຄວາມຄຽດຈາກບັນຫາຄອບຄົວຈຶ່ງໄປໂຮງພະຍາບານ ຫມໍແນະນຳໃຫ້ປີ່ນຣົດຖີບມື້ນຶ່ງຊາວຫ້າກິໂລແມຕ ນຶ່ງອາທິດ. ຕໍ່ມາເຂົາໂທຣະສັບມາບອກຫມໍວ່າ "ອາການຂອງຂ້ານ້ອຍດີຂຶ້ນຫລາຍແລ້ວ"

"ແລ້ວເມັຽຂອງເຈົ້າເປັນຢ່າງໃດແດ່" ຫມໍຖາມ

"ບໍ່ຮູ້" ເຂົາຕອບ "ເພາະຕອນນີ້ຂ້ານ້ອຍຢູ່ຫ່າງຈາກບ້ານເກືອບສອງຮ້ອຍກິໂລແມຕແລ້ວ"

"!!!"

ບໍ່ວ່າທ່ານຈະເປັນຜູ້ນຳໃນອົງການ ນັກເທດ ສິດຍາພິບານ ຫລືຜູ້ປະກາດ ໂດຍສະເພາະນັກເທດ ຊຶ່ງສ່ວນໃຫຍ່ແລ້ວມັກຈະຂຶ້ນຣົດລົງເຮືອໄປເຫນືອລ່ອງໃຕ້ຢູ່ເປັນປະຈຳ ບາງຄົນນັ່ງເຄື່ອງບິນໄປຕ່າງປະເທດເຫມືອນຂຶ້ນຣົດປະຈຳທາງ ທຳຫນ້າທີ່ຈັດປະຊຸມ ເປັນວິທະຍາກອນຟື້ນຟູຈິດວິນຍານ ແລະຈັດສັມມະນາຕ່າງໆ ງານນຶ່ງໆຢ່າງຫນ້ອຍກໍກິນເວລາສອງເຖິງຫ້າມື້ ບາງຄົນຮັບເທສນາເດືອນລະສາມເຖິງສີ່ງານຕິດຕໍ່ກັນໂດຍບໍ່ໄດ້ກັບເມືອບ້ານເລີຍ ຈຶ່ງມີຂໍ້ແນະນຳງ່າຍໆດັ່ງນີ້:

1. ຜູ້ນຳຄວນຈະເອົາເຣື່ອງງານມາປຶກສາຫາລືແລະອະທິຖານຮ່ວມກັບສະມາຊິກໃນຄອບຄົວຂອງຕົນ.
2. ແຈ້ງກຳນົດການຄ່າວໆໃຫ້ຄອບຄົວໄດ້ຮູ້ວ່າເວລາໃດຢູ່ທີ່ໃດ ແລ້ວໃຫ້ເລກໂທຣະສັບຫລືທີ່ຢູ່ຂອງສະຖານທີ່ແຫ່ງນັ້ນໄວ້ ຊຶ່ງເຮັດໃຫ້ສາມາດຕິດຕໍ່ໄດ້ສະດວກ.
3. ຖ້າຫາກເດີນທາງໄປຕ່າງປະເທດຫລືຕ່າງເມືອງ ຄວນຈະສົ່ງຈົດຫມາຍຫລືກາດໃຫ້ຄອບຄົວເລື້ອຍໆ.
4. ປັດຈຸບັນການໃຊ້ໂທຣະສັບເປັນສິ່ງທີ່ເຮັດໄດ້ສະດວກ ຜູ້ນຳຄວນຈະແນ່ໃຈໄດ້ເລີຍວ່າ ຍອມເສັຽເງິນດີກວ່າເສັຽຄອບຄົວ
5. ຫາກທາງບ້ານມີອິນເຕີແນຕ ແຮ່ງງ່າຍຫລາຍ ບໍ່ຍາກເກີນໄປສຳລັບຜູ້ນຳທີ່ຈະສົ່ງ "ອີແມ໋ວ" (ຈົດຫມາຍອີເລັກໂທນິກ) ຫາຄອບຄົວນື້ລະເທື່ອ.

ທັງຫມົດນີ້ເປັນຂໍ້ແນະນຳເລັກໆນ້ອຍໆ ເພື່ອຈະຊ່ອຍ ຜູ້ນຳຝ່າຍຈິດວິນຍານທຸກຄົນໃຫ້ມີຄອບຄົວທີ່ຫມັ້ນຄົງປະສົບແຕ່ຄວາມສຸກແລະກ້າວໄປສູ່ຄວາມສຳເຣັດ ຈົນເຖິງຄວາມສົມບູນໃນພຣະເຢຊູຄຣິດ.

## 10. ຜູ້ນຳກັບການອ່ານ

"ເຈັດວັນວ່າງເວັ້ນ ຊ້ອມດົນຕຣີ ຫ້າວັນອັກຂຣະຫນີ ເນີ່ນຊ້າໆ..."

ຄຳກ່າວນີ້ເປັນຄວາມຈິງຮ້ອຍເປີເຊັນ ນັກກີຕ້າ ຖ້າບໍ່ໄດ້ດີດມືຈະຕົກສັນໃດ ຜູ້ນຳຖ້າບໍ່ໄດ້ອ່ານຫນັງສື ສມອງຈະມືດມົວສັນນັ້ນ ຜູ້ນຳອ່ານຫນັງສືຫລືບໍ່ ສັງເກດໄດ້ຈາກຄຳສອນແລະຄຳເທສນາຂອງເຂົາ ຫາກເວົ້າວົກໄປວົນມາຊ້ຳຊາກຢູ່ກັບເຣື່ອງເດີມ (ທີ່ຜູ້ນຳປະທັບໃຈ) ແລະປາສຈາກທິດທາງ ສະແດງວ່າບໍ່ຄ່ອຍໄດ້ໃຊ້ເວລາໃນການສຶກສາ ແຕ່ຫາກມີສິ່ງໃຫມ່ໆທີ່ເປັນພຣະພອນຢູ່ທຸກອາທິດ ສະແດງວ່າໄດ້ເຂົ້າ

ຫ້ອງສມຸດທຳການສຶກສາຄົ້ນຄວ້າຢ່າງສມ່ຳສເມີ.

ການຮຽນຮູ້ຈະຕ້ອງມີຢູ່ໃນຊີວິດຂອງຜູ້ນຳຕລອດເວລາ ພຣະເຢຊູຄຣິດຊົງເປັນຕົວຢ່າງທີ່ດີຢຽ່ມໃນເຣື່ອງນີ້ ທ່ານຫມໍລູກາໄດ້ບັນທຶກວ່າ "ພຣະອົງສະເດັດເຂົ້າໄປໃນທັມມະສາລາໃນວັນຊະບາໂຕຕາມເຄີຍ ແລະຊົງຢືນຂຶ້ນເພື່ອຈະອ່ານພຣະທັມ" (ລກ 4:16)

ທ່ານເຫັນບໍວ່າ ເມື່ອພຣະເຢຊູໄດ້ຮັບເຊີນໃຫ້ອ່ານພຣະ ຄຳຂອງພຣະເຈົ້າ ພຣະອົງບໍ່ໄດ້ສະແດງທ່າທາງສະດຸ້ງຕົກໃຈ ອຶດງອອດງ ຫລືມີອາການຢ້ານກົວ ແລ້ວລຸກຂຶ້ນໄປເປີດຫາຂໍ້ຄວາມທີ່ຈະອ່ານເປັນເວລານານສອງນານ ບໍ່ເລີຍ... ພຣະອົງເປີດໄປທີ່ພຣະທັມເອຊາຢາບົດທີ 61 ທັນທີແລະອ່ານສຽງດັງຟັງຊັດ ຊຶ່ງສະແດງໃຫ້ເຮົາເຫັນວ່າ ພຣະອົງຊົງຕຽມຕົວມາຢ່າງດີ ເຫມືອນດັ່ງວ່າທ່ອງຈຳມາເລີຍ.

ທ່ານຜູ້ນຳທີ່ຮັກ ຢ່າອ່ານຫນັງສືເພາະຄວາມຈຳເປັນ (ທີ່ຈະຕ້ອງສອນແລະເທສນາ) ແຕ່ຈົ່ງອ່ານດ້ວຍໃຈຮັກແລະອ່ານຈົນກະທັ່ງຕິດເປັນນິສັຍ. ເຮັດໃຫ້ຄິດເຖິງເຣື່ອງຂອງເດັກນ້ອຍຄົນນຶ່ງທີ່ຖາມຜູ້ເປັນພໍ່ວ່າ "ພໍ່ເອີຍ, ຫນັງສືເຫລັ້ມໃຫຍ່ທີ່ຢູ່ເທິງຫິ້ງນັ້ນມັນຄືຫຍັງ?" ພໍ່ຕອບວ່າ "ເອີ! ພຣະຄັມພີມັນເປັນຫນັງສືຂອງພຣະເຈົ້າ"

ລູກຊາຍເວົ້າວ່າ "ຂ້ານ້ອຍເຫັນມັນວາງຢູ່ເທິງຫັ້ນດົນແລ້ວ ຝຸ່ນຈັບຂະຫນາດເລີຍ ຖ້າເຮົາບໍ່ໃຊ້ ເປັນຫຍັງບໍ່ຄືນພຣະເຈົ້າໄປເສັຽ"

"!!!"

ພຣະເຈົ້າຊົງກ່າວກັບໂຢຊວຍຊຶ່ງເປັນຜູ້ນຳທີ່ສືບທອດອຳນາດມາຈາກໂມເຊວ່າ "ຢ່າໃຫ້ຫນັງສື ທັມບັນຍັດນີ້ຫ່າງເຫີນໄປຈາກປາກຂອງເຈົ້າ ແຕ່ຈົ່ງຕຶກຕອງຕາມນັ້ນ ທັງກາງວັນແລະກາງຄືນ" (ໂຢຊວຍ 1:8) ດ້ວຍຄຳສັ່ງນີ້ເດັກນ້ອຍຜູ້ຊາຍຊາວຢິວທຸກຄົນທີ່ມີອາຍຸຕັ້ງແຕ່ຫົກປີຂຶ້ນໄປຈະຕ້ອງເລີ້ມຮຽນແລະອ່ານຫນັງສືກັບຣັບບີ (ອາຈານ) ໃນທັມມະສາລາ ເພື່ອພວກເຂົາຈະໄດ້ຄິດໃຄ່ຄວນຈົດຈຳໄວ້ໃນໃຈ ແລະນຳໄປໃຊ້ກັບການດຳເນີນຊີວິດປະຈຳວັນຂອງເຂົາ.

ພຣະເຈົ້າຊົງຮູ້ດີວ່າ ຜູ້ນຳຕ້ອງການທີ່ຈະຮຽນຮູ້ຫລາຍຂຶ້ນທຸກໆວັນ ເພື່ອຈະສັ່ງສອນຜູ້ອ່ານແລະສັ່ງສອນຕົນເອງດ້ວຍ. ອາດກ່າວໄດ້ວ່າຖ້າຜູ້ນຳຝ່າຍຈິດວິນຍານບໍ່ອ່ານຫນັງສື ຢ່າເປັນຜູ້ນຳເສັຽດີກວ່າ ເພາະອານາຄົດນັ້ນເບິ່ງຣິບຫລີ່ເຫລືອເກີນ!

ເປັນເຣື່ອງທີ່ຫນ້າປລາດ ເມື່ອເຮົາໄດ້ຍິນນັກເທດບາງຄົນທີ່ຂຶ້ນໄປຢືນຫນ້າທັມມາດ ແລ້ວກ່າວຢ່າງພາກພູມໃຈວ່າ "ຄວາມຈິງແລ້ວມື້ນີ້ຂ້າພະເຈົ້າບໍ່ຮູ້ວ່າຈະເວົ້າເຣື່ອງຫຍັງ ຂໍໃຫ້ທີ່ປະຊຸມອະທິຖານເພື່ອດ້ວຍ ເພື່ອຈະໄດ້ຮັບການດົນໃຈຈາກພຣະວິນຍານບໍຣິສຸດ ຫລືບໍ່ກໍເວົ້າວ່າ "ຂ້າພະເຈົ້າຄິດຫາຄຳເທສນາຢູ່ດົນເຕີບຫາກໍນຶກເຣື່ອງທີ່ຈະເວົ້າໄດ້ ເມື່ອຕອນຂຶ້ນມາທີ່ທັມມາສນີ້ແຫລະ ເອີ ຂອບຄຸນພຣະເຈົ້າ ພຣະວິນຍານຊົງນຳແທ້ໆ"

ແນ່ນອນ ເຮົາເຫັນດ້ວຍກັບການຊົງນຳຂອງພຣະວິນຍານບໍຣິສຸດ ແຕ່ຫາກວ່າພຣະອົງຈະບໍ່ຊົງນຳແບບນີ້ທຸກວັນອາທິດ ໂດຍທີ່ຜູ້ນຳຫລືນັກເທດບໍ່ໄດ້ມີໂອກາດຄິດໃຄ່ຄວນ ອ່ານແລະກະຕຽມຄຳເທສນາມາກ່ອນລ່ວງຫນ້າເລີຍ ເພາະວ່າໃນການສອນພຣະຄັມພີຫລືເທສນາ ຖ້າຫາກໃຫ້ມີການລໍຄອຍໃຫ້ພຣະເຈົ້າປ້ອນຄຳເວົ້າໃສ່ປາກໃຫ້ທຸກເທື່ອ ກໍເທົ່າກັບວ່າພຣະອົງສົ່ງເສີມໃຫ້ຜູ້ຮັບໃຊ້ຂອງພຣະເຈົ້າເປັນຄົນຂີ້ຄ້ານນັ້ນເອງ.

ມັນເຫມືອນກັບນັກສຶກສາທີ່ເຂົ້າຫ້ອງສອບໂດຍບໍ່ໄດ້ຕຽມຕົວຫລືອ່ານຫນັງສືມາເລີຍ (ເພາະໃຊ້ເວລາໄປເຮັດຢ່າງອື່ນເສັຽຫມົດ) ແລະມາອະທິຖານຂໍພຣະເຈົ້າຊ່ອຍໃນວິນາທີສຸດທ້າຍ ຖ້າເຮົາເປັນພຣະເຈົ້າກໍຕ້ອງຄິດຫລາຍເຫມືອນກັນ.

ພຣະເຢຊູຊົງສອນວ່າ ຜູ້ໃດຈະສ້າງບ້ານເຮືອນໂດຍບໍ່ນັ່ງລົງຄິດເບິ່ງກ່ອນຫລືວ່າຈະມີເງິນງົບປະມານພຽງພໍຫລືບໍ່ ຫລືມີແມ່ທັບທະຫານຄົນໃດຈະບໍ່ປະເມີນກຳລັງພົນແລະອາວຸດຂອງສັດຕຣູ ກ່ອນທີ່ຈະເຂົ້າສູ່ສົງຄາມຫລື ສັນໃດກໍສັນນັ້ນ ມັນບໍ່ເປັນການສລາດເລີຍທີ່ໃຜຈະກ້າວຂຶ້ນມາເປັນຜູ້ນຳຝ່າຍຈິດວິນຍານໂດຍທີ່ບໍ່ໄດ້ນັ່ງລົງສຶກສາຄົ້ນຄວ້າມາກ່ອນເລີຍ.

ຜູ້ນຳທີ່ດີຄວນຈະອ່ານຫນັງສືຫຍັງແດ່? ອັນດັບແຣກທີ່ຂາດບໍ່ໄດ້ເລີຍຄື ພຣະຄຣິສຕະທັມຄັມພີ ທີ່ຄຣິສຕຽນຖືວ່າເປັນຫນັງສືເຫລັ້ມດຽວທີ່ໄດ້ຮັບການດົນໃຈຈາກພຣະເຈົ້າ ພຣະຄັມພີເຫລົ່ານີ້ແປສຳນວນແຕກຕ່າງກັນອອກໄປ ເພື່ອໃຫ້ເຂົ້າເຖິງຈິດໃຈຂອງຄົນໃນລະດັບຕ່າງໆ ເຊັ່ນ ຊົນຊັ້ນສູງ ຊົນຊັ້ນກາງ ນັກສຶກສາແລະຊາວບ້ານທົ່ວໄປ ແຕ່ທຸກສະບັບມີເນື້ອຫາສາຣະໂດຍຣວມແລ້ວເຫມືອນກັນ "ພຣະຄັມພີທຸກຕອນໄດ້ຮັບການດົນໃຈຈາກພຣະເຈົ້າ ແລະເປັນປໂຍດໃນການສອນ ການຕັກເຕືອນວ່າກ່າວ ການປັບປຸງແກ້ໄຂຄົນໃຫ້ດີ ແລະການອົບຮົມໃນທາງທັມເພື່ອຄົນຂອງພຣະເຈົ້າຈະບັນລຸຜົນສຳເຣັດ ແລະຈັດຕຽມໄວ້ພ້ອມສຳລັບການດີທຸກຢ່າງ" (2 ຕມທ 3:16, 17)

ອັນດັບຕໍ່ໄປ ຫນັງສືທີ່ຜູ້ນຳຄວນມີໄວ້ປະຈຳຫ້ອງສມຸດຂອງຕົນ ຄື ຕຳຣາສາສນາສາດ ຫນັງສືປະເພດອະທິບາຍພຣະຄັມພີ (Commentary) ຄູ່ມືຫົວຂໍ້ພຣະຄັມພີ ສັພສັມພັນໃນສມັຍກ່ອນພຸ້ນ (ສ່ວນຫລາຍແລ້ວແມ່ນຈະມີໃນພາສາອັງກິດຫລາຍ) ແຕ່ຂອບຄຸນພຣະເຈົ້າທີ່ໃນປັດຈຸບັນນີ້ມີສຳນັກພິມຫລາຍແຫ່ງຊ່ອຍກັນແປອອກມາຢ່າງຫລວງຫລາຍເອັ້ນວ່າພຽງພໍສຳລັບຜູ້ນຳທຸກລະດັບດ້ວຍກັນ.

ຜູ້ນຳທີ່ສັນທັດໃນພາສາອັງກິດຈະປຽບ ເພາະສາມາດຫາອ່ານຈາກຕຳຣາຂອງຕ່າງປະເທດໄດ້ ແຕ່ສຳລັບຜູ້ທີ່ພໍຈະຮູ້ພາສາອັງກິດແຕ່ແບບງູໆປາໆ ມີຂໍ້ແນະນຳວ່າ ບໍ່ຕ້ອງອ່ານລະອຽດທຸກຕົວອັກສອນ ເພາະຈະເສັຽເວລາຫລາຍ ບາງຄຳອ່ານອອກແຕ່ແປບໍ່ໄດ້ ຕ້ອງເປີດວັຈນານຸກົມພາສາອັງກິດ ທຸກເທື່ອກໍບໍ່ໄຫວ ຄວນຈະອ່ານແບບສລຸບເອົາເນື້ອຫາໃຈ ຄວາມສຳຄັນໆຂອງຕອນນັ້ນໆ ແລະນຳມາທຽບກັບພຣະຄັມພີ.

ມີຂໍ້ແນະນຳສຳລັບການອ່ານຕຳຣາສາສນາສາຕເຫລົ່ານີ້ ຄືຖ້າຕ້ອງການສອນຫລືເທສນາຕອນໃດ ກໍໄປອ່ານສະເພາະຕຳຣາຕອນນັ້ນໆ ຖ້າອ່ານບາດດຽວຕັ້ງແຕ່ຕົ້ນຈົນຈົບ ອາດຈະເປັນສິ່ງທີ່ຫນ້າເບື່ອຫນ່າຍ ແລະເຮັດໃຫ້ເບື່ອຫນັງສືຫົວອື່ນໆໄປນຳ ບາງຄົນພໍອ່ານໄປໄດ້ສອງສາມຫນ້າອາດຈະພາດຫລັບໄປເລີຍກໍເປັນໄດ້.

ນອກຈາກນັ້ນ ຜູ້ນຳຝ່າຍຈິດວິນຍານຄວນຈະອ່ານຫນັງສືທົ່ວໄປດ້ວຍ ເຊັ່ນວາຣະສານຂອງຄຣິສຕຽນ ຈຸລສານ ໃບປິວ ໃບໂຄສນາ ແລະຫນັງສືເສີມສ້າງຈິດວິນຍານອື່ນໆ ຫນັງສືທີ່ກ່ຽວຂ້ອງກັບສຸຂພາບ ຫນັງສື “ສ້າງສັນສາຣະ” ກໍຫນ້າອ່ານຫລາຍ ຂ້າພະເຈົ້າອ່ານເກືອບຫມົດທຸກເຫລັ້ມ..

ຜູ້ນຳຄວນຈະອ່ານຫນັງສືພິມຣາຍວັນ (ແຕ່ຢ່າເຊື່ອຂ່າວນັ້ນທັງຫມົດ ເພາະທຸກສບັບມີການຕີໄຂ່ໃສ່ສີເພື່ອເຮັດຍອດໃນການຈຳຫນ່າຍ) ອ່ານຫນັງສືດາຣາ ຫນັງ ເພງ ນັກຮ້ອງແລະນັກສະແດງ (ທີ່ອ່ານບໍ່ແມ່ນພິສວາດຫລືຄັ່ງໄຄ້ໄຫລຫລົງ ແຕ່ອ່ານເພື່ອຈະໄດ້ຮູ້ຄວາມເຄື່ອນໄຫວຂອງກະແສສັງຄົມ ແລະຈັບຄວາມສົນໃຈຂອງຄົນໄດ້ຢ່າງຖືກຕ້ອງ) ຫນັງສືຈຳພວກ “ຕະລົກເຣຣາ” ກໍຫນ້າອ່ານເຫມືອນກັນ ເຮັດໃຫ້ຜູ້ນຳລະຄາຍຄຽດໄດ້ຫລາຍເຫມືອນກັນ ແລະຍັງສາມາດນຳມາດັດແປງປະກອບເປັນຕົວຢ່າງໃນຄຳເທສນາໄດ້ອີກດ້ວຍ.

ນອກຈາກນັ້ນ ຜູ້ນຳຝ່າຍຈິດວິນຍານຄວນຈະອ່ານຫນັງສືທີ່ກ່ຽວຂ້ອງກັບຈິດວິທຍາແລະການບໍຣິຫານ ເພາະເທົ່າທີ່ຜ່ານມາມີຄົນກ່າວຢ່າງຫນາຫູວ່າ ຜູ້ນຳຄຣິສຕຽນນີ້ອັນໃດໆກໍດີຫມົດ ແຕ່ເສັຽຢ່າງດຽວບໍຣິຫານບໍ່ເປັນ ບາງຄົນໃຊ້ແຕ່ພຣະຄຸນເທົ່ານັ້ນ ບາງຄົນກໍຮວບອຳນາດໄວ້ຄົນດຽວ ບໍ່ມີການກະຈາຍງານໃຫ້ເພື່ອນຮ່ວມງານເລີຍ.

ເປົ້າຫມາຍຂອງຜູ້ນຳໃນການອ່ານຫນັງສື ເພື່ອຈະຕອບສນອງຄວາມຕ້ອງການໃນການເສີມສ້າງຕົນເອງເປັນອັນດັບແຣກ ປະການຕໍ່ມາເພື່ອຈະຕອບສນອງຄວາມຕ້ອງການຂອງຄົນອື່ນໄດ້ຢ່າງຕົງຈຸດ ສັງເກດໄດ້ວ່າ ຜູ້ນຳທີ່ບໍ່ອ່ານຫນັງສືຫລືບໍ່ຍອມໃຊ້ເວລາສຶກສາຄົ້ນຄວ້າ ແລະບໍ່ຕຽມສອນໃຫ້ດີພໍ ມັກຈະຢູ່ບ່ອນເກົ່າ ບໍ່ມີການພັທນາທາງດ້ານສະຕິປັນຍາ ເມື່ອສິດຍາພິບານເລີ້ມອ້າປາກເທສນາ ສະມາຊິກກໍຮ້ອງອອກໄປກ່ອນແລ້ວ ບາງທີປ່ອຍມຸກຕລົກອອກມາ ກັບກາຍເປັນມຸກ ດ້ານໄປເສັຽ...ເປັນເຣື່ອງທີ່ຫນ້າສົງສານແທ້ໆ!

ມີຄົນຖາມນັກເວົ້າເກັ່ງຊື່ດັງວ່າ “ຖ້າໃຫ້ອາຈານເວົ້າຫ້ານາທີ ຈະຕ້ອງໃຊ້ເວລາຕຽມດົນປານໃດ” ອາຈານຕອບວ່າ “ຢ່າງຫນ້ອຍຕ້ອງສອງອາທິດ”

ເຂົາຖາມຕໍ່ໄປວ່າ “ຖ້າໃຫ້ເວົ້າເຄິ່ງຊົ່ວໂມງ” ອາຈານຕອບວ່າ “ສາມວັນກໍພໍ”

ຖາມຕໍ່ອີກວ່າ “ຖ້າໃຫ້ເວົ້າສອງຊົ່ວໂມງ” ອາຈານຕອບທັນທີ “ໃຫ້ເວລາຂ້າພະເຈົ້າຕຽມແຕ່ຫ້ານາທີກໍພໍແລ້ວ”

“!!!”

ດັ່ງທີ່ກ່າວມາແລ້ວ ການອ່ານຫນັງສືນອກຈາກຈະເປັນການພັທນາສະຕິປັນຍາຂອງຕົວເອງແລ້ວ ຍັງເປັນພັທນາຄວາມຮູ້ແລະຄວາມເຂົ້າໃຈຝ່າຍຈິດວິນຍານຂອງສະມາຊິກໃນຄຣິສຕະຈັກອີກດ້ວຍ ຜູ້ນຳທີ່ດີຈະຕ້ອງຍຶດຫລັກຢ່າງເຄັ່ງຄັດສອງຢ່າງຄື ຜູ້ສອນຈະຕ້ອງຮູ້ຈິງແລະຜູ້ສອນຈະຕ້ອງຮູ້ຫລາຍກວ່າຜູ້ຟັງ.

ຂໍໃຫ້ຜູ້ນຳຄິດສເມີວ່າ ຖ້າຫາກກ່ອນທີ່ສະມາຊິກຈະເຂົ້າມານັ່ງໃນຫ້ອງປະຊຸມ ເຂົາມີຄວາມຮູ້ໃນພຣະຄຳຂອງພຣະເຈົ້າຢູ່ເທົ່າໃດ ເມື່ອເຂົາລຸກຂຶ້ນກ້າວອອກໄປຈາກໂບດ ພວກເຂົາກໍຍັງມີຄວາມຮູ້ຄວາມເຂົ້າໃຈຢູ່ເທົ່າເດີມ ນັ້ນສະແດງວ່າບໍ່ມີການພັທນາໃຫ້ຈິດວິນຍານກ້າວຫນ້າ ແລະສະມາຊິກບໍ່ມີຄວາມຮູ້ໃນພຣະຄັມພີເພີ້ມຂຶ້ນເລີຍ ຫາກເປັນເຊັ່ນນີ້ ຜູ້ນຳຄຣິສຕະຈັກຄວນຈະຕ້ອງພິຈາຣະນາຕົນເອງໄດ້ແລ້ວ.

ຜູ້ນຳຝ່າຍຈິດວິນຍານຄົນນຶ່ງກ່າວວ່າ “ຖ້າມີຄົນຫລັບເປັນປະຈຳໃນການເທສນາ ນັກເທດຄວນຈະພິຈາຣະນາຕົນເອງ”

ຄັ້ງນຶ່ງມີຄົນຖາມນັກເທດຄົນນຶ່ງວ່າ “ຫາກມີຄົນຫລັບໃນເວລາຟັງເທດ ຄວນຈະເຮັດແບບໃດ?” ທ່ານຕອບວ່າ “ໃຫ້ຫາເຂັມມາອັນນຶ່ງແລະແທງເຂົ້າທີ່ຂ້າງຂອງນັກເທດຄົນນັ້ນ”

ຈົ່ງຄິດໄວ້ສເມີວ່າ ເມື່ອໃດກໍຕາມທີ່ຜູ້ນຳດຸຫມັ່ນໃນການສຶກສາຄົ້ນຄວ້າແລະອ່ານຫນັງສື ເຂົາຈະບໍ່ມີວັນຈົນແຕ້ມຄຳເທສນາ.

ທ້າຍບົດນີ້ຂ້າພະເຈົ້າຢາກຈະສລຸບສັ້ນໆເປັນຂໍ້ໆດັ່ງນີ້:

1. ຜູ້ນຳທີ່ດີຕ້ອງເປັນນັກອ່ານ.
2. ຜູ້ນຳທີ່ດີຕ້ອງເປັນນັກສະສົມຂໍ້ມູນ.
3. ຜູ້ນຳທີ່ດີຕ້ອງນຳສິ່ງທີ່ສຶກສາຄົ້ນຄວ້ານັ້ນມາໃຊ້ກັບຊີວິດຂອງຕົນເອງ.
4. ແບ່ງປັນຂໍ້ມູນນັ້ນແກ່ຄົນອື່ນ.

ຄົນຢິວມີຄະຕິທີ່ວ່າ ຫນັງສືດີມີຄຸນຄ່າຫລາຍກວ່າຄໍາ "ຖ້າເຮັດຫນັງສືເຮັ່ງກັບເຮັດຄໍາເຮັ່ງ ໃຫ້ເກັບເອົາຫນັງສືກ່ອນ ແລ້ວຈຶ່ງເກັບຄໍານໍາຫລັງ"

ຜູ້ນໍາທີ່ຮັກ ການອ່ານຫນັງສືນໍາຜົນດີເກີນຄາດຫມາຍມາໃຫ້. ການອ່ານຫນັງສືຈະຊ່ອຍໃຫ້ຊີວິດຊຸ່ມຊື່ນຂຶ້ນ ການອ່ານຫນັງສືຈະຊ່ອຍໃຫ້ລະຍະທາງຄວາມສໍາເຣັດໄດ້ໄວກວ່າ ການອ່ານຫນັງສືດີທີ່ຖືກໃຈຊ່ອຍປຸກຈິດສໍານຶກໃຫ້ຕື່ນຂຶ້ນ ເພື່ອຈະຮັບຜິດຊອບຕໍ່ຄຣິສຕະຈັກແລະສັງຄົມ ແລະຜູ້ນໍາທີ່ຮັກການອ່ານຫນັງສືຈະເປັນພຣະພອນແກ່ຕົນເອງແລະແກ່ຄົນອື່ນດ້ວຍ.

## 11. ຜູ້ນໍາກັບການກິນ

ທີ່ໂຕະອາຫານຂອງກຸ່ມຜູ້ນໍາ ຂ້າພະເຈົ້າມັກເລົ່າເຣື່ອງ ຂອງສາມີພັຣຍາຄູ່ນຶ່ງທີ່ລະມັດລະວັງໃນເຣື່ອງການກິນອາຫານ ໂດຍສະເພາະແລ້ວພັຣຍານັ້ນມັກເຂັ້ມງວດຫລາຍເນື່ອງຈາກຢ້ານເປັນໂຣກຄວາມອ້ວນ ແຕ່ພວກເຂົາຕ້ອງມາເສັຽຊີວິດດ້ວຍອຸບັດຕິເຫດທາງຣົດ ແລະເມື່ອທັງສອງຂຶ້ນສູ່ສວັນກໍເຖິງກັບຕະລຶງໃນຄວາມສວຍສົດງົດງາມຕາ.

"ສວັນຈັ່ງແມ່ນງາມແລະຫນ້າຢູ່ກວ່າທີ່ເຮົາຄິດໄວ້ຫລາຍເນາະ" ພັຣຍາເອີ່ຍຂຶ້ນ

"ງາມກວ່າທີ່ອ້າຍເວົ້າໄວ້ໃນຄໍາເທສນາອີກ" ສາມີຫລຽວຫນ້າມາເບິ່ງຄູ່ຊີວິດ "ເພາະນ້ອງຄົນດຽວທີ່ເຮັດໃຫ້ອ້າຍມາຢູ່ສວັນຊ້າໄປ"

"ເປັນຫຍັງ"

"ກໍກິນອັນນັ້ນກໍບໍ່ໄດ້ ຈັກຫນ້ອຍເປັນໂຣກຄວາມດັນ ກິນອັນນີ້ກໍບໍ່ໄດ້ ຈັກຫນ້ອຍຄໍເຣສໂຕຣອລສູງ ອັນນັ້ນກໍເປັນເບົາຫວານ...ຫ້າມສາຣະພັດເລີຍ"

"!!!"

ຜູ້ນໍາບາງຄົນຮັບປະທານບໍ່ແມ່ນເພາະຄວາມຫິວ ແຕ່ເພື່ອສນອງຄວາມຕ້ອງການຂອງປາກແລະລີ້ນ ໂດຍສະເພາະໃນເວລາຂອງການປະຊຸມປຶກສາຫາລືງານ ແຕ່ລະຄັ້ງຈະບໍຣິບູນໄປດ້ວຍນໍ້າອັດລົມ ນໍ້າຫວານ ຊາ ກາເຟ ແລະເຂົ້າຫນົມເນີຍ ຄຸຍໄປກິນໄປຈົນເພີນ ຫາກເປັນກັມມະການຫລາຍຊຸດກໍແຮ່ງມີໂອກາດເປັນໂຣກອ້ວນໄດ້ງ່າຍຂຶ້ນ. ເຂົ້າທໍານອງທີ່ຄົນມັກເວົ້າວ່າ "ກິນເຣື່ອງໃຫຍ່ ຕາຍເຣື່ອງກາງ ຕາຣາງເຣື່ອງນ້ອຍ!"

ກົງກັນຂ້າມກັບຜູ້ນໍາບາງຄົນທີ່ເຮັດວຽກຈົນບໍ່ມີເວລາທີ່ຈະກິນຈົນໂຣກກະເພາະເອັ້ນຫາ ມື້ນຶ່ງຂ້າພະເຈົ້າເປີດຫນັງສືລະດັບປະເທດສບັບນຶ່ງຂຶ້ນມາເບິ່ງກໍເຫັນການໂຄສນາອັນນຶ່ງ ມີຮູບພາບປະກອບເຕັມຫນ້າ ເປັນຮູບປາໂຕນຶ່ງແລະກາເຟນຶ່ງຈອກ ແລ້ວຂ້າງລຸ່ມຂຽນຂໍ້ຄວາມໂຕໃຫຍ່ໆວ່າ "ນີ້ຫລືອາຫານຂອງຄົນມີເງິນ" ຈຸດປະສົງຂອງເຂົາເພື່ອຕ້ອງການໂຄສນາອາຫານເສີມຊຸບໄກ່ຍີ່ຫໍ້ນຶ່ງ.

ເຂົາຈັບຈຸດການຂາຍໄດ້ດີຫລາຍ ເພາະມັນເປັນຄວາມຈິງໃນຊີວິດປະຈໍາວັນຂອງຄົນທົ່ວໄປໃນປັດຈຸບັນ ຊຶ່ງຢູ່ຖ້າມກາງຄວາມຟ້າວຟັ່ງຄື ຟ້າວກິນ ຟ້າວໄປ(ຂັບຣົດ) ຟ້າວເຮັດວຽກ ແລະຟ້າວສ້າງຖານະ ແລະອື່ນໆ ມີຜູ້ຮັບໃຊ້ຂອງພຣະເຈົ້າເປັນຈໍານວນຫລາຍທີ່ຕົກຢູ່ໃນວົນວຽນຂອງຄວາມຟ້າວຟັ່ງນີ້ເຫມືອນກັນ.

ດັ່ງທີ່ໄດ້ກ່າວມາແລ້ວວ່າ ມີຜູ້ນໍາຝ່າຍຈິດວິນຍານຈໍານວນບໍ່ຫນ້ອຍທີ່ມີບັນຫາກ່ຽວກັບການກິນແລະດື່ມ ບາງຄົນກິນເກີນໄປ ແຕ່ບາງຄົນກິນຫນ້ອຍໄປ ທີ່ກິນຫລາຍໄປກໍຕຸ້ຍຈົນນໍ້າຫນັກເກີນມາຕຖານ (ຄືສ່ວນສູງລົບດ້ວຍນຶ່ງຮ້ອຍ ທີ່ເຫລືອເປັນນໍ້າຫນັກມາຕຖານຈິງ) ແລ້ວໂຣກຫົວໃຈ ຄວາມດັນໂລຫິດສູງ ແລະໄຂມັນອຸດຕັນກໍເອັ້ນຫາ ສ່ວນຄົນທີ່ກິນຫນ້ອຍໄປກໍຜອມແຫ້ງແຮງນ້ອຍ ແລະເປັນໂຣກກະເພາະອາຫານ ມີການວິເຄາະພົບວ່າ ຄົນທີ່ບໍ່ຍອມກິນອາຫານຕອນເຊົ້ານັ້ນ ມັກຈະສົ່ງຜົນໄປເຖິງອາຣົມແລະປະສິດທິພາບໃນການທໍາງານ ຄືອາດຈະອາຣົມບໍ່ດີ ໃຈຮ້າຍງ່າຍ ແລະຕັດສິນຢ່າງຜິດພາດໃນການທໍາງານດ້ວຍ.

ເຮັດໃຫ້ຄິດເຖິງເຣື່ອງຂອງຍິງຮາຍໂຊຄົນນຶ່ງທີ່ຍ່າງຂ້າມຂົວສະພານ ແລະທີ່ຫົວສະພານກໍມີຄົນຂໍທານນັ່ງນົບມືໄຫວ້ປະລົກໆ ປາກກໍເວົ້າວ່າ "ໂຜດເມດຕາແດ່ທ້ອນ ຂໍໃຫ້ເງິນຂ້ານ້ອຍຈັກຫ້າຈັກສິບແດ່ທ້ອນ ເພາະເຂົ້າບໍ່ມີຕົກລົງເຖິງທ້ອງຂອງຂ້ານ້ອຍສາມມື້ເຕັມແລ້ວ"

ຍິງຄົນນັ້ນຢຸດຍ່າງແລ້ວຫລຽວເບິ່ງເວົ້າຂຶ້ນວ່າ "ໂອ ດີແທ້ໆ ຫນ້ານັບຖືເນາະ ຂ້ອຍຢາກຈະໃຈແຂງເຫມືອນເຈົ້າເຫລືອເກີນ"

"!!!"

ຜູ້ນໍາຝ່າຍຈິດວິນຍານຈະຕ້ອງມີຄວາມພໍດີໃນເຣື່ອງ ການກິນການດື່ມ ພຣະເຢຊູຄຣິດຊົງເຕືອນບັນດາສາວົກເຖິງຄວາມພໍດີໃນຊີວິດຄຣິສຕຽນວ່າ "ດ້ວຍເຫດນັ້ນເຮົາບອກທ່ານທັງຫລາຍວ່າ ຢ່າກະວົນກະວາຍເຖິງຊີວິດຂອງຕົນວ່າ ຈະກິນຫຍັງ ຈະດື່ມຫຍັງ,,," (ມທ 6:25) ຄືໃຫ້ໄວ້ວາງໃຈໃນການລ້ຽງດູຂອງພຣະເຈົ້າ ນອກຈາກນັ້ນພຣະອົງຍັງຊົງສອນກ່ຽວກັບການອະທິຖານໃນເຣື່ອງປາກເຣື່ອງທ້ອງອີກວ່າ

"ຂໍຊົງໂຜດປະທານອາຫານປະຈຳວັນແກ່ຂ້າພຣະອົງທັງຫລາຍໃນກາລະວັນນີ້" (ມທ 6:11) ຄືໃຫ້ມີຄວາມພໍດີ ບໍ່ຫລາຍເກີນໄປແລະບໍ່ຫນ້ອຍເກີນໄປ. ອາດກ່າວໄດ້ວ່າ ສິ່ງນຶ່ງທີ່ນຳຄວາມພາກພູມໃຈມາສູ່ມະນຸດ (ໂດຍສະເພາະຄົນໃນລະດັບຜູ້ນຳ) ກໍຄືການໄດ້ຮັບປະທານອາຫານແຊບໆແລະຖືກປາກ ເພື່ອນຄົນນຶ່ງເລົ່າໃຫ້ຂ້າພະເຈົ້າຟັງວ່າ ເອື້ອຍຂອງລາວເປັນເຈົ້າຂອງບໍລິສັດແຫ່ງນຶ່ງແລະເປັນນັກຊິມຕິດອັນດັບ ອັນໃດທີ່ວ່າແຊບໆບໍ່ວ່າຈະຢູ່ໄກປານໃດ ລາວກໍຈະດັ້ນດົ້ນໄປຊອກຫາຮັບປະທານຈົນໄດ້ ແຕ່ວ່າລາວເປັນຄົນທີ່ຢ້ານຄວາມອ້ວນ ດັ່ງນັ້ນເມື່ອກິນແລ້ວລາວກໍຈະຟ້າວເຂົ້າຫ້ອງນ້ຳ ແລະຈົກຄໍຮາກອອກມາ ແບບນີ້ເຂົາເອີ້ນວ່າ "ຕາມໃຈປາກ ລຳບາກທ້ອງ" ເຫມືອນບາງຄົນທີ່ມັກກິນອາຫານຣົດເຜັດຂະຫນາດຫລືສົ້ມຂະຫນາດ ມື້ຕໍ່ມາກໍເລີຍເຈັບທ້ອງ ມີຄຳຂວັນເຕືອນໃຈຊຶ່ງຕິດຢູ່ຕາມທີ່ສາທາຣະນະຫລາຍບ່ອນວ່າ "ຕາມໃຈປາກເປັນໝູ ຕາມໃຈຈູ່ເປັນເອດສ໌!"

ມີຕຳຣາຫລວງຫລາຍທີ່ວາງຂາຍຢູ່ຕາມຮ້ານຂາຍຫນັງສືເພື່ອຊ່ອຍໃຫ້ຄົນເຮັດອາຫານໄດ້ຢ່າງຖືກຫລັກວິທີແລະແຊບລີ້ນຫລາຍຂຶ້ນ ມີນັກຊິມທີ່ມີຊື່ສຽງຫລາຍຄົນທີ່ຂຽນຄໍລັມນ໌ກ່ຽວກັບອາຫານນາໆຊນິດລົງໃນຫນັງສືພິມ ນັກຊິມເຫລົ່ານີ້ຈະແວະວຽນໄປກິນອາຫານຕາມຮ້ານຕ່າງໆ ຊິມບໍ່ຊິມລ້າ ຖ້າຖືກປາກຖືກໃຈກໍຈະມອບປະກາດສະນີຍະບັດໄວ້ເປັນຫລັກປະກັນແຫ່ງຄວາມແຊບອີກດ້ວຍ.

ຜູ້ນຳທີ່ຮັກ ທ່ານເຊື່ອບໍວ່າ ອາຫານບາງຊນິດທີ່ຂາຍ ໃນພັທຕາຄານຫຣູໆຈານລະແປດສິບເຖິງນຶ່ງຮ້ອຍ ອາດຈະມີຄຸນຄ່າທາງໂພຊນາການຫນ້ອຍກວ່າອາຫານທີ່ຂາຍໃນຮ້ອນນ້ອຍໆຈານລະສິບຫ້າຫລືຊາວກໍເປັນໄດ້ ທັງນີ້ທັງນັ້ນຂຶ້ນຢູ່ກັບຄວາມສລຽວສລາດໃນການເລືອກບໍຣິໂພດຂອງຜູ້ຮັບນັ້ນເອງ.

ໃນຖານະທີ່ເປັນຜູ້ນຳ ເຮົາຄິດດີວ່າ ອາຫານບໍ່ພຽງແຕ່ເປັນສິ່ງທີ່ຮ່າງກາຍຕ້ອງການຫລືເຮັດໃຫ້ອີ່ມທ້ອງເທົ່ານັ້ນ ແຕ່ມັນຍັງມີຜົນກະທົບຕໍ່ສມອງ ຈິດໃຈ ແລະສຸຂພາບຮ່າງ ກາຍອີກນຳ ຫາກວ່າຜູ້ນຳຮັບປະທານອາຫານບໍ່ໄດ້ສັດສ່ວນ ກໍຈະເຮັດໃຫ້ເກີດອາການຫງຸດຫງິດ ອາຣົມເສັຽງ່າຍ ບາງຄົນຊຶມເສົ້າ ແລະບາງຄົນເຖິງກັບເປັນໂຣກເລືອດຈາງ ເພາະໄດ້ຮັບທາດເຫລັກບໍ່ພຽງພໍ.

ເມື່ອບໍ່ດົນມານີ້ ຂ້າພະເຈົ້າໄດ້ຮັບໂທຣະສັບຈາກຫມູ່ຄົນນຶ່ງ ຊຶ່ງເປັນຜູ້ນຳຄຣິສຕະຈັກແລະເປັນເຈົ້າຂອງບໍລິສັດໃນເມືອງໃຫຍ່ວ່າ ແມ່ຂອງລາວຕ້ອງເຂົ້າໂຮງພະຍາບານຢ່າງກະທັນຫັນ ຫມໍແຈ້ງໃຫ້ຮູ້ວ່າ ເພິ່ນເປັນໂຣກຂາດອາຫານ ຊຶ່ງເປັນເຣື່ອງທີ່ບໍ່ຫນ້າເຊື່ອທີ່ແມ່ຂອງເຈົ້າຂອງກິຈການນັບຫລາຍຮ້ອຍລ້ານເປັນໂຣກຂາດອາຫານ ແຕ່ກໍເປັນເຣື່ອງຈິງ!

**ອາຫານທີ່ບໍ່ມີປໂຍດ** - ນິຕສານກ່ຽວກັບສຸຂພາບອະນາມັຍສບັບນຶ່ງ ໄດ້ກ່າວເຖິງອາຫານທີ່ບໍ່ມີປໂຍດໄວ້ດັ່ງນີ້

- ຂອງກິນຫລິ້ນທີ່ໃສ່ເກືອຫລາຍໆເປັນອາຫານວ່າງທີ່ເອີ້ນກັນວ່າ "ສແນັກ" ຊຶ່ງໃສ່ເກືອຫລາຍໆຈະເຮັດໃຫ້ເປັນໂຣກຄວາມດັນເລືອດສູງແລະມີສ່ວນເຮັດໃຫ້ເກີດຄວາມອ້ວນໄດ້ຫລາຍ.

- ໄຂມັນທີ່ຖືກເຮັດໃຫ້ຂຸ້ນໂດຍໃຊ້ໄຮໂດຣເຈນ ພວກນ້ຳມັນປາລ໌ມ ແລະໄຂມັນແຫລວ ທີ່ຖືກຄັ້ງວຈົນເປັນກ້ອນ ເປັນໄຂມັນຂຸ້ນທີ່ເປັນອັນຕະຣາຍຕໍ່ຮ່າງກາຍ ອາຫານຊນິດນີ້ມີແຄລໍຣີສູງ ແຕ່ມີຄຸນຄ່າທາງໂພຊນາການຕ່ຳ.

- ຫມາກມັນທີ່ຈືນກອບໆ ເປັນອາຫານທີ່ດີທີ່ສຸດຢ່າງນຶ່ງຂອງໂລກຖ້າຮັບປະທານດ້ວຍການຕົ້ມຫລືອົບ ແຕ່ເມື່ອນຳມາເຮັດເປັນ "ຫມາກມັນຈືນກອບ" ໂດຍຜະສົມແປ້ງນົວເຂົ້າໄປ ຄຸນຄ່າທາງອາຫານກໍສູນເສັຽໄປຈົນຫມົດ.

- ຫວານເຢັນແລະໄອສຄີມ ຂອງຫວານແຊ່ນ້ຳກ້ອນພວກນີ້ ທາງການແພດບໍ່ເອີ້ນວ່າເປັນອາຫານ ເພາະເປັນຜະລິຕພັນທາງເຄມີ ຈະເອີ້ນວ່າອັນໃດກໍໄດ້ ແຕ່ບໍ່ແມ່ນອາຫານຢ່າງແນ່ນອນ.

- ອາຫານຮຽນແບບທັມມະຊາດ ອາຫານປະເພດນີ້ ປະກອບດ້ວຍແປ້ງນົວແລະສານກັນບູດຫລາຍໆຊນິດ ເຊັ່ນ ຄົມທຽມ ຊຶ່ງເປັນສ່ວນນຶ່ງຂອງອາຫານຕອນເຊົ້າທີ່ຄົນຕ່າງປະເທດມັກຮັບປະທານກັນທຸກມື້.

- ອາຫານມັງສວິຣັດ ຄວາມຈິງແລ້ວມີປໂຍດເພາະເຮັດດ້ວຍແປ້ງແລະຜັກ ແຕ່ເນື່ອງຈາກມີສ່ວນຜະສົມຂອງນ້ຳມັນຫລາຍເກີນໄປ ເພື່ອເຮັດໃຫ້ເບິ່ງງາມແລະຫນ້າກິນ ອັນນີ້ແຫລະທີ່ເຮັດໃຫ້ນ້ຳຫນັກຂອງຜູ້ຮັບປະທານເພີ້ມຂຶ້ນໂດຍບໍ່ຮູ້ເນື້ອຄີງ.

ຂ້າພະເຈົ້າເຄີຍຖາມຜູ້ນຳບາງຄົນວ່າ "ກິນເຂົ້າຕອນເຊົ້າມາຫລືຍັງ" ເຂົາຕອບວ່າ "ບໍ່ມັກກິນອາຫານເຊົ້າ ມີແຕ່ກາເຟຈອກດຽວກໍຢູ່ໄດ້ຈົນເຖິງທ່ຽງແລ້ວ"

ຜູ້ນຳຝ່າຍຈິດວິນຍານ ສິ່ງທີ່ຈຳເປັນແລະສຳຄັນຢ່າງນຶ່ງສຳລັບຮ່າງກາຍກໍຄື ອາຫານຕອນເຊົ້າ ເພາະມັນມີຜົນຕໍ່ການເຮັດວຽກແລະພຶດຕິກັມທີ່ສະແດງອອກ. ຈາກການສຳລວດພົບວ່າ ນັກຮຽນທີ່ຮຽນດີແລະມີຄວາມປະພຶດຮຽບຮ້ອຍມັກຈະເປັນຜູ້ທີ່ໄດ້ກິນອາຫານເຊົ້າຢ່າງຖືກຕ້ອງ ແຕ່ມີນັກຮຽນຈຳນວນຫນ້ອຍນຶ່ງທີ່ໄປໂຮງຮຽນໂດຍບໍ່ໄດ້ກິນອາຫານເຊົ້າ ພໍຮອດຕອນບ່າຍກໍເກີດຄວາມຫິວ ຕອນພັກຮຽນກໍໄປຊື້ຂະຫນົມແລະນ້ຳອັດລົມກິນເພື່ອຮອງທ້ອງ ຊຶ່ງເປັນສິ່ງທີ່ບໍ່ມີປໂຍດຕໍ່ຮ່າງກາຍແລະສມອງເລີຍ ແຖມນ້ຳອັດລົມຍັງກັດກະເພາະອີກນຳ

ຜູ້ໃຫຍ່ກໍເຊັ່ນດຽວກັນ ໂດຍສະເພາະບັນດາຜູ້ນຳຄຣິສຕະຈັກ ຫລືຜູ້ທີ່ເຮັດວຽກຢູ່ໃນອອຟຟິສ ບາງຄົນລະເລີຍອາຫານຕອນເຊົ້າ ໂດຍກິນແຕ່ກາເຟຈອກດຽວກັບຂະຫນົມນຶ່ງກ້ອນເທົ່ານັ້ນ.

ມີການວິຈັຍພົບວ່າ ຄົນງານທີ່ເລີນເລີ່ ມີອາຣົມຫງຸດຫງິດ ແລະກໍ່ໃຫ້ເກີດອຸບັດຕິເຫດ ມັກຈະເກີດຂຶ້ນໃນຊ່ວງເວລາສິບເອັດໂມງຫລາຍທີ່ສຸດ ເພາະຄົນເຫລົ່ານີ້ບໍ່ໄດ້ກິນອາຫານເຊົ້າຢ່າງຖືກຕ້ອງນັ້ນເອງ.

ເປັນຫຍັງອາຫານເຊົ້າຈຶ່ງມີຄວາມສໍາຄັນຫລາຍຂະຫນາດນັ້ນ ຄໍາຕອບກໍຄື ເພາະຕລອດຄືນທ້ອງຂອງເຮົາຈະວ່າງ ປະຣິມານສານອາຫານໃນເລືອດຈະມີລະດັບຕໍ່າ ເຫມືອນເຄື່ອງຈັກທີ່ເຮັດວຽກມາຫລາຍຊົ່ວໂມງ ເຊື້ອໄຟຍ່ອມຫລຸດລົງໄປຈໍາເປັນຕ້ອງຕື່ມພະລັງງານອາຫານຕອນເຊົ້າຄວນຈະມີຄຸນຄ່ານຶ່ງໃນສາມຂອງຄວາມຕ້ອງການຂອງຮ່າງກາຍໃນນຶ່ງວັນ.

ພຣະຄັມພີສອນວ່າ "ທ່ານເປັນວິຫານຂອງພຣະເຈົ້າ... ຜູ້ໃດທໍາລາຍວິຫານຂອງພຣະເຈົ້າ ພຣະເຈົ້າຈະຊົງທໍາລາຍຜູ້ນັ້ນ" (1 ກຣທ 3:16, 17) ຖ້າຄິດໃນແງ່ນີ້ຫນ້າຢ້ານເນາະ ການປ່ອຍໃຫ້ຮ່າງກາຍເກີດຄວາມຫິວ ຍ່ອມເຮັດໃຫ້ຄິດແລະຕັດສິນໃຈຜິດພາດ ຊຶ່ງຖືວ່າເປັນການທໍາລາຍພຣະວິຫານຂອງພຣະເຈົ້າດ້ວຍ ແຕ່ໃນທາງກົງກັນຂ້າມ ການກິນຫລາຍເກີນໄປຈົນຕຸ້ຍ ເປັນໂຣກໄຂຂໍ້ ຄວາມດັນເລືອດສູງ ແລະເບົາຫວານ ກໍຖືວ່າເປັນຄວາມພຍາຍາມທີ່ຈະທໍາລາຍພຣະວິຫານຂອງພຣະເຈົ້າດ້ວຍເຊັ່ນກັນ.

**- ຢ່າຟ້າວຟັ່ງໃນການຮັບປະທານ** - ກະເພາະອາຫານຂອງຄົນເຮົາມີຮູບຮ່າງຄ້າຍໂຕເຈ (J) ຍາວປະມານສິບນິ້ວ ມີລັກສນະເປັນກ້າມເນື້ອ ຊຶ່ງບໍ່ສາມາດຈະບົດອາຫານທີ່ຫຍ້ຳບໍ່ລະອຽດໄດ້ ດັ່ງນັ້ນເພື່ອເຫັນແກ່ພຣະວິຫານຂອງພຣະເຈົ້າແລະຮັບການອວຍພຣະພອນ ໃນການຮັບປະທານອາຫານຂອງເຮົາທຸກມື້ນັ້ນ ຄວນຈະຫຍ້ຳຢ່າງຊ້າໆເພື່ອບົດໃຫ້ລະອຽດ.

ເພື່ອນຂອງຂ້າພະເຈົ້າຄົນນຶ່ງເປັນຜູ້ນໍາຄຣິສຕະຈັກ   ແຕ່ກ່ອນລາວບໍ່ມັກເຫັນຄວາມສໍາຄັນຂອງການຮັບປະທານອາຫານຫລາຍເທົ່າໃດຈົນເຖິງວັນນຶ່ງ ມີອັນຕ້ອງເຂົ້າໄປນອນໃນໂຮງພະຍາບານແລະຫມໍກວດພົບວ່າ ເຂົາເປັນມະເຮັງໃນຕ່ອມນ້ຳເຫລືອງຂັ້ນທີສອງ ເຂົາເລີ້ມຫັນມາໃຫ້ຄວາມສົນໃຈໃນເຣື່ອງອາຫານເປັນພິເສດ ໂດຍເຫນັ້ນຮັບປະທານອາຫານຈໍາພວກຜັກ ນົມແລະໄຂ່ເທົ່ານັ້ນ ຫມໍໄດ້ແນະນໍາວ່າ "ໃນການຮັບປະທານອາຫານນຶ່ງຄໍາ ຈະຕ້ອງໃຊ້ເວລາໃນການຫຍ້ຳຫ້າສິບເທື່ອ ແລ້ວຄ່ອຍກືນ" ດ້ວຍການປະຕິບັດຢ່າງເຄັ່ງຄັດ ເຖິງວ່າຈະບໍ່ຊ່ອຍໃຫ້ເພື່ອນຄົນນີ້ຫາຍຈາກໂຣກມະເຮັງໄດ້ ແຕ່ຢ່າງຫນ້ອຍກໍຊ່ອຍຍືດອາຫຍຸຂອງລາວອອກໄປໄດ້ອີກຫລາຍປີ.

**ອາຫານຣົດຈັດ** - ມິກຊັນນາຣີຄົນນຶ່ງບອກຂ້າພະເຈົ້າວ່າ "ຄົນເຮົາຖ້າກິນອາຫານໂດຍບໍ່ມີຫມາກເຜັດ ຕ້ອງຕາຍແນ່ນອນ" ນັ້ນເປັນຄວາມຈິງສໍາລັບຫລາຍຄົນ ອາຫານມື້ໃດທີ່ບໍ່ເຜັດກໍກິນບໍ່ລົງເລີຍ ຢ່າລືມວ່າ ອາຫານທີ່ຮ້ອນຂະຫນາດ ເຜັດຂະຫນາດ ເຄັມຂະຫນາດ ສົ້ມຂະຫນາດ ມັນຈະເປັນເຜົາຜານປາຍປະສາດສັມຜັດບໍຣິເວນຖົງກະເພາະອາຫານ ແລະສົ່ງໄປທີ່ລີ້ນ ປາກ ແລະລໍາຄໍ ອາຫານທີ່ເຜັດຂະຫນາດເຊັ່ນ ຫມາກເຜັດຂີ້ຫນູ ພິກໄທ ຈະຖືກສົ່ງລົງໄປໂດຍໄວໆ ແລະໄຕຈະທໍາການກໍາຈັດອອກໄປຢ່າງທັນທີທັນໃດ ການກິນອາຫານທີ່ຣົດຈັດ ຈຶ່ງເປັນການບັງຄັບໄຕໃຫ້ທໍາງານຢ່າງຫນັກ ແລ້ວວັນນຶ່ງເມື່ອໄຕທົນບໍ່ໄຫວກໍຈະວາຍວອດເອົາດື້ໆ.

ຜູ້ອ່ານຄົງຈະຈື່ຣາຍການທີວີທີ່ກ່ຽວກັບເຣື່ອງແປກໆໄດ້ ຄັ້ງນຶ່ງມີຄົນອາສາອອກມາກິນຫມາກເຜັດຂີ້ຫນູນັບເປັນກິໂລໆ ແລະບໍ່ດົນຊາຍຄົນນັ້ນກໍລົ້ມປ່ວຍແລະເສັຽຊີວິດໃນເວລາຕໍ່ມາ ເພາະໄຕຢຸດທໍາງານ.

ດັ່ງນັ້ນ ຜູ້ນໍາຝ່າຍຈິດວິນຍານຄວນຈະຮັກສາຮ່າງກາຍຊຶ່ງເປັນພຣະວິຫານຂອງພຣະເຈົ້າເອົາໄວ້ດີໆ ເພື່ອເປັນການຖວາຍກຽດແດ່ພຣະອົງ ດ້ວຍການກິນອາຫານເປັນເວລາ ແລະເລືອກອາຫານທີ່ມີຄຸນຄ່າແລະສົມດຸລ ຈໍາພວກຜັກ ຊີ້ນ ນົມ ໄຂ່ ແປ້ງ ແລະໄຂມັນ ໃນສັດສ່ວນທີ່ຖືກຕ້ອງ.

## 12. ຜູ້ນໍາກັບຣາຍໄດ້

ເມື່ອເບິ່ງຜູ້ນໍາຝ່າຍຈິດວິນຍານໃນຄຣິສຕະຈັກ ບໍ່ວ່າຈະເປັນນັກເທດ ສາສນາຈານ ສິດຍາພິບານ ຜູ້ປະກາດຂ່າວປະເສີດ ແລະອື່ນໆ ຈະພົບວ່າສ່ວນໃຫຍ່ໄດ້ຮັບຄ່າຄອງຊີບບໍ່ແນ່ນອນແລະມີຣາຍໄດ້ຕໍ່າກວ່າຣາຍຈ່າຍ.

ມີເຣື່ອງເລົ່າກັນວ່າ ສິດຍາພິບານຄອບຄົວນຶ່ງມີຣາຍໄດ້ຫນ້ອຍຈຶ່ງຢູ່ຢ່າງປະຫຍັດແລະອົດອອມ ວັນນຶ່ງພັຣຍາກັບມາຈາກຊອປປິ້ງພ້ອມກັບຖົງເຄື່ອງນຸ່ງ ພໍສາມີເຫັນຣາຄາທີ່ຈ່າຍແລ້ວເຖິງກັບຫນ້າຖອດສີ.

"ເປັນຫຍັງນ້ອງຊື້ຂອງຣາຄາແພງໆພວກນີ້ມາ ທັງທີ່ຮູ້ຢູ່ວ່າເງິນເຮົາບໍ່ພໍໃຊ້" ສາມີຖາມ

ພັຣຍາຍືນອຶດອາດກ່ອນທີ່ຈະເວົ້າຂຶ້ນວ່າ "ຕອນທີ່ນ້ອງເຂົ້າໄປເບິ່ງເຄື່ອງນຸ່ງແລະລອງຈັບມາເບິ່ງ ຊາຕານໄດ້ປາກົດຕົວຂຶ້ນຂ້າງຫນ້ານ້ອງແລ້ວບອກວ່າຊຸດນີ້ເຫມາະສົມສໍາລັບເຈົ້າຫລາຍ ໃສ່ແລ້ວຈະເບິ່ງງາມແລະມີສງ່າຣາສີຂຶ້ນ"

"ເປັນຫຍັງນ້ອງບໍ່ໃຊ້ຣິດອໍານາດຂອງພຣະເຢຊູຄຣິດຂັບໄລ່ມັນໃຫ້ໄປຢູ່ຂ້າງຫລັງເສັຽ"

“ນ້ອງອະທິຖານຂັບໄລ່ມັນແລ້ວ” ພັຣຍາບອກສຽງອ່ອຍ “ພໍມັນໄປຢືນຢູ່ຂ້າງຫລັງ ມັນກໍບອກອີກວ່າ ເຈົ້າໃສ່ຊຸດນີ້ເບິ່ງແລ້ວຈະງາມແລະມີຄ່າຂຶ້ນຫລາຍ ຊື້ເລີຍ...ບໍ່ຜິດຫວັງດອກ”

“!!!”

ສຳລັບຜູ້ນຳທີ່ທຳງານຢູ່ໃນອົງການແລະຫນ່ວຍງານຄຣິສຕຽນນັ້ນ ບໍ່ຄ່ອຍເດືອດຮ້ອນໃນເຣື່ອງງເງິນງທອງງປານໃດ ເພາະມີຣາຍໄດ້ທີ່ແນ່ນອນ ແລະບາງຄົນມີແຫລ່ງເງິນສນັບສນຸນ (ຈາກຕ່າງປະເທດ) ຢ່າງພຽງພໍ ອີກທັງສວັດດີການດີ ຈຶ່ງບໍ່ເປັນທີ່ສົງສັຍເລີຍວ່າ ເປັນຫຍັງຜູ້ຮັບໃຊ້ພຣະເຈົ້າຈຳນວນຫລາຍປະຈາກຄຣິສຕະຈັກໂຜ່ເຂົ້າສູ່ອົງການກັນເປັນແຖວໆ.

ນັກບໍຣິຫານການເງິນຄົນນຶ່ງກ່າວວ່າ “ຣາຍໄດ້ຫລື ຣາຍຈ່າຍບໍ່ສຳຄັນເທົ່າກັບຣາຍເຫລືອ!”

ຖ້າວ່າຜູ້ນຳບາງຄົນບໍ່ຕ້ອງໄປຄຶດເຖິງຣາຍເຫລືອ (ເງິນເກັບ) ແຕ່ຈະຫາເງິນມາອຸດຫນຸນຄອບຄົວໃຫ້ລືມຕາອ້າປາກໄດ້ແລະມີກິນລອດຕາຍໄປແຕ່ລະມື້ງກໍທືດຂຶ້ນຄໍແລ້ວ.

ຄັ້ງນຶ່ງ ມີການປະຊຸມໃຫຍ່ຂອງຜູ້ນຳຝ່າຍຈິດວິນຍານທົ່ວໄປ ແລະໄດ້ມີການອອກໃບສຳລວດສິດຍາພິບານທົ່ວໄປທີ່ເຂົ້າປະຊຸມປະມານນຶ່ງຮ້ອຍເຈັດສິບຄົນ ມີຂໍ້ນຶ່ງທີ່ຖາມວ່າ “ທ່ານມີຄວາມຄຶດທີ່ຈະປ່ຽນອາຊີບໄປເປັນຢ່າງອື່ນບໍ່?” ຄຳຕອບທີ່ໄດ້ຮັບຄື ມີສິດຍາພິບານແປດສິບສາມຄົນບໍ່ຄິດທີ່ຈະປ່ຽນອາຊີບ (ທີ່ບໍ່ຄິດຈະປ່ຽນອາດເປັນເພາະວ່າຮັກພຣະເຈົ້າ ເຊື່ອແລະວາງໃຈໃນການລ້ຽງດູຂອງພຣະອົງ ຫລືອາດເປັນເພາະສາເຫດອື່ນກໍບໍ່ໄດ້ຣະບຸຢ່າງຊັດເຈນເຫມືອນກັນ) ແຕ່ທີ່ຫນ້າຕົກໃຈຄື ມີສິດຍາພິບານແປດສິບຄົນທີ່ຢາກຈະປ່ຽນອາຊີບ (ຖ້າມີໂອກາດ)

ຫລັງຈາກນັ້ນບໍ່ດົນນານ ກໍມີມິດຊັນນາຣີຊາວຣາວາຍຄົນນຶ່ງ ໄດ້ສຳລວດເງິນເດືອນແລະສວັດດີການຂອງຜູ້ນຳຄຣິສຕຽນ ໃນຕຳແຫນ່ງສິດຍາພິບານ ຜູ້ຊ່ອຍສິດຍາພິບານ ແລະຜູ້ປະກາດ ຈຳນວນນຶ່ງຮ້ອຍຫ້າສິບຄົນ ອາຍຸໂດຍສະເລັ່ຽຂອງຜູ້ຮັບໃຊ້ພຣະເຈົ້າຢູ່ໃນລະຫວ່າງ 30-40 ປີ ສ່ວນໃຫຍ່ແຕ່ງງານແລ້ວແລະມີລູກສອງເຖິງສາມຄົນ.

ຈາກການສຳລວດພົບວ່າ ຜູ້ນຳຝ່າຍຈິດວິນຍານເຫລົ່ານີ້ຫລາຍກວ່າແປດສິບເປີເຊັນ ໄດ້ຄ່າຄອງຊີບຈາກຄຣິສຕະຈັກຫລືຄນະທີ່ຕົນສັງກັດຢູ່ ແລະທີ່ຫນ້າສົນໃຈຢ່າງຍິ່ງກໍຄື ລະດັບຣາຍໄດ້ຂອງພວກເຂົາກວ່າເຄິ່ງນຶ່ງບອກວ່າໄດ້ຮັບເງິນເດືອນນຶ່ງພັນເຖິງສາມພັນ ແລະເມື່ອຖາມວ່າພຽງພໍກັບຄ່າໃຊ້ຈ່າຍຫລືບໍ່ ຄຳຕອບກໍຄື “ບໍ່ພໍ”.

ເມື່ອຖາມຕໍ່ໄປວ່າ ພວກເຂົາມີຣາຍໄດ້ເພີ້ມຈາກບ່ອນອື່ນ ເຊັ່ນມີຄົນຊ່ອຍຖວາຍພິເສດ ຫລືຂາຍຂອງເລັກໆນ້ອຍໆ ຫລືໄປສອນແລະເທສນາທີ່ອື່ນແລະໄດ້ຮັບເງິນຖວາຍມາຫລືບໍ່ ຫລາຍກວ່າເຈັດສິບເຈັດເປີເຊັນຕອບວ່າ ບໍ່ມີເລີຍ. ຖາມວ່າພວກເຂົາມີເງິນເຫລືອເກັບໃນແຕ່ລະເດືອນຫລືບໍ່ ຄຳຕອບທີ່ບໍ່ຕ້ອງເດົາກໍຮູ້ໄດ້ໃນທັນທີວ່າ “ບໍ່ມີເລີຍ” ເງິນທີ່ໄດ້ມາຍັງບໍ່ພໍກັບຄ່າໃຊ້ຈ່າຍເລີຍ ແລ້ວຈະເຫລືອເກັບໄດ້ຢ່າງໃດລ່ະ!

ດ້ວຍເຫດນີ້ບໍ ຈຶ່ງເຮັດໃຫ້ເກີດໂຣກຄຣິສຕຽນ “ສມອງໄຫລ” ຄືອົງການແລະຫນ່ວຍງານທີ່ມີເງິນຫນາກາຍເປັນແມ່ເຫລັກດຶງດູດຜູ້ນຳຈາກຄຣິສຕະຈັກໄປຈົນຫມົດ.

ໃນຖານະທີ່ເຮົາເປັນຜູ້ນຳຝ່າຍຈິດວິນຍານ ຈະຕ້ອງຄຶດແລະພິຈາຣະນາເຣື່ອງນີ້ຢ່າງຮອບຄອບ ຫລາຍຄັ້ງເຮົາຕຳຫນິຜູ້ຮັບໃຊ້ຂອງພຣະເຈົ້າວ່າ ບໍ່ມີຄວາມອົດທົນ ບໍ່ມີຄວາມເຊື່ອ ບໍ່ໄວ້ວາງໃຈການລ້ຽງດູຂອງພຣະເຈົ້າ ທີ່ຫນັກກວ່ານັ້ນກໍຄື ກ່າວຫາວ່າສິດຍາພິບານເຫັນແກ່ເງິນແລະອື່ນໆ. ແຕ່ລືມຄຶດເຖິງພຣະຄຳຂອງພຣະເຈົ້າທີ່ບອກວ່າ “ຢ່າເອົາສອບໃສ່ສົບງົວທີ່ກຳລັງຢຽບເຂົ້າ ແລະ ຄົນງານກໍຄວນຈະໄດ້ຮັບຄ່າຈ້າງຂອງຕົນ” (1 ຕມທ 5:18) ຄຣິສຕະຈັກບາງແຫ່ງບໍ່ໄດ້ໃສ່ສົບງົວດອກ ແຕ່ໃຫ້ມັນກິນຫນ້ອຍແລະໃຊ້ວຽກຫລາຍໆ (ມີຣາຍໄດ້ຫນ້ອຍກວ່າຣາຍຈ່າຍ) ບໍ່ຊ້າບໍ່ນານງົວກໍຈະຈ່ອຍຜອມ (ບໍ່ພໍກິນ) ແລະຫມົດກຳລັງທີ່ຈະຢຽບເຂົ້າ (ຮັບໃຊ້ພຣະເຈົ້າ).

ມີເຣື່ອງນຶ່ງເລົ່າກັນມ່ວນໆວ່າ ເມື່ອສິດຍາພິບານສອງຄົນມາພົບກັນຕ່າງຈົ່ມເຖິງຣາຍໄດ້ຂອງຕົນເອງ.

“ມື້ວານນີ້ຂີ້ຝຸ່ນປິວເຂົ້າຕາພັຣຍາຂອງຂ້ອຍ ຕ້ອງໄປຫາຫມໍ“ ສິດຍາພິບານຄົນແຣກບອກພ້ອມກັບແກວ່ງຫົວ “ຫມົດໄປສອງຮ້ອຍ”

ສິດຍາພິບານຄົນທີສອງໄດ້ຍິນດັ່ງນັ້ນກໍແກວ່ງຫົວໄປມາ ແລ້ວເວົ້າດັ່ງງວ່າ “ຂອງເຈົ້າຍັງດີກວ່າຂອງຂ້ອຍ ເມື່ອສອງມື້ກ່ອນພັຣຍາຂອງຂ້ອຍໄປຊອປປີ້ງ ຖືກເສື້ອໂຕນຶ່ງປິວເຂົ້າຕາ...ຫມົດໄປສອງພັນ”

“!!!”

ຄຣິສຕະຈັກຈະຕ້ອງຄຶດສເມີວ່າ “ການຮັກສາຜູ້ນຳໄວ້ ຍາກຫລາຍກວ່າການສ້າງຜູ້ນຳ”

**ຄ່າຄອງຊີບ** - ຄຣິສຕະຈັກຄວນຈະໃຫ້ຄ່າຄອງຊີບແກ່ສິດຍາພິບານແລະຜູ້ປະກາດຕາມສະພາບຂອງທ້ອງຖິ່ນແລະເສຖກິດຄື ຖ້າເປັນຄຣິສຕະຈັກໃນເມືອງຈະຕ້ອງໃຫ້ຄ່າຕອບແທນສູງແດ່ ແຕ່ຖ້າເປັນຊົນນະບົດກໍໃຫ້ລົດລົງແດ່ ເອີ້ນວ່າ “ພໍສົມນ້ຳສົມເນື້ອ” ບໍ່ໃຫ້ຫລາຍຈົນເຫລືອເຟືອ ຫລືໃຫ້ຫນ້ອຍຈົນຂັດສົນ ຈົນເຖິງຄົນຂອງພຣະເຈົ້າທໍ້ຖອຍໃຈແລະກັບໄປຈັບປາເຫມືອນເດີມ.

ລະນຶກເຖິງຄຳອະທິຖານຂອງອາກູຣ໌ວ່າ "ຂໍຢ່າປະທານຄວາມຍາກຈົນຫລືຄວາມຮັ່ງມີແກ່ຂ້າພຣະອົງ ຂໍລ້ຽງຂ້າພຣະອົງດ້ວຍອາຫານທີ່ພໍດີແກ່ຂ້າພຣະອົງ ຢ້ານວ່າຂ້າພຣະ ອົງຈະອີ່ມ ແລະປະຕິເສດພຣະອົງ ແລ້ວເວົ້າວ່າ "ພຣະເຈົ້າເປັນຜູ້ໃດ" ຫລືຢ້ານວ່າຂ້າພຣະອົງຈະຍາກຈົນ ແລະຂະໂມຍ ແລະກະທຳໃຫ້ພຣະນາມພຣະເຈົ້າຂອງຂ້າພຣະອົງເປັນມົນທິນ" (ສພສ 30:8-9)

ເທົ່າທີ່ຜ່ານມາເຮົາເຫັນວ່າ ຄຣິສຕະຈັກລົ້ມເຫລວໃນລະບົບການຈ່າຍເງິນລ້ຽງດູຜູ້ຮັບໃຊ້ຂອງພຣະເຈົ້າ ເພາະເອົາມາດຖານຂອງໂລກທຸຣະກິດມາໃຊ້ ເຊັ່ນ ຈົບມັທຍົມໄດ້ເທົ່ານີ້ ຈົບປຣິນຍາຕຣີໄດ້ເທົ່ານັ້ນ ຫລືປຣິນຍາໂທຮັບເງິນອີກລະດັບນຶ່ງ ສ່ວນຄົນທີ່ບໍ່ຈົບອັນໃດກໍໄດ້ຮັບຕາມມີຕາມເກີດ ຢ່າລືມວ່າງານທຸຣະກິດເຫລົ່ານັ້ນຊອກຫາຄວາມຢູ່ລອດແລະຜົນກຳໄຣ ແຕ່ງານຂອງພຣະເຈົ້າກະທຳເພື່ອຝ່າຍຈິດວິນຍານ ເພື່ອຖວາຍກຽດແດ່ພຣະເຈົ້າແລະເພື່ອແຜ່ນດິນສວັນ ສະນັ້ນ ຕາມຄວາມເປັນຈິງແລ້ວ ມາດຖານຈະຕ້ອງແຕກຕ່າງກັນ ໂປໂລ ບອກວ່າ ເມື່ອກັບໃຈເປັນຄຣິສຕຽນແລ້ວ ກໍຈະບໍ່ພິຈາຣະນາ ຜູ້ໃດຕາມມາດຖານຂອງໂລກອີກຕໍ່ໄປ (ເບິ່ງ 2 ກຣທ 5:16)

ຈື່ໄດ້ບໍເມື່ອຊົນຊາດອິສຣາເອນອົບພະຍົບອອກຈາກ ການເປັນຂ້ອຍຂ້າຂອງເອຢິບ ພວກເຂົາຕ້ອງພະເນຈອນໃນຖິ່ນກັນດານເປັນເວລາເຖິງສີ່ສິບປີ ພຣະຄັມພີບັນທຶກເຖິງການລ້ຽງດູຂອງພຣະເຈົ້າວ່າ ມີມານາ (ອາຫານຈາກສວັນ) ຕົກລົງມາຮອບໆເຕັນໃນທຸກໆຕອນເຊົ້າພຽງພໍແກ່ຄວາມຕ້ອງການຂອງແຕ່ລະຄົນໃນຄອບຄົວ ນອກຈາກນັ້ນເຄື່ອງນຸ່ງແລະເກີບຂອງພວກເຂົາກໍບໍ່ເກົ່າຫລືຂາດໄປເລີຍ.

**ສວັດດີການ** - ຄຣິສຕະຈັກຂອງພຣະເຈົ້າຄວນຈະມີສວັດດີການໃຫ້ແກ່ຜູ້ນຳຕາມຄວາມເຫມາະສົມ ເພື່ອບໍ່ໃຫ້ເກີດຄວາມລຳບາກໃຈໃນການຮັບໃຊ້ ເຊັ່ນ ຄ່າເດີນທາງ (ຄ່າຣົດຫລືຄ່ານ້ຳມັນ) ຄ່າຮັກສາປິ່ນປົວ ຄ່າຊ່ອຍການສຶກສາຂອງລູກ ເປັນຕົ້ນ ຖ້າບໍ່ໄດ້ທັງຫມົດຢ່າງຫນ້ອຍໄດ້ຈັກເຄິ່ງນຶ່ງກໍຍັງດີ ເພາະໂດຍປົກກະຕິແລ້ວເງິນເດືອນສິດຍາພິບານກໍ "ຊັກຫນ້າບໍ່ເຖິງຫລັງ" ຢູ່ແລ້ວ ຫາກວ່າການເງິນຂອງຄຣິສຕະຈັກບໍ່ອຳນວຍ ກໍຄວນຫາຊ່ອງທາງອື່ນ ເຊັ່ນໃຫ້ສະມາຊິກທີ່ຄ່ອນຂ້າງມີຖານະການເງິນດີຊ່ອຍຖວາຍເປັນຣາຍບຸກຄົນ (ຫລືຕັ້ງກ່ອງຖວາຍເພື່ອຜູ້ຮັບໃຊ້ໂດຍສະເພາະ) ເຫມືອນດັ່ງທີ່ຄຣິສຕຽນຊາວຟີລິບປອຍໄດ້ຊ່ອຍເຫລືອໂປໂລ ເຖິງວ່າໂປໂລຈະຈາກໄປຢູ່ທີ່ເມືອງເທຊະໂລນິກແລ້ວກໍຕາມ ພວກເຂົາກໍຍັງຕິດຕາມຖວາຍຢ່າງສມ່ຳສເມີ ຈົນໂປໂລກ່າວວ່າ "ພວກເຈົ້າໄດ້ຝາກຂອງມາຊ່ອຍເຮົາກວ່າເທື່ອນຶ່ງ...ເຮົາໄດ້ຮັບຄົບຈຳນວນແລະມີບໍຣິບູນຢູ່ແລ້ວ ເຮົາກໍອີ່ມເຕັມຢູ່" (ຟລປ 4:15-18)

ຜູ້ນຳທີ່ຮັກ ເບິ່ງດູວ່າມີຄຣິສຕຽນຈັກຄົນທີ່ໄດ້ມີສ່ວນຖວາຍແກ່ຜູ້ຮັບໃຊ້ຂອງພຣະເຈົ້າ ແລະມີຄຣິສຕະຈັກຈັກແຫ່ງເຮັດໃຫ້ສິດຍາພິບານ "ອີ່ມຢູ່" ມີຈັກໂບດທີ່ບໍ່ເຮັດໃຫ້ຜູ້ຮັບໃຊ້ຂອງພຣະເຈົ້າຕ້ອງເທສນາດ້ວຍໄສ້ທີ່ກິ່ວແຫ້ງ.

ຜູ້ນຳຝ່າຍຈິດວິນຍານຄົນນຶ່ງໄດ້ໃຫ້ຂໍ້ຄິດວ່າ ໃນສັງຄົມເມື່ອກ່ອນນັ້ນ ມີຄວາມເມດຕາປານີແລະມີນ້ຳໃຈ ສັດທາໃນສາສນາຢ່າງແຮງກ້າຄົນເຮົາຈະລຸກຂຶ້ນແຕ່ເຊົ້າໆເພື່ອເຮັດອາຫານເອົາໄປຖວາຍພຣະ ແຕ່ພໍຫັນມາເຊື່ອພຣະເຈົ້າແລະເປັນຄຣິສຕຽນແລ້ວ ກັບຄິດວ່າຕົນຈະໄດ້ສິ່ງໃດຈາກຜູ້ຮັບໃຊ້ຂອງພຣະເຈົ້າ!

**ຜູ້ນຳຫລືສິດຍາພິບານ** - ເຮົາກ່າວເຖິງສະມາຊິກມາຫລາຍແລ້ວ ຂໍກ່າວເຖິງຜູ້ນຳຝ່າຍຈິດວິນຍານນຳ ອັນນີ້ສຳຄັນຫລາຍ ຜູ້ນຳຫລືສິດຍາພິບານນອກຈາກຈະມີຄວາມຈິງໃຈແລະຖວາຍຕົວແດ່ພຣະເຈົ້າແລ້ວ ເຂົາຈະຕ້ອງເປັນຄົນທີ່ຮູ້ຈັກບັງຄັບຕົນເອງ ມີສະຕິອັນດີຮອບຄອບແລະບໍ່ເປັນຄົນເຫັນແກ່ເງິນ (1 ຕມທ 3:2-3)

ຜູ້ນຳທີ່ດີຈະຕ້ອງຮູ້ຈັກປະມານຕົນເອງໃນການກິນແລະດື່ມ ການໃຊ້ຈ່າຍ ການນຸ່ງຫົ່ມ ມີຄວາມພໍດີໃນຄວາມເປັນຢູ່ໃນຊີວິດປະຈຳວັນມີສະຕິປັນຍາໃນການໃຊ້ຈ່າຍເງິນແຕ່ກີບແຕ່ລະອັດ ເອີ້ນວ່າໃຊ້ເງິນໃຫ້ເກີດປໂຍດຢ່າງສູງສຸດ ຮູ້ຈັກຈັດສັນງົບປະມານຣາຍຮັບຣາຍຈ່າຍຂອງຄອບຄົວໃນແຕ່ລະເດືອນ ທີ່ຕ້ອງລະມັດລະວັງໃຫ້ຫລາຍຄື ຜູ້ນຳບໍ່ຄວນເປັນຫນີ້ເປັນສິນ ບາງຄົນຜ່ອນບ້ານ ຜ່ອນທີ່ດິນ ແລະຜ່ອນຣົດ ພໍເສຖກິດຊຸດໂຊມລົງເທົ່ານັ້ນ ຄວາມໂກລາຫົນວຸ້ນວາຍກໍເກີດຂຶ້ນໃນຊີວິດທັນທີ ເຮັດໃຫ້ໃຈທີ່ໃສ່ລົງໃນງານກໍຫົວຫ່ຽວໄປ ແລະທີ່ສຳຄັນຫລາຍກວ່ານັ້ນຄື ຈະເປັນການເສັຽຫາຍຢ່າງປະເມີນຄ່າບໍ່ໄດ້ ຫາກຜູ້ນຳຂໍຢືມເງິນຈາກສະມາຊິກໃນໂບດ ເພາະຕໍ່ຈາກນັ້ນຄວາມເຄົາຣົບນັບຖືກໍຈະເສື່ອມລົງຢ່າງໄວ ແລ້ວການດູຖູກດູຫມິ່ນກໍຈະຕິດຕາມມາ ໃນຂນະດຽວກັນ ຜູ້ນຳທີ່ມີເງິນກໍຕ້ອງບໍ່ເຮັດຕົວເປັນຄົນຟຸ່ມເຟືອຍ ແລະໃຊ້ເງິນຢ່າງບໍ່ຮູ້ຄຸນຄ່າ ມີເພື່ອນຂອງຂ້າພະເຈົ້າຄົນນຶ່ງເປັນມິດຊັນນາຣີ ມັກຫລິ້ນກອ໋ຟເປັນຊີວິດຈິດໃຈ ໃນວັນແຣກທີ່ເຮົາຕົກລົງຈະຮ່ວມງານຮັບໃຊ້ພຣະເຈົ້າດ້ວຍກັນໃນຄຣິສຕະຈັກ ເຂົາບອກວ່າ "ທີ່ອະເມຣິກາການຫລິ້ນກອ໋ຟຖືວ່າເປັນເຣື່ອງທຳມະດາ ກິລາຊນິດນີ້ຜູ້ໃດກໍຫລິ້ນໄດ້"

ແຕ່ຂ້າພະເຈົ້າຂໍຮ້ອງເຂົາວ່າ "ຢ່າຫລິ້ນເລີຍ ເພາະຄົນເຮົາຖືວ່າກອ໋ຟເປັນກິລາຂອງຄົນມີເງິນ ເມື່ອສະມາຊິກໃນໂບດເຫັນທ່ານໄປຫລິ້ນກອ໋ຟ ເຂົາຈະຄິດໃນແງ່ລົບວ່າ ຄຣິສຕຽນສູ້ອົດສາຖວາຍເງິນເພື່ອການຮັບໃຊ້ພຣະເຈົ້າ ແຕ່ທ່ານກັບເອົາໄປຫລິ້ນກອ໋ຟຊ້ຳ"

ຫລາຍຄົນຫາເງິນບໍ່ພໍຈ່າຍ ບໍ່ແມ່ນເພາະຣາຍໄດ້ຫນ້ອຍ ແຕ່ເພາະ "ຣົດນິຍົມສູງ ແຕ່ຣາຍໄດ້ຕ່ຳ" ຕ້ອງກິນອາຫານດີໆໃນໂຮງແຮມໃຫຍ່ຮ້ານອາຫານຫລູງຫລືກິນແຟສຟູດສ໌ຕາມຫ້າງສັພສິນຄ້າດັງໆ ເຄື່ອງຄົວຕ້ອງຂອງຕ່າງປະເທດ ຕ້ອງງາມສເມີດ້ວຍເຄື່ອງສຳອາງຈາກປາຣີສໃສ່ເຄື່ອງນຸ່ງທີ່ມີຍີ່ຫໍ້ດີໆຈາກອັງກິດ ຕ້ອງມີຣົດຂັບທັງໆທີ່ເດືອນນຶ່ງເກືອບຈະບໍ່ມີເງິນພໍຕື່ມນ້ຳມັນ ເພາະຖືວ່າຫນ້າຕາເປັນເຣື່ອງໃຫຍ່ ເຫມືອນ

ກັບຄືນທາງພາກເຫນືອເວົ້າວ່າ "ບໍ່ມີກິນ ບໍ່ມີໃຜເອົາໄຟມາສ່ອງທ້ອງ ບໍ່ມີນຸ່ງ ບໍ່ມີເອ້ຢ້ອງ ພີ່ນ້ອງດູຖູກດູແຄນ" ແປງ່າຍໆວ່າ ບໍ່ມີກິນນັ້ນບໍ່ມີໃຜຮູ້ ເພາະບໍ່ມີໃຜເອົາໄຟມາສ່ອງເບິ່ງທ້ອງຂອງເຮົາ ແຕ່ຖ້າບໍ່ມີເສື້ອຜ້າງາມໆສວມໃສ່ ນັ້ນພີ່ນ້ອງກໍພາກັນດູຖູກດູຫມິ່ນວ່າເປັນຄົນຍາກຈົນ ສະນັ້ນຈຶ່ງຕ້ອງໃຫ້ພາຍນອກດູດີໄວ້ກ່ອນ!

**ສລຸບ** - ເພື່ອຄຣິສຕະຈັກຈະໄດ້ມີສງ່າຣາສີເປັນທີ່ຖວາຍກຽດແດ່ພຣະເຈົ້າ ຄຣິສຕຽນຈະຕ້ອງເອົາໃຈໃສ່ດູແລຜູ້ນຳຂອງຕົນດ້ວຍການຖວາຍຢ່າງຈິງໃຈແລະພຽງພໍ ສ່ວນທາງຜູ້ນຳເອງຈຳຕ້ອງເຊື່ອແລະວາງໃຈໃນການລ້ຽງດູຂອງພຣະເຈົ້າ ຍອມຮັບສະພາບຄວາມເປັນຈິງຂອງຄຣິສຕະຈັກ ຜູ້ນຳທີ່ດີຈະຕ້ອງຮູ້ຈັກບັງຄັບຕົນເອງ ແລະດຳເນີນຊີວິດຢ່າງພໍດີແລະພໍພຽງ.

ຜູ້ນຳຕ້ອງຄິດສເມີວ່າ "ເງິນເປັນສິ່ງສຳຄັນ ແຕ່ບໍ່ແມ່ນສຳຄັນທີ່ສຸດ" ຢ່າຟ້າວທໍ້ແທ້ໃຈແລະຄິດທີ່ຈະປ່ຽນງານ ເພາະພຣະເຈົ້າຊົງເອີ້ນທ່ານໃຫ້ມາບົວຣະບັດຮັບໃຊ້ພຣະອົງ ສະນັ້ນ ຈົ່ງກະທຳດ້ວຍການທຸ່ມເທຊີວິດຈິດໃຈ ແລະເມື່ອທ່ານເຮັດຢ່າງສຸດຄວາມສາມາດແລ້ວ ພຣະເຈົ້າຈະຊົງຮັບຜິດຊອບໃນສ່ວນທີ່ເຫລືອທັງຫມົດ.

## 13. ຜູ້ນຳກັບການແຕ່ງກາຍ

"ຈົ່ງປະດັບກາຍດ້ວຍເຄື່ອງບໍຣິສຸດ ນະມັສການພຣະເຈົ້າ" (ພສສ 29:2)

ຈາກພຣະຄຳພີຕອນນີ້ເຮົາຈະເຫັນວ່າ ພຣະເຈົ້າບໍ່ພຽງ ຫ່ວງໃຍຈິດວິນຍານຂອງຜູ້ນຳເທົ່ານັ້ນ ແຕ່ຊົງເອົາພຣະທັຍໃສ່ໃນບຸກຄະລິກບັນດາລູກຂອງພຣະອົງນຳ.

ໃນການປະຊຸມຂອງອະນຸຊົນຕາມຄ້າຍຕ່າງໆ ຂ້າພະເຈົ້າມັກສອນວິຊາການເລືອກຄູ່ຄອງ ແລະມັກຕັ້ງຄຳຖາມພວກວັຍຣຸ່ນໃນທຳນອງນີ້ສເມີ "ແມ່ນຫຍັງເປັນສິ່ງທຳອິດທີ່ເຮັດໃຫ້ທ່ານປະທັບໃຈໃນຕົວຜູ້ອື່ນ" ຄຳຕອບເກືອບຈະເຕັມຮ້ອຍກໍຄື "ຮູບຮ່າງຫນ້າຕາ ແລະຣົດນິຍົມໃນການແຕ່ງກາຍ" ຮອງລົງມາຄືກິຣິຍາມາຣະຍາດ ແລະນິສັຍໃຈຄໍ ແຕ່ຖ້າຈະໃຫ້ເລືອກຄົນຮັກ ພວກເຂົາຈະເລືອກເອົາຄົນທີ່ຮັກພຣະເຈົ້າເປັນອັນດັບແຮກ!

ອີກຄັ້ງນຶ່ງໃນການອົບຮົມນັກສຶກສາຄຣິສຕຽນລະດັບມະຫາວິທະຍາລັຍ ຂ້າພະເຈົ້າຖາມກຸ່ມຜູ້ຍິງວ່າ "ສິ່ງທຳອິດທີ່ທ່ານຈະເລືອກຜູ້ຊາຍມາເປັນແຟນຄືຫຍັງ" ມີຄົນນຶ່ງຕອບວ່າ "ເບິ່ງທີ່ເລັບມືຂອງເຂົາ"

"ເປັນຫຍັງຕ້ອງເບິ່ງທີ່ເລັບມື"

"ຄືວ່າ ຖ້າເລັບມືສະອາດສະແດງວ່າ ທັງຕົວກໍສະອາດນຳ"

ມີເສື້ອຜ້າຍີ່ຫໍ້ດັງຍີ່ຫໍ້ນຶ່ງທີ່ໂຄສນາວ່າ "ເອກລັກຂອງສຸພາບບູຣຸດ" ຫມາຍຄວາມວ່າ ຜູ້ໃດໄດ້ສວມໃສ່ແລ້ວດູດີແລະເດັ່ນກວ່າຄົນອື່ນ ນອກຈາກນັ້ນຍັງມີນໍ້າຢາດັບກິ່ນຕົວຜູ້ຊາຍທີ່ມີຄຳເວົ້າດັງລະເບີດເມືອງວ່າ "ກິນບໍ່ໄດ້ແຕ່...ເທ່!"

ເບິ່ງເຫມືອນວ່າ ຜູ້ຄົນໃນສັງຄົມປັດຈຸບັນແລ້ວເຫນັ້ນຫນັກໃນເຣື່ອງບຸກຄະລິກຂອງການແຕ່ງກາຍ ໂຮງແຮມຊັ້ນນຳຫລາຍບ່ອນບໍ່ຍອມໃຫ້ຄົນທີ່ແຕ່ງກາຍບໍ່ສຸພາບຍ່າງເຂົ້າໄປໃຫ້ຮົກຫູຮົກຕາ ເຊັ່ນ ນຸ່ງສົ້ງຂາສັ້ນ ຫລືໃສ່ເກີບແຕະ ຄົນພວກນີ້ມີສາຍາວ່າ 5 ຍ ຄື "ຜົມຍາວ ສົ້ງຍີນ ເກີບຍ່າງ ເສື້ອຍືດ ແລະສະພາຍຢ່າມ"

ເມື່ອຂ້າພະເຈົ້າໄດ້ໄປຫລິ້ນທີ່ຊຽງໃຫມ່ ໄດ້ເດີນທາງຂຶ້ນໄປທ່ຽວດອຍສຸເທບ ຊຶ່ງສູງແລະຫົນທາງຄົດລ້ຽວຫລາຍ ເມື່ອຂຶ້ນໄປເຖິງທີ່ສູງແລ້ວເບິ່ງລົງມາຈະເຫັນວິວເມືອງຊຽງໃຫມ່ງົດງາມຫລາຍ ໂດຍສະເພາະທາງເທິງນັ້ນຈະມີອາກາດເຢັນສະບາຍຕລອດທັງປີ ສິ່ງທີ່ພາດບໍ່ໄດ້ຄື ໄປຢ້ຽມຊົມພຣະຣາຊວັງພູພິງ ມີດອກໄມ້ເມືອງຫນາວຫລາກຫລາຍຊນິດ ສ່ວນກຸຫລາບນັ້ນມີດອກໃຫຍ່ຫລາຍແລະສວຍງາມ ທີ່ຫນ້າປະຕູທາງເຂົ້າ ສັງເກດເຫັນວ່າມີເຈົ້າຫນ້າທີ່ຕຳລວດແລະຍາມເຝົ້າຢູ່ ຜູ້ທີ່ຈະເຂົ້າໄປຢ້ຽມຊົມພຣະຣາຊວັງຈະຕ້ອງແຕ່ງກາຍສຸພາບ ຜູ້ຍິງທີ່ນຸ່ງສົ້ງຂາສັ້ນຫລືກະໂປງສັ້ນຫ້າມເຂົ້າຢ່າງເດັດຂາດ ຈະຕ້ອງໄປເຊົ່າສິ້ນຈາກຮ້ານຄ້າດ້ານນອກມາສວມໃສ່ ເຈົ້າຫນ້າທີ່ຈະອະນຸຍາດໃຫ້ຜ່ານເຂົ້າໄປໄດ້.

ເຣື່ອງນີ້ເຮັດໃຫ້ຄິດເຖິງຄຣິສຕຽນທີ່ໄປນະມັສການທີ່ໂບດໃນວັນອາທິດ ເພື່ອເຂົ້າເຝົ້າພຣະເຈົ້າຜູ້ເປັນຈອມກະສັດແຫ່ງໂລກແລະສວັນຄວນຈະພິຖີພິຖັນຫລາຍກວ່ານັ້ນຈັກເທົ່າໃດ!

ໃນຖານະທີ່ເຮົາເປັນຄຣິສຕຽນໃນລະດັບຜູ້ນຳ ຈຳເປັນຈະຕ້ອງແຕ່ງກາຍໃຫ້ດູດີແລະສຸພາບຮຽບຮ້ອຍ ທັນສມັຍແລະເຫມາະແກ່ກາລະເວລາເປັນທີ່ຖວາຍກຽດແດ່ພຣະເຈົ້າ ເພາະນອກຈາກຈະເປັນການສ້າງຄວາມຫມັ້ນໃຈໃຫ້ແກ່ຕົນເອງແລ້ວ ຍັງໃຫ້ຄວາມເຊື່ອຖືແກ່ຜູ້ພົບເຫັນດ້ວຍ ແຖມຍັງເປັນແບບຢ່າງແກ່ບັນດາສະມາຊິກໃນຄຣິສຕະຈັກອີກດ້ວຍ ຂໍໃຫ້ຄິດສເມີວ່າ ຜູ້ນຳແຕ່ງຕົວຢ່າງໃດ ຜູ້ຕາມກໍຈະແຕ່ງຕົວ ຢ່າງນັ້ນເຫມືອນກັນ ຜູ້ນຳຝ່າຍຈິດວິນຍານຄວນຈະຖືຄະຕິວ່າ "ແຕ່ງຕົວດີມີຊັຍໄປກວ່າເຄິ່ງ".

ຈົ່ງເຂົ້າໃຈວ່າ ການແຕ່ງຕົວດີໃນທີ່ນີ້ ບໍ່ໄດ້ຫມາຍຄວາມວ່າ ຕ້ອງແຕ່ງດ້ວຍເສື້ອຜ້າຣາຄາແພງ ເພາະຂອງຖືກຫລືຣາຄາພື້ນໆເຮົາກໍ ສາມາດເຮັດໃຫ້ມັນເບິ່ງມີຄ່າໄດ້.

ພຣະຄັມພີບອກວ່າ ພຣະເຈົ້າຂອງເຮົາຊົງເປັນ "ຜູ້ດີ" ຮອບຄອບ ດ້ວຍເຫດນີ້ຄຣິສຕຽນຄວນຈະເປັນເຫມືອນກັບພຣະອົງ "ເຫດ ສັນນັ້ນທ່ານທັງຫລາຍຕ້ອງເປັນຄົນດີທີ່ສຸດ ເຫມືອນຢ່າງພຣະບິດາຂອງທ່ານຜູ້ຊົງສະຖິດຢູ່ໃນສວັນຊົງເປັນຜູ້ດີທີ່ສຸດ" (ມທ 5:48)

ໂປໂລໄດ້ບອກແກ່ຜູ້ນຳຄຣິສຕະຈັກໂກຣິນໂທວ່າ "ເຈົ້າທັງຫລາຍຈົ່ງປະຕິບັດຕາມແບບຢ່າງຂອງເຮົາ ເຫມືອນເຮົາປະຕິບັດຕາມ ແບບຢ່າງຂອງພຣະຄຣິດ" (1 ກຣທ 11:1) ຄວາມຫມາຍທີ່ແທ້ຈິງຂອງພຣະຄັມພີຕອນນີ້ຄື ໃຫ້ຄຣິສຕຽນເປັນເຫມືອນພຣະເຢຊູທາງດ້ານ ຄວາມປະພຶດ ຄຸນທັມ ຈະຣິຍະທັມ ແລະຈິດວິນຍານ ແຕ່ເຮົາຍັງສາມາດນຳຄຳກ່າວຂອງພຣະອົງມາຊົມໃຊ້ກັບການແຕ່ງກາຍໄດ້ດ້ວຍ.

ໂປໂລຍັງກ່າວຕໍ່ໄປອີກວ່າ ຄຣິສຕຽນເປັນຂອງພຣະຄຣິດ ທີ່ບໍ່ແມ່ນຂຽນໄວ້ດ້ວຍນ້ຳຫມຶກ ແຕ່ຂຽນດ້ວຍພຣະວິນຍານຂອງພຣະເຈົ້າ ແລະພຣະອົງບໍ່ໄດ້ຂຽນໄວ້ທີ່ແຜ່ນສີລາ ແຕ່ຂຽນໄວ້ທີ່ແຜ່ນດວງໃຈມະນຸດ (ເບິ່ງ 2 ກຣທ 3:2, 3)

ມີເຣື່ອງນຶ່ງເລົ່າກັນວ່າ ສມັຍທີ່ກຣີກເຮືອງອຳນາດ ອະເລັກຊັນເດີ ແມ່ທັບຫນຸ່ມຜູ້ຍິ່ງໃຫຍ່ ໄດ້ເຮັດສົງຄາມຂະຫຍາຍອານາຈັກໄປທົ່ວຢູ ໂຣບແລະເອເຊັຽ ວັນນຶ່ງ ອະເລັກຊັນເດີສະເດັດກວດເບິ່ງກອງທັບ ຂນະທີ່ຊົງດຳເນີນໄປຖ້າມກາງເຫລົ່າທະຫານ ສາຍຕາກໍເຫລືອບໄປເຫັນ ທະຫານຄົນນຶ່ງມີລັກສນະ ແປກກວ່າຄົນອື່ນ ຈຶ່ງສະເດັດເຂົ້າໄປໃກ້ແລະຊົງກ່າວຖາມວ່າ "ເຈົ້າຊື່ຫຍັງ"

ທະຫານຄົນນັ້ນເຮັດຄວາມເຄົາຣົບແລະຕອບວ່າ "ອະເລັກຊັນເດີ ຂ້ານ້ອຍ"

"ເຮົາໃຫ້ເຈົ້າເລືອກເອົານຶ່ງໃນສອງຢ່າງ" ກະສັດຜູ້ເປັນຈອມທັບກ່າວ "ຢ່າງແຣກປ່ຽນຊື່ຂອງເຈົ້າເສັຽ ຫລືຢ່າງທີສອງປ່ຽນເຄື່ອງແຕ່ງ ກາຍຂອງເຈົ້າ!"

ເພາະທະຫານຄົນນັ້ນມີຜົມຍຸ້ງລຸງລັງ ຫນວດເຄົາກໍບໍ່ໄດ້ແຖ ເຄື່ອງນຸ່ງຍັບຍີ່ແລະສົກກະປົກ ບໍ່ສົມກັບການເປັນທະຫານໃນກອງທັບອັນ ກຽງໄກຂອງອະເລັກຊັນເດີມະຫາຣາຊາເລີຍ ຊຶ່ງເປັນກອງທັບທີ່ຊື່ສຽງທາງດ້ານຄວາມມີຣະບຽບແລະເຄັ່ງຄັດໃນວິນັຍ.

ພຣະເຢຊູຄຣິດຊົງເປັນຈອມທັບຂອງຜູ້ນຳຝ່າຍຈິດວິນຍານ ຖ້າຄົນຢາກເຫັນພຣະເຈົ້າໃຫ້ເບິ່ງທີ່ພຣະເຢຊູຄຣິດ ຖ້າຄົນຢາກເຫັນພຣະເຢຊູ ຄຣິດໃຫ້ເບິ່ງທີ່ຄຣິສຕຽນ ຊຶ່ງເປັນຜູ້ນຳຝ່າຍຈິດວິນຍານ.

ບໍ່ວ່າທ່ານຈະເປັນສາສນາຈານ ສິດຍາພິບານ ນັກເທດ ນັກປະກາດ ຫລືເປັນຜູ້ນຳໃນລະດັບໃດ ບໍ່ຄວນແຕ່ງຕົວເບິ່ງແລ້ວຊອມຊໍ່ເສື້ອຍັບ ຍູ່ຍີ່ ຜົມຍຸ້ງລຸງລັງ ຫນວດເຄົາຣົກຄຶ້ມເຫມືອນບໍ່ໄດ້ພົບມີດແຖມາຫລາຍມື້ ເບິ່ງເສື້ອຜ້າເຫມືອນກັບວ່າຜິດກັບເຄົາຣົດມາ ເກີບກໍມີການອ້າປາກ ປະທ້ວງ ຫລືຝຸ່ນຈັບແລະກຳລັງເອີ້ນຫາຢາຂັດ ຈຳເປັນຢ່າງຍິ່ງທີ່ຜູ້ນຳຈະຕ້ອງແຕ່ງຕົວໃຫ້ຮຽບຮ້ອຍ ເພາະຕ້ອງຢືນຢູ່ຖ້າມກາງສາຍຕາຂອງ ຄົນນັບບໍ່ຖ້ວນ.

ຂໍກ່າວໄປເຖິງບັນດາສັດຕຣີທີ່ເປັນຜູ້ນຳ ບໍ່ວ່າຈະເປັນພັຣຍາຂອງສິດຍາພິບານ ລູກສາວຂອງນັກເທດ ຫລືມັຄນາຍົກ ແລະສັດຕຣີທີ່ເຮັດ ວຽກຢູ່ໃນອົງການຄຣິສຕຽນອື່ນໆ ຄຣິສຕຽນທົ່ວໄປມັກຈະບໍ່ສະບາຍໃຈເມື່ອເຫັນສັດຕຣີຄຣິສຕຽນສ່ວມໃສ່ກະໂປງ (ສິ້ງ) ສັ້ນ ຫລືໃສ່ເສື້ອ ເປີດອົກ ປະເພດ "ໂຊນົມ ຜົມທອງ ເກາະອົກ ສາຍດ່ຽວ ແອວລອຍ ໂຊສະບື ສົ້ນຕຶກ ແລະອະໂນແນະ ຄິກຂຸ"

ສັດຕຣີຂອງພຣະເຈົ້າບໍ່ຄວນຈະໃສ່ກະໂປງຫລືເສື້ອສັ້ນ ເວົ້າຫນ້າເວົ້າຫລັງ ເບິ່ງຊະເວີບຊະວາບ ແຕ່ງຫນ້າທາປາກດ້ວຍສີຈັດຈ້ານ ອີກ ທັງປະດັບປະດາດ້ວຍແກ້ວແຫວນເງິນທອງຈົນແພວພາວຊໍ່າກັບຕູ້ທອງຄຳເຄື່ອນທີ່ ລະລານຕາໄປຫມົດ ຂໍໃຫ້ເຮົາຄິດສເມີວ່າ ເຮົາແຕ່ງຕົວ ເພື່ອຖວາຍກຽດແດ່ພຣະຄຣິດ ແລະເມື່ອເຮົາໄປໂບດເຮົາກໍໄປເພື່ອນະມັສການພຣະເຈົ້າ ບໍ່ແມ່ນໄປແຕ່ງຕົວປະຊັນອັນແຂ່ງຫລືທຳເໝືອນກັບ ວ່າແຕ່ງໄປປະກວດແຟຊັ່ນໂຊ.

ຜູ້ຍິງບາງຄົນແຕ່ງຕົວແບບເວລາໂຈນເຫັນແລ້ວຍິ້ມແປ້ນເລີຍ ເລັ້ມຕົ້ນທີ່ຕຸ້ມຫູຄຳ ສ້ອຍຄໍຄຳ ແຫວນເພັດປະດັບນິ້ວ ສ້ອຍຂໍ້ມືຄຳ ຫລື ນາລິກາຝັງເພັດ ເສື້ອຜ້າກໍຕ້ອງຍີ່ຫໍ້ຂອງນອກ ແລະອື່ນໆ.

ຄຣິສຕຽນທີ່ຮັກ ການໃສ່ຄຳເອ້ຢ່າງນັ້ນມັນມີອັນຕະຣາຍເຖິງຊີວິດ ຂອງມີຄ່າເຫລົ່ານີ້ມີໄວ້ກໍດີ ບໍ່ຖືວ່າເປັນຄວາມຜິດບາບປະການໃດ ແຕ່ເກັບໄວ້ທີ່ບ້ານຫລືຝາກໄວ້ໃນຕູ້ເຊັຟ ທີ່ທະນາຄານ ຂໍໃຫ້ເຮົາມາອວດພຣະເຢຊູຄຣິດກັນເຖີດ ດີກວ່າມາອວດຄວາມຮັ່ງຮວຍກັນ!

ພຣະຄັມພີກ່າວເຖິງຜູ້ຍິງຄົນນຶ່ງທີ່ເປັນແບບຢ່າງໃນດ້ານການແຕ່ງກາຍ ນາງປະດັບພາຍໃນຈິດໃຈດ້ວຍຄວາມປະພຶດທີ່ນອບນ້ອມແລະ ດີງາມ ນາງມີເຄື່ອງປະດັບທີ່ບໍ່ຮູ້ເສື່ອມສູນນັ້ນຄື ຈິດໃຈທີ່ສງົບແລະສຸພາບ ນາງມີຄວາມຖ່ອມໃຈຍອມເຊື່ອຟັງ ທ່ານເດົາຊື່ອອກແລ້ວບໍ ນາງຄື ນາງຊາຣາ (1 ປຕ 3:3-6)

ຂໍຄວນລະວັງ ຢ່າເຫນັ້ນການແຕ່ງກາຍສະເພາະວັນອາທິດເທົ່ານັ້ນ ເພາະທຸກໆວັນຜູ້ນຳຝ່າຍຈິດວິນຍານກໍຢູ່ ຕໍ່ຫນ້າພຣະພັກພຣະເຈົ້າ ດ້ວຍເຊັ່ນກັນ. ໃນແຕ່ລະວັນຜູ້ນຳຝ່າຍຈິດວິນຍານຄວນຈະດູແລຮັກສາຕົນເອງໃຫ້ດີ ຈະເຮັດໃຫ້ທ່ານດູສົດໃສຊວນມອງ ບໍ່ວ່າຈະຢືນຢູ່ທີ່ ທັມມາດ ພົບປະເວົ້າຈາກັບສະມາຊິກ ອອກໄປຢ້ຽມຢາມ ໄປປະກາດຂ່າວປະເສີດ ຫລືໄປຕິດຕໍ່ທຸຣະອື່ນໆ ການດູແລຕົນເອງໃຫ້ດູດີຢູ່ສເມີນັ້ນ

ເຮັດໃຫ້ຄົນຮອບຂ້າງເຫັນວ່າ ພຣະເຈົ້າຂອງເຮົາບໍ່ແມ່ນເປັນພຣະເຈົ້າທີ່ເລັກນ້ອຍຫລືອຊ່ອມຊໍ່ ແຕ່ເປັນພຣະເຈົ້າທີ່ສະອາດ ບໍຣິສຸດ ແລະຫນ້າເຄົາຣົບນັບຖື.

ເມື່ອເວົ້າເຖິງເຣື່ອງການແຕ່ງກາຍເຮັດໃຫ້ນຶກເຖິງເຣື່ອງຂອງເດັກຊາຍນ້ອຍຄົນນຶ່ງ ເບິ່ງຮູບພາບໃນອັລບັ້ມເຫັນຮູບວັນແຕ່ງງານແລ້ວກໍຫັນໄປຖາມຜູ້ເປັນແມ່ວ່າ "ຄົນ  ທີ່ຢືນຄູ່ກັບແມ່ແມ່ນໃຜ"

ແມ່ຊະໂງກໄປເບິ່ງແລ້ວຕອບວ່າ "ກໍພໍ່ຂອງລູກຫັ້ນເດ່"

"ແລ້ວຜູ້ຊາຍທີ່ຢູ່ບ້ານດຽວກັບເຮົາ ທີ່ມີຫນວດເຄົາຮຸງຮັງ ແຕ່ງຕົວສົກກະປົກ ແລະເຫມັນສາບນີ້ເດ່ ແມ່ນໃຜ"

"!!!"

ຜູ້ນຳຝ່າຍຈິດວິນຍານສົມຄວນຈະ

- ແຕ່ງກາຍສະອາດ
- ມີຮອຍຍິ້ມທີ່ຫນ້າປະທັບ
- ຫນ້າຕາຜິວພັນດູສົດໃສ
- ແຂ້ວທີ່ຂາວສະອາດແລະປາສຈາກກິ່ນປາກ
- ມີເລັບມືທີ່ຕັດແຕ່ງຢ່າງຮຽບຮ້ອຍ
- ຫນວດເຄົາທີ່ແຖຢ່າງກ້ຽງດີ
- ຊົງຜົມທີ່ເບິ່ງດີແລະຫວີເປັນຣະບຽບຮຽບຮ້ອຍ
- ການຍ່າງຢ່າງສງ່າຜ່າເຜີຍ

ສິ່ງເຫລົ່ານີ້ຍ່ອມບົ່ງບອກເຖິງຊີວິດທີ່ມີຄຸນນະພາບແລະປະສິດທິພາບຂອງຜູ້ຮັບໃຊ້ພຣະເຈົ້າ ຫາກຜູ້ນຳອາບນ້ຳທຸກວັນ ໃຊ້ຢາລະງັບກິ່ນຕົວແລະກິ່ນເຫື່ອເປັນປະຈຳ ຖູແຂ້ວແລະໃຊ້ໄຫມຂັດຊອກແຂ້ວທຸກຄັ້ງຫລັງຮັບປະທານອາຫານປ່ຽນເຄື່ອງນຸ່ງແລະຊຸດຊັ້ນໃນທຸກມື້ ທ່ານກໍຈະມີກິ່ນຕົວທີ່ສະອາດແລະສົດຊື່ນຢູ່ສເມີ ແຕ່ຖ້າບໍ່ໄດ້ເຮັດຕາມຂໍ້ແນະນຳເຫລົ່ານີ້ ຕໍ່ໃຫ້ໃຊ້ນ້ຳຫອມວິເສດຂະຫນາດໃດກໍຈະຊ່ອຍຫຍັງບໍ່ໄດ້ ອັນທີ່ຈິງຖ້າຮ່າງກາຍຂອງເຮົາສະອາດຫມົດຈົດແລ້ວ ບໍ່ຈຳເປັນຕ້ອງສີດນ້ຳຫອມຫຍັງລົງໄປອີກ ເພາະນ້ຳຫອມກິ່ນທີ່ທ່ານມັກ ຄົນອື່ນອາດຈະບອກວ່າເຫມັນກໍເປັນໄດ້ ກິ່ນຕົວທີ່ດີຄື ການທີ່ຕົວບໍ່ມີກິ່ນໃດໆເລີຍ.

ການແຕ່ງກາຍໃຫ້ເຫມາະສົມທີ່ເປັນຜູ້ຮັບໃຊ້ພຣະເຈົ້າ ຫລືຜູ້ນຳຄຣິສຕະຈັກ ຈະຕ້ອງມີກົດເກນບາງຢ່າງ ຄື ເປັນແບບອະນຸຣັກນິຍົມຮຽບຮ້ອຍ ແລະເປັນທາງການຢູ່ສເມີ   ເສື້ອຜ້າຕັດຫຍິບຢ່າງປານີດ ເຫມາະກັບຮູບຮ່າງຂອງຜູ້ສວມໃສ່ ບໍ່ນ້ອຍຈົນຄັບຫລືຫລວມ ການແຕ່ງຕົວຂອງທ່ານຈະເປັນສັນຍານບົ່ງບອກແກ່ຄົນຂ້າງໆວ່າ ທ່ານເປັນຄົນເອົາການເອົາງານ ພ້ອມສເມີທີ່ຈະກ້າວໄປສູ່ຄວາມສຳເຣັດໃນການປະຕິບັດຮັບໃຊ້ພຣະເຈົ້າ.

ນອກຈາກນັ້ນ ການແຕ່ງກາຍດີແລະມີບຸກຄະລິກທີ່ສງ່າຜ່າເຜີຍ ຍັງມີສ່ວນຊ່ອຍໃຫ້ທ່ານເຂົ້າສັງຄົມໄດ້ຢ່າງບໍ່ເຂີນ ແລະແນ່ນອນຜົນທີ່ຕິດຕາມມາຄື ທ່ານຈະເປັນແບບຢ່າງຂອງການແຕ່ງກາຍດີແກ່ຜູ້ນຳຄົນອື່ນໆດ້ວຍ.

ແຕ່ສິ່ງສຳຄັນເຫນືອສິ່ງອື່ນໃດສຳລັບຜູ້ນຳຄື ບໍ່ພຽງແຕ່ງກາຍດີເທົ່ານັ້ນ ແຕ່ຕ້ອງມີຊີວິດທີ່ເປັນແບບຢ່າງທີ່ດີດ້ວຍ "ຈົ່ງປະດັບກາຍດ້ວຍພຣະເຢຊູຄຣິດເຈົ້າ" (ຣມ 13:14) ແລະ "ໃຫ້ປະດັບດ້ວຍການກະທຳດີ" (1 ຕມທ 2:10)

## 14. ຜູ້ນຳກັບຜູ້ສນັບສນຸນ

ໃນກອງທັບຕ້ອງມີທະຫານທີ່ທຳການຮົບຢູ່ແນວຫນ້າ ແລະມີກອງກຳລັງທີ່ຄ່ອຍສິ່ງສະບຽງບຳຣຸງຢູ່ແນວຫລັງສັນໃດ ໃນພຣະຣາຊກິດຂອງພຣະເຈົ້າຈຳຕ້ອງມີຜູ້ທີ່ອອກໄປປະກາດຂ່າວປະເສີດຢູ່ເບື້ອງຫນ້າ ແລະມີຜູ້ທີ່ຄອຍຊ່ອຍເຫລືອດ້ານປັດຈັຍຕ່າງໆຢູ່ເບື້ອງຫລັງສັນນັ້ນ.

ຄວາມຈິງທີ່ປາກົດຢູ່ໃນງານຂອງພຣະເຈົ້າປັດຈຸບັນນີ້ ຄື ບາງຄັ້ງມີແຕ່ພວກແນວຫນ້າກ້າຕາຍ ແຕ່ຄຣິສຕະຈັກຂາດການສົ່ງສະບຽງໄປບຳຣຸງ ຂາດອາວຸດຍຸທໂທປະກອນແລະຂາດພວກເສນາຮັກ ຂາດກອງພລາທິການແລະຂາດກອງຫນຸນ ດ້ວຍເຫດນີ້ຈຶ່ງເຮັດໃຫ້ງານຂອງພຣະເຈົ້າບໍ່ກ້າວຫນ້າໄປເທົ່າທີ່ຄວນ.

ເຮົາອະທິຖານກັນວ່າ ໃນອີກບໍ່ຫລາຍປີຂ້າງຫນ້າ ຈຳນວນຄຣິສຕຽນໃນປະເທດຕ່າງໆຈະເພີ້ມຂຶ້ນອີກຫລາຍແສນຄົນ ມີຄຣິສຕະຈັກແລະມີສິດຍາພິບານເພີ້ມຂື້ນນັບພັນ ມີຜູ້ຖວາຍຕົວນັບຮ້ອຍໆ ແລະມີການສົ່ງມິດຊັນນາຣີອອກໄປຍັງຕ່າງປະເທດອີກຫລາຍສິບຄົນ.

ເຮົາອະທິຖານອ້ອນວອນຕໍ່ພຣະເຈົ້າໂດຍຕັ້ງໃຈວ່າ ທຸກໆເດືອນຈະມີຄຣິສຕະຈັກເກີດຂຶ້ນໃນເມືອງຂອງເຮົາຢ່າງຫນ້ອຍສອງແຫ່ງ ແຕ່ຄວາມຫວັງຄ່ອນຂ້າງເລືອນລາງແລະເປັນໄປໄດ້ຍາກ ຫາກເຮົາບໍ່ກະຕຽມຄົນທີ່ເປັນຄຣິສຕຽນຊຶ່ງເປັນແນວຫລັງຢູ່ໃນຂນະນີ້ໃຫ້ພ້ອມທີ່ຈະເປັນຜູ້ສນັບສນຸນ.

ທຸກມື້ນີ້ວົງການຂອງເຮົາຕ້ອງການຄຣິສຕຽນຢ່າງບາຣະນາບາ ຊຶ່ງ "ເປັນຄົນດີ ເຕັມໄປດ້ວຍພຣະວິນຍານບໍຣິສຸດແລະຄວາມເຊື່ອ" (ກຈກ 11:24) ຄຸນສົມບັດຂອງບາຣະນາບາບໍ່ແມ່ນພຽງເທົ່ານີ້ ພຣະຄັມພີຍັງບອກຕໍ່ໄປອີກວ່າເປັນ "ລູກແຫ່ງການຫນຸນນ້ຳໃຈ" ນີ້ເປັນສິ່ງທີ່ຄຣິສຕະຈັກຂອງພຣະເຈົ້າຂາດເຂີນແລະຕ້ອງການຢ່າງມາກ.

ຜູ້ນຳທີ່ຮັກ ທຸກມື້ນີ້ມີຄົນຢູ່ສອງປະເພດ ຄື ປະເພດແຣກເປັນລູກແຫ່ງການຫນຸນນ້ຳໃຈ ແລະປະເພດທີສອງເປັນລູກແຫ່ງການເຮັດໃຫ້ຄົນອື່ນທໍ້ແທ້ໃຈ - ທ່ານຢູ່ໃນປະເພດໃດ?

ອາດກ່າວໄດ້ວ່າ ພື້ນເບື້ອງຫລັງຂອງຄົນເຮົານັ້ນມາຈາກຄຳສອນທີ່ວ່າ ຕົນເປັນທີ່ເພິ່ງຂອງຕົນ ຄືຕົນເອງຕ້ອງມາກ່ອນ ສ່ວນຄົນອື່ນມາທີ່ຫລັງ ເປັນສັງຄົມທີ່ເຫັນແກ່ຕົວ ແບບ "ນີໃຜຍາວສາວໄດ້ສາວເອົາ" ກົງກັນຂ້າມກັບຄຳສອນຂອງພຣະຄັມພີທີ່ບອກວ່າ ຄົນອື່ນມາກ່ອນ ຕົນເອງມາທີ່ຫລັງ ພຣະເຢຊູຊົງກ່າວວ່າ "ຈົ່ງຮັກເພື່ອນບ້ານເຫມືອນຮັກຕົນເອງ" ສັງເກດໄດ້ຈາກລະຄອນທີວີ ມີແຕ່ຄວາມອິດສາ ຣິສຍາ ປັດແຂ່ງປັດຂາ ແບ່ງພັກແບ່ງພວກ ບໍ່ຕ້ອງການເຫັນຄົນອື່ນໄດ້ດີ ຄິດໂກງຄໍຣັປຊັ່ນ ເຮັດເລື້ອຍໆຄວາມຜິດບາບເຫລົ່ານີ້ກໍແຜ່ລະບາດເຂົ້າມາຍັງຄຣິສຕະຈັກນຳ ເພາະຄົນຂອງພຣະເຈົ້າໄປຮັບເອົາອິດທິພົນຊົ່ວຮ້າຍໂດຍບໍ່ທັນຮູ້ຕົວ (ຫລືຮູ້ຕົວແຕ່ບໍ່ຍອມແກ້ໄຂ).

ມີເຣື່ອງນຶ່ງເລົ່າກັນວ່າ ໃນເຊົ້າວັນອາທິດແມ່ເຖົ້າຜູ້ໃຈດີໄປເຄາະປະຕູຫ້ອງລູກຊາຍ ພ້ອມກັບເອີ້ນຢ່າງອ່ອນໂຍນວ່າ "ລູກເອີຍ ຕື່ນເທາະນີ້ກໍສາຍແລ້ວເດ່"

"ເປັນຫຍັງຕ້ອງຕື່ນລະແມ່" ລູກຊາຍຕອບສຽງອູ້ອີ້

"ເພາະມື້ນີ້ເປັນວັນອາທິດ ເຮົາຕ້ອງໄປໂບດແຕ່ເຊົ້າ"

ລູກຊາຍລຸກຂຶ້ນມານັ່ງທີ່ຂອບຕຽງ ຫນ້າຕາຍັບຍູ່ຍີ່ "ຂ້ານ້ອຍບໍ່ຢາກໄປໂບດເລີຍ ເພາະຢູ່ຫັ້ນບໍ່ມີຜູ້ໃດມັກຂ້ານ້ອຍ ພວກເຂົາເບິ່ງຂ້ານ້ອຍດ້ວຍສາຍຕາທີ່ດູຖູກຢຽດຫຍາມ ເວລາຂ້ານ້ອຍເວົ້າພວກເຂົາກໍຫົວຂວັນ ເຫັນຂ້ານ້ອຍເປັນຕົວຕລົກ ບາງຄົນເຫັນຂ້ານ້ອຍເປັນແຕ່ພຽງຄົນຮັບໃຊ້ແລະຫຍິບຍື່ນເສດເງິນໃຫ້ຂ້ານ້ອຍ"

"ບໍ່ແມ່ນລູກຄິດຫລາຍໄປເອງບໍ" ຜູ້ເປັນແມ່ອອຍໃຈ

"ແຕ່ຂ້ານ້ອຍບໍ່ມັກ" ລູກຊາຍທຳທ່າອິດອາດ "ເປັນຫຍັງຂ້ານ້ອຍຕ້ອງໄປໂບດ"

"ມີເຫດຜົນສາມປະການທີ່ລູກຕ້ອງໄປໂບດ ຄືນຶ່ງລູກເປັນຄຣິສຕຽນ ສອງລູກອາຍຸສາມສິບປີແລ້ວ ແລະສາມລູກເປັນສິດຍາພິບານຂອງຄຣິສຕະຈັກ"

"!!!"

ນີ້ເປັນເຣື່ອງຕລົກທີ່ປົນເປື້ອນກັບຄວາມເຈັບປວດ ແລະບາງສ່ວນມັນອາດເປັນເຣື່ອງຈິງທີ່ເກີດຂຶ້ນໃນຄຣິສຕະຈັກໃດຄຣິສຕະຈັກນຶ່ງແລ້ວກໍໄດ້.

ໂປໂລຂຽນຈົດຫມາຍໄປເຖິງສະມາຊິກໃນຄຣິສຕະຈັກເທຊະໂລນິກວ່າ "ພີ່ນ້ອງທັງຫລາຍເອີຍ, ພວກເຮົາວອນຂໍໃຫ້ເຈົ້າທັງຫລາຍຮັບຮູ້ຄົນທີ່ເຮັດການຫນັກຫນ່ວງຢູ່ຖ້າມກາງພວກເຈົ້າ ຄືຜູ້ຄຸ້ມຄອງແລະເຕືອນສະຕິພວກເຈົ້າໃນພຣະນາມຂອງອົງພຣະຜູ້ເປັນເຈົ້າ ຈົ່ງນັບຖືແລະຮັກເຂົາຢ່າງຫລາຍທີ່ສຸດ ເພາະເນື່ອງດ້ວຍການງານຂອງເຂົານັ້ນ ຈົ່ງຢູ່ຮ່ວມກັນດ້ວຍຄວາມສງົບສຸກ" (1 ທຊນ 5:12, 13)

ພຣະທັມຕອນນີ້ບອກວ່າ ຜູ້ຮັບໃຊ້ຂອງພຣະເຈົ້ານັ້ນເປັນຄົນມີກຽດ ມີສັກສີ ຢູ່ໃນຖານະຜູ້ນຳແລະຜູ້ປົກຄອງດູແລຝ່າຍຈິດວິນຍານ ມີຫນ້າທີ່ຄອຍເທສນາສັ່ງສອນ ຕັກເຕືອນຄົນທີ່ເຮັດຜິດແລະຫນຸນໃຈໃຫ້ສະມາຊິກຕິດສນິດຢູ່ກັບພຣະເຈົ້າແລະເຮັດການດີ ສະມາຊິກທຸກຄົນຈະຕ້ອງເຊື່ອຟັງສິດຍາພິບານ ເຄົາຣົບນັບຖືແລະຮັກຜູ້ຮັບໃຊ້ພຣະເຈົ້າໃຫ້ຫລາຍ.

ພຣະທັມເຮັບເຣີໄດ້ເວົ້າເຖິງຄວາມຈິງຂໍ້ນີ້ແກ່ຄຣິສຕຽນອີກວ່າ "ທ່ານທັງຫລາຍຈົ່ງຍອມຟັງແລະຍອມຢູ່ໃນໂອວາດຜູ້ນຳຂອງພວກທ່ານ ເພາະເຂົາເຫລົ່ານັ້ນດູແລຮັກສາຈິດວິນຍານຂອງພວກທ່ານຢູ່ ເຫມືອນນຶ່ງຜູ້ທີ່ຈະຕ້ອງສເນີຣາຍງານ (ຕໍ່ພຣະເຈົ້າ)" (ຮຣ 13:17)

**ຕົວຢ່າງຜູ້ສນັບສນຸນ** - ອາກິລາແລະປີຊະກິລາ

ເມື່ອເຮົາອ່ານໃນພຣະທັມກິຈການບົດທີ່ 18 ຈະພົບເຣື່ອງຣາວຂອງສາມີພັຣຍາຄູ່ນຶ່ງທີ່ເປັນຄຣິສຕຽນ ຊຶ່ງເປັນຕົວຢ່າງທີ່ດີໃນການເປັນລູກແຫ່ງການຫນູນນ້ຳໃຈ ພວກເຂົາບໍ່ແມ່ນນັກເທດ ບໍ່ເຄີຍໄປຮຽນພຣະຄັມພີຢ່າງຈິງຈັງ ແລະບໍ່ໄດ້ສຳເຣັດການອົບຮົມຝ່າຍຈິດວິນຍານຈາກສະຖາບັນບ່ອນໃດ ແລະຄອບຄົວນີ້ກໍບໍ່ໄດ້ຮັບໃຊ້ພຣະເຈົ້າແບບເຕັມເວລາ ແຕ່ພວກເຂົາມີສ່ວນຊ່ອຍເຮັດໃຫ້ງານຂອງພຣະເຈົ້າເກີດຜົນດີ ແລະຄຣິສຕະຈັກຈະເຣີນກ້າວຫນ້າໄປຢ່າງຫລວງຫລາຍ.

ຜູ້ເປັນສາມີຊື່ ອາກິລາ (ຊື່ນີ້ແປວ່າ ນົກອິນຊີ) ສ່ວນພັຣຍາຊື່ ປີຊະກິລາ (ຫມາຍເຖິງຜູ້ຍິງສູງອາຍຸຕົວນ້ອຍໆ) ທັງສອງເປັນຊາວຢິວທີ່ໄປຕັ້ງຫລັກແຫລ່ງທຳມາຫາກິນຢູ່ໃນກຸງໂຣມ ປະເທດອີຕາລີ ມີອາຊີບເປັນຊ່າງຟອກຫນັງສັດ ຊຶ່ງເປັນງານທີ່ຫນັກແລະຕ້ອງທົນຕໍ່ກິ່ນເຫມັນ ແຕ່ທັງສອງ ຮັກພຣະເຈົ້າຫລາຍ.

ຕໍ່ມາເມື່ອຈັກກະພັດ ກລາວດີໂອ ຂຶ້ນປົກຄອງໂຣມ ແລະມີຄຳສັ່ງໃຫ້ຂັບໄລ່ພວກຢິວໃຫ້ອອກໄປຈາກຣາຊອານາຈັກ ອາກິລາແລະປີຊະກິລາຕ້ອງອົບພະຍົບລີ້ພັຍໄປຢູ່ທີ່ເມືອງໂກຣິນໂທ ທັງສອງໄດ້ທຳງານຢ່າງຫນັກດ້ວຍການໄປຊອກຫາຊື້ຫນັງສັດມາຟອກແລະນຳມາຫຍິບເປັນເຕັນແລະເກັບເພື່ອຂາຍ ນັບວ່າຕ້ອງໃຊ້ຄວາມອົດທົນແລະໃຊ້ຝີມືນຳ.

ຈາກກິຈການ 18:3, 4 ເຮົາພົບຄວາມຈິງປະການແຣກ ຄື **ເປັນຄຣິສຕຽນທຳມະດາໆແຕ່ສາມາດຮັບໃຊ້ (ສນັບສນູນ) ພຣະເຈົ້າໄດ້** ເມື່ອໂປໂລເດີນທາງມາປະກາດທີ່ກຸງອາແທນ ແລະເລີຍມາທີ່ເມືອງໂກຣິນໂທ ເຂົາບໍ່ຮູ້ຈັກຜູ້ໃດເລີຍ ເມື່ອໄດ້ພົບກັບອາກິລາແລະປີຊະກິລາແລະຮູ້ວ່າທັງສອງເປັນຄຣິສຕຽນ ເຂົາກໍດີອົກດີໃຈ (ຂໍ້ 1-2) ເນື່ອງດ້ວຍໂປໂລກໍເປັນຊ່າງຫຍິບເຕັນເຫມືອນກັນ ຜົນທີ່ໄດ້ອີກຢ່າງນຶ່ງຄື ເປັນຊ່ອງທາງທີ່ຈະເຮັດໃຫ້ປະກາດເຣື່ອງຂອງພຣະເຢຊູຄຣິດໄດ້ງ່າຍຂຶ້ນ.

ພຣະຄັມພີບັນທຶກວ່າ "ໂປໂລຈຶ່ງໄປຫາຄົນທັງສອງນັ້ນ ແລະໄດ້ອາສັຍຢູ່ກັບເຂົາ...ທຸກວັນຊະບາໂຕໂປໂລເຄີຍໂຈດຖຽງກັນໃນໂຮງທັມມະເທສນາ ຊັກຊວນພວກຢິວພ້ອມທັງພວກກຣີກໃຫ້ເຊື່ອ (ຂໍ້ 2-4)

ຂອບພຣະຄຸນພຣະເຈົ້າທີ່ສາມີພັຣຍາຄູ່ນີ້ມີອາຊີບເພື່ອຈະຮັບໃຊ້ພຣະເຈົ້າ ສນັບສນູນງານຂອງພຣະອົງທັງທາງຕົງແລະທາງອ້ອມ ໂດຍໃຫ້ການຕ້ອນຮັບຂັບສູ້ໂປໂລຄົນຂອງພຣະເຈົ້າດ້ວຍມິດຕະພາບອັນດີ –ແລະເປັນກຳລັງໃຈໃຫ້ແກ່ໂປໂລໃນການປະກາດຂ່າວປະເສີດ ຊຶ່ງເປັນພາຣະກິດທີ່ເຕັມໄປດ້ວຍຄວາມຍາກລຳບາກ ຖ້າມກາງພວກຢິວແລະພວກກຣີກທີ່ສ່ວນໃຫຍ່ມີຈິດໃຈດື້ດ້ານ.

ອາກິລາແລະປີຊະກິລາແຕກຕ່າງຈາກຄຣິສຕຽນຫລາຍຄົນໃນປັດຈຸບັນ ຊຶ່ງເຫັນວ່າຜູ້ຮັບໃຊ້ຂອງພຣະເຈົ້າເປັນພຽງລູກຈ້າງຂອງຄຣິສຕະຈັກ ພໍສິ້ນເດືອນກໍຈ່າຍເງິນເດືອນໄປ ໃນຖານະຂອງຄນະທັມມະກິຈທີ່ມີອຳນາດເດັດຂາດຢູ່ໃນມື ສາມາດທີ່ຈະຊີ້ເປັນຕາຍຊີ້ປາຍເປັນໄດ້. ສິດຍາພິບານຈະຕ້ອງເຊື່ອຟັງແລະເຮັດຕາມພວກເຂົາທຸກຢ່າງ ຫາກບ່າຍບ່ຽງຫລືຂັດຂືນຈະຖືກເພັ່ງເລັ່ງ ພິຈາຣະນາແລະສົ່ງຜົນຕໍ່ຫມໍ້ເຂົ້າແກງຂອງສິດຍາພິບານເອງດ້ວຍ.

ພຣະຄັມພີບອກວ່າ ໂປໂລໄດ້ອາສັຍທຳການຂອງພຣະເຈົ້າຢູ່ກັບສາມີພັຣຍາຄຣິສຕຽນຄູ່ນີ້ (ຂໍ້3) ແນ່ນອນທັງສອງບໍ່ພຽງເປີດບ້ານຕ້ອນຮັບໂປໂລໃຫ້ພັກອາສັຍເທົ່ານັ້ນ ແຕ່ພວກເຂົາສນັບສນູນງານຂອງພຣະເຈົ້າໃນດ້ານອື່ນໆດ້ວຍ ເຊັ່ນ ໃຫ້ອາຫານ ເຄື່ອງນຸ່ງຫົ່ມ ຕລອດຈົນເຖິງສິ່ງອຳນວຍຄວາມສະດວກທີ່ຈຳເປັນແລະຢ່າງພຽງພໍ ເຮັດໃຫ້ໂປໂລຮູ້ສຶກອົບອຸ່ນແລະສະບາຍໃຈ ມີສັນຕິສຸກທີ່ຈະອອກໄປເປັນພຍານເຣື່ອງພຣະເຢຊູຄຣິດ ເວົ້າຈາກັບຊາວຢິວໃນທຸກວັນຊະບາໂຕ.

ອາກິລາແລະປີຊະກິລາຄິດດີວ່າ ການທຳຄຸນປໂຍດແກ່ຜູ້ນຳຄຣິສຕະຈັກ ນັກເທດ ຜູ້ປະກາດຂ່າວປະເສີດນັ້ນເທົ່າກັບກະທຳຕໍ່ພຣະເຢຊູຄຣິດໂດຍຕົງ ແລະພຣະເຈົ້າຈະບໍ່ຊົງລືມສິ່ງທີ່ພວກເຂົາກະທຳເລີຍ ແຕ່ຈະຕອບແທນເປັນຢ່າງດີ.

ພຣະເຢຊູຄຣິດຊົງກ່າວວ່າ "ຜູ້ໃດທີ່ໃຫ້ນ້ຳເຢັນແກ່ຜູ້ຮັບໃຊ້ພຣະເຈົ້າພຽງຈອກນຶ່ງ ຜູ້ນັ້ນຈະຂາດບຳເຫນັດກໍບໍ່ໄດ້ ເພາະວ່າພຣະເຈົ້າບໍ່ໄດ້ຊົງອະຍຸດຕິທັມ ຊຶ່ງຈະຊົງລືມການງານທີ່ພວກເຂົາໄດ້ເຮັດ ແລະຄວາມຮັກທີ່ທ່ານໄດ້ສະແດງຕໍ່ພຣະນາມຂອງພຣະອົງ ຄືການຮັບໃຊ້ໄພ່ພົນຂອງພຣະອົງເຫມືອນດັ່ງພວກທ່ານຍັງຮັບໃຊ້ຢູ່" (ຮຮ 6:10)

ປະການຕໍ່ມາ ທີ່ເຮົາໄດ້ເຫັນແບບຢ່າງຈາກຊີວິດຂອງອາກິລາແລະປີຊະກິລາທີ່ສນັບສນູນງານຂອງພຣະເຈົ້າໃຫ້ເກີດຜົນດີຄື **ການຮ່ວມໄມ້ຮ່ວມມືກັນອອກໄປປະກາດຂ່າວປະເສີດ** (ກຈກ 18:18, 19) ເຣື່ອງມີຢູ່ວ່າ ວັນນຶ່ງໂປໂລປາຖນາທີ່ຈະໄປປະກາດທີ່ຊີເຣັຍ ແລະເລີຍໄປເຖິງເມືອງເອເຟໂຊ ພຣະຄັມພີບັນທຶກພາບຢ່າງສວຍງາມວ່າ "ປີຊະກິລາແລະອາກິລາກໍໄປນຳເຫມືອນກັນ" ແລະຄັນມາຍັງເອເຟໂຊໂປໂລໄດ້ປ່ອຍປີຊະກິລາແລະອາກິລາໄວ້ທີ່ນັ້ນ" ເພື່ອຈະໃຫ້ຢູ່ດູແລຜູ້ເຊື່ອໃຫມ່ໃຫ້ຈະເຣີນເຕີບໃຫຍ່ຂຶ້ນໃນຝ່າຍວິນຍານ.

ເຫັນບໍ່ ຊີວິດຂອງສາມີພັຣຍາຄູ່ນີ້ເປັນພຣະພອນຢ່າງຫລວງຫລາຍ ພຣະວິນຍານບໍຣິສຸດຊົງເລັ່ງພວກເຂົາໃຫ້ຮ່ວມເດີນທາງຮ່ວມກັບໂປໂລເພື່ອໄປປະກາດຂ່າວປະເສີດ ຕອນແຣກພວກເຂົາໄດ້ໃຫ້ທີ່ພັກອາສັຍແກ່ຜູ້ຮັບໃຊ້ຂອງພຣະເຈົ້າ ຮວມທັງໃຫ້ອາຫານ –ເຄື່ອງນຸ່ງ ແລະການຫນູນໃຈ ຂອບພຣະຄຸນພຣະເຈົ້າ ເມື່ອມາເຖິງຕອນນີ້ ຄົນທັງສອງໄດ້ກ້າວຫນ້າຝ່າຍຈິດວິນຍານໄປອີກຕອນນຶ່ງຄື ຍອມປະຖິ້ມວຽກງານ ຢຸດພັກອາຊີບແລະການທຳມາຫາກິນໄວ້ກ່ອນ ປິດບ້ານແລ້ວອອກໄປຮັບໃຊ້ພຣະເຈົ້າຮ່ວມກັບຜູ້ນຳ.

ເມື່ອອາກີລາແລະປີຊະກີລາໃຊ້ອາຊີບຂອງຕົນໃນການບົວລະບັດຮັບໃຊ້ພຣະເຈົ້າ ແລະສນັບສນູນຜູ້ນໍາຝ່າຍຈິດວິນຍານ ເຮົາເຊື່ອວ່າ ສະມາຊິກໃນຄຣິສຕະຈັກປັດຈຸບັນກໍສາມາດເຮັດໄດ້ເຫມືອນກັນ.

ຂ້າພະເຈົ້າຮູ້ຈັກສິດຍາພິບານຄອບຄົວນຶ່ງ ຊຶ່ງເປັນຜູ້ຮັບໃຊ້ພຣະເຈົ້າຢູ່ໃນຄຣິສຕະຈັກນ້ອຍໆໃນຕ່າງເມືອງ ຣາຍຮັບຂອງໂບດບໍ່ພໍທີ່ຈະລ້ຽງດູຄົນຂອງພຣະເຈົ້າ ວັນທໍາມະດາຕອນເຊົ້າເຖິງທ່ຽງເຂົາຈະອອກໄປຢ້ຽມຢາມແລະປະກາດຂ່າວປະເສີດ ພໍຕົກຕອນຄໍ່າປະມານຫ້າໂມງແລງເຂົາຈະເຂັນຣົດອອກໄປຂາຍອາຫານທີ່ຣິມຖນົນ ຊຶ່ງຣາຍໄດ້ດີພໍສົມຄວນ ຂາຍຈົນເຖິງເກົ້າໂມງຈຶ່ງເກັບເຄື່ອງກັບບ້ານ ສ່ວນວັນອາທິດຈະຢຸດເພື່ອນະມັສການ ແລະມັກຈະຢຸດຂາຍເມື່ອມີງານປະຊຸມພິເສດຕ່າງໆຂອງຄຣິສຕະຈັກ.

ຕໍ່ມາມີການທົດລອງເກີດຂຶ້ນ ເມື່ອຂາຍດີບຂາຍດີ ມີຣາຍໄດ້ເດືອນລະເປັນແສນໆຂຶ້ນໄປ ແທນທີ່ເຂົາຈະຂະຫຍາຍເວລາການຂາຍອອກໄປຈົນເຖິງທ່ຽງຄືນ ເພື່ອກອບໂກຍເງິນ ເພາະຖືຄະຕິທີ່ວ່າ "ນໍ້າຂຶ້ນໃຫ້ຮີບຕັກ" ແຕ່ເຂົາກັບປິດຮ້ານກັບບ້ານໄວຂຶ້ນ ແລະຢຸດຂາຍເລື້ອຍໆຂຶ້ນເພື່ອຈະອອກໄປຮັບໃຊ້ພຣະເຈົ້າ ຂ່າວທີ່ໄດ້ຮັບຈາກຄອບຄົວນີ້ຄັ້ງລ່າສຸດ ເຂົາຢຸດຂາຍອາທິດລະສາມວັນຄື ເສົາ ອາທິດ ແລະຈັນ ຄົນແຖວນັ້ນຈຶ່ງຄິດວ່າ ສິດຍາພິບານຄົນນີ້ຮັ່ງມີແລ້ວ ຊຶ່ງແທ້ຈິງເຂົາທໍາງານຫາເງິນເພື່ອຈະມີໂອກາດຮັບ ໃຊ້ພຣະເຈົ້າເທົ່ານັ້ນ.

ປະການສຸດທ້າຍ **ຮ່ວມກັນສ້າງຜູ້ນໍາ** ໃນຕອນປາຍຂອງກິຈການບົດທີ 18 ຂນະທີ່ອາກີລາແລະປີຊະກີລາປະກາດຂ່າວປະເສີດຢູ່ທີ່ເມືອງເອເຟໂຊ ກໍພົບຫນຸ່ມຊາວຢິວຄົນນຶ່ງຊື່ ອາໂປໂລມາຈາກເມືອງອະເລັກຊັນເດຣັຽ ເປັນຄົນທີ່ມີວາທະສິລ ແລະໃຊ້ພຣະຄັມພີໄດ້ຢ່າງສອດຄ່ອງ ແຕ່ເມື່ອສາມີພັຣຍາຄູ່ນີ້ໄດ້ຟັງແລ້ວ ເບິ່ງເຫມືອນອາໂປໂລມີຄວາມຮູ້ໃນເຣື່ອງຂອງພຣະເຢຊູບໍ່ຫລາຍປານໃດ ແຕ່ມີໃຈກ້າຫານແລະຮ້ອນຣົນໃນການປະກາດຂ່າວປະເສີດ.

"ເມື່ອອາກີລາແລະປີຊະກີລາໄດ້ຟັງທ່ານແລ້ວ ເຂົາຈຶ່ງຕ້ອນຮັບທ່ານມາອະທິບາຍໃຫ້ຮູ້ທາງຂອງພຣະເຈົ້າຢ່າງຖືກຕ້ອງຫລາຍຂຶ້ນ (ຂໍ້ 26) ໃນພຣະຄັມພີຕອນນີ້ ເຮົາໄດ້ເຫັນລັກສນະເດັ່ນຊັດຂອງຜູ້ທີ່ມີນໍ້າໃຈໃນການສນັບສນູນຜູ້ອື່ນ ເຂົາຈະກວາດສາຍຕາໄປໃນຄຣິສຕະຈັກຂອງພຣະເຈົ້າ ເບິ່ງວ່າມີຊາຍຫນຸ່ມຍິງສາວຄົນໃດທີ່ມີແວວທີ່ຈະເປັນຜູ້ນໍາ ມີຂອງປະທານທີ່ຈະເປັນນັກເທດຫລືຜູ້ປະກາດ ເຂົາຈະຮີບໃຫ້ຄໍາແນະນໍາທັນທີ ພ້ອມກັບຊັກຊວນແລະສນັບສນູນໃຫ້ຮຽນພຣະຄັມພີແບບເຂັ້ມງວດ ອາດຈະຈັດຫລັກສູດອົບຣົມພາຍໃນຄຣິສຕະຈັກ ຫລືສົ່ງໄປຮຽນໃນໂຮງຮຽນພຣະຄຣິສຕະທັມ ທີ່ໄວ້ໃຈໄດ້ ເພື່ອຕຽມຄົນຫນຸ່ມສາວເຫລົ່ານີ້ໃຫ້ສືບທອດເຈຕນາຣົມຂອງພຣະເຢຊູຄຣິດຕໍ່ໄປ.

ເຂົາພໍໃຈທີ່ຈະຢູ່ເບື້ອງຫລັງຄວາມສໍາເຣັດຂອງຜູ້ອື່ນ ແອບພູມໃຈຢ່າງງຽບໆທີ່ໄດ້ທໍາງານ ລີ້ຊ່ອນຕົວຢູ່ເບື້ອງຫລັງໄມ້ກາງແຂນ ເຂົາບໍ່ຕ້ອງການສຽງຕົບມືຂອງຜູ້ຄົນ ແຕ່ຕ້ອງການບໍາເຫນັດຈາກພຣະເຈົ້າ ເຂົາບໍ່ຕ້ອງການໃບປະກາດກຽດຕິຄຸນຈາກໂລກນີ້ ແຕ່ຕ້ອງການຣາງວັນກຽດຕິຍົດຈາກສວັນ ເຂົາບໍ່ໄດ້ຫວັງໃນມົງກຸດທີ່ເນົ່າເປື່ອຍ ແຕ່ຕ້ອງການມົງກຸດແຫ່ງຊີວິດ ເຂົາບໍ່ປາຖນາຄໍາຍົກຍ້ອງສັຣະເສີນຈາກເພື່ອນຮ່ວມງານ ແຕ່ປາຖນາຄໍາຍົກຍ້ອງຊົມເຊີຍຈາກພຣະຄຣິດວ່າ "ເຈົ້າເປັນທາດທີ່ດີ ຈົ່ງປົກຄອງຮ່ວມກັບເຮົາເຖີດ"

ໃນຄຣິສຕະຈັກຂອງເຮົາມີເພື່ອນຮ່ວມງານເປັນມິດຊັນນາຣີຊາວອະເມຣິກັນຄອບຄົວນຶ່ງ ເບິ່ງເຜີນໆແລ້ວບໍ່ມັກມີຂອງປະທານອັນໃດດ້ວຍເຫດທີ່ເຂົາຮູ້ພຣະຄັມພີບໍ່ຫລາຍປານໃດ ຈຶ່ງສອນແລະເທສນາບໍ່ຄ່ອຍຫນ້າປະທັບໃຈຜູ້ຟັງຫລາຍ ອີກທັງການປະກາດແລະເປັນພຍານກໍບໍ່ມັກຖນັດ ແຕ່ສິ່ງທີ່ເຂົາເຮັດໄດ້ດີຄືເປີດບ້ານຕ້ອນຮັບສະມາຊິກໃນຄຣິສຕະຈັກແລະເຊີນຊວນເພື່ອນບ້ານມາຮ່ວມຊຸມແຊວກັນ ເຂົາຈະມອງເບິ່ງວ່າຜູ້ຮັບໃຊ້ຂອງພຣະເຈົ້າຄົນໃດທີ່ກໍາລັງຂາດເຂີນແລະຕ້ອງການຄວາມຊ່ອຍເຫລືອ ເຂົາຈະຟ້າວຄວັກກະເປົາທັນທີ. ຜູ້ຮັບໃຊ້ຂອງພຣະເຈົ້າຄອບຄົວນີ້ຢູ່ເບື້ອງຫລັງຂອງນັກສຶກສາພຣະຄັມພີຫລາຍຄົນ ຫລາຍຄັ້ງທີ່ເຂົາຢູ່ເບື້ອງຫລັງຂອງອາຫານທີ່ສະມາຊິກຮັບປະທານໃນຕອນທ່ຽງວັນອາທິດ ເມື່ອເຫັນວ່າຄຣິສຕະຈັກຫລືສິດຍາພິບານຕ້ອງການຣົດ ເຂົາຈະຍອມສລະຣົດໃຫ້ທັນທີ.

ເຂົາຢູ່ເບື້ອງຫລັງການຈັດກຸ່ມສອນເດັກໃນຕອນເຊົ້າວັນອາທິດ ແລະຈັດຄ້າຍພາສາອັງກິດໃນຍາມຣະດູຮ້ອນ ບໍ່ພຽງແຕ່ຖວາຍເງິນເທົ່ານັ້ນ ຍັງອຸທິດເຄື່ອງຄອມພິວເຕີ ໂທຣະສານ ໂທຣະສັບ ໃຫ້ແກ່ການງານຂອງໂບດອີກດ້ວຍ.

ພີ່ນ້ອງຄຣິສຕຽນທີ່ຮັກ ເຊື່ອແນ່ວ່າທ່ານເປັນຜູ້ນຶ່ງທີ່ພຣະເຈົ້າຊົງເລືອກໄວ້ ເພື່ອໃຫ້ການສນັບສນູນຜູ້ຮັບໃຊ້ພຣະເຈົ້າ ຂໍໃຫ້ຟັງພຣະສຸຣະສຽງຂອງພຣະອົງ ແລະຮຽນແບບຢ່າງຈາກຊີວິດຂອງອາກີລາແລະປີຊະກີລາ ຂໍໃຫ້ທ່ານມີສະ ຕິປັນຍາຝ່າຍຈິດວິນຍານ ເພື່ອຈະຮູ້ນໍ້າພຣະທັຍຂອງພຣະເຈົ້າໃນການທີ່ຈະສົ່ງເສີມຜູ້ອື່ນ ເປັນການໃຫ້ທີ່ບໍ່ມີຜົນເສັຽ ຕິດຕາມມາ ຄື ໃຫ້ຜູ້ນໍາແລະສະມາຊິກໃນຄຣິສຕະຈັກຕິດສນິດກັບພຣະເຢຊູຄຣິດແທນທີ່ຈະຕິດຢູ່ກັບຕົວທ່ານ.

ຂໍພຣະເຈົ້າຊົງໂຜດອວຍພຣະພອນຫລາຍໆ ເມື່ອທ່ານເຕັມໃຈຍິນດີທີ່ຈະຢືນຢູ່ເບື້ອງຫລັງຄວາມສໍາເຣັດຂອງຄົນອື່ນ

# ບົດສລຸບ

ທັງຫມົດທີ່ອ່ານມາແລ້ວ ອາດຈະສລຸບໄດ້ດ້ວຍຂໍ້ພຣະຄັມພີທີ່ວ່າ ພຣະປະສົງຂອງພຣະເຈົ້າຄື "ຜູ້ໃດປາຖນາຫນ້າທີ່ຜູ້ປົກຄອງດູແລ (ຜູ້ນຳ) ຄຣິສຕະຈັກ ຜູ້ນັ້ນກໍປາຖນາກິຈການງານທີ່ປະເສີດ" (1 ຕມທ 3:1)

ທຸກບົດໃນຫນັງສືເຫລັ້ມນີ້ ໄດ້ບອກເຖິງວ່າ ຜູ້ນຳຝ່າຍຈິດວິນຍານຄວນຈະເປັນຄົນແບບໃດ.

**ຜູ້ນຳຕ້ອງເປັນຄົນຕາດີ** - ຕາດີໃນທີ່ນີ້ບໍ່ໄດ້ຫມາຍຄວາມວ່າ ຕາທີ່ບໍ່ເປັນຕໍ້ ອງຽງ ຫລືໃສ່ແວ່ນຕາ ແຕ່ຫມາຍເຖິງຕາແຫ່ງຄວາມຄິດແລະສະຕິປັນຍາ ຊຶ່ງສາມາດທີ່ຈະອ່ານຄົນ ອ່ານໃຈ ອ່ານສະຖານະການ ແລະອ່ານງານອອກ ນອກຈາກນັ້ນຍັງສາມາດອ່ານຕົນເອງອອກອີກດ້ວຍ

ເຣດາຣ໌ເປັນເຄື່ອງມືທີ່ມີປະສິດທິພາບຫລາຍ ໃນການກວດຈັບຄວາມເຄື່ອນໄຫວຂອງວັດຖຸໃນອາກາດ ແຕ່ມີສິ່ງນຶ່ງທີ່ເຣດາຣ໌ເຮັດບໍ່ໄດ້ຄືກວດຈັບຕົນເອງ ຜູ້ນຳຝ່າຍຈິດວິນຍານຈະຕ້ອງບໍ່ເປັນຄົນທີ່ມີລັກສນະເຊັ່ນນັ້ນ ບໍ່ດັ່ງນັ້ນເຂົາກໍຄືງບໍ່ຕ່າງໄປຈາກພວກຟາຣີຊາຍເທົ່າໃດດອກ.

**ຜູ້ນຳຕ້ອງເປັນຄົນປາກດີ** - ປາກດີບໍ່ໄດ້ຫມາຍເຖິງປາກທີ່ງາມເປັນຮູບຫມາກຈັບ ແລະບໍ່ແມ່ນປາກຫວານທີ່ປາສຈາກຄວາມຈິງໃຈ ແຕ່ຫມາຍເຖິງເວົ້າໃນສິ່ງທີ່ຄວນເວົ້າ ແລະຢັບຢັ້ງປາກໃນກໍຣະນີທີ່ບໍ່ສົມຄວນເວົ້າແລະເປັນຄົນທີ່ "ຕົດດົນ" ສາມາດເວົ້າຈາຢ່າງເປີດເຜີຍກັບເພື່ອນຮ່ວມງານໄດ້ໃນທຸກລະດັບ.

ຜູ້ນຳຝ່າຍຈິດວິນຍານບໍ່ຄວນຄິດວ່າ ຕົນເອງຮູ້ພຣະຄັມພີຫລາຍກວ່າ ມີຈິດວິນຍານສູງກວ່າ ແລະໃກ້ຊິດພຣະເຈົ້າຫລາຍກວ່າຄົນອື່ນໆ ເລີຍວາງມາດໃຫ້ເບິ່ງເຄັ່ງຂຶມເປັນເຫມືອນຜູ້ຄົງແກ່ຮຽນ ແລະໃນການເທດ ການສອນພຣະຄັມພີ ບໍ່ຄວນເລົ່າເຣື່ອງທີ່ເຮັດໃຫ້ຕົນເອງເປັນພຣະເອກ ຫລືແມ້ແຕ່ໃນວົງສົນທະນາບໍ່ຄວນຕັ້ງຕົວເປັນປະຣະມາຈານສອນຄົນອື່ນ.

**ຜູ້ນຳຕ້ອງເປັນຄົນຫູດີ** - ເຊັ່ນດຽວກັນ ບໍ່ໄດ້ຫມາຍເຖິງຫູທີ່ຍືດຍາວ (ຄົນເຮົາເຊື່ອວ່າຜູ້ໃດທີ່ມີຫູຍາວຈະອາຍຸຍືນ) ຫລືຫູບໍ່ຫນວກບໍ່ຕຶງ ແຕ່ຫມາຍເຖິງຜູ້ນຳຝ່າຍຈິດວິນຍານ ຈະຕ້ອງເປີດຫູຂອງຕົນເອງໃຫ້ກວ້າງ ຍອມຮັບຟັງຄວາມຄິດເຫັນຂອງຄົນອື່ນ ໂດຍສະເພາະຮັບຟັງຄຳແນະນຳຂອງເພື່ອນຮ່ວມງານ ຕຽມໃຈພ້ອມສເມີທີ່ຈະຮັບທັງດອກໄມ້ແລະກ້ອນຫີນ ນີ້ເປັນສິ່ງສຳຄັນແລະຈຳເປັນຢ່າງຍິ່ງ ຈົ່ງຄິດສເມີວ່າຄຳຕຳຫນິນັ້ນມີປໂຍດຫລາຍກວ່າຄຳຊົມເຊີຍ.  ພຣະຄັມພີສອນຜູ້ນຳວ່າ "ຈົ່ງໃຫ້ທຸກຄົນໄວໃນການຟັງ ຈົ່ງຊ້າໃນການເວົ້າ ຈົ່ງຊ້າໃນການຮ້າຍ" (ຢກບ 1:19)

**ຜູ້ນຳຕ້ອງເປັນດັງດີ** - ດັງດີບໍ່ໄດ້ຫມາຍເຖິງດັງທີ່ບໍ່ແຫວ່ງຫລືບໍ່ເປັນຫວັດແລະຊັຍນັສ ແຕ່ຫມາຍເຖິງມີຄວາມວ່ອງໄວໃນການຕິດຕາມຄວາມເຄື່ອນໄຫວຂອງຝ່າຍໂລກແລະຈິດວິນຍານ ເຫມືອນດັ່ງຂອງມົດໄດ້ກິ່ນອາຫານຢູ່ໃສຈະຕ້ອງຟ້າວໄປທັນທີ.

ຜູ້ນຳຄຣິສຕະຈັກຄົນນຶ່ງໄດ້ໃຫ້ຂໍ້ຄິດວ່າ ຜູ້ນຳມີຄວາມຂັດແຍ້ງແລະຮ່ວມມືກັນບໍ່ໄດ້ກໍເພາະຜົນປໂຍດ ໂດຍຂໍໃຫ້ ສັງເກດເບິ່ງສັດສອງຊນິດຄືຫມາກັບມົດ ຫມານັ້ນເວລາບໍ່ມີອາຫານ (ຜົນປໂຍດ) ມັນຈະແລ່ນເປັນເພື່ອນກັນ ແຕ່ພໍມີອາຫານມັນຈະແຍກແຂ້ວເຂົ້າໃສ່ແລະໄລ່ກັດກັນທັນທີ ສ່ວນມົດນັ້ນຕ່າງອອກໄປເມື່ອມັນຍ່າງໄປພົບອາຫານ (ຜົນປໂຍດ) ມັນຈະຟ້າວໄປບອກຫມູ່ໆໃຫ້ມາຊ່ອຍກັນກິນແລະຂົນກັບຮັງ.

ຜູ້ນຳທີ່ຮັກ ປັດຈຸບັນກໍມີຜູ້ນຳຢູ່ສອງປະເພດເຊັ່ນກັນ ລອງຄິດເບິ່ງວ່າທ່ານເປັນຜູ້ນຳປະເພດແຮກຫລືປະເພດສອງ

ຜູ້ນຳຄຣິສຕະຈັກຈະຕ້ອງໄວໃນການຕິດຕາມຄວາມເຄື່ອນໄຫວຂອງສະມາຊິກ ແລະໄວໃນການຕິດຕາມຂ່າວສານຕ່າງໆຂອງຄຣິສຕຽນ ມີຫນັງສືໃຫມ່ໆດີໆຢູ່ໃສຕ້ອງຟ້າວຊື້ຫາມາອ່ານທັນທີ ມີການອົບຮົມສັມມະນາທີ່ເອື້ອປໂຍດຢູ່ໃສກໍຕ້ອງສົ່ງຄົນເຂົ້າໄປຮ່ວມຕັກຕວງທັນທີ

ມີຜູ້ກ່າວເຖິງໂຄງຮ່າງຫລືແຜນງານທີ່ສົມບູນແບບ (SHAPE) ຂອງຜູ້ນຳຝ່າຍຈິດວິນຍານໄວ້ຢ່າງຫນ້າຄິດດັ່ງນີ້

S = Spiritual gift "ມີຂອງປະທານຝ່າຍຈິດວິນຍານ"

H = Heart "ມີຈິດໃຈທີ່ຖວາຍແດ່ພຣະເຈົ້າທັງຫມົດ"

A = Abilities "ທຸ່ມເທຄວາມສາມາດໃນການປະຕິບັດຮັບໃຊ້ພຣະເຈົ້າ

P = Personality "ເປັນຜູ້ທີ່ມີບຸກຄະລິກພາບດີ"

E = Experience "ມີປະສົບການ ແລະໃຊ້ສິ່ງທີ່ຮຽນຮູ້ມາໃຫ້ເກີດປໂຍດໃນພຣະຣາຊກິດຂອງພຣະເຈົ້າ"

ທ້າຍສຸດກ່ອນຈົບເຫລັ້ມນີ້ ຂ້າພະເຈົ້າຝາກຂໍ້ຈົດຈຳແກ່ຜູ້ນຳທີ່ດີດ້ວຍ **4 ທ** ຄື

**ທັສນະຄະຕິ** ຜູ້ນຳຝ່າຍຈິດວິນຍານຈະຕ້ອງເປັນຄົນທີ່ມີທັສນະຄະຕິທີ່ຊັດເຈນ ບໍ່ຄຸມເຄືອ ມີຄວາມຄິດດ້ານບວກຢູ່ສເມີ ມີສາຍຕາ ຄຳເວົ້າແລະການສະແດງອອກທີ່ເປັນມິດ ມອງເຫັນອຸປສັກກາຍເປັນອຸປກອນ ແລະຮັກສາຜົນປໂຍດຂອງພຣະເຢຊູຄຣິດເປັນທີ່ຕັ້ງໂດຍມີຄວາມເຊື່ອວ່າ ພຣະເຈົ້າຈະຊົງຊ່ອຍຜູ້ທີ່ຮັກພຣະອົງໃຫ້ເກີດຜົນອັນດີໃນທຸກສິ່ງ (ຣມ 8:28)

**ທຸ້ມເທ** ສຳລັບຜູ້ນຳຝ່າຍຈິດວິນຍານ ການທຸ້ມເທເປັນສິ່ງສຳຄັນຫລາຍ ຕ້ອງທຸ້ມເທທັງແຮງກາຍແລະແຮງໃຈແລະຈິດວິນຍານ ທັງຫມົດທີ່ມີຢູ່ເພື່ອງານຂອງພຣະເຈົ້າ ມີຄຳກ່າວວ່າ ຖ້າສິດຍາພິບານທຸ້ມເທໜ້ອຍກວ່າສະມາຊິກໃນຄຣິສຕະຈັກ ເຂົາຄວນຈະລາອອກຈາກການເປັນສິດຍາພິບານເສັຽດີກວ່າ.

ຜູ້ນຳທີ່ດີຈະຕ້ອງທຸ້ມເທຊີວິດໃນການທຳງານ ການສຶກສພຣະຄັມພີ ການອະທິຖານ ການປະກາດ ການຢ້ຽມ ຢາມ ກຸ່ມຫນ້ອຍແລະການລ້ຽງດູ ເຄີຍມີຜູ້ຖາມນັກຂຽນຄຣິສຕຽນຊາວອັງກິດທີ່ມີຊື່ສຽງວ່າ "ທ່ານມີຫລັກໃນການຂຽນຢ່າງໃດ" ທ່ານຕອບວ່າ "ທຸ້ມເທເວລາໃນການຂຽນເກົ້າສິບເກົ້າເປີເຊັນ ສ່ວນທີ່ເຫລືອອີກນຶ່ງເປີເຊັນເປັນແຮງບັນດານໃຈ" ທຳນອງດຽວກັນ ຫລັກການເປັນສິດຍາພິບານທີ່ດີຄື ທຸ້ມເທເວລາທັງຫມົດເພື່ອງານຮັບໃຊ້ພຣະເຈົ້າ!

**ທັສນະຄະຕິ** ຜູ້ນຳທີ່ດີຈະຕ້ອງມີຫລັກການທີ່ຖືກຕ້ອງ ຄືຫລັກຄວາມຄິດເຫັນແລະຫລັກປະຕິບັດ ຊຶ່ງຫລັກການເຫລົ່ານີ້ ສາມາດທີ່ຈະຮຽນຮູ້ແລະຊຶມຊັບປະສົບການໄດ້ຈາກໂຮງ ຮຽນພຣະຄຣິສຕະທັມ ຄຣິສຕະຈັກ ແລະຈາກຜູ້ນຳຄົນອື່ນໆ ໂດຍສະເພາະແລ້ວ ຈາກພຣະຄຳຂອງພຣະເຈົ້າແລະຕຳຣາຕ່າງໆ.

ຜູ້ນຳຝ່າຍຈິດວິນຍານຈະຕ້ອງຍຶດຫມັ້ນໃນຫລັກການຂອງພຣະເຈົ້າ ຫລາຍຄັ້ງບັນຫາເກີດຂຶ້ນເພາະຜູ້ນຳເປັນຄົນທີ່ຫລັກການຫລາຍເກີນໄປ ຫລື "ທ່າດີ ທີເຫລວ"

**ເທັກນິກ** ຫມາຍເຖິງມີສິລປະແລະວິທີການທີ່ດີ ທັສນະຄະຕິເປັນສິ່ງທີ່ມະນຸດສາມາດສອນກັນໄດ້ ແຕ່ເທັກນິກເປັນວິທີການສະເພາະຕົວຂອງແຕ່ລະຄົນ ຊຶ່ງບໍ່ສາມາດຖ່າຍທອດຫລືລອກຮຽນແບບກັນໄດ້ ຂອງຄົນໃດກໍເປັນຂອງຄົນນັ້ນ ເຊັ່ນ ການເທສນາຫລືການຂຽນຫນັງສື ເປັນຕົ້ນ

ຜູ້ຮັບໃຊ້ຂອງພຣະເຈົ້າໃນອະດີດຕ່າງມີເອກະລັກຂອງຕົນເອງຕາມທີ່ພຣະອົງຊົງໂຜດປະທານໃຫ້ ເຊັ່ນ ໂຢຊວຍບໍ່ເຫມືອນໂມເຊ ອີຊາກບໍ່ເຫມືອນອັບຣາຮາມ ເອລີຊາບໍ່ເຫມືອນເອລີຢາ ມາຣະໂກບໍ່ເຫມືອນເປໂຕ ແລະຕີໂມທຽວກໍບໍ່ເຫມືອນກັບໂປໂລ ເປັນຕົ້ນ.

ຕລອດທັງເຫລັ້ມນີ້ ຜູ້ອ່ານໄດ້ຮູ້ມາແລ້ວວ່າ ຜູ້ນຳຝ່າຍຈິດວິນຍານທີ່ແທ້ຈິງນັ້ນຄືໃຜ? ຜູ້ນຳຍຸກໃຫມ່ຄວນຈະເປັນຄົນແບບໃດ? ພຣະຄັມພີໄດ້ກຳນົດມາຕຖານຂອງຜູ້ນຳໄວ້ຢ່າງໃດແດ່? ດັ່ງນັ້ນຂໍພຣະເຈົ້າຊົງຊ່ອຍຜູ້ອ່ານທຸກຄົນທີ່ຈະເປັນຜູ້ນຳທີ່ດີຂອງຄຣິສຕະຈັກອົງການແລະຫນ່ວຍງານຄຣິສຕຽນ.

## ຂໍພຣະເຈົ້າຊົງໂຜດໃຫ້ທ່ານເກີດຜົນຝ່າຍຈິດວິນຍານຍິ່ງໆຂຶ້ນແລະຕລອດໄປ